ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ

# ວິຊາ ລາວສຶກສາ

ປີ 2021

ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ

# ວິຊາ ລາວສຶກສາ

ຮຽບຮຽງໂດຍ : ອາຈານ ໄຊສົມພອນ ຫຼວງໄຊ

ປີ 2021

# ພາກທີ 1

# ບົດທີ 1

# ລັກຊະນະທາງກາຍະພາບຂອງ ສ.ປ.ປ ລາວ

## 1. ຂອບເຂດ, ທີ່ຕັ້ງ, ຮູບຮ່າງ ແລະ ເນື້ອທີ່

### 1.1 ທີ່ຕັ້ງ ແລະ ເຂດແດນ

ແຜນທີ່ເຊິ່ງທ່ານກຳລັງສັງເກດຢູ່ນີ້ຄື ແຜນທີ່ການເມືອງຂອງພາກພື້ນອາຊີຕາເວັນອອກສຽງໃຕ້ ແລະ ແຫລມໃຫຍ່ທີ່ຍື່ນອອກສູ່ທະເລຈີນໃຕ້ ນັ້ນຄືແຫລມອິນດູຈີນ ຫລື ແຫລມສຸວັນນະພູມ (ແຫລມຄຳ) ເຊິ່ງນັບຕັ້ງແຕ່ສະໃໝອະດີດມາ ມີຄວາມສຳຄັນທາງຍຸດທະສາດຂອງໂລກ ບໍ່ວ່າຈະເປັນດ້ານເສດຖະກິດ, ສັງຄົມ, ການເມືອງ, ຄວາມໝັ້ນຄົງ ແລະ ອື່ນໆ ອີກ.




ແຜນທີ່ 1: ແຜນທີ່ການເມືອງພາກພື້ນອາຊີຕາເວັນອອກສຽງໃຕ້

ສ.ປ.ປ ລາວ ຫລື ທີ່ເອີ້ນກັນຢ່າງເຕັມສ່ວນວ່າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນັ້ນເປັນປະເທດໜຶ່ງຂອງພາກພື້ນອາຊີຕາເວັນອອກສຽງໃຕ້ ເຊິ່ງຕັ້ງຢູ່ບໍລິເວັນຕອນກາງຂອງແຫລມອິນດູຈີນໃນຊີກໂລກເບື້ອງຕາເວັນອອກທີ່ເປັນເຂດບົວໂມງທີ 7 ຂອງໂລກ. ທີ່ຕັ້ງດັ່ງກ່າວນີ້ຢູ່ລະຫວ່າງເສັ້ນຂະໜານທີ $13^{0}54$’N ຫາ $22^{0}30$’ ແລະ ລະຫວ່າງເສັ້ນແວງທີ $100^{0}05$’E ຫາ $107^{0}38$’E ໂດຍພື້ນທີ່ສ່ວນໃຫຍ່ກວມເອົາບໍລິເວນຝັ່ງຊ້າຍຂອງແມ່ນ້ຳຂອງ. ສ.ປ.ປ ລາວມີຄວາມຍາວຂອງເສັ້ນຊາຍແດນໂດຍຮອບເຖິງ 5,180 ກມ ແລະ ມີຊາຍແດນຕິດຈອດກັບປະເທດຕ່າງໆ 5 ປະເທດຄື:

- ພາກເໜືອຕິດກັບສາທາລະນະລັດປະຊາຊົນຈີນ ໂດຍມີລາຍພູວຸລຽງຊານເປັນແນວແບ່ງກັ້ນເຂດແດນຕາມທໍາມະຊາດ ແລະ ມີຊາຍແດນຮ່ວມກັນຍາວ 505 ກມ.
- ພາກໃຕ້ຕິດກັບລາຊາອານາຈັກກໍາປູເຈຍ, ມີຊາຍແດນຮ່ວມກັນຍາວ535 ກມ.
- ພາກຕາເວັນອອກຕິດກັບສາທາລະນະລັດສັງຄົມນິຍົມຫວຽດນາມ ໂດຍທີ່ມີສາຍພູຫລວງເປັນຊາຍແດນທໍາມະຊາດ ແລະ ມີຊາຍແດນຮ່ວມກັນຍາວ 2,069 ກມ.
- ພາກຕາເວັນຕົກຕິດກັບລາຊາອານາຈັກໄທ ມີຊາຍແດນຍາວເຖິງ 1,835 ກມ ເຊິ່ງສ່ວນໃຫຍ່ມີແມ່ນໍ້າຂອງເປັນຊາຍແດນທໍາມະຊາດ.
- ພາກຕາເວັນຕົກສຽງເໜືອຕິດກັບສາທາລະນະລັດສະຫະພາບມຽນມາ ເຊິ່ງແບ່ງຂັ້ນກັນໂດຍແມ່ນໍ້າຂອງ ແລະ ມີຊາຍແດນຮ່ວມກັນ 236 ກມ.

ຈຸດເໜືອສຸດຂອງ ສ.ປ.ປ ລາວແມ່ນຢູ່ບ້ານລານຕຸຍ (ແຂວງຜົ້ງສາລີ) ຢູ່ເຂດເສັ້ນຂະໜານທີ 22°30'N, ຈຸດໃຕ້ສຸດຄືບ້ານເວີນຄາມ (ເຂດຫຼີ່ຜີ ແຂວງຈໍາປາສັກ) ໃນເຂດເສັ້ນຂະໜານທີ 13°54N, ຈຸດສຸດທາງເບື້ອງຕາເວັນອອກໄດ້ແກ່ບ້ານດັກດຶ້ວ (ແຂວງເຊກອງ) ຢູ່ເສັ້ນແວງທີ 107°38E ແລະ ຈຸດສຸດທາງເບື້ອງຕາເວັນຕົກແມ່ນຢູ່ບ້ານຄ້ອນ (ແຂວງບໍ່ແກ້ວ) ຢູ່ເສັ້ນແວງທີ 100°05E.

ຍ້ອນຕັ້ງຢູ່ເຂດພາກກາງຂອງແຫລມອິນດູຈີນຄືທີ່ກ່າວມາ ສ.ປ.ປ ລາວ ຈຶ່ງເປັນປະເທດທີ່ບໍ່ມີສ່ວນໃດໆຕິດກັບທະເລ (Land-locked Country) ເຊິ່ງພາໃຫ້ມີບັນຫາດ້ານການຕິດຕໍ່ຊື້ຂາຍກັບໂລກພາຍນອກ ຄືຈະຕ້ອງໄດ້ຜ່ານດິນແດນປະເພດເພື່ອນບ້ານເພື່ອອອກສູ່ທະເລ ຫລື ໄປສູ່ສາກົນ ຕະຫລອດເຖິງຂາດໂອກາດໃນການເປັນເຈົ້າຊັບພະຍາກອນທີ່ຮັ່ງມີທາງທະເລ. ແຕ່ເຖິງຢ່າງໃດກໍ່ຕາມ, ທີ່ຕັ້ງດັ່ງກ່າວນີ້ໄດ້ກາຍເປັນປັດໃຈທີ່ສົ່ງເສີມໃຫ້ ສ.ປ.ປ ລາວ ສາມາດເປັນທາງຜ່ານ (Land-linked Country) ສໍາລັບພາກພື້ນນີ້. ໃນປະຈຸບັນ ສ ປ ປ ລາວ ໄດ້ກາຍເປັນດ່ານຍຸດທະສາດທີ່ສໍາຄັນໃນພາກພື້ນອາຊີຕາເວັນອອກສຽງໃຕ້ ເພາະວ່າປະເທດຕ່າງໆຢູ່ໃນຂົງເຂດດັ່ງກ່າວ ຢາກໄປມາຫາສູ່ ຫລື ຕິດຕໍ່ຊື້ຂາຍນໍາກັນ ກໍ່ຈໍາເປັນຕ້ອງໄດ້ຜ່ານດິນແດນປະເທດນີ້ທັງນັ້ນ

## 1.2 ລັກຊະນະຮູບຮ່າງ ແລະ ເນື້ອທີ່

ສ ປ ປ ລາວ ມີຮູບຮ່າງລັກຊະນະຍາວຢຽດລົງມາຕັ້ງແຕ່ເໜືອເຖິງໃຕ້ ຂະໜານໄປຕາມແນຂອງແມ່ນ* ຂອງ ແລະຄູຂະໜານໄປກັບສາທາລະນະລັດ ສັງຄົມນິຍົມຫວຽດນາມ ໂດຍທີ່ຕອນດິນທາງພາກເໜືອກວ້າງອອກ, ພາກກາງແຄບເຂົ້າ ແລະ ກວ້າງອອກອີກໜ້ອຍໜຶ່ງທາງພາກໃຕ້. ລວງຍາວທັງໝົດຊຶ່ງວັດຈາກຕອນເໜືອສຸດຂອງແຂວງຜົ້ງສາລີໄປເຖິງຕອນໃຕ້ສຸດຂອງແຂວງຈໍາປາສັກມີປະມານ 1,050 ກມ. ພື້ນທີ່ບ່ອນກວ້າງທີ່ສຸດແມ່ນຢູ່ພາກເໜືອລະຫວ່າງເສັ້ນຂະໜານທີ 20°N ຄືຈາກແຂວງຫຼວງນໍ້າທາໄປເຖິງແຂວງຫົວພັນ ເຊິ່ງກວ້າງປະມານ 500 ກມ. ບ່ອນແຄບສຸດແມ່ນຢູ່ພາກກາງລະຫວ່າງເສັ້ນຂະໜານທີ 18°20'N ໃນເຂດເມືອງປາກກະ ດິງ ແຂວງບໍລິຄໍາໄຊ ເຊິ່ງມີລວງກວ້າງພຽງແຕ່ປະມານ 150 ກມ ເທົ່ານັ້ນ.

ເນື້ອທີ່ທັງໝົດຂອງ ສ ປ ປ ລາວ ມີຢູ່ປະມານ 236,800 ກມ$^2$ ໃນນັ້ນມີສ່ວນທີ່ເປັນພື້ນນໍ້າຢູ່ປະມານ 4736 ກມ$^2$ ເຊິ່ງເທົ່າກັບ 1/186ຂອງເນື້ອທີ່ທະວີບອາຊີ ແລະ ໃຫຍ່ກວ່າປະເທດກ□າປູເຈັ້ຍ ແຕ່ນ້ອຍກວ່າປະເທດອື່ນໆ ທັງໝົ້ດທີ່ຢູ່ອ້ອມຂ້າງ. ຖ້າຈະທຽບໃສ່ບັນດາປະເທດທັງຫຼາຍໃນພາກພື້ນອາຊີຕາເວັນອອກສຽງໃຕ້ແລ້ວ. ສ ປ ປ ລາວ ກໍເປັນປະເທດໃຫຍ່ອໍາດັບທີ 7 ທັດຈາກປະເທດອິນໂດເນເຊຍ, ມຽນມາ, ໄທ, ມາເລເຊຍ, ຟີລິປິນ ແລະ ຫວຽດນາມ ຕາມລໍາດັບ.

# 2. ພູມສັນຖານ

## 2.1 ລັກຊະນະທົ່ວໄປ

ສ ປ ປ ລາວ ເປັນປະເທດທີ່ມີພູມສັນຖານຫລາກຫລາຍປະເພດເຊັ່ນ: ມີພູສູງທີ່ຄຽງຄູ່ກັບຮ່ອມພູເລິກ, ມີເຫວ, ຜາຊັນ, ພູຕໍ່າ, ພູພຽງ ແລະ ທົ່ງພຽງ ສະຫຼັບຊັບຊ້ອນກັນໄປ ເຊິ່ງໃນນັ້ນ ພູສູງ ແລະ ພູພຽງໄດ້ກວມເອົາເນື້ອທີ່ສ່ວນໃຫຍ່ຄືພູທີ່ມີລະດັບສູງແຕ່ 1,000 ມ ຂຶ້ນໄປກວມເຖິງ 30%, ພູຕໍ່າ ແລະ ພູພຽງໄດ້ແຕ່ 200 ຫາ 1,000 ມ ກວມ 50% ສ່ວນທົ່ງພຽງນັ້ນກວມພຽງແຕ່ 20% ຂອງເນື້ອທີ່ທົ່ວປະເທດເທົ່ານັ້ນ ເຊິ່ງໂດຍສ່ວນໃຫຍ່ແລ້ວປະກອບເປັນລ້ອງເປັນແລວທີ່ຍາວຢຽດລຽບຕາມແຄມແມ່ນໍ້າຂອງນັບຕັ້ງແຕ່ນະຄອນຫຼວງວຽງຈັນ ໄປຮອດຊາຍແດນລາວ-ກໍາປູເຈັ້ຍ.




ແຜນທີ່ 2 ແຜນທີ່ພູມສັນຖານຂອງ ສ ປ ປ ລາວ

ເນື່ອງຈາກວ່າພູສູງສ່ວນຫຼາຍໄດ້ເຕົ້າໂຮມກັນຢູ່ທາງພາກເໜືອ ແລະ ພາກຕາເວັນອອກສຽງເໜືອ, ດັ່ງນັ້ນຈຶ່ງເຮັດໃຫ້ພູມສັນຖານຂອງລາວມີລັກຊະນະຫງ່ຽງໄປທາງພາກໃຕ້ ແລະ ພາກຕາເວັນຕົກ ແລະ ເນື່ອງຈາກວ່າເນື້ອທີ່ໂດຍສ່ວນໃຫຍ່ເປັນເຂດພູຜານີ້ເອງ ພູມສັນຖານຂອງ ສ ປ ປ ລາວ ຈຶ່ງເປັນພູມສັນຖານສູງຄືມີລະດັບສູງໂດຍສະເລ່ຍຕັ້ງແຕ່ 500 ຫາ 700 ມ.

### 2.2 ເຂດພູມສັນຖານ

ໂດຍອີງຕາມຮູບແບບຂອງພູມສັນຖານ, ໂຄງສ້າງທາງທໍລະນີແລະຂະບວນການທາງທໍລະນີສັນຖານ ພູມສັນຖານຂອງສປປລາວແບ່ງອອກເປັນເຂດ ແລະ ປະເພດຕ່າງໆ ຕົ້ນຕໍດັ່ງນີ້.

1.) ເຂດພູສູງ: ເປັນພື້ນທີ່ ທີ່ມີລະດັບສູງກວ່າລະດັບນ້ຳທະເລໂດຍສະເລ່ຍແຕ່ 1,000 ມ ຂຶ້ນໄປ.ພື້ນທີ່ລັກຊະນະນີ້ມີຢູ່ພາກເໜືອຂອງປະເທດ ເຊິ່ງຈັດວ່າເປັນເຂດທີ່ພູມສັນຖານມີລັກຊະນະສະຫລັບຊັບຊ້ອນ ແລະ ຕັດຜ່າໄປມາໄດ້ຍາກ ແລະ ຍັງເປັນເຂດພູມສັນຖານສູງກວ່າໝູ່ຢູ່ໃນລາວອີກດ້ວຍ. ເຂດດັ່ງກ່າວນີ້ແບ່ງອອກເປັນເຂດຕ່າງໆ ຕົ້ນຕໍດັ່ງນີ້.

- ເຂດຕາເວັນອອກ ແລະ ເຂດຕາເວັນອກສຽງໃຕ້: ເປັນບໍລິເວັນດ້ານເໜືອຂອງສາຍພູຫຼວງ ເຊິ່ງເຂດນີ້ກວມເອົາແຂວງຫົວພັນ, ເຂດຕາເວັນອອກຂອງແຂວງຊຽງຂວາງ ແລະ ເຂດຕາເວັນອອກຂອງແຂວງວຽງຈັນ. ພູສູງຢູ່ໃນເຂດນີ້ມີ ພູຊາວ, ພູສັນ, ພູເລີຍ, ພູສາມສຸມ ແລະ ພູເບ້ຍ. ຊຶ່ງເປັນພູທີ່ມີຈອມສູງທີ່ສຸດໃນປະເທດ ຄືມີຈອມສູງ 2,817 ມ.

- ເຂດຕາເວັນຕົກ: ກວມເອົາແຂວງຫຼວງນ້ຳທາ, ຜົ້ງສາລີ, ໄຊຍະບູລີ, ອຸດົມໄຊ ແລະ ຫຼວງພະບາງ. ພູທີ່ສຳຄັນຢູ່ເຂດນີ້ມີພູເມືອງສິງ, ພູຄຳ, ພູລາວປີ ...

2.) ເຂດພູພຽງ: ຄືພື້ນທີ່ ທີ່ສູງກວ່າລະດັບນ້ຳທະເລແຕ່ 200 – 1,000 ມ ເຊິ່ງປະກົດໃຫ້ເຫັນເປັນບໍລິເວນຕ່າງໆ ຕັ້ງແຕ່ແຂວງຊຽງຂວາງລົງໄປທາງໃຕ້ຂອງປະເທດ ໂດຍຂະໜານໄປຕາມແນວຂອງສາຍພູຫຼວງ ແລະ ຄູ່ຂະໜານໄປກັບແມ່ນ້ຳຂອງ. ພູພຽງທີ່ສຳຄັນກໍມີ ພູພຽງເມືອງພວນ, ພູພຽງນາກາຍ, ພູພຽງກະລຶມ, ພູພຽງຕະໂອ້ຍ, ພູພຽງບໍລະເວນ, ພູພຽງກະເສງ ...

3.) ເຂດທົ່ງພຽງ: ເປັນບໍລິເວນທີ່ມີລະດັບສູງຈາກລະດັບນ້ຳທະເລແຕ່ 200 ລົງມາ ເຊິ່ງເປັນພື້ນທີ່ຮາບພຽງຂອງລ້ອງແມ່ນ້ຳຂອງ ແລະ ແມ່ນ້ຳສາຂາຕ່າງໆ ຂອງແມ່ນ້ຳຂອງ ພື້ນທີ່ດັ່ງກ່າວເປັນພື້ນທີ່ສຳຄັນຂອງປະເທດ. ບໍລິເວັນທີ່ເປັນທົ່ງພຽງນີ້ເລີ່ມປະກົດຕັ້ງແຕ່ແຂວງວຽງຈັນລົງມາ ແລ້ວແກ່ຍາວໄປຕາມລຳນ້ຳຂອງຕັ້ງແຕ່ວຽງຈັນໄປຮອດດົງກະລໍ (ຊາຍແດນລາວ-ກຳປູເຈຍ) ພື້ນທີ່ໂດຍທົ່ວໄປແມ່ນມີລັກຊະນະຮາບພຽງດີ ຫລື ເປັນຄື້ນເລັກໜ້ອຍ ເຖິງວ່າມີໂນນ ຫລື ພູຕ່ຳຢັ່ງຢາຍກັນເປັນຈຸດໆ ກໍຕາມ ບັນດາທົ່ງພຽງທີ່ຢູ່ລຽບແຄມແມ່ນ້ຳຂອງນັ້ນປະກອບດ້ວຍທົ່ງພຽງໃຫຍ່ 3 ແຫ່ງຄື: ທົ່ງພຽງວຽງຈັນ, ທົ່ງພຽງສະຫວັນນະເຂດ ແລະ ທົ່ງພຽງຈຳປາສັກ. ນອກນັ້ນຍັງມີທົ່ງພຽງແຄບໆ ທີ່ຕິດຕໍ່ໃສ່ທົ່ງພຽງໃຫຍ່ຄື ແຕ່ປາກຊັນຫາທ່າແຂກ ແລະ ແຕ່ຄົງເຊໂດນຫາປາກເຊ.

ເວົ້າລວມແລ້ວ, ພູມສັນຖານຂອງ ສ ປ ປ ລາວ ເປັນພູມສັນຖານທີ່ມີລັກຊະນະຄ້າຍຫງ່ຽງຕັ້ງແຕ່ພາກເໜືອ ແລະ ພາກຕາເວັນອອກ ໄປຫາພາກຕາເວັນຕົກສຽງໃຕ້ ຈຶ່ງເຮັດໃຫ້ແມ່ນ້ຳສາຍຕ່າງໆ ໃນປະເທດໄຫລໄປຕາມທິດດັ່ງກ່າວນີ້.

## 3. ພູມອາກາດ

### 3.1 ລັກຊະນະທົ່ວໄປ

ສ ປ ປ ລາວ ເປັນປະເທດທີ່ຕັ້ງຢູ່ໃນເຂດອາກາດຮ້ອນ ແລະ ທັງໄດ້ຮັບແສງຕາເວັນຫລາຍ, ດັ່ງນັ້ນຈຶ່ງມີ ອຸນຫະພູມສູງ ໂດຍທົ່ວໄປຄືສະເລ່ຍແລ້ວຢູ່ໃນລະຫວ່າງ 25 °C -26 °C ໃນນັ້ນສຳລັບເດືອນທີ່ໜາວກວ່າໝູ່ເຊັ່ນ ເດືອນທັນວາ ຫາເດືອນ ມັງກອນ ຈະຢູ່ລະຫວ່າງ 20 °C– 21 °C ແລະ ໃນເດືອນທີ່ຮ້ອນກວ່າໝູຄື

ເດືອນເມສາ -ພຶດສະພາ ມັນຈະປ່ຽນແປງແຕ່ 28°C – 30°Cເຊິ່ງໃນໄລຍະດັ່ງກ່າວນີ້ອຸນຫະພູມຂອງບາງມື້ສາມາດຂຶ້ນເຖິງ 40-42°C ນອກຈາກນັ້ນເນື່ອງຈາກ່າໄດ້ຮັບອິດທິພົນຂອງລົມມໍລະສຸມຢູ່ ສ ປ ປ ລາວ ຈຶ່ງມີຝົນຕົກຫລາຍພໍສົມຄວນຄືບໍ່ຕໍ່າກວ່າ 1,000 ມມ/ປີ ແລະ ມີພຽງແຕ່ 2 ລະດູເທົ່ານັ້ນ ຄືລະດູຝົນ ແລະລະດູແລ້ງ.

### 3.2 ລະດູການ

ອິດທິພົນຂອງລົມມໍລະສຸມໄດ້ເປັນສາເຫດໃຫ້ສປປລາວມີ 2 ລະດູການຕົ້ນຕໍຄື: ລະດູຝົນ ແລະລະດູແລ້ງ ແລະນອກຈາກນັ້ນກໍຍັງມີ 2 ໄລຍະຂ້າມຜ່ານອີກຄື ໄລຍະຂ້າມຜ່ານແຕ່ລະດູແລ້ງຫາລະດູຝົນ (ເດືອນເມສາ) ແລະ ແຕ່ລະດູຝົນຫາລະດູແລ້ງ (ເດືອນຕຸລາ)



| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| ແລ້ງ | ແລ້ງ | ແລ້ງ | ແລ້ງ | ຝົນ | ຝົນ | ຝົນ | ຝົນ | ຝົນ | ຝົນ | ແລ້ງ | ແລ້ງ |
| ມັງ<br>ກອນ | ກຸມ<br>ພາ | ມີ<br>ນາ | ເມ<br>ສາ | ພຶດ<br>ສະພາ | ມິ<br>ຖຸນາ | ກໍ<br>ລະກົດ | ສິງ<br>ຫາ | ກັນ<br>ຍາ | ຕຸ<br>ລາ | ພະ<br>ຈິກ | ທັນ<br>ວາ |

ຮູບ 1: ຮູບສະແດງການແບ່ງປັນລະດູການຢູ່ປະເທດລາວ

- ລະດູຝົນ: ເລີ່ມຕົ້ນແຕ່ເດືອນພຶດສະພາໄປຫາທ້າຍເດືອນຕຸລາ. ໃນລະຫວ່າງນີ້ອາກາດບໍ່ປົກກະຕິປານໃດ, ທ້ອງຟ້າມີເມກຫລາຍ, ມັກເກີດຟ້າຄະນອງ, ມີຝົນຕົກໜັກ ແລະບາງຄັ້ງກໍມີລົມພະຍຸ. ໃນເວລາທີ່ເກີດຟ້າຄະນອງນັ້ນອາກາດຈະຮ້ອນອົບເອົ້າ. ແຕ່ພາຍຫລັງຝົນຕົກເຊົາແລ້ວທ້ອງຟ້າກໍແຈ່ມໃສຂຶ້ນ ແລະອາກາດກໍ່ເຢັນ ແລະຊຸ່ມຊື່ນດີ. ໃນລະດູຝົນນີ້ເຖິງວ່າຈະໄດ້ຮັບອິດທິພົນຈາກມວນອາກາດຮ້ອນຊຸ່ມ ແລະລົມມໍລະສຸມຈາກມະຫາສະໝຸດອິນເດຍ ແລະມະຫາສະໝຸດປາຊີຟິກ ແຕ່ຢູ່ບາງເຂດກໍມັກເກີດພາວະຟ້າແລ້ງໃນກາງລະດູຢູ່ເລື້ອຍໆ (ປະມານ 15-20 ວັນ) ເຊິ່ງເປັນຜົນສະທ້ອນບໍ່ໜ້ອຍຕໍ່ການຜະລິດກະສິກໍາ.
- ລະດູແລ້ງ: ເລີ່ມຕົ້ນແຕ່ເດືອນພະຈິກໄປຫາເດືອນມີນາຫລື ເດືອນເມສາ ໃນລະຍະນີ້ທ້ອງຟ້າແຈ່ມໃສດີ ແລະອາກາດແຫ້ງ. ແຕ່ຢູ່ທາງພາກເໜືອບາງຄັ້ງກໍ່ມີຝົນຝອຍຫລືໝອກກົ້ວ. ພ້ອມກັບການເລີ່ມຕົ້ນຂອງລະດູແລ້ງນີ້ອຸນຫະພູມກໍຄ່ອຍໆຫລຸດລົງ ແລະຈະລົງຕໍ່າທີ່ສຸດໃນເດືອນມັງກອນ. ຈາກນັ້ນມັນຈຶ່ງຄ່ອຍເພີ່ມຂຶ້ນ ແລະອາກາດຈະຮ້ອນເອົ້າທີ່ສຸດໃນເດືອນເມສາກ່ອນຝົນຈະຕົກຊ່າທໍາອິດ.

ທັງ 2 ລະດູດັ່ງກ່າວນີ້ມີລັກຊະນະແຕກຕ່າງກັນໄປຕາມແຕ່ລະທ້ອງຖິ່ນ, ໂດຍສະເພາະແມ່ນລະຫວ່າງພາກເໜືອກັບພາກໃຕ້ຄືພາກເໜືອມີລະດູຝົນສັ້ນກວ່າ, ມີຝົນຕົກໜ້ອຍກວ່າ ແລະບໍ່ວ່າຢູ່ໃນລະດູໃດໆກໍມີອຸນຫະພູມຕໍ່າກວ່າຢູ່ພາກໃຕ້ທັງມີອັດຕາຄວາມຜິດດ່ຽງຂອງອຸນຫະພູມປະຈໍາປີຕໍ່າກວ່າພາກໃຕ້.

## 4. ຊັບພະຍາກອນທຳມະຊາດ

ສປປລາວນັບວ່າເປັນປະເທດໜຶ່ງທີ່ມີຊັບພະຍາກອນທຳມະຊາດຢ່າງຫລວງຫລາຍ ເຊິ່ງເປັນທີ່ຮູ້ກັນດີ ແລະມີຢູ່ທົ່ວໄປກໍໄດ້ແກ່ດິນ, ຫີນ, ແຮ່, ນ້ຳ, ປ່າໄມ້, ສັດ ... ໃນນັ້ນຫລາຍຊະນິດກໍ່ເປັນພື້ນຖານອັນຍາວນານ ສຳລັບການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### 4.1 ຊັບພະຍາກອນນ້ຳຈືດ

ສປປລາວມີແຫລ່ງນ້ຳຈືດໂດຍສະເລ່ຍຕໍ່ຫົວຄົນສູງທີ່ສຸດຢູ່ໃນອາຊີ (54,000ມ$^3$/ຄົນ) ແລະນ້ຳຈືດນັ້ນ ທົ່ວໄປກໍຍັງຄົງຢູ່ໃນສະພາບດີ ເພາະບໍ່ຖືກຜົນສະທ້ອນຂອງສິ່ງແວດລ້ອມເປັນພິດເທື່ອ.




ຮູບ2 ສ່ວນໜຶ່ງຂອງແຫລ່ງນ້ຳປະເພດຕ່າງໆທີ່ມີຢູ່ໃນສປປລາວ

ສາຍນ້ຳຕົ້ນຕໍນັ້ນໄດ້ແກ່ແມ່ນ້ຳຂອງ ແລະສາຂາຂອງມັນອີກ 10 ກວ່າສາຍ. ສາຍນ້ຳເລົ່ານີ້ມີຄວາມ ສຳຄັນເປັນຢ່າງຍິ່ງຕໍ່ການດຳລົງຊີວິດປະຈຳວັນຂອງຄົນລາວທັງມວນຄືມັນເປັນແຫລ່ງອາຫານ ແລະ ເປັນບ່ອນ ທຳມາຫາກິນມາຕັ້ງແຕ່ໃດໆເປັນເສັ້ນທາງຄົມມະນາຄົມ, ເປັນແຫລ່ງພະລັງງານໄຟຟ້າອັນມະຫາສານ ແລະອື່ນໆ ອີກ. ໃນປະຈຸບັນສາຍນ້ຳຈຳນວນໜຶ່ງກໍໄດ້ຖືກນຳມາໃຊ້ເຂົ້າໃນການຜະລິດກະແສໄຟຟ້າໄດ້ແລ້ວເຊັ່ນ: ນ້ຳງື່ມ, ເຊໂດນ, ເຊເສັດ, ນ້ຳເທີນ... ເປັນຕົ້ນ. ນອກຈາກສາຍນ້ຳຕ່າງໆນີ້ແລ້ວໜອງ ແລະບຶງຢູ່ສປປລາວກໍມີຢ່າງ ຫລວງຫລາຍເຊັ່ນກັນ ແຕ່ສ່ວນຫລາຍເປັນໜອງຂະໜາດປານກາງທີ່ແຈກຢາຍຢູ່ທົ່ວປະເທດ ເຊິ່ງໃນນັ້ນມີ ຫລາຍກວ່າໝູ່ຄືແຂວງສະຫວັນນະເຂດ ແລະ ແຂວງວຽງຈັນ. ໜອງ ແລະບຶງຕ່າງໆ ເລົ່ານີ້ເປັນແຫລ່ງກັກເກັບ ນ້ຳທີ່ສຳຄັນ ເພື່ອສະໜອງນ້ຳໃຫ້ແກ່ການປູກຝັງລ້ຽງສັດ ແລະກິດຈະການອື່ນໆ ໃນທ້ອງຖິ່ນທີ່ກ່ຽວຂ້ອງ, ເປັນ ແຫລ່ງຫາປາ ແລະ ເປັນແຫລ່ງນ້ຳດື່ມວສຳລັບສັດປ່າຢູ່ໃນບໍລິເວນນັ້ນໆດ້ວຍ. ນ້ຳໃຕ້ດິນກໍ່ເປັນພາກສ່ວນໜຶ່ງທີ່ ສຳຄັນຂອງລະບົບນ້ຳທີ່ມີຢູ່ໃນສປປລາວ. ມັນມີຄຸນປະໂຫຍດອັນໃຫຍ່ຫລວງສຳລັບຊີວິດການເປັນຢູ່ຂອງປວງ ຊົນລາວ ເພາະວ່າບໍ່ຕ່ຳກວ່າ 90% ຂອງພົນລະເມືອງລາວຍັງໃຊ້ນ້ຳສ້າງ, ນ້ຳບາດານຫລືນ້ຳລິນຢູ່ຕາມທຳມະຊາດ ເພື່ອລ້ຽງຊີວິດປະຈຳວັນຂອງຕົນ. ໃນບາງເຂດນ້ຳໃຕ້ດິນໄດ້ໄຫລອອກມາສູ່ໜ້າດິນໃນພາວະຂອງນ້ຳຮ້ອນ ເຊິ່ງ ເພິ່ນສາມາດນຳໃຊ້ເຂົ້າໃນການປິ່ນປົວພະຍາດບາງຊະນິດໄດ້.

## 4.2 ຊັບພະຍາກອນດິນ

ຕັ້ງແຕ່ໃດໆມາ, ບໍ່ວ່າການເຮັດໄຮ່ເຮັດນາຫລືການປູກພືດຊະນິດໃດໆກໍ່ຕາມ ແມ່ນລ້ວນແຕ່ມີຄວາມຈຳເປັນໃນການນຳໃຊ້ດິນບໍ່ຫລາຍກໍ່ໜ້ອຍ. ດິນແມ່ນປັດໃຈໜຶ່ງທີ່ຂາດບໍ່ໄດ້ສຳລັບຄວາມເປັນຢູ່ຂອງຄົນລາວຍິ່ງໃນປະຈຸບັນນີ້ຊຶ່ງຄົນລາວຈຳນວນເຖິງ 78,6% ຂອງຈຳນວນພົນລະເມືອງທີ່ເຮັດວຽກຕົວຈິງທາງເສດຖະກິດເປັນຊາວກະສິກອນ ແລະ ໂຄງປະກອບດ້ານເສດຖະກິດຂອງຊາດກໍ່ຖືເອົາການກະສິກຳ ແລະປ່າໄມ້ເປັນບາດກ້າວເລີ່ມຕົ້ນນັ້ນກໍ່ຍິ່ງເຫັນວ່າດິນມີຄວາມສຳຄັນອັນດັບໜຶ່ງໃນການຫລໍ່ລ້ຽງຊີວິດຂອງຄົນລາວເຊັ່ນດຽວກັບອາກາດ ແລະນ້ຳ. ດິນທີ່ມີຢູ່ໃນສປປລາວມີຢູ່ດ້ວຍກັນຫລາຍປະເພດຄື: ດິນສັນດອນ, ດິນແຟຣາລິດ, ແລະດິນພູ. ດິນສັນດອນຫລືດິນຂີ້ປ່ອງມີຢູ່ຕາມລ້ອງນ້ຳ ແລະຢູ່ແຄມໜອງຫລືພື້ນທີ່ຕ່ຳຊຶ່ງຖືກນ້ຳຖ້ວມຢູ່ເປັນປະຈຳດິນຊະນິດນີ້ເປັນດິນດີມີລັກຊະນະພຸຜຸ່ຍ  ແລະ ເໝາະສຳລັບປູກພືດຊະນິດຕ່າງໆສຳລັບດິນແຟຣາລິດນັ້ນຄືດິນທີ່ພົບຢູ່ທົ່ວໄປ, ເປັນດິນທີ່ຖືກຊະລ້າງຢ່າງຮຸນແຮງຈຶ່ງມີທາດຝຸ່ນໜ້ອຍ (ຍົກເວັ້ນເຂດດິນພູໄຟ ແລະ ເຂດຫີນປູນ) ສ່ວນດິນພູນັ້ນເປັນດິນທີ່ພົບຢູ່ໃນເຂດພູມສັນຖານສູງໂດຍສະເພາະແມ່ນຢູ່ພາກເໜືອ, ເປັນດິນສີແດງແກມເຫລືອງ (ຖ້າຢູ່ບ່ອນສູງຈະເປັນສີກະເບົາແກມເຫລືອງ) ທີ່ມີຝຸ່ນປ່າຫລືອິນຊີວັດຖຸປະປົນຢູ່ນຳ. ໂດຍທົ່ວໄປນັ້ນ, ດິນດັ່ງກ່າວນີ້ເປັນດິນສົ້ມຈຶ່ງບໍ່ເປັນດິນດີພໍປານໃດ ແຕ່ກໍມີຄວາມເໝາະສົມສຳລັບການປູກພືດບາງຊະນິດຂອງເຂດອາກາດອົບອຸ່ນ.

## 4.3 ຊັບພະຍາກອນຫີນ ແລະ ແຮ່

ຫີນຊະນິດຕ່າງໆ ເປັນຊັບພະຍາກອນໃຕ້ດິນ ແລະທັງຢູ່ເທິງໜ້າດິນຊຶ່ງມີຢູ່ຢ່າງຫລວງຫລາຍໃນສປປລາວ ໃນປະຈຸບັນມີຫີນຫລາຍຊະນິດໄດ້ຖືກຂຸດຄົ້ນເພື່ອນຳໃຊ້ເປັນວັດສະດຸກໍ່ສ້າງເຮືອນຊານຫລືສິ່ງກໍ່ສ້າງຕ່າງໆ ແລະຖະໜົນຫົນທາງ, ໃຊ້ເປັນວັດຖຸດິບສຳລັບການຫັດຖະກຳປັ້ນຫລໍ່ ແລະ ໃຊ້ເຂົ້າໃນອຸດສາຫະກຳປັ້ນຫລໍ່  ແລະ ໃຊ້ເຂົ້າໃນອຸດສາຫະກຳການກໍ່ສ້າງເຊັ່ນ: ຫີນປູນ, ຫີນກວດ (ຫີນຫາດ), ຊາຍ, ຫີນກາວ, ຫີນກະແຣນິດ, ຫີນອ່ອນ, ດິນດາກ ແລະອື່ນໆອີກ.




ຮູບ3 ຕົວຢ່າງຫີນ ແລະ ແຮ່ບາງຊະນິດທີ່ພົບເຫັນທົ່ວໄປໃນສປປລາວ

ທາງດ້ານແຮ່ທາດນັ້ນກໍນັບວ່າພື້ນທໍລະນີຂອງສປປລາວ ເປັນຄັງສາງອັນໜຶ່ງທີ່ສະສົມຊັບພະຍາກອນ ເຊິ່ງເປັນສິນແຮ່ຊະນິດຕ່າງໆ ໄວ້ຢ່າງຫລວງຫລາຍ. ຕາມການສຳຫລວດ ແລະຂຸດຄົ້ນໃນເບື້ອງຕົ້ນເພີ່ນພົບວ່າມີທັງແຮ່ທີ່ເປັນໂລຫະ ແລະອະໂລຫະຫລາຍຊະນິດຊຶ່ງແຈກຍາຍຢູ່ທົ່ວປະເທດຄື: ກົ່ວ, ຊືນ, ເຫລັກ, ທອງແດງ, ຄຳ, ສັງກະສີ, ເງິນ, ຖ່ານຫີນ, ເກືອ ແລະອື່ນໆ ... ໃນນີ້ແຮ່ທີ່ຖືກຂຸດຄົ້ນແລ້ວໄດ້ແກ່ກົ່ວ, ຄຳ, ຖ່ານຫີນ, ຫີນກາວ, ເກືອ ...

## 4.4 ຊັບພະຍາກອນປ່າໄມ້

ປ່າໄມ້ນັບວ່າເປັນສົມບັດອັນລ້ຳຄ່າຂອງສປປລາວຊຶ່ງປົກຄຸມພື້ນທີ່ປະມານ 41% ຂອງເນື້ອທີ່ທົ່ວປະເທດ. ປ່າໄມ້ໃນລາວປະກອບດ້ວຍໄມ້ນາໆຊະນິດ ແລະມີໄມ້ຢ່າງດີຊຶ່ງມີອາຍຸເກີນກວ່າ 100 ປີ ເປັນຈຳນວນຫລວງຫລາຍ. ນອກຈາກໄມ້ແລ້ວຢູ່ໃນປ່າຍັງມີເຄື່ອງປ່າຢ່າງຫລວງຫລາຍຊຶ່ງໃນນັ້ນຫລາຍຊະນິດກໍ່ເປັນອາຫານທີ່ສຳຄັນຂອງຊາວລາວເຊັ່ນ: ໜໍ່ໄມ້, ໝາກໄມ້, ມັນຕ່າງໆ, ເຫດ, ຕາວ, ຜັກ ... ແລະຫລາຍຊະນິດກໍ່ເປັນວັດຖຸດິບສຳລັບການປຸງແຕ່ງຢາພື້ນເມືອງ ແລະນອກຈາກນັ້ນຢູ່ໃນປ່າກໍ່ຍັງມີສັດປ່າຊະນິດຕ່າງໆອີກ. ນັບແຕ່ບູຮານນະການມາຊາວລາວໄດ້ອາໃສປ່າໄມ້ນີ້ເພື່ອການດຳລົງຊີວິດຂອງຕົນຄື: ໃຊ້ໄມ້ເພື່ອເຮັດເຮືອນ, ເລົ້າເຂົ້າ, ພາຫະນະການຜະລິດ, ເຄື່ອງມືໃຊ້ສອຍ, ເຮັດຟືນ ແລະອື່ນໆ ໃນປະຈຸບັນລາຍໄດ້ແຫ່ງຊາດສ່ວນໜຶ່ງກໍແມ່ນໄດ້ຈາກປ່າໄມ້ນີ້ເອງ.




ຮູບ 4 ສ່ວນໜຶ່ງຂອງປ່າປະເພດຕ່າງໆຂອງສປປລາວ

ແຕ່ຢ່າງໃດກໍ່ດີ ເຖິງວ່າຜືນປ່າຂອງສປປລາວຍັງກວມເອົາເນື້ອທີ່ອັນກວ້າງຂວາງຢູ່ພໍສົມຄວນ ແລະ ເຖິງວ່າຜືນປ່າດັ່ງກ່າວນີ້ຍັງຮັກສາລັກຊະນະອັນດັ້ງເດີມຂອງມັນໄວ້ໄດ້ດີກວ່າຢູ່ໃນຫລາຍປະເທດທີ່ຢູ່ໃກ້ຄຽງກໍຕາມ, ແຕ່ກໍນັບວ່າເປັນປ່າໄມ້ຢູ່ໃນສປປລາວໄດ້ຖືກບຸກລຸກທຳລາຍໄປຢ່າງຫລວງຫລາຍຈົນພາໃຫ້ເນື້ອທີ່ຂອງມັນຫລຸດໜ້ອຍຖອຍລົງຂອງເນື້ອທີ່ປ່າໄມ້ຢູ່ໃນລາວ ແມ່ນເກີດຈາກຫລາຍສາເຫດຄື: ສົງຄາມ, ການຖາງປ່າເຮັດໄຮ່, ການຕັດໄມ້ເຮັດຟືນ, ການຂຸດຄົ້ນໄມ້ເພື່ອການຄ້າ, ການພັດທະນາເສດຖະກິດ-ສັງຄົມ ແລະອື່ນໆອີກ

## 4.5 ຊັບພະຍາກອນສັດປ່າ, ສັດນ້ຳ

ສປປລາວ ເປັນເຂດໜຶ່ງຂອງໂລກທີ່ຍັງມີສັດປ່າ ແລະສັດນ້ຳຫລາຍ ເຊິ່ງໃນນັ້ນມີທັງສັດທີ່ຍັງເຫລືອໜ້ອຍຢູ່ໃນໂລກ ເຊັ່ນ: ຊ້າງ, ເສືອ, ງົວບາ, ຄວາຍປ່າ, ເມີຍ, ເສົາຫລາ, ປາມຶກ, ປາຂ່າ ແລະອື່ນໆທັງນີ້ຍ້ອນວ່າທຳມະຊາດຂອງລາວ ໂດຍທົ່ວໄປຍັງຖືກຮັກສາໄວ້ຕາມລັກຊະນະອັນດັ້ງເດີມຂອງມັນຢູ່ນັ້ນເອງ. ບັນດາສັດປ່າ ແລະສັດນ້ຳທັງຫລາຍເລົ່ານີ້ນອກຈາກຈະເປັນສິ່ງປະດັບໃຫ້ທຳມະຊາດມີຊີວິດຊີວາ ແລະ ເປັນລະບົບນິເວດອັນຄົບຖ້ວນແລ້ວມັນຍັງເປັນອາຫານທີ່ລ້ຽງເກືອປະຊາຊົນລາວມາຕັ້ງແຕ່ເຫິງນານ ແລະຊິ້ນສ່ວນຕ່າງໆຂອງມັນຍັງເປັນສິນຄ້າ ແລະ ເປັນວັດຖຸດິບສຳລັບປຸງແຕ່ງຢາພື້ນເມືອງຂະໜານຕ່າງໆອີກ.

ສັດປ່າຢູ່ສປປລາວລວມມີທັງຈຳພວກທີ່ອາໃສຢູ່ຕາມດົງ, ປ່າປະສົມ, ໂຄກ ແລະຄັງ. ສັດປ່າຈຳພວກທີ່ອາໃສຢູ່ຕາມດົງທົ່ວໄປກໍ່ມີສັດຈຳພວກກິນໝາກໄມ້, ຈຳພວກສັດກັດແຫ້ນ, ສັດເລືອຄານ ແລະນົກຕ່າງໆ ນອກຈາກນັ້ນກໍຍັງມີສັດໃຫຍ່ຈຳພວກກິນຫຍ້າ ແລະໃບໄມ້ ແລະສັດກິນຊີ້ນ. ສຳລັບສັດປ່າຈຳພວກທີ່ອາໃສຢູ່ຕາມປ່າປະສົມ ແລະ ໂຄກກໍ່ມີສັດຈຳພວກກິນຫຍ້າທີ່ແລ່ນໄວແລະຈຳພວກທີ່ມັກເຄື່ອນຍ້າຍໄປຢູ່ດົງໃນຍາມແລ້ງຍ້ອນວ່າຂາດອາຫານ ແລະຕ້ອງໜີໄຟໄໝ້ປ່າ. ນອກຈາກນັ້ນກໍມີນົກເກືອບທຸກໆປະເພດ ແລະສັດກິນຊີ້ນ. ສ່ວນວ່າສັດຈຳພວກທີ່ອາໃສຢູ່ຕາມຄັງເວົ້າລວມແລ້ວມີບໍ່ຫລາຍປານໃດ,ທົ່ວໄປມັກມີແຕ່ສັດຈຳພວກກິນຫຍ້າ, ສັດກິນຊີ້ນ ແລະສັດປີກບາງປະເພດ.




ຮູບ 5 ສ່ວນໜຶ່ງຂອງສັດປ່າ, ສັດນ້ຳທີ່ຫາຍາກຢູ່ໃນສປປລາວ

ສຳລັບສັດນ້ຳກໍມີຢ່າງຫລວງຫລາຍເຊັ່ນດຽວກັນ, ມີທັງຈຳພວກຢູ່ຕາມລຳນ້ຳຫລື ເຊຕ່າງໆ ແລະ ຈຳພວກທີ່ຢູ່ຕາມຫ້ວຍ, ຮ່ອງ, ຄອງ, ໜອງ, ບຶງ ແລະທົ່ງນາ. ຈຳພວກທີ່ອາໃສຢູ່ຕາມລຳນ້ຳກໍໄດ້ແກ່ຈຳພວກປາ

ກິນໄຄ ເຊິ່ງທັງໝົດລ້ວນແຕ່ເປັນປາເກດເຊັ່ນ: ປາເອິນ, ປາພອນ, ປາຫວ່າ, ປານິກເຂົາ, ປາສະອີ, ປາເພ້ຍ, ປາແກງ ... ແລະປາກິນຊີ້ນ, ໝາກໄມ້ ແລະ ໃບໄມ້ເປັນອາຫານ ເຊິ່ງລວມມີທັງປາເກດ ແລະປາໜັງ ເຊັ່ນເປາບຶກ, ປາຂ່າ, ປາເລີມ, ປາເຄິງ, ປາຄ້າວ, ປາຊວາຍ, ປາໂດ, ປາສູດ, ປາປາກ, ປາຕອງ ແລະອື່ນໆ.

ເວົ້າລວມແລ້ວຊັບພະຍາກອນທຳມະຊາດຂອງລາວບໍ່ວ່າຊັບພະຍາກອນທີ່ຢູ່ໃຕ້ດິນຫລືທີ່ຢູ່ເທິງໜ້າດິນກໍ່ແມ່ນມີຢ່າງອຸດົມສົມບູນ. ແຕ່ໃນໄລຍະຜ່ານມາສິ່ງເລົ່ານັ້ນໄດ້ຖືກຂຸດຄົ້ນຫລືນຳໃຊ້ຢ່າງຊະຊາຍອັນພາໃຫ້ເກີດຄວາມເສຍຫາຍຢ່າງຮ້າຍແຮງ ໂດຍສະເພາະພືດ ແລະສັດ. ຕາມທີ່ມີການສຳຫລວດມາແລ້ວນັ້ນ, ໃນປະຈຸບັນນີ້ເນື້ອທີ່ປ່າໄມ້ທັງໝົດມີພຽງແຕ່ປະມານ 9,800,000 ເຮັກຕາຊຶ່ງເທົ່າກັບ 41.4% ຂອງເນື້ອທີ່ທັງໝົດຂອງປະເທດເທົ່ານັ້ນ ແລະພົບວ່າທັງສັດປ່າ ແລະສັດນ້ຳ ໄດ້ຫລຸດຈຳນວນລົງຢ່າງໜ້າເປັນຫ່ວງ, ໃນນັ້ນສັດບາງປະເພດກໍ່ສູນພັນໄປແລ້ວ ເຊັ່ນ: ແຮດ 2 ນໍຫລືບາງປະເພດກໍອາດຈະສູນພັນໄປເຊັ່ນແຮດນໍດຽວເປັນຕົ້ນ. ສັດບາງຈຳພວກກໍ່ໃກ້ຈະສູນພັນແລ້ວ ເຊັ່ນ: ງົວບາ, ເມີຍ, ມັ່ງ, ໂອງ, ຊາຍ, ນົກຍູງ, ນົກຂຽນ, ນົກກາບບົວ, ປາບຶກ, ປາຂ່າ ... ເປັນຕົ້ນ. ດ້ວຍເຫດນີ້ການປົກປັກຮັກສາ ແລະ ເສີມສ້າງຊັບພະຍາກອນທຳມະຊາດຢູ່ໃນສປປລາວຈຶ່ງເປັນພາລະກິດໜຶ່ງທີ່ສຳຄັນ, ໜັກໜ່ວງ ແລະຮີບດ່ວນຂອງປວງຊົນລາວທັງຊາດ.

# ບົດທີ 2

# ສະພາບທາງສັງຄົມ ແລະວັດທະນາທຳຂອງຊາວລາວ

## 1. ພົນລະເມືອງລາວ ແລະຄວາມເປັນຢູ່

### 1.1 ຈຳນວນ ແລະການແຈກຢາຍ

ຕາມສະຖິຕິຂອງການຄາດຄະເນປະຊາກອນເມື່ອປີ 2020 ຈຳນວນຊຂອງພົນລະເມືອງລາວມີຢູ່ ປະມານ 7,231,000 ກວາຄົນ. ຖ້າທຽບໃສ່ເນື້ອທີ່ຂອງປະເທດ ແລະ ຈຳນວນຊັບພະຍາກອນທີ່ມີຢູ່ນັ້ນກໍນັບ ວ່າ ສປປ ລາວ ເປັນປະເທດໜຶ່ງທີ່ມີປະຊາກອນໜ້ອຍເກີນໄປ ຊຶ່ງຈະເຫັນໄດ້ຈາກຄວາມໜາແໜ້ນສະເລ່ຍຂອງ ພົນລະເມືອງຊຶ່ງມີພຽງແຕ່ 30.4 ຄົນ/ກມ$^2$ ເທົ່ານັ້ນ.




ແຜນທີ3 ແຜນທີ່ສະແດງຂະໜາດຂອງພົນລະເມືອງລາວແບ່ງຕາມແຂວງ

(ຈາກການຄາດຄະເນປະຊາກອນເມື່ອປີ 2035)

ແຕ່ຢ່າງໃດກໍ່ດີ, ຖ້າທຽບໃສ່ເມື່ອກ່ອນນັ້ນກໍ່ເຫັນໄດ້ວ່າພົນລະເມືອງລາວມີການເພີ່ມຂຶ້ນໄວພໍສົມຄວນ ໂດຍສະເພາະແລ້ວນັບແຕ່ການສ້າງຕັ້ງເປັນ ສປປລາວ ເປັນຕົ້ນມາ. ທັງນີ້ກໍເນື່ອງຈາກວ່ານັບຕັ້ງແຕ່ປ່ຽນແປງການປົກຄອງມາອັດຕາການເກີດຂອງພົນລະເມືອງລາວກໍຍັງສູງຢູ່ (35.99% ຕໍ່ປີ) ແຕ່ວ່າອັດຕາການຕາຍພັດຕໍ່າລົງ (11.83% ຕໍ່ປີ) ໂດຍສະເພາະແລ້ວການຕາຍຂອງເດັກເກີດໃໝ່ອັນເນື່ອງມາຈາກການສາທາລະນະສຸກດີຂຶ້ນກວ່າເກົ່າຫລາຍ. ນອກຈາກນັ້ພສົງຄາມທີ່ຍືດເຍື້ອມາຫລາຍປີກໍໄດ້ຍຸດຕິລົງ. ຊີວິດການເປັນຢູ່ຂອງຊາວລາວກໍ່ດີຂຶ້ເປັນລໍາດັບມາ ແລະອື່ນໆອີກ. ຕາມສະຖິຕິຂອງປີ 1912 (ສະໄໝຝະລັ່ງປົກຄອງ) ພົນລະເມືອງລາວມີຈໍານວນພຽງແຕ່ປະມານ 650,000 ຄົນ ເທົ່ານັ້ນ. ແຕ່ 60 ປີຫລັງຈາກນັ້ນມາຄືໃນປີ 1972 ມັນໄດ້ເພີ່ມຂຶ້ນມາເປັນ 3,106,000 ຄົນ ແລະ ໃນໄລຍະ 30 ກວ່າປີ ແຫ່ງການສ້າງຕັ້ງເປັນສປປລາວມານີ້ຈໍານວນທີ່ເພີ່ມຂຶ້ນຂອງພົນລະເມືອງລາວກໍ່ມີຢູ່ປະມານ 3,000,000 ຄົນຊຶ່ງນັບວ່າເປັນການເພີ່ມທີ່ໄວພໍສົມຄວນ.




ແຜນທີ່ 4 ຄວາມໜາແໜ້ນຂອງພົນລະເມືອງລາວແບ່ງຕາມແຂວງ

(ຈາກການຄາດຄະເນປະຊາກອນເມື່ອປີ 2010)

ພົນລະເມືອງລາວນອກຈາກຈະມີຈໍານວນໜ້ອຍຢູ່ແລ້ວ ແຕ່ຊໍ້າຍັງແຈກຢາຍຢູ່ບໍ່ສະໜໍ່າສະເໝີກັນໃນທົ່ວປະເທດອີກ. ຊາວລາວສ່ວນຫລາຍອາໃສຢູ່ຕາມທົ່ງພຽງແຄມແມ່ນໍ້າຕ່າງໆຊຶ່ງໃນນັ້ນຈຸດໜັກກໍແມ່ນຢູ່ 8

ແຂວງແຄມແມ່ນ້ຳຂອງ ໂດຍກວມອັດຕາສ່ວນເຖິງ 66.6% ຂອງຈຳນວນພົນລະເມືອງທົ່ວປະເທດ ແຕ່ກວມເນື້ອທີ່ພຽງແຕ່ 49.7% ເທົ່ານັ້ນ.

ຕາມການຄາດຄະເນປະຊາກອນເມື່ອປີ 2035 ນັ້ນແຂວງທີ່ມີຄົນຫລາຍກວ່າໝູ່ໄດ້ແກ່ແຂວງສະຫວັນນະເຂດ (1,906,440 ຄົນ) ນະຄອນຫຼວງວຽງຈັນ (1,968,743ຄົນ) ຈຳປາສັກ (1,652,552 ຄົນ) ແລະ ຫລວງພະບາງ (1,447,541 ຄົນ) ແຕ່ໃນດ້ານການແຈກຢາຍ, ນະຄອນຫຼວງວຽງຈັນ ເປັນຜູ້ທີ່ມີອັດຕາຄວາມໜາແໜ້ນສະເລ່ຍສູງກວ່າໝູ່ໝົດຄືມີເຖິງ 196.1 ຄົນ/ກມ$^2$ ໃນຂະນະທີ່ແຂວງຈຳປາສັກມີ 42.3 ຄົນ/ກມ$^2$, ສະຫວັນນະເຂດມີ 41.6 ຄົນ/ກມ$^2$, ສາລະວັນມີ 34.3 ຄົນ/ກມ$^2$ ແລະຫລວງພະບາງມີ 26.5 ຄົນ/ກມ$^2$. ສ່ວນວ່າແຂວງອື່ນໆນັ້ນມີຄົນຢູ່ພຽງແຕ່ປະມານ 11-26 ຄົນ/ກມ$^2$ ຊຶ່ງໃນນັ້ນມີອັດຕາຄວາມໜາແໜ້ນຕ່ຳກວ່າໝູ່ຄືແຂວງຊຽງຂວາງ, ເຊກອງ, ອັດຕະປື ແລະຜົ້ງສາລີ.

### 1.2 ໂຄງປະກອບຂອງພົນລະເມືອງ

#### 1.2.1 ໂຄງປະກອບດ້ານເພດ

ຕາມຕົວເລກການຄາດຄະເນຂອງຈຳນວນພົນລະເມືອງລາວເມື່ອປີ 2020 ນັ້ນເຫັນວ່າມີຈຳນວນຜູ້ຊາຍ 3,623,000 ຄົນຊຶ່ງກວມ 49.92% ແລະ ແມ່ຍິງ 3,608,000 ຄົນຊຶ່ງເທົ່າກັບ 50.08% ຂອງພົນລະເມືອງລາວທັງໝົດ, ໃນນັ້ນຈຳນວນແມ່ຍິງທີ່ລື່ນຜູ້ຊາຍນັ້ນມີເຖິງ 9,921 ຄົນຫລື ເທົ່າກັບ 0.15% ຕົວເລກດັ່ງກ່າວສະແດງໃຫ້ເຫັນວ່າໂຄງປະກອບດ້ານເພດຂອງພົນລະເມືອງລາວມີລັກຊະນະຄ້າຍຄືກັບຢູ່ປະເທດຕ່າງໆຊຶ່ງໂດຍທົ່ວໄປຈະມີແມ່ຍິງຫລາຍກວ່າຜູ້ຊາຍ. ທັງນີ້ເພາະວ່າໂດຍທຳມະຊາດນັ້ນແມ່ຍິງມີອາຍຸຍືນກວ່າຜູ້ຊາຍນັ້ນເອງ.

ແຕ່ຖ້າທຽບກັນລະຫວ່າງແຂວງຕ່າງໆນັ້ນເຫັນວ່າບາງແຂວງກໍມີອັດຕາສ່ວນຜູ້ຊາຍຫລາຍກວ່າແມ່ຍິງຄື: ແຂວງວຽງຈັນ (103.39/100), ໄຊຍະບູລີ (102.00/100), ຊຽງຂວາງ (101.93/100), ຫົວພັນ (101.80/100), ຜົ້ງສາລີ (100.95/100), ບໍລິຄຳໄຊ (100.79/100) ແລະ ແຂວງຫລວງພະບາງ (100.35/100). ຖ້າວິໃຈຕາມໝວດອາຍຸກໍຈະເຫັນວ່າໂຄງປະກອບນີ້ມີອັນແຕກຕ່າງກັນຄື:

- ແຕ່ 0 ຫາ 14 ປີ: ເພດຊາຍມີ 38.13% ແລະ ເພດຍິງມີ 37.08%
- ແຕ່ 15 ຫາ 59 ປີ: ເພດຊາຍມີ 56.64% ແລະ ເພດຍິງມີ 57.01%
- ແຕ່ 60 ປີຂຶ້ນໄປ: ເພດຊາຍມີ 5.23% ແລະ ເພດຍິງມີ 5.91%

ຕົວເລກດັ່ງກ່າວຊີ້ໃຫ້ເຫັນວ່ານັບແຕ່ມື້ເກີດໃໝ່ຈົນເຖິງອາຍຸ 14 ປີນັ້ນຈຳນວນຜູ້ຊາຍມີຫລາຍກວ່າຜູ້ຍິງ. ນັ້ນກໍເນື່ອງຈາກວ່າຢູ່ໃນໄວອາຍຸດັ່ງກ່າວນີ້ຈຳນວນຜູ້ຕາຍທີ່ເປັນເພດຊາຍມີຫລາຍກວ່າທີ່ເປັນເພດຍິງ (ຍ້ອນການສ່ຽງໄພໃນການອອກແຮງງານຫລືທຳມາຫາກິນ, ຍ້ອນການເກີດອຸບັດຕິເຫດ, ຍ້ອນພະຍາດທີ່ເກີດຈາກການຫລິ້ນກິນຕ່າງໆ ແລະອື່ນໆ).

### 1.2.2 ໂຄງປະກອບດ້ານອາຍຸ

ໃນຈຳນວນພົນລະເມືອງລາວ 7,256,197 ຄົນເມື່ອປີ 2020 ນັ້ນເຫັນໄດ້ວ່າໝວດທີ່ມີອາຍຸແຕ່ 0 ຫາ 14 ປີກວມອັດຕາສ່ວນເຖິງ 37.6% ໝວດອາຍຸແຕ່ 15 ຫາ 59 ປີມີ 56.83% ແລະໝວດອາຍຸຕັ້ງແຕ່ 60ປີຂຶ້ນໄປນັ້ນມີພຽງແຕ່ 5.57% ເທົ່ານັ້ນ.ການທີ່ກຸ່ມອາຍຸຕ່ຳຫາປານກາງກວມອັດຕາສ່ວນໃຫຍ່ຄືແນວນັ້ນ ເປັນການບົ່ງບອກໃຫ້ຮູ້ວ່າພົນລະເມືອງລາວແມ່ນປະຊາກອນໜຸ່ມສ່ວນວ່າກຸ່ມຄົນອາຍຸສູງແຕ່ 60 ປີຂຶ້ນໄປຊຶ່ງກວມເອົາພຽງແຕ່ 5.57% ນັ້ນກໍສະແດງວ່າຄົນລາວມີອາຍຸບໍ່ຍືນພໍປານໃດນັ້ນເອງຄືໂດຍສະເລ່ຍແລ້ວມີປະມານ 64.7ປີ ເທົ່ານັ້ນ. ໂດຍອີງຕາມການປະກອບດ້ານອາຍຸຄືດັ່ງກ່າວນັ້ນທາດອາຍຸຂອງພົນລະເມືອງລາວຈຶ່ງມີລັກຊະນະສ້ອຍເປັນປາຍແຫລມຂຶ້ນຊຶ່ງລັກຊະນະຄືດັ່ງກ່າວນີ້ເປັນການບົ່ງບອກໃຫ້ຮູ້ວ່າມັນແມ່ນໂຄງປະກອບດ້ານອາຍຸຂອງພົນລະເມືອງຢູ່ໃນບັນດາປະເທດກຳລັງພັດທະນາທັງຫລາຍນັ້ນເອງ.

### 1.2.3 ໂຄງປະກອບດ້ານແຮງງານ ແລະອາຊີບ

ຢູ່ສປປລາວພົນລະເມືອງທີ່ເຮັດວຽກຫລືທີ່ເປັນກຳລັງແຮງງານແມ່ນນັບເອົາກຸ່ມຄົນທີ່ມີອາຍຸແຕ່ 10 ປີຂຶ້ນໄປຊຶ່ງປະກອບດ້ວຍຜູ້ເຮັດວຽກເສດຖະກິດ ແລະຜູ້ບໍ່ເຮັດວຽກເສດຖະກິດ. ພົນລະເມືອງທີ່ເຮັດວຽກເສດຖະກິດໄດ້ແບ່ງອອກເປັນ 2 ກຸ່ມຄື: ຜູ້ມີວຽກເຮັດງານທຳ ແລະຜູ້ວ່າງງານ. ຜູ້ມີວຽກເຮັດງານທຳສ່ວນໃຫຍ່ແມ່ນຜູ້ທີ່ເຮັດວຽກໃຫ້ຕົນເອງຊຶ່ງຕົ້ນຕໍແມ່ນວຽກກະສິກຳ ແລະວຽກຄອບຄົວໂດຍບໍ່ໄດ້ຮັບຄ່າຈ້າງ.

ຢູ່ສປປລາວ ໃນຈຳນວນຜູ້ອອກແຮງງານທັງໝົດນັ້ນຜູ້ຜະລິດໂດຍກົງໄດ້ກວມເອົາອັດຕາສ່ວນຫລາຍກວ່າໝູ່ຊຶ່ງໃນນັ້ນເດັ່ນກວ່າໝູ່ແມ່ນຊາວກະສິກອນ. ນັ້ນກໍເນື່ອງຈາກວ່າວຽກກະສິກຳແມ່ນຂະແໜງການຕົ້ນຕໍຂອງເສດຖະກິດໃນທົ່ວປະເທດ, ຍົກເວັ້ນແຕ່ນະຄອນຫຼວງວຽງຈັນຊຶ່ງມີຜູ້ເຮັດວຽກທີ່ບໍ່ແມ່ນຊາວກະສິກຳຫລາຍກວ່າຢູ່ແຂວງອື່ນໆ. ຕາມສະຖິຕິຂອງປີ 2005 ທີ່ຜ່ານມານັ້ນໃນທົ່ວປະເທດມີຜູ້ເຮັດວຽກກະສິກຳ 78.6% (ເຮັດນາ 64.3%, ທຳປະມົງ 0.1%, ເຮັດນາ-ລ້ຽງສັດ 0.2%, ປູກພືດ-ລ້ຽງສັດ 14.0%) ແລະຜູ້ເຮັດວຽກບໍ່ແມ່ນກະສິກຳ 21.4% ພາກສ່ວນດັ່ງກ່າວລວມມີກຳມະກອນ-ວິສາວະກອນ 3.8% ແລະສ່ວນເຫລືອນັ້ນແມ່ນອັດຕາຂອງຜູ້ຜະລິດໂດຍທາງອ້ອມ (ຜູ້ບໍລິຫານ, ຜູ້ບໍລິການ, ຜູ້ຈໍລະຈອນແຈກຢາຍ, ສຶກສາ, ວັດທະນາທຳ, ສາທາລະນະສຸກ ...) ແລະພາກສ່ວນທີ່ບໍ່ມີອາຊີບອັນແນ່ນອນ.

### 1.2.4 ໂຄງປະກອບດ້ານຊົນເຜົ່າ

ພົນລະເມືອງລາວສືບເຊື້ອສາຍມາຈາກບັນພະບູລຸດຫລາຍກົກຫລາຍເຫລົ່າທີ່ໄດ້ດຳລົງຊີວິດຮ່ວມກັນຢູ່ເທິງແຜ່ນດິນນີ້ເປັນເວລາຫລາຍພັນປີແລ້ວ. ດ້ວຍເຫດນີ້ມາເຖິງປະຈຸບັນພົນລະເມືອງລາວຈຶ່ງປະກອບດ້ວຍຫລາຍຊົນເຜົ່າຊຶ່ງມີເອກະລັກການດຳລົງຊີວິດທີ່ແຕກຕ່າງກັນໄປ.




ຮູບ 6: ສ່ວນໜຶ່ງຂອງຊົນເຜົ່າໃນສປປລາວ.

ຕາມການສຳຫຼວດພົນລະເມືອງ ແລະທີ່ຢູ່ອາໃສໃນປີ 2005 ນັ້ນພົບວ່າພົນລະເມືອງລາວປະກອບດ້ວຍຊົນເຜົ່າຕ່າງໆ ເຖິງ 49 ຊົນເຜົ່າ. ແຕ່ລະຊົນເຜົ່ານັ້ນຕ່າງກໍມີເອກະລັກໃນການດຳລົງຊີວິດທີ່ແຕກຕ່າງກັນໄປ ຊຶ່ງອີງຕາມລັກຊະນະທີ່ຄ້າຍຄືກັນທາງດ້ານພາສາປາກເວົ້າແລ້ວກໍ່ສາມາດແບ່ງອອກເປັນໝວດຕ່າງໆ ໄດ້ດັ່ງນີ້.

- **ໝວດທີ່ປາກພາສາໃນຕະກູນພາສາລາວ-ໄຕຫລ ໄຕ-ກະໄດ:**ມີບັນດາຊົນເຜົ່າຕ່າງໆ ເຊັ່ນ: ລາວ, ໄຕ, ຜູ້ໄທ, ລື້ ... ບັນດາຊົນເຜົ່າເລົ່ານີ້ສ່ວນຫລາຍດຳລົງຊີວິດຢູ່ຕາມທົ່ງພຽງລ້ອງແມ່ນ້ຳສຳຄັນຕ່າງໆ ໂດຍລວມມີທັງໝົດ 8 ຊົນເຜົ່າດ້ວຍກັນ ແລະກວມເອົາອັດຕາສ່ວນເຖິງ 64.9% ຂອງຈຳນວນພົນລະເມືອງລາວທັງໝົດ.
- **ໝວດທີ່ປາກພາສາໃນຕະກູນພາສາມົ້ງ-ອີ່ງມຽນ:** ປະກອບດ້ວຍ 2 ຊົນເຜົ່າຄື: ມົ້ງ (ມົ້ງຂາວ, ມົ້ງດຳ, ມົ້ງແດງ, ມົ້ງຂຽວ ...) ແລະ ອິວມຽນ (ຢ້າວ, ລາວຫ້ວຍ, ລານຕານ ...) ຊຶ່ງສ່ວນຫລາຍອາໃສຢູ່ເຂດພູສູງທາງພາກເໜືອ ແລະກວມອັດຕາສ່ວນເຖິງ 8.5% ຂອງຈຳນວນພົນລະເມືອງລາວທັງໝົດ.
- **ໝວດທີ່ປາກພາສາໃນຕະກູນພາສາຈີນ-ທິເບດ:** ປະກອບດ້ວຍຊົນເຜົ່າສິງສີລີ (ພູນ້ອຍ, ປີຊູ ...), ຮ່າຍີ່, ອາຄາ (ໂອມາ,ກໍ້ ...), ໂລໂລ, ສີລາ, ລາຫູ, ຫໍ້ ... ຊຶ່ງອາໃສຢູ່ໃນແຂວງຕ່າງໆລຽບຕາມຊາຍແດນລາວ-ຈີນ ແລະລາວ-ມຽນມາ (ຜົ້ງສາລີ, ອຸດົມໄຊ, ຫລວງນ້ຳທາ, ບໍ່ແກ້ວ ...) ໂດຍລວມມີທັງໝົດ 7 ຊົນເຜົ່າ ແລະກວມອັດຕາສ່ວນພຽງແຕ່ 2.8% ຂອງຈຳນວນພົນລະເມືອງລາວທັງໝົດ.

ນອກຈາກຊົນເຜົ່າຕ່າງໆ ເລົ່ານີ້ແລ້ວຢູ່ສປປລາວຍັງມີຊາວຕ່າງດ້າວອີກເຊັ່ນ: ຫວຽດນາມ, ຈີນ, ໄທ, ອິນເດຍ ... ຊຶ່ງຈຳນວນໜຶ່ງກໍໄດ້ປ່ຽນສັນຊາດເປັນຄົນລາວແລ້ວໂດຍກວມອັດຕາສ່ວນ 0.2% ຂອງຈຳນວນ

ພົນລະເມືອງລາວທັງໝົດ ແລະທົ່ວໄປມັກອາໃສຢູ່ໃນເມືອງໃຫຍ່ຕ່າງໆ. ສ່ວນພົນລະເມືອງອີກ 1% ໄດ້ແກ່ພວກທີ່ບໍ່ບອກໄດ້ວ່າຕົນສັງກັດຊົນເຜົ່າໃດ.

## 1.3 ພາສາ, ສາສະໜາ ແລະຄວາມເຊື່ອຖື

### 1.3.1 ພາສາ

ເນື່ອງຈາກວ່າພົນລະເມືອງລາວປະກອບດ້ວຍຫລາຍຊົນເຜົ່າດັ່ງນັ້ນຈຶ່ງມີການປາກເວົ້າກັນໃນຫລາຍພາສາດ້ວຍກັນ. ແຕ່ມາດຕາ 89 ຂອງລັດຖະທຳມະນູນແຫ່ງສປປລາວໄດ້ກຳນົດວ່າ “ພາສາ ແລະຕົວອັກສອນລາວແມ່ນພາສາ ແລະຕົວອັກສອນທີ່ໃຊ້ເປັນທາງການຂອງປະເທດລາວ”. ຕົວໜັງສືລາວທີ່ນຳໃຊ້ກັນໃນປະຈຸບັນນີ້ເປັນຕົວໜັງສືທີ່ສືບທອດ ແລະດັດແປງມາຈາກຕົວອັກຂະຫຼະຂອງອິນເດຍ ແລະຂອມ, ເປັນຕົວໜັງສືທີ່ຂຽນງ່າຍ ແລະອ່ານງ່າຍ ເພາະໃຊ້ສະກົດຕາມສຽງ, ບໍ່ມີຕົວຫ້ອຍ ແລະຕົວກາລັນຈຶ່ງບໍ່ເປັນອຸປະສັກສຳລັບການຮ່ຳຮຽນຂອງປວງຊົນລາວທົ່ວໄປ. ເນື່ອງຈາກວ່າພາສາລາວເປັນພາສາທີ່ຮຽນໄດ້ງ່າຍ, ດັ່ງນັ້ນບັນດາຊົນເຜົ່າຕ່າງໆເຖິງວ່າຈະໃຊ້ພາສາປະຈຳເຜົ່າຂອງຕົນເປັນຕົ້ນຕໍແຕ່ສ່ວນຫລາຍກໍຮູ້ ແລະປາກພາສາລາວໄດ້ດີ.

ການປາກເວົ້າພາສາລາວເຖິງວ່າຈະສາມາດເວົ້າກັນເຂົ້າໃຈໄດ້ໃນທົ່ວປະເທດ ແຕ່ວ່າສຳນຽງການເວົ້າມີຄວາມແຕກຕ່າງກັນໄປຕາມແຕ່ລະພາກ ເຮັດໃຫ້ຮູ້ໄດ້ວ່າຜູ້ເວົ້ານັ້ນເປັນຄົນພາກໃດຂອງປະເທດ. ນອກຈາກນີ້ຢູ່ແຕ່ລະທ້ອງຖິ່ນນັ້ນ ພາສາລາວມີຄວາມແຕກຕ່າງກັນໃນດ້ານການຜັນສຽງ, ການເນັ້ນສຽງ ແລະ ຄວາມໄວຂອງການເວົ້າ. ບາງຄຳສັບຊຶ່ງມີຄວາມໝາຍອັນດຽວກັນກໍຍັງມີຄວາມແຕກຕ່າງກັນໃນບາງທ້ອງຖິ່ນ. ຖ້ານັກສຶກສາຫລື ບັນດາທ່ານທັງຫລາຍຫາກມີໂອກາດໄດ້ໄປທ່ອງທ່ຽວໃນທົ່ວປະເທດທ່ານກໍຈະເຫັນໄດ້ຄວາມແຕກຕ່າງດັ່ງກ່າວເຊັ່ນ: ຊາວລາວພາກໄຕ້ພາກັນເອີ້ນວ່າ “ໝາກເຜັດ” ຂະນະຊາວລາວຢູ່ບາງທ້ອງຖິ່ນໃນພາກເໜືອເອີ້ນວ່າ “ໝາກເອືອດ” ດັ່ງນີ້ເປັນຕົ້ນ ກໍລະນີອື່ນອີກກໍ່ມີເຊັ່ນ: ຊາວລາວທົ່ວໄປມີການຈ□າແນກສຽງຂອງຕົວ “ພ ” ກັບຕົວ “ຟ” ແຕ່ຊາວສະຫວັນນະເຂດພັດບໍ່ສູ້ໃຊ້ສຽງຕົວ “ຟ” ນີ້ເລີຍຫລືຊາວຈຳປາສັກ-ປາກເຊແລະຊາວລາວໃນບາງທ້ອງຖິ່ນຂອງພາກເໜືອຈະຜັນສຽງຕົວ “ດ” ເປັນຕົວ “ລ” ດັ່ງນີ້ເປັນຕົ້ນ.

ຕາມການກຳນົດຂອງລັດຖະທຳມະນູນຂອງ ສ ປ ປ ລາວນັ້ນ ພາສາທາງການໄດ້ແກ່ພາສາລາວຄື ທີ່ໄດ້ກ່າວມາ. ແຕ່ໃນການຕິດຕໍ່ພົວພັນກັບກັບໂລກພາຍນອກເປັນຕົ້ນ ການຕິດຕໍ່ທາງທຸລະກິດກໍ່ມີກໍມີການໃຊ້ພາສາອັງກິດ, ຝະລັ່ງ ແລະ ພາສາຂອງປະເທດຕ່າງໆ ທີ່ຢູ່ໃກ້ຄຽງ.

### 1.3.2 ສາສະໜາ ແລະ ຄວາມເຊື່ອຖື

ພົນລະເມືອງລາວຊົນເຜົ່າຕ່າງໆ ມີຄວາມເຊື່ອຖືແຕກຕ່າງກັນໄປ. ແຕ່ໂດຍສ່ວນໃຫຍ່ນັ້ນ ເຂົາເຈົ້ານັບຖືສາສະໜາພຸດນິກາຍເຖລະວາດ ຫລື ຫີນະຍານຄືກັບຊາວໄທ, ຂະແມ, ມຽນມາ, ສຣີລັງກາ ... ແຕ່ຊາວລາວສ່ວນໜຶ່ງກໍນັບຖືສາສະໜາຄຼິດສະຕຽນ ແລະ ອີກສ່ວນໜຶ່ງຊຶ່ງມີຈຳນວນບໍ່ໜ້ອຍປານໃດໄດ້ພາກັນນັບຖືຜີຫລ ເທພາອາລັກ ແລະ ອື່ນໆ ຕາມຄວາມເຊື່ອຖືດັ່ງເດີມຂອງສະໄໝບູຮານ.




ຮູບ 7 ວັດ ແລະ ກິດຈະກຳປະຈຳວັນຂອງພະສົງ

ການນັບຖືພະພຸດທະສາສະໜານີ້ໄດ້ເລີ່ມມີຂຶ້ນນັບແຕ່ສະໄໝກໍ່ຕັ້ງອານາຈັກລ້ານຊ້າງເອກະພາບໃນລັດສະການຂອງພະເຈົ້າຟ້າງຸ່ມມະຫາລາດ (ສະຕະວັດທີ 14) ເປັນຕົ້ນມາ. ສ ປ ປ ລາວ ມີວັດໃນພຸດທະສາສະໜາໃນທົ່ວປະເທດປະມານ 3,000 ກວ່າວັດ ແລະ ມີພະສົງສາມະເນນຢູ່ປະມານ 15,000 ອົງ. ໃນປະຈຸບັນເຮົາສາມາດເວົ້າໄດ້ວ່າສາສະໜາພຸດໄດ້ກາຍມາເປັນສູນລວມທາງດ້ານຈິດໃຈຂອງຊາວລາວທັງຫລາຍທັງປວງ ແລະກາຍເປັນພື້ນຖານສ່ວນໜຶ່ງຂອງວັດທະນາທຳລາວ. ຈະເຫັນໄດ້ວ່າ ບໍ່ວ່າສິນລະປະ, ວັນນະກຳ, ງານບຸນ, ງານປະ ເພນີ, ພິທີກຳ, ປັດສະຍາ, ກົດໝາຍ, ຫລັກການ, ຄຳສັ່ງສອນຕ່າງໆ ແລລະ ແນວປະຕິບັດໃນການປົກຄອງຫລື ຄຸ້ມຄອງລັດຄຸ້ມຄອງສັງຄົມລາວນັ້ນກໍລ້ວນແຕ່ມີສ່ວນກ່ຽວພັນກັບຫລັກສິນທຳຄຳສອນຂອງສາສະໜາດັ່ງກ່າວນີ້ ບໍ່ຫລາຍກໍ່ໜ້ອຍ.

## 1.4 ຈາຮີດປະເພນີ

ວັດທະນາທຳຈາຮີດ ຫລື ປະເພນີຕາມຈາຮີດຂອງລາວທີ່ມີການປະຕິບັດສືບຕໍ່ກັນມານັ້ນ ເອີ້ນວ່າ “ຮີດ” ເຊິ່ງໝາຍເຖິງ “ຮີດສິບສອງ” ແລະຮີດອື່ນໆອັນເປັນປະເພນີທີ່ຖືປະຕິບັດກັນແຕ່ໃດໆມາ.

ຮີດສິບສອງຄືປະເພນີ “ບຸນ” ປະຈຳແຕ່ລະເດືອນໃນຮອບປີທີ່ຊາວລາວໄດ້ປະຕິບັດສືບຕໍ່ກັນມາຊຶ່ງກ່ອນໜ້າການເຂົ້າມາຂອງພຸດທະສາສະໜານັ້ນໄດ້ເນັ້ນພິທີກຳທາງຜີແລະພາມຫລາຍກວ່າ. ແຕ່ເມື່ອພຸດທະສາສະໜາໄດ້ແຜ່ເຂົ້າມາຄວາມເຊື່ອແລະພິທີກຳມີການປ່ຽນແປງໄປເນື່ອງຈາກມີການນຳເອົາພິທີກຳທາງສາສະໜາເຂົ້າໄປປະສົມປະສານແລະມີພະສົງເຂົ້າຮ່ວມໃນພິທີ.

ປະເພນີດັ່ງກ່າວເປັນປະເພນີສົ່ງເສີມໃຫ້ຜູ້ຄົນໃນຊຸມຊົນໄດ້ເຂົ້າຮ່ວມ “ເອົາບຸນ” ນຳກັນກໍຄືເຂົ້າຮ່ວມກິດຈະກຳສ້າງຄວາມດີຄວາມງາມນັ້ນເອງ. ຜົນທີ່ໄດ້ຮັບກໍຄືທຸກຄົນຈະໄດ້ມີເວລາເຂົ້າໃກ້ຊິດກັບຫລັກທຳຄຳສອນທາງສາສະໜາຫລາຍຂຶ້ນ, ເຮັດໃຫ້ຜູ້ຄົນໃນຊຸມຊົນນັບທັງພື້ນທີ່ໃກ້ຄຽງກັນໄດ້ພົບປະສັງສັນແລະຮູ້ຈັກຄຸ້ນເຄີຍກັນເພື່ອຄວາມມ່ວນຊື່ນລື້ນເລີງແລະສາມັກຄີຮັກແພງກັນຊຶ່ງເປັນການສືບທອດສິ່ງດີງາມມາຈົນເຖິງປະຈຸບັນນີ້ອັນສະແດງເຖິງຄວາມເປັນຊາດທີ່ເກົ່າແກ່ແລະຈະເລີນມາແຕ່ເຫິງນານຂອງຊາວລາວ.




ຮູບ 8 ສ່ວນໜຶ່ງຂອງບຸນປະເພນີໃນສປປລາວ

ຢ່າງໃດກໍ່ດີ, ການປະຕິບັດຮີດສິບສອງຂອງຊາວລາວໃນສັງຄົມປະຈຸບັນນີ້ເຫັນວ່າບໍ່ສາມາດເຮັດໄດ້ທຸກປະການຕາມທີ່ມີການກຳນົດໄວ້. ບຸນປະເພນີທີ່ມີການປະຕິບັດໃນທົ່ວປະເທດແລະສືບຕໍ່ກັນມາປົກກະຕິໄດ້ແກ່:

- ເດືອນສາມ: ບຸນມາຄະບູຊາ (ງານບຸນວັດພູທີ່ແຂວງຈຳປາສັກ)
- ເດືອນສີ່: ບຸນພະເຫວດ (ບຸນມະຫາຊາດ)
- ເດືອນຫ້າ: ບຸນກຸດສົງການ (ບຸນປີໃໝ່ລາວ)
- ເດືອນຫົກ: ບຸນບັ້ງໄຟ.
- ເດືອນເຈັດ: ບຸນເຮືອນ ຫຼືບຸນບ້ານ (ບຸນຊຳລະລ້າງສິ່ງສົກກະປົກຫຼືປັດເປົ່າເຄາະເຂັນ)
- ເດືອນແປດ: ບຸນເຂົ້າພັນສາ
- ເດືອນເກົ້າ: ບຸນເຂົ້າປະດັບດິນ (ມີງານຊ່ວງເຮືອທີ່ນະຄອນຫຼວງວຽງຈັນ)
- ເດືອນສິບ: ບຸນເຂົ້າສະຫຼາກ
- ເດືອນສິບເອັດ: ບຸນອອກພັນສາ (ມີງານຊ່ວງເຮືອທີ່ນະຄອນວຽງຈັນແລະໃນແຂວງ)
- ເດືອນສິບສອງ: ບຸນກະຖິ່ນ (ມີບຸນນະມັດສະການພະທາດຫຼວງທີ່ນະຄອນວຽງຈັນ)

ສ່ວນຮີດອື່ນໆ ທີ່ຊາວລາວໄດ້ຖືປະຕິບັດ ໄປຄຽງຄູ່ກັບຮີດສິບສອງ ກໍຄື: ບຸນຂຶ້ນເຮືອນໃໝ່, ບຸນກອງບວດ, ກອງຫົດ, ງານແຕ່ງດອງ, ງານບາສີສູ່ຂວັນ, ງານບຸນແຈກເຂົ້າ, ປະເພນີເຕົ້າຊ່ວງລ້ຽງຜີ, ປະເພນີລ້ຽງຜີ ຕາແຮກ, ປະເພນີແຮກນາ, ປະເພນີລ້ຽງຜີປູຕາແລະອື່ນໆອີກ. ສຳລັບຊົນເຜົ່າອື່ນໆກໍມີບຸນປະເພນີຂອງຕົນເຊັ່ນກັນເຊັ່ນບຸນກິນຈຽງຂອງຊົນເຜົ່າມົ້ງ, ບຸນກະເລີຂອງຊົນເຜົ່າກຶມມຸ, ບຸນເຕດຂອງຊົນເຜົ່າໄຕດຳ…ດັ່ງນີ້ເປັນຕົ້ນ.

## 2. ການຕັ້ງຖິ່ນຖານແລະວາດດຳລົງຊີວິດຂອງພົນລະເມືອງລາວ.

### 2.1 ການຕັ້ງຖິ່ນຖານ.

ຊາວລາວບໍ່ວ່າຊົນເຜົ່າໃດໆ ກໍ່ສາມາດເລືອກຫາທີ່ຢູ່ຂອງຕົນໄດ້ຕາມໃຈຊອບ. ແຕ່ໂດຍສ່ວນໃຫຍ່ເຂົາເຈົ້າ ອາໄສຢູ່ໃນຊົນນະບົດເນື່ອງຈາກປະກອບອາຊີບຫຼັກເປັນຊາວກະສິກອນເປັນສ່ວນໃຫຍ່ຫຼາຍ.

ການຕັ້ງຖິ່ນຖານຂອງພົນລະເມືອງລາວມີທັງແບບຊົ່ວຄາວ ແລະ ແບບຖາວອນ. ການຕັ້ງຖິ່ນຖານແບບຊົ່ວຄາວ ໂດຍທົ່ວໄປແມ່ນການຕັ້ງຖິ່ນຖານຂອງ ຊົນເຜົ່າລາວຊາວພູດອຍ ຊຶ່ງຫາລ້ຽງຊີບດ້ວຍການເຮັດໄຮ່ແບບເລື່ອນລອຍ ຫຼື ແບບໝູນວຽນພື້ນທີ່. ນອກຈາກນັ້ນກໍ່ມີການລ່າເນື້ອແລະເກັບເຄື່ອງປ່າ. ການຕັ້ງຖິ່ນຖານແບບນີ້ມີລັກສະນະເປັນກຸ່ມນ້ອຍໆ, ມີຄົວເຮືອນໜ້ອຍ ແລະ ຕັ້ງກະແຈກກະຈາຍຢູ່ຕາມເປີ້ນພູຫຼືແຄມຫ້ວຍໃນເຂດຕີນພູ. ສ່ວນການຕັ້ງຖິ່ນຖານແບບຖາວອນນັ້ນ ພົບເຫັນຫຼາຍຢູ່ຕາມເຂດທົ່ງ ພຽງຕ່າງໆ ທີ່ພົນລະເມືອງໂດຍທົ່ວໄປມີອາຊີບເປັນຊາວນາ, ເປັນຊ່າງຫັດຖະກຳ, ຊາວຄ້າຂາຍ ແລະ ປະກອບອາຊີບອື່ນໆ ທີ່ມີລັກສະນະໝັ້ນຄົງ ແລະ ມີຄວາມເປັນຢູ່ຢ່າງປົກກະຕິ. ເຂດດັ່ງກ່າວເປັນທີ່ຕັ້ງຂອງເມືອງສ□າຄັນ ຫຼາຍໆເມືອງ ໃນນັ້ນໃຫຍ່ກວ່າໝູ່ຄືນະຄອນວຽງຈັນ, ເມືອງໄກສອນ ພົມວິຫານ, ປາກເຊ ແລະ ຫຼວງພະບາງ.

ຢູ່ໃນເຂດທົ່ງພຽງນັ້ນບ້ານທັງຫຼາຍມັກຈະເປັນບ້ານຂະໜາດໃຫຍ່ ຊຶ່ງບາງບ້ານກໍ່ມີເຖິງ 300-400 ຫຼັງຄາເຮືອນ. ໂດຍຖືເອົາວິຖີທຳມາຫາກິນ ແລະ ເງື່ອນໄຂສະດວກໃນການດຳລົງຊີວິດເປັນຫຼັກ, ຊາວບ້ານໃນເຂດ ດັ່ງກ່າວມັກພາກັນຕັ້ງບ້ານຕາມທີ່ຕັ້ງຄືດັ່ງນີ້:

- ຕັ້ງຢູ່ເທິງໂນນສູງກາງທົ່ງ ຊຶ່ງເອີ້ນວ່າບ້ານນາ.
- ຕັ້ງຢູ່ແຄມແມ່ນ້ຳ ຊຶ່ງເອີ້ນວ່າບ້ານທ່າ.
- ຕັ້ງຢູ່ແຄມສາຍທາງຕ່າງໆ ຫຼື ຢູ່ແຄມປ່າ ຊຶ່ງເອີ້ນວ່າບ້ານໂຄກ.

ຢູ່ໃນບ້ານເຫຼົ່ານີ້ໂດຍທົ່ວໄປມັກຈະມີວັດ, ໂຮງຮຽນ, ສາລາ... ແລະເຮືອນທັງຫຼາຍກໍ່ມັກຈະເປັນເຮືອນຫຼັງໃຫຍ່ແລະທັງມີລັກສະນະແໜ້ນໜາຊຶ່ງທັງໝົດນັ້ນສະແດງເຖິງຄວາມໝັ້ນຄົງຖາວອນຂອງການຕັ້ງບ້ານນັ້ນເອງ.

ສ່ວນຢູ່ໃນຕົວເມືອງ, ການຕັ້ງຖິ່ນຖານຂອງພົນລະເມືອງລາວ ເວົ້າລວມກໍ່ແມ່ນແບບຖາວອນ. ເຮືອນ, ຕຶກ ຫຼື ອາຄານຕ່າງໆ ກໍ່ມີຫຼາຍແບບຫຼາຍສີສັນທາງສິລະປະ, ມີທັງເຮືອນແບບລາວ ແລະ ແບບຂອງຕ່າງປະເທດ ຊຶ່ງທົ່ວໄປມີຂະໜາດໃຫຍ່ ແລະ ມີລັກສະນະແໜ້ນໜາຖາວອນ.

### 2.2 ການປະກອບອາຊີບ.

ພົນລະເມືອງລາວປະກອບອາຊີບຫຼາຍໆຢ່າງເທົ່າທີ່ຕົນເອງມີຄວາມສາມາດເຮັດໄດ້ ແລະ ມີຄວາມຖະໜັດ ຫຼື ສະຫງວນມັກໃນອາຊີບນັ້ນໆ. ໂດຍທົ່ວໄປແລ້ວເຂົາເຈົ້າມີອາຊີບເປັນຊາວນາ, ຊາວໄຮ່, ຊາວສ່ວນ, ກຳມະກອນ, ຊ່າງຫັດຖະກຳ, ນາຍຊ່າງເຕັກນິກ, ຊາວຄ້າຂາຍ, ຜູ້ບໍລິການ, ນັກທຸລະກິດ, ລັດຖະກອນ, ທະຫານ, ຕຳຫຼວດແລະອື່ນໆຊຶ່ງໃນນັ້ນຫຼາຍກວ່າໝູ່ແມ່ນຊາວນາ, ຊາວໄຮ່, ຊາວສ່ວນແລະຜູ້ທີ່ເຄື່ອນໄຫວທາງ

ກະສິກຳອື່ນໆຊຶ່ງກວມເອົາອັດຕາສ່ວນເຖິງ 78.6% ຂອງຈຳນວນພົນລະເມືອງລາວທີ່ເຮັດວຽກຕົວຈິງທາງເສດຖະກິດ.

## 2.3 ວາດດຳລົງຊີວິດ.

ໂດຍອີງຕາມລັກສະນະຂອງການຕັ້ງຖິ່ນຖານແລະ ວິທີທຳມາຫາກິນ, ພົນລະເມືອງລາວຖືກຈັດແບ່ງອອກເປັນ 3 ໝວດ ຫລື ກຸ່ມໃຫຍ່ໆ ຊຶ່ງແຕ່ລະກຸ່ມດັ່ງກ່າວນີ້ມີເອກະລັກໃນການດຳລົງຊີວິດແຕກຕ່າງກັນໄປດັ່ງນີ້.

- ກຸ່ມທີ່ປາກໃນຕະກຸນພາສາລາວ-ໄຕ ສ່ວນໃຫຍ່ມັກຈະຕັ້ງຖິ່ນຖານຢູ່ໃນເຂດທົ່ງພຽງແຄມແມ່ນ້ຳຕ່າງໆ ຊຶ່ງຫລາຍກວ່າໝູ່ແມ່ນຢູ່ລຽບແຄມແມ່ນ້ຳຂອງ. ເຂົາເຈົ້າມັກຢູ່ກັນເປັນບ້ານໃຫຍ່, ຢູ່ເຮືອນຍົກພື້ນ, ກິນເຂົ້າໜຽວ ແລະ ນັບຖືສາສະໜາພຸດ ໂດຍທີ່ອາຊີບທົ່ວໄປແມ່ນເຮັດນາ ແຕ່ບາງເຜົ່າກໍເຮັດໄຮ່. ນອກຈາກນັ້ນກໍແມ່ນເຮັດສວນ, ລ້ຽງສັດ, ຫາປາ, ເປັນຊ່າງຫັດຖະກຳ, ເປັນຊາວຄ້າຂາຍ ... ເນື່ອງຈາກມີສະພາບແວດລ້ອມທີ່ເໝາະສົມດີໃນແຖບທີ່ຊາວລາວກຸ່ມດັ່ງກ່າວອາໃສຢູ່ນັ້ນສ່ວນຫລາຍເສດຖະກິດ ແລະ ວັດທະນາທຳມີການຂະຫຍາຍຕົວດີ.
- ກຸ່ມທີ່ປາກພາສາໃນຕະກູນພາສາມອນ-ຂະແມ ທົ່ວໄປມັກຈະຕັ້ງຖິ່ນຖານຢູ່ໃນເຂດພູພຽງ ແລະ ພູໃນລະດັບສູງຕັ້ງແຕ່ 700 ແມັດ ຂຶ້ນໄປ. ຊາວລາວກຸ່ມນີ້ແຈກຢາຍກັນຢູ່ໃນທົ່ວປະເທດ ແຕ່ຫລາຍກວ່າໝູ່ແມ່ນຢູ່ພູພຽງບໍລິເວນ ແລະ ຢູ່ລຽບຕາມສາຍພູຫລວງ ໂດຍຕັ້ງເປັນບ້ານນ້ອຍ ຫລື ໃຫຍ່ ແລ້ວແຕ່ສະພາບແວດລອມທາງດ້ານການທຳມາຫາກິນ. ເຂົາເຈົ້າມີອາຊີບໃນການເຮັດໄຮ່, ລ່າສັດ ແລະ ເກັບເຄື່ອງປ່າ. ແຕ່ບາງເຜົ່າຊຶ່ງອາໃສຢູ່ໃນເຂດທົ່ງພຽງກໍພາກັນເຮັດຍນາ, ລ້ຽງສັດ ແລະ ເປັນຊ່າງຫັດຖະກຳ. ຊາວລາວກຸ່ມນີ້ສ່ວນຫລາຍຈະນັບຖືຜີ ແລະ ມີຄວາມເຊື່ອກ່ຽວກັບສິ່ງລຶກລັບຢູ່ໃນທຳມະຊາດ ແລະ ວິນຍານຂອງບັນພະບູລຸດ, ມີແຕ່ສ່ວນໜ້ອຍໜຶ່ງເທົ່ານັ້ນທີ່ນັບຖືສາສະໜາພຸດ.
- ກຸ່ມທີ່ມີເຄົ້າພາສາໃນຕະກູນພາສາມົ້ງ-ອີວມຽນ ແລະ ຕະກູນພາສາຈີນ-ທິເບດ ໂດຍທົ່ວໄປມັກດຳລົງຊີວິດຢູ່ເທິງພູ ຫລືໃນເຂດພື້ນທີ່ສູງ ບ່ອນທີ່ອາກາດເຢັນ ແລະ ສົດຊື່ນດີ ໂດຍຈະຢູ່ກັນເປັນບ້ານນ້ອຍໆກະແຈກກະຈາຍຢູ່ຕາມເປີ້ນພູ. ເຂົ້າເຈົ້າແຈກຢາຍກັນຢູ່ຕັ້ງແຕ່ແຂວງຜົ້ງສາລີ ລົງມາຈົນຮອດແຂວງຄຳມ່ວນ ແຕ່ຫລາຍກວ່າໝູ່ແມ່ນຢູ່ແຂວງຊຽງຂວາງ. ອາຊີບຕົ້ນຕໍແມ່ນເຮັດໄຮ່ ແລະ ນອກນັ້ນກໍມີການສ້ຽງສັດ, ລ່າສັດ ແລະ ເກັບເຄື່ອງປ່າ. ຊາວລາວກຸ່ມດັ່ງກ່າວນີ້ສ່ວນຫລາຍຈະນັບຖືຜີ (ບັນພະບູລຸດ ແລະ ສະຖານທີ່ຕ່າງໆ), ແຕ່ມີສ່ວນໜຶ່ງທີ່ນັບຖືສາສະໜາຄຼິດສະຕຽນ.

## 2.4 ລັກຊະນະຂອງເມືອງ ແລະ ຊົນນະບົດ

### 2.4.1 ລັກຊະນະຂອງເມືອງ

ເມືອງຕ່າງໆ ຂອງ ສ ປ ປ ລາວ ໂດຍສ່ວນໃຫຍ່ໄດ້ກຳເນີດມາແຕ່ເຫິງນານແລ້ວ ແລະ ເກືອບທຸກເມືອງ ຕັ້ງຢູ່ໃນເຂດທົ່ງພຽງ ຫລື ຢູ່ຕາມແຄມແມ່ນ້ຳທີ່ສຳຄັນ. ໂດຍທົ່ວໄປນັ້ນມັນມີເຄື່ອງສ້າງເບົາບາງແລະມີຂະໜາດບໍ່ໃຫຍ່ພິລຶກທັງມີລັກຊະນະຂອງຊົນນະບົດຄ້າງຄາຢູ່ນຳຫລາຍໂດຍສະເພາະແລ້ວບັນດາເມືອງທີ່ຕັ້ງຢູ່ໃນເຂດລ້ອງນ້ຳນ້ອຍຫລືເຂດພູດອຍ. ເມືອງໃຫຍ່ໆແລະສຳຄັນກວ່າໝູ່ໄດ້ແກ່ນະຄອນວຽງຈັນ. ນອກນັ້ນກໍມີເມືອງໄກສອນພົມວິຫານ, ປາກເຊແລະຫລວງພະບາງ.



ກ. ນະຄອນວຽງຈັນ (ເຂດທົ່ງພຽງ) ຂ. ເມືອງຜົ້ງສາລີ (ເຂດພູດອຍ)

ຮູບ 9 ສ່ວນໜຶ່ງຂອງເມືອງໃນສປປລາວ

ເມືອງຕ່າງໆທີ່ກ່າວມານັ້ນເຖິງວ່າບໍ່ແມ່ນເມືອງທີ່ໃຫຍ່ພິລຶກແຕ່ກໍ່ເຫັນວ່າມັນມີຄວາມຄຶກຄັກຢູ່ຕະຫລອດເວລາ. ທັງນີ້ກໍເພາະວ່າມັນໄດ້ດຶງດູດແລະເຕົ້າໂຮມເອົາຜູ້ຄົນຈາກທ້ອງຖິ່ນຕ່າງໆມາຢູ່ນັບມື້ນັບຫລາຍຂຶ້ນແລະໄດ້ກາຍເປັນສູນລວມທາງດ້ານການເມືອງ, ເສດຖະກິດ, ສັງຄົມແລະວັດທະນາທຳຂອງຊາວລາວ.ໃນປະຈະບັນນີ້, ເນື່ອງຈາກມີການຍົກຍ້າຍຂອງຜູ້ຄົນຈາກຊົນນະບົດເຂົ້າສູ່ຕົວເມືອງເປັນຈຳນວນຫລວງຫລາຍ ຈຶ່ງຮັດໃຫ້ອັດຕາສ່ວນຂອງຊາວເມືອງເພີ່ມຂຶ້ນເປັນ 27.1% (ປີ 2005). ສຳລັບການຍ້າຍຖິ່ນເຂົ້າສູ່ຕົວເມືອງດັ່ງກ່າວນີ້ຈຳນວນຫລວງຫລາຍທີ່ສຸດນັ້ນ ແມ່ນຢູ່ນະຄອນຫລວງວຽງຈັນ. ຊຶ່ງມາເຖິງປະຈຸບັນ ມີອັດຕາສ່ວນຂອງປະຊາກອນທີ່ເປັນຊາວເມືອງສູງເຖິງ 81.6%.

ພ້ອມກັບການເພີ່ມຂຶ້ນຂອງພົນລະເມືອງນັ້ນໂຄງສ້າງດ້ານອາຊີບໃນເມືອງກໍ່ມີການປ່ຽນແປງເຊັ່ນດຽວກັນຄື: ປະກອບອາຊີບໃນຂະແໜງອຸດສາຫະກຳ, ການຄ້າ ແລະ ການບໍລິການຕ່າງໆ ກໍນັບມື້ນັບມີຈຳນວນຫລາຍຂຶ້ນເລື້ອຍໆ. ນອກຈາກນີ້ລັກຊະນະເດີມຂອງຕົວເມືອງກໍນັບມື້ນັບປ່ຽນແປງເຊັ່ນດຽວກັນຄື: ຕຶກ, ອາຄານ ຫລື ສິ່ງກໍ່ສ້າງຕ່າງໆ ໄດ້ເກີດຂຶ້ນນັບມື້ນັບຫລາຍທັງມີຫລາຍສີສັນທີ່ແປກຕາ ແລະ ໂດດເດັ່ນອີກດ້ວຍ.

### 2.4.2 ລັກສະນະຊົນນະບົດ

ຊົນນະບົດຂອງ ສ ປ ປ ລາວກວມເອົາເກືອບໝົດເນື້ອທີ່ຊຶ່ງຖືກບຸກເບີກ, ດັດແປງເປັນບ່ອນຢູ່ອາໃສ ແລະ ເປັນແຫລ່ງທຳມາຫາກິນຂອງຄົນລາວ. ມັນກວມເອົາຈຳນວນພົນລະເມືອງເຖິງ 73% ຊຶ່ງເກືອບທັງໝົດນັ້ນເປັນຊາວໄຮ່, ຊາວນາ, ຊາວສວນ, ຊາວປະມົງ ແລະ ຜູ້ປະກອບອາຊີບໃນຂະແໜງກະສິກຳອື່ນໆ ຊາວລາວທີ່ອາໃສໃນຊົນົບົດນັ້ນໄດ້ເຕົ້າໂຮມກັນຢູ່ເປັນບ້ານນ້ອຍ ຫລື ບ້ານໃຫຍ່ ຕາມທີ່ເງື່ອນໄຂ ທາງດ້ານທີ່ຕັ້ງ, ພື້ນທີ່, ແຫຼ່ງທຳມາຫາກິນ ... ອຳນວຍໃຫ້. ບ້ານຂອງຊາວລາວມີ 2 ປະເພດໃຫຍ່ໆ ດ້ວຍກັນ ຄື: ບ້ານໃນເຂດທົ່ງພຽງ ແລະ ບ້ານໃນເຂດພູດອຍ. ບ້ານໃນເຂດທົ່ງພຽງມັກຈະເປັນບ້ານໃຫຍ່ ແລະ ມີລັກຊະນະຖາວອນ. ສ່ວນບ້ານໃນເຂດພູດອຍ ໂດຍທົ່ວໄປຈະເປັນບ້ານນ້ອຍທີ່ຕັ້ງຢູ່ກະແຈກກະຈາຍ ແລະ ເຮືອນສ່ວນຫລາຍຈະມີລັກຊະນະບໍ່ໝັ້ນຄົງຖາວອນ.




ຮູບ 10 ສ່ວນໜຶ່ງຂອງບ້ານໃນຊົນນະບົດລາວ

## 3. ຊີວິດປະຈາວັນຂອງພົນລະເມືອງລາວ

### 3.1 ທີ່ຢູ່ອາໃສ

ຈົນມາເຖິງປະຈຸບັນນີ້ຄົວເຮືອນຂອງຊາວລາວ ໂດຍທົ່ວໄປກໍຍັງເປັນຄົວເຮືອນຂະໜາດປານກາງຫາໃຫຍ່ຢູ່ຄືມີສະມາຊິກໂດຍສະເລ່ຍຢູ່ລະຫວ່າງ 5-9 ຄົນຕໍ່ຄົວເຮືອນ. ຊາວລາວບັນດາເຜົ່າແຕ່ລະຄົວເກືອບເວົ້າໄດ້ວ່າມີເຮືອນຢູ່ເປັນຂອງຕົວເອງແລ້ວ. ເຮືອນຂອງຊາວລາວມີທັງເຮືອນແບບພື້ນເມືອງ ແລະ ເຮືອນແບບສະໄໝໃໝ່.




ຮູບ 11: ສ່ວນໜຶ່ງຂອງເຮືອນແບບຕ່າງໆ ໃນ ສ ປ ປ ລາວ

ເຮືອນແບບສະໄໝໃໝ່ນັ້ນ ຈະພົບເຫັນຫຼາຍຢູ່ໃນເມືອງເປັນຕົ້ນຢູ່ໃນນະຄອນຫລວງວຽງຈັນ ແລະ ຢູ່ເມືອງໃຫຍ່ອື່ນໆ. ເຮືອນແບບສະໄໝໃໝ່ເປັນເຮືອນທີ່ປຸກສ້າງຂຶ້ນດ້ວຍເບຕົງ ຫລື ດ້ວຍໄມ້ ຊຶ່ງປະກອບດ້ວຍເຮືອນວິນລາ (ຊັ້ນດຽວ ຫລື ສອງຊັ້ນ) ຕຶກ ແລະ ອາຄານທີ່ມີຫລາຍຊັ້ນ. ໃນເຮືອນຈະມີເຄື່ອງເຮືອນຫລາຍຢ່າງ. ມີລະບົບໄຟຟ້າ ແລະ ນໍ້າປະປາຄົບຊຸດ. ເນື່ອງຈາກວ່າການປຸກສ້າງເຮືອນຢູ່ໃນເມືອງມີລາຄາແພງຫລາຍ, ດັ່ງນັ້ນຄອບຄົວຊາວເມືອງຈໍານວນໜຶ່ງຈຶ່ງຕ້ອງໄດ້ເຊົ່າ ຫລື ຊື້ຫ້ອງແຖວເຊິ່ງຢູ່ຮ່ວມກັນໃນອາຄານຫລັງດຽວ. ສ່ວນເຮືອນແບບພື້ນເມືອງໄດ້ແກ່ເຮືອນທີ່ເຮັດດ້ວຍໄມ້ເປັນພື້ນຖານ, ເປັນເຮືອນຍົກພື້ນ ແລະ ມັກຈະເປັນເຮືອນດ່ຽວ ເຊິ່ງພົບເຫັນໄດ້ທົ່ວໄປໂດຍສະເພາະຢູ່ໃນຊົນນະບົດ.

### 3.2 ອາຫານ ແລະ ເຄື່ອງດື່ມ.

ຄົນລາວກິນອາຫານຫລາຍຊະນິດຊຶ່ງຕົນຜະລິດໄດ້ ແລະ ຫາໄດ້ຕາມທໍາມະຊາດ ຕະຫລອດເຖິງອາຫານທີ່ນໍາເຂົ້າຈາກຕ່າງປະເທດ. ອາຫານພື້ນຖານໄດ້ແກ່ເຂົ້າ, ປາ ແລະ ຜັກ.




ຮູບ 12 ອາຫານບາງເບື້ອງຂອງຊາວລາວບັນດາເຜົ່າ

ປາແມ່ນແຫລ່ງຕົ້ນຕໍຂອງທາດໂປຣຕີນຂອງປະຊາຊົນລາວ, ໂດຍສະເພາະແລ້ວໃນເຂດຊົນນະບົດເຊິ່ງຊາວບ້ານຈະໄດ້ບໍລິໂພກຊີ້ນແຕ່ພຽງບາງໂອກາດເທົ່ານັ້ນ. ແຕ່ຢູ່ຕາມຕະຫລາດໃນເມືອງ ຊີ້ນຄວາຍ, ຊີ້ນງົວ ແລະ ຊີ້ນໝູ ຈະມີຂາຍຢູ່ທົ່ວໄປ. ນອກຈາກນັ້ນກໍມີໄກ່, ເປັດ, ໄຂ່, ກົບ, ຂຽດ, ຫອຍ, ປາ, ຜັກ ... ແລະ ອາຫານທີ່ ນໍາເຂົ້າຈາກຕ່າງປະເທດ ເຊັ່ນ ອາຫານທະເລ, ເຄື່ອງກະປ໋ອງ, ໝາກໄມ້ ... ເພື່ອໃຫ້ຜູ້ບໍລິໂພກເລືອກຊື້ໄດ້ຕາມໃຈຊອບ.

ອາຫານລາວມີຢູ່ຫລາຍເບື່ອງດ້ວຍກັນ ເຊິ່ງເກືອບໝົດທຸກເບື່ອງນັ້ນຈະມີປາແດກເປັນສ່ວນປະກອບທີ່ສໍາຄັນໃນການປຸງແຕ່ງ. ເຄື່ອງກິນພື້ນເມືອງທີ່ຊາວລາວນິຍົມກິນປະຈໍາວັນກໍໄດ້ແກ່ລາບ, ປົ່ນ, ກ້ອຍ, ຂົ້ວ, ເອາະ ແກງ, ອ່ອມ, ຕົ້ມ, ປີ້ງ, ຕໍາໝາກຫຸ່ງ, ແກງໜໍ່ໄມ້, ສົ້ມຜັກ ... ເຊິ່ງໃນນີ້ມີຊື່ສຽງກວ່າໝູ່ແມ່ນລາບ. ອາຫານບາງເບື່ອງກໍມີຊື່ສຽງ ແລະ ເປັນເອກະລັກອັນສະເພາະຂອງທ້ອງຖິ່ນ ເຊັ່ນ: ຊຸບຜັກ, ໝົກໄຄ ... ຂອງຊາວຊໍາເໜືອ ແລະ ວັງວຽງ ຫລື ເອາະຫຼາມ, ແຈ່ວບອງ, ໄຄແຜ່ນ ... ຂອງຊາວຫລວງພະບາງ ແລະ ອັງໄກ່, ປາກະເຕົາ, ປາຈາວ ... ຂອງຊາວຈໍາປາສັກ ດັ່ງນີ້ເປັນຕົ້ນ.

ຢູ່ ສ ປ ປ ລາວ ການດື່ມນໍ້າຊາຍັງບໍ່ທັນແຜ່ຫລາຍປານໃດ, ສ່ວນຫລາຍຈະມີແຕ່ຢູ່ໃນເມືອງເທົ່ານັ້ນ. ເຄື່ອງດື່ມທີ່ນິຍົມກັນທົ່ວໄປໄດ້ແກ່ນໍ້າຕົ້ມສຸກທໍາມະດາ ຫລື ນໍ້າທ່າ. ຄົນລາວດື່ມນໍ້າກັບທຸກໆຄາບເຂົ້າ ແລະ ດື່ມໃນເວລາທີ່ຕ້ອງການ.

### 3.3 ການນຸ່ງຖື

ຄົນລາວມີວັດທະນະທໍາໃນການນຸ່ງຖືມາແຕ່ບູຮານນະການ ແລະ ໃນປະຈຸບັນນີ້ກໍມີການປັບປຸງໃຫ້ສອດຄ່ອງກັບຍຸກສະໄໝຄືໃນເວລາປົກກະຕິຂອງຊີວິດປະຈໍາວັນນັ້ນ ຄົນລາວທົ່ວໄປກໍນຸ່ງຖືຄ້າຍກັບຊາວຕ່າງປະ ເທດ, ຍົກເວັ້ນແຕ່ແມ່ຍິງຊຶ່ງມີການນຸ່ງຖືທີ່ເປັນເອກະລັກຂອງຕົນເອງຢູ່ສະເໝີມາ.



ກ. ການນຸ່ງຖືຂອງເຜົ່າກຶມມຸ ສ. ການນຸ່ງຖືຂອງເຜົ່າລາວ ຂ. ການນຸ່ງຖືຂອງເຜົ່າມົ້ງ

ຮູບ 13: ບາງສ່ວນຂອງການນຸ່ງຖືຂອງຊາວລາວບັນດາເຜົ່າ

ໃນຊີວິດປະຈຳວັນຜູ້ຊາຍລາວ ຈະນຸ່ງສົ້ງຂາຍາວ ຫລື ຂາສັ້ນ, ນຸ່ງເສື້ອເຊີດແຂນຍາວ ຫລື ແຂນສັ້ນ ແລະ ນຸ່ງເສື້ອຍືດຄໍບ້ອງ ຫລື ຄໍເຊີດທີ່ເປັນສີຕ່າງໆ ແລ້ວແຕ່ສະໃໝນິຍົມ. ຖ້າເປັນຜູ້ສູງອາຍຸແດ່ນັ້ນ ສ່ວນຫລາຍກໍນິຍົມນຸ່ງຜ້າສະໂຫລ່ງ ແລະ ນຸ່ງເສື້ອຄໍມົນແຂນຍາວ ຫລື ແຂນສັ້ນ. ສ່ວນວ່າແມ່ຍິງໂດຍທົ່ວໄປຈະນຸ່ງສິ້ນທີ່ມີຫົວມີຕີນ (ແຕ່ບາງຊົນເຜົ່າກໍນຸ່ງກະໂປ່ງ) ແລະ ນຸ່ງເສື້ອສີຕ່າງໆ ທັງຊະນິດແຂນຍາວ ແລະ ແຂນສັ້ນ.

ໃນພິທີສຳຄັນຕ່າງໆ ເຊັ່ນ: ໃນງານບຸນ, ງານດອງ ຫລື ງານມຸງຄຸນອື່ນໆ ຜູ້ຊາຍລາວຈະນຸ່ງຜ້າສະໂຫລ່ງ ຫລື ຜ້າເຂັນເຊິ່ງເຮັດດ້ວຍໄໝ, ນຸ່ງເສື້ອຂາວຄໍມົນແຂນຍາວ, ຄາດຜ້າບ່ຽງເຊິ່ງມີສີສັນຕ່າງໆ ຢ່າງງົດງາມ, ຮັດສາຍແອວໜັງ ແລະ ຖືເກີບໜັງ (ແຕ່ບາເຜົ່າກໍໜຸ່ງສົ້ງຂາໃຫຍ່ ຫລື ໃສ່ໝວກ) ສ່ວນແມ່ຍິງກໍພາກັນນຸ່ງສິ້ນໄໝ ຊຶ່ງມີສີສັນ ແລະ ລວດລາຍຕ່າງໆ ຢ່າງຈີບງາມ ຫລື ສິ້ນຝ້າຍມັດໝີ່ແລ້ວແຕ່ຄວາມນິຍົມຂອງແຕ່ລະທ້ອງຖິ່ນ, ນຸ່ງເສື້ອໄໝ ຫລື ຝ້າຍແຂນສັ້ນ, ແຂນສາມສ່ວນ ຫລື ແຂນຍາວ ຊຶ່ງມີສີສັນ ແລະ ຊວດຊີ່ງເຂົ້າກັບສິ້ນ ແລະ ຄາດຜ້າບ່ຽງໄໝ. ເພື່ອໃຫ້ກົມກືນກັບເຄື່ອງນຸ່ງດັ່ງກ່າວນັ້ນ, ແມ່ຍິງລາວນິຍົມກັນເກົ້າຜົມ, ຮັດສາຍແອວເງິນ ຫລື ທອງນາກ, ໃສ່ເກີບສົ້ນສູງພໍປະມານ ແລະ ໃສ່ເຄື່ອງເອ້ຕ່າງໆ ເຊິ່ງເຮັດດ້ວຍຄຳ ຫລື ທອງນາກເຊັ່ນ: ຕຸ້ມຫູ, ສາຍສ້ອຍ, ສາຍແຂນ, ແຫວນ ... ສ່ວນແມ່ຍິງບາງຊົນເຜົ່າກໍນຸ່ງກະໂປ່ງ ແລະ ນຸ່ງເສື້ອທີ່ມີການປັກແຊ່ວເປັນລວດລາຍຫລາຍສີສັນຢ່າງສວຍງາມ ພ້ອມທັງປະດັບປະດາໄປດ້ວຍເຄື່ອງເອ້ຕ່າງໆ ອີກ. ນອກນັ້ນກໍມີແພຄຽນຫົວ ແລະ ແພມັດແອວ ເຊິ່ງມີຫລາຍສີແຕກຕ່າງກັນ.

## 3.4 ການເຮັດວຽກ ແລະ ວັນພັກຕ່າງໆ

ເນື່ອງຈາກວ່າຊາວລາວສ່ວນໃຫຍ່ເປັນຊາວກະສິກອນ ດັ່ງນັ້ນການເຮັດວຽກຈຶ່ງມີຄວາມກ່ຍຂ້ອງກັບທົ່ງນາ, ຜືນໄຮ່ ແລະ ສວນເປັນຈຸດໜັກ ແລະ ວິຖີຊີວິດກໍ່ເໜັງຕີງໄປຕາມການຈັດແບ່ງຂອງລະດູການເປັນຕົ້ນຕໍຄື ໃນລະດູຝົນຊາວກະສິກອນລາວທົ່ວປະເທດຈະສຸມໃສ່ການຜະລິດເຂົ້າ ແລະ ການປູກພືດຕ່າງໆ ທີ່ເໝາະສົມກັບລະດູການ. ໃນລະດູນີ້, ບໍ່ວ່າຍິງ ຫລື ຊາຍກໍລ້ວນແຕ່ໄດ້ອອກແຮງງານຢ່າງໜັກໜ່ວງຈົນເກືອບວ່າບໍ່ມີວັນພັກເລີຍ, ຈະໄດ້ພັກກໍຕໍ່ເມື່ອແມ່ນວັນສິນ, ວັນຄະລຳ ຫລື ວັນບຸນສຳຄັນຕ່າງໆ ເທົ່ານັ້ນ. ແຕ່ໃນລະດູແລ້ງເຂົາເຈົ້າຈະມີເວລາພັກຫລາຍພໍສົມຄວນ, ຍົກເວັ້ນແຕ່ໃນບາງທ້ອງຖິ່ນທີ່ມີເງື່ອນໄຂໃນການເຮັດນາແຊງ ແລະ ເຮັດສວນປູກຜັກ ຫລື ປູກພືດອຸດສາຫະກຳຕ່າງໆ ນອກຈາກຊາວກະສິກອນແລ້ວຜູ້ປະກອບອາຊີບເອກະເທດໃນຂະ ແໜງອື່ນໆ ເຊັ່ນ: ຊາວຄ້າຂາຍ ແລະ ຜູ້ບໍລິການໃນບາງຄະແໜງການກໍເກືອບວ່າບໍ່ມີວັນພັກເຊັ່ນດຽວກັນ.

ແຕ່ໃນວົງການລັດຖະການ, ລັດວິສາຫະກິດ, ໂຮງງານ ແລະ ໂຮງຊ່າງຕ່າງໆ ຊາວຜູ້ອອກແຮງງານລາວລ້ວນແຕ່ມີວັນພັກປະຈຳສັບປະດາ ຄືວັນເສົາ ແລະ ວັນອາທິດ ຄືກັບຢູ່ໃນຫລາຍປະເທດ. ນອກຈາກນັ້ນກໍຍັງໄດ້ພັກວັນພັກປະຈຳປີ ແລະ ໃນວັນພັກແຫ່ງຊາດເຊັ່ນ: ວັນຊາດ, ວັນປີໃໝ່ລາວ, ວັນປີໃໝ່ສາກົນ, ວັນກຳມະກອນສາກົນ ... ເປັນຕົ້ນ.

## 3.5 ການພັກຜ່ອນຢ່ອນໃຈ ແລະ ການລົ້ນເລີງ

ຄຽງຄູ່ກັບການເຮັດວຽກນັ້ນຊາວລາວກໍສະແຫວງຫາການພັກຜ່ອນຢ່ອນໃຈ ແລະ ການມ່ວນຊື່ນລົ້ນເລີງເຊັ່ນກັນ. ແຕ່ລົດນິຍົມໃນເລື່ອງດັ່ງກ່າວເຫັນວ່າ ມີອັນແຕກຕ່າງກັນລະຫວ່າງຊາວເມືອງກັບຊາວຊົນນະບົດ.

ຊາວລາວຜູ້ທີ່ອາໃສຢູ່ໃນເມືອງ ໂດຍສະເພາະລັດຖະກອນ, ກຳມະກອນ ແລະ ຜູ້ເຮັດວຽກບໍລິການຕ່າງໆ ທີ່ມີວັນພັກສຸດສັບປະດາ ເມື່ອຮອດມື້ພັກກໍມັກພາກັນໄປກິນເຂົ້າປ່າຢູ່ແຄມໜອງ, ແຄມແມ່ນ້ຳ ຫລື ຕາມສະຖານທີ່ທ່ອງທ່ຽວທາງທຳມະຊາດ ແລະ ວັດທະນາທຳທີ່ຢູ່ບໍ່ໄກຈາກເມືອງ. ຢູ່ທີ່ນັ້ນເຂົາເຈົ້ານິຍົມກັນ

ຕຶກເບັດ, ອາບນ້ຳ, ທ່ຽວປ່າ ... ສຳລັບຜູ້ບໍ່ມັກໄປທ່ຽວທາງໄກກໍຈະໃຊ້ເວລາດັ່ງກ່າວນີ້ເພື່ອອານາໄມເຮືອນ, ເຮັດສວນປູກດອກໄມ້ ຫລື ເຮັດວຽກອະດິເຫລັກຕ່າງໆ ຊົມລາຍການໂທລະພາບ ຫລື ວີດີໂອ, ຫລິ້ນກິລາ, ຢ້ຽມຢາມພີ່ນ້ອງ, ພົບປະສັງສັນກັບເພື່ອນຝູງ ແລະ ອື່ນໆ.




ຮູບ 14 ບາງຮູບແບບຂອງການພັກຜ່ອນຢ່ອນໃຈໃນໝູ່ຊາວລາວບັນດາເຜົ່າ

ແຕ່ສຳລັບຊາວຊົນນະບົດນັ້ນ, ຮູບການພັກຜ່ອນຢ່ອນໃຈທີ່ນິຍົມກັນທີ່ສຸດຄືການຫລິ້ນບູນ. ດັ່ງນັ້ນຈຶ່ງເຫັນໄດ້ວ່າ ຢູ່ໃນຊົນນະບົດມັກຈະມີງານບຸນຕ່າງໆ ຢູ່ເລື້ອຍໆ ໂດຍສະເພາະໃນລະດູແລ້ງ. ການພັກຜ່ອນຢ່ອນໃຈ ແລະ ການລິ້ນເລີງໃນຮູບການອື່ນໆ ອີກກໍ່ມີການຊຸມແຊວແຂ່ງຂັນກັນຫລິ້ນໝາກຂ່າງ, ໝາກບ້າ, ວ່າວ, ໂຫວດ, ກິລາພື້ນເມືອງບາງຢ່າງ ແລະ ການຊົມການສະແດງສິລະປະວັດທະນາທຳ ...

## 4. ການສຶກສາ ແລະ ສາທາລະນະສຸກ

### 4.1 ການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດ

ນັບແຕ່ມີການປ່ຽນແປງການປົກຄອງເປັນຕົ້ນມາ ການສຶກສາຢູ່ ສ ປ ປ ລາວ ໄດ້ຮັບການປັບປຸງໃຫ້ດີຂຶ້ນເລື້ອຍໆ ແລະ ມີການຂະຫຍາຍຕົວຢ່າງວ່ອງໄວ. ໂຮງຮຽນໄດ້ຂະຫຍາຍໄປເຖິງທຸກເຂດ ນັບທັງທ້ອງຖິ່ນທີ່ຢູ່ສອກຫລີກຫ່າງໄກ ແລະ ຈຳນວນຄູ ແລະ ນັກຮຽນກໍໄດ້ເພີ່ມຂຶ້ນຢ່າງຫລວງຫລາຍ.

ການສຶກສາແຫ່ງຊາດແບ່ງອອກເປັນ 2 ລະບົບຄື: ການສຶກສາໃນລະບົບ ແລະ ການສຶກສານອກລະບົບ

ການສຶກສາໃນລະບົບ ຫລື ໃນລະບົບໂຮງຮຽນແບ່ງເປັນ:

1. ການສາມັນສຶກສາຊຶ່ງແບ່ງເປັນຂັ້ນຕ່າງໆຄື: ອານຸບານສຶກສາ (ໃຊ້ເວລາຮຽນ 3 ປີ), ປະຖົມສຶກສາ (ໃຊ້ເວລາຮຽນ 5 ປີ), ມັດທະຍົມສຶກສາຕອນຕົ້ນ (ໃຊ້ເວລາຮຽນ 4 ປີ) ແລະ ມັດທະຍົມສຶກສາຕອນປາຍ (ໃຊ້ເວລາຮຽນ 3 ປີ). ເວົ້າສະເພາະການສຶກສາລະດັບປະຖົມສຶກສານັ້ນຈັດເປັນການສຶກສາພາກບັງຄັບສຳລັບທຸກຄົນ ໂດຍທີ່ເດັກນ້ອຍຈະເລີ່ມເຂົ້າຮຽນໄດ້ເມື່ອອາຍຸຄົບ 6 ປີ.
2. ການອາຊີວະສຶກສາ (ໃຊ້ເວລາຮຽນແຕ່ 1 ຫາ 3 ປີ) ຊຶ່ງແບ່ງເປັນລະດັບຕ່າງໆ ຄື: ປະກາສະນີຍະບັດວິຊາຊີບ (ຊັ້ນຕົ້ນ), ລະດັບຊ່າງເຕັກນິກ (ຊັ້ນກາງ) ແລະ ລະດັບວິຊາຊີບຊັ້ນສູງ.

3. ການສຶກສາລະດັບມະຫາວິທະຍາໄລ (ໃຊ້ເວລາຮຽນຢ່າງໜ້ອຍ 4 ປີ) ຊຶ່ງໃນທົ່ວປະເທດມີຢູ່ 5 ແຫ່ງ: ມະຫາວິທະຍາໄລແຫ່ງຊາດ, ມະຫາວິທະຍາໄລຈຳປາສັກ, ມະຫາວິທະຍາໄລສຸພານຸວົງ, ມະຫາວິທະຍາໄລສະຫວັນນະເຂດ ແລະ ມະຫາວິທະຍາໄລວິທະຍາສາດສຸຂະພາບ.



ກ. ຫ້ອງຮຽນແຫ່ງໜຶ່ງໃນຊົນນະບົດ ຂ. ຫ້ອງເຝິກພາກປະຕິບັດທີ່ ມ.ຊ

ຮູບ 15 ສ່ວນໜຶ່ງຂອງລະບົບການສຶກສາໃນ ສ ປ ປ ລາວ

ເວົ້າສະເພາະການສຶກສາສາຍກໍ່ສ້າງຄູໄດ້ແບ່ງອອກເປັນ: ໂຮງຮຽນສ້າງຄູປະຖົມສຶກສາ (ໃຊ້ເວລາຮຽນ 3 ປີ), ວິທະຍາໄລຄູ (ໃຊ້ເວລາຮຽນ 3 ປີ) ແລະ ຄະນະສຶກສາສາດ (ໃຊ້ເວລາຮຽນ 4ປີ).

ສ່ວນການສຶກສານອກລະບົບໂຮງຮຽນມີຢູ່ 3 ປະເພດຄື: ປະຊາສຶກສາ ຫລື ຝຶກອົບຮົມຜູ້ໃຫຍ່ທີ່ບໍ່ຮູ້ອ່ານ ແລະ ຂຽນໜັງສື, ຍົກລະດັບວິຊາຊີບໃຫ້ແກ່ຜູ້ໃຫຍ່ ແລະ ຍົກລະດັບດ້ານວິຊາການໃຫ້ແກ່ພະນັກງານ.

ນອກຈາກການສຶກສາພາກລັດແລ້ວໃນ ສ ປ ປ ລາວຍັງມີການສຶກສາພາກເອກະຊົນຊຶ່ງໄດ້ຮັບອະນຸຍາດໃຫ້ຈັດການຮຽນການສອນແຕ່ລະດັບອະນຸບານສຶກສາເຖິງລະດັບປະລິນຍາໂທ. ສຳລັບຊົນເຜົ່າທີ່ຢູ່ສອກຫ່າງໄກ ແລະ ດ້ອຍໂອກາດລັດກໍຈັດໃຫ້ມີໂຮງຮຽນວັດທະນາທຳຊົນເຜົ່າຂຶ້ນ ແລະ ສຳລັບພະສົງກໍຈັດໃຫ້ມີໂຮງຮຽນພະ ສົງເຊັ່ນດຽວກັນ.

## 4.2 ການປິ່ນປົວ ແລະ ເບິ່ງແຍງສຸຂະພາບ

ນັບແຕ່ມື້ປ່ຽນແປງການປົກຄອງເປັນຕົ້ນມາ ລັດຖະບານກໍໄດ້ພະຍາຍາມຂະຫຍາຍຕາໜ່າງສາທາລະນະສຸກໃຫ້ທົ່ວເຖິງທຸກທ້ອງຖິ່ນ ແລະ ເພີ່ມຈຳນວນໝໍເທົ່າທີ່ຈະເປັນໄປໄດ້, ປຸກລະດົມໃຫ້ປະຊາຊົນໃຫ້ຢູ່ກິນຖືກຫລັກອະນາໄມ, ຈັດຕັ້ງການກັນພະຍາດ ແລະ ໂລກລະບາດຕ່າງໆ, ສົ່ງເສີມການປິ່ນປົວໂດຍສົມທົບລະຫວ່າງການແພດພື້ນເມືອງກັບການແພດສະໄໝໃໝ່, ເອົາໃຈໃສ່ແມ່ ແລະ ເດັກ, ອະນຸຍາດໃຫ້ເອກະຊົນເປີດບໍລິການດ້ານການແພດ ແລະ ອື່ນໆ ອີກ. ຈາກນະໂຍບາຍດັ່ງກ່າວນີ້ໄດ້ເຮັດໃຫ້ໂຮງໝໍຂະຫຍາຍໄປເຖິງທຸກເຂດໃນທົ່ວປະເທດ ແລະ ຈຳນວນໝໍກໍເພີ່ມຂຶ້ນຢ່າງຫລວງຫລາຍ.



ກ. ການສັກຢາກັນພະຍາດຍິງ　　　　ຂ. ຫ້ອງຮຽນວິຊາການແພດທົ່ວໄປ

ຮູບ 16 ການເບິ່ງແຍງສຸຂະພາບ ແລະ ການກໍ່ສ້າງໝໍໃນ ສ ປ ປ ລາວ

ມາເຖິງປັດຈຸບັນກໍເຫັນວ່າບັນຫາທາງສຸຂະພາບຂອງພົນລະເມືອງລາວ ທີ່ເກີດຈາກການຄຸກຄາມທາງພະຍາດຕ່າງໆ, ຈາກລະດັບການອະນາໄມຕໍ່າ, ການກິນຢູ່ບໍ່ພຽງພໍ, ການມີລູກຖີ່ ແລະ ມີລູກຫລາຍ ... ເຫລົ່ານີ້ໄດ້ຖືກແກ້ໄຂເປັນກ້າວໆມາ. ຍິ່ງໄປກວ່ານັ້ນ, ພະຍາດ ແລະ ໂລກລະບາດຫລາຍຊະນິດກໍ່ໄດ້ຖືກປາບ ແລະ ຈໍາກັດໄວ້ຢູ່ໃນວົງແຄບ, ຄວາມສ່ຽງຕໍ່ການຕາຍຍ້ອນການເກີດລູກໄດ້ຫລຸດລົງຫລາຍ, ອັດຕາການຕາຍຂອງພົນລະເມືອງ ນັບທັງອັດຕາການຕາຍຂອງເດັກເກີດໃໝ່ກໍຕໍ່າລົງຢ່າງເຫັນໄດ້ແຈ້ງ.

## 5. ບຸກຄະລິກລັກຊະນະຂອງສັງຄົມລາວ

### 5.1 ອຸປະນິໄສປະຈໍາຊາດ

ກ່ຽວກັບລັກຊະນະອຸປະນິໄສຂອງຄົນລາວນີ້ມີຜູ້ໃຫ້ທັດສະນະໄວ້ຕ່າງໆນາໆ ຊຶ່ງສະທ້ອນເຖິງຄວາມຈໍາເປັນຂອງສັງຄົມລາວບໍ່ຫລາຍກໍ່ໜ້ອຍ ເຊັ່ນ: ບາງຄົນກໍວ່າຄົນລາວມີນິໄສອ່ອນໂຍນ, ບໍ່ມັກທະເລາະວິວາດ, ໜ້າຮັກ, ກ້າຫານ, ອົດທົນ, ຊື່ສັດ...ແລະ ບາງຄົນກໍວ່າຄົນລາວເປັນຄົນໃຈເຢັນ, ໃຈໃຫຍ່ແຕ່ມັກມີກຽດຊື່ສຽງ...ດັ່ງນີ້ເປັນຕົ້ນ. ເຖິງຢ່າງໃດກໍດີ, ຄົນທັງຫຼາຍມັກອ້າງວ່າລັກສະນະປະຈໍາຊາດຂອງຄົນລາວແມ່ນເປັນຄືທັດສະນະດັ່ງຕໍ່ໄປນີ້:

- **ຮັກໃນຄວາມເປັນລາວຢ່າງສູງສົ່ງ:** ຕັ້ງແຕ່ໃດໆມາຄົນລາວໄດ້ສາມັກຄີຕໍ່ສູ້ຕ້ານກັບສັດຕູຜູ້ຮຸກຮານ ເພື່ອຮັກສາໄວ້ ຊຶ່ງອິດສະຫຼະພາບ ແລະ ຄວາມເປັນມາຂອງ. ເຖິງວ່າໃນອະດີດຄົນລາວເຄີຍໄດ້ເສຍອິດສະຫຼະພາບ ແລະ ດິນແດນມາແລ້ວ, ແຕ່ຍ້ອນມູນເຊື້ອອັນຮັກຊາດຮັກຄວາມເປັນລາວຢ່າງສູງສົ່ງ ແລະ ມູນເຊື້ອຕໍ່ສູ້ບໍ່ຍອມ ຈໍານົນນັ້ນຊາດລາວ ແລະ ຄົນລາວຈຶ່ງຄົງຕົວມາເຖິງທຸກວັນນີ້.
- **ນັບຖືແຂກຮັກແພງເພື່ອນມິດ ແລະ ມີໃຈເອື້ອເຟື້ອເພື່ອແຜ່:** ຄົນລາວມີຄວາມເປັນມິດກັບທຸກຄົນ, ຮັກໝູ່ຂະນະ ແລະ ເຄີຍມີຊື່ສຽງໃນການຕ້ອນຮັບແຂກ ຫຼື ຄົນອື່ນທີ່ມາຢ້ຽມຢາມຢ່າງອົບອຸ່ນ, ເປັນກັນເອງ ແລະ ດ້ວຍນໍ້າໃສໃຈຈິງມາແຕ່ບູຮານນະການ. ຄົນລາວບໍ່ເຄີຍເອົາປຽບເອົາລັດແຂກຄົນທີ່ມາຢ້ຽມຢາມ, ກົງກັນຂ້າມ ມີແຕ່ເອົາໃຈໃສ່ຊ່ວຍເຫຼືອຢ່າງຈິງໃຈໃຫ້ເຂົາເຈົ້າບັນລຸຈຸດປະສົງທີ່ເຂົາເຈົ້າຕັ້ງໃຈມາຫາ. ຄົນລາວ

ຍົກຍ້ອງ ແລະ ເຄົາລົບນັບຖືຜູ້ທີ່ມີຄວາມຈິງໃຈ ແລະ ມີຈິດໃຈເອື້ອເຟື້ອເພື່ອແຜ່ຊ່ວຍເຫຼືອຜູ້ອື່ນໃນຄວາມຈໍາເປັນ ແລະ ປະ ນາມກ່າວຂວັນຜູ້ມັກເອົາປຽບຜູ້ອື່ນຢູ່ສະເໝີ.

- **ມີຄວາມກະຕັນຍູຕໍ່ຜູ້ມີບຸນຄຸນ:** ຄົນລາວຖືກັນວ່າພໍ່ແມ່ ແລະ ຜູ້ທີ່ລ້ຽງດູຊ່ວຍເຫຼືອຕົນມານັ້ນເປັນຜູ້ມີບຸນຄຸນຢ່າງສູງສົ່ງ, ດັ່ງນັ້ນ ຈຶ່ງບໍ່ອາດປະຕິເສດໄດ້ທີ່ຈະຕອບບຸນແທນຄຸນດ້ວຍການລ້ຽງດູເບິ່ງແຍງພວກເພິ່ນໃນເວລາເຖົ້າແກ່ ຫຼື ໃຫ້ການຊ່ວຍເຫຼືອໃນຄາວຈໍາເປັນເທົ່າທີ່ຈະເຮັດໄດ້. ດ້ວຍເຫດນີ້, ຢູ່ໃນສັງຄົມລາວ ຈຶ່ງບໍ່ມີບັນ ຫາກ່ຽວກັບຜູ້ສູງອາຍຸຂາດທີ່ເພິ່ງ ຍ້ອນລູກຫຼານບໍ່ລ້ຽງດູບົ່ງແຍງ.
- **ມີນິໄສອ່ອນໂຍນ, ມັກສະຫງົບ ແລະ ບໍ່ມັກບຽດບຽນຜູ້ອື່ນ:**ຄົນລາວມີນິໄສອ່ອນນ້ອມ, ໜ້າຮັກ, ຍິ້ມແຍມແຈ່ມໃສ, ມັກຢູ່ແບບສະຫງົບ ແລະ ມີຄວາມຊັກຊ້າ ເພາະບໍ່ຕ້ອງຮີບຮ້ອນແຂ່ງຂັນກັນ. ຖ້າເບິ່ງແລ້ວຄ້າຍຄືວ່າ ມີຄວາມກະຕືລືລົ້ນໜ້ອຍໃນສິ່ງຕ່າງໆ ຊຶ່ງສະແດງອອກຄື ບໍ່ມັກທະເຍີທະຍານທີ່ຈະເອົາແບບຢ່າງຂອງຜູ້ອື່ນ ຊຶ່ງປະສົບຜົນສໍາເລັດໃນຊີວິດ ໂດຍຖືວ່າທຸກຄົນກໍມີຄວາມສຸກໄດ້ຖ້າພໍໃຈໃນສິ່ງທີ່ຕົນເອງມີຢູ່. ລັກສະນະດັ່ງ ກ່າວນີ້ ພາໃຫ້ຄົນລາວບໍ່ມີຄົນອິດສາ ແລະ ບໍ່ມັກບຽດບຽນຜູ້ອື່ນ. ແຕ່ຄົນລາວກໍບໍ່ຍອມໃຫ້ຜູ້ອື່ນດູຖູກຢຽດ ຫຍຽມ ແລະ ບຽດບຽນຕົນໄດ້ງ່າຍໆ ເຖິງວ່າຈະມີຖານະ ຫຼື ກໍາລັງດ້ອຍກວ່າກໍຕາມ. ຈາກອຸປະນິໄສນີ້ເອງ ຈຶ່ງເຫັນໄດ້ວ່າ ທຸກໆຄັ້ງທີ່ຖືກບຸກລຸກຮຸກຮານ ແລະ ລົບລູ່ໂດຍກໍາລັງພາຍນອກນັ້ນ ຄົນລາວກໍໄດ້ທໍາການຕໍ່ສູ້ຢ່າງເດັດດ່ຽວໝຽວແໜ້ນຈົນເຖິງທີ່ສຸດ.
- **ເຄົາລົບເຊື່ອຟັງຜູ້ໃຫຍ່ ແລະ ຜູ້ອາວຸໂສ:** ຄົນລາວຖືວ່າຜູ້ໃຫຍ່ ຫຼື ຜູ້ອາວຸໂສເປັນຜູ້ເກີດກ່ອນແລະ ເຫັນ ຟ້າເຫັນດິນກ່ອນໝູ່, ດັ່ງນັ້ນ ຍ່ອມມີບົດຮຽນ ແລະ ປະສົບການໃນຊີວິດມາຫຼາຍພຽງພໍທີ່ຈະເປັນຜູ້ແນະນໍາຕັກ ເຕືອນ ແລະ ບອກສອນລູກຫຼານ ຫຼື ຜູ້ນ້ອຍໃຫ້ເປັນຜູ້ດີມີລະບຽບແບບແຜນໃນການດໍາລົງຊີວິດ. ຢູ່ໃນຊີວິດຕົວຈິງ, ຄົນລາວຈະປະນາມກ່າວຂວັນຜູທີ່ບໍ່ຢູ່ໃນໂອວາດຂອງພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ໃຫຍ່. ດ້ວຍເຫດນີ້, ວິຖີຊີວິດຂອງລູກເຕົ້າ ເຊັ່ນ: ການເລືອກອາຊີບ, ການເລືອກຄູ່ຄອງ, ການເລືອກທີ່ຢູ່ອາໄສ...ຈຶ່ງມັກເປັນໄປຕາມຄວາມເຫັນດີ ແລະ ຄວາມປະສົງຂອງພໍ່ແມ່ ຫຼື ຜູ້ອາວຸໂສຢູ່ສະເໝີ.

ນອກຈາກນີ້, ລັກສະນະອຸປະນິໄສຂອງຄົນລາວຍັງສະແດງອອກໃນປະການຕ່າງໆອີກ ຊຶ່ງບໍ່ສາມາດຈະນໍາມາກ່າວເປັນລາຍລະອຽດຈົນໝົດໄດ້.

**5.2 ຄ່ານິຍົມຂອງຄົນລາວ**

ຄົນລາວມີຄ່ານິຍົມເລື່ອງຕ່າງໆຫຼາຍໆຢ່າງ. ຄ່ານິຍົມເຫຼົ່ານັ້ນບາງຢ່າງກໍຄົງຕົວມາແຕ່ເຫິງນານ ແລະ ບາງຢ່າງກໍມີການປ່ຽນແປງໄປຕາມຍຸກສະໄໝ. ຢ່າງໃດກໍດີ, ໃນປັດຈຸບັນນີ້ເຮົາພໍສະຫຼຸບໄດ້ວ່າຄ່ານິຍົມທົ່ວໆໄປຂອງຄົນລາວມີຄືດັ່ງນີ້:

- **ຄ່ານິຍົມໃນຄວາມເປັນອິດສະຫຼະ** ຄືບໍ່ມັກທີ່ຈະໃຫ້ຂຶ້ນກັບຜູ້ອື່ນ, ມັກເພິ່ງຕົນເອງກຸ້ມຕົນເອງ.
- **ຄ່ານິຍົມໃນຄວາມພໍດີພໍງາມ** ຄືບໍ່ມັກທີ່ຈະກະຕືລືລົ້ນ ຫຼື ມີຄວາມທະເຍີທະຍານໃນເລື່ອງໃດເລື່ອງໜຶ່ງ ຈົນເກີນໄປ.
- **ຄ່ານິຍົມໃນຄວາມກະຕັນຍູຮູ້ຄຸນ** ຄືຍົກຍ້ອງຜູ້ຮູ້ບຸນຄຸນ ເຊັ່ນ: ລ້ຽງດູພໍ່ແມ່ ຫຼື ເກື້ອກູນຜູ້ມີພະຄຸນໃນຄາວທີ່ຄວນເຮັດເປນຕົ້ນ.
- **ຄ່ານິຍົມໃນຄວາມໃຈກວ້າງຂວາງ** ຄືຍົກຍ້ອງຜູ້ມີຄວາມເອື້ອເຟື້ອເພື່ອແຜ່, ວິພາກວິຈານ ແລະ ຕໍານິຕິ ຕຽນຜູ້ມີໃຈຄັບແຄບເຫັນແກ່ຕົວ.

- **ຄ່ານິຍົມໃນຄວາມເປັນຜູ້ໃຫຍ່** ຄືໃຫ້ຄວາມເຄົາລົບນັບຖືຜູ້ມີຖານະຕຳແໜ່ງ, ຜູ້ນຳ, ຜູ້ສູງອາຍຸ ຫຼື ຜູ້ອາວຸ ໂສໃນວຽກງານ.
- **ຄ່ານິຍົມໃນຄວາມນອບນ້ອມອ່ອນຫວານຮູ້ຕ່ຳຮູ້ສູງ** ຄືໃຫ້ການຍົກຍ້ອງນັບຖືຜູ້ມີຄວາມນອບນ້ອມອ່ອນ ໂຍນ, ຮູ້ຈັກເດັກຮູ້ຈັກຜູ້ໃຫຍ່, ຮູ້ຖະໜອມຖ່ອມຕົວ...
- **ຄ່ານິຍົມໃນຄວາມເປັນປາດ** ຄືໃຫ້ການຍົກຍ້ອງນັບຖືຜູ້ມີວິຊາຄວາມຮູ້, ນັກປາດອາຈານ ແລະ ຜູ້ມີຄວາມສາມາດສະຫຼາດຫຼັກແຫຼມ.
- **ຄ່ານິຍົມໃນຄວາມມີພີ່ນ້ອງເພື່ອນຝູງຫຼາຍ.**
- **ຄ່ານິຍົມໃນຄວາມຊື່ສັດຕໍ່ກັນລະຫວ່າງສາມີພັນລະຍາ.**
- ອື່ນໆອີກ.

## 6. ການປົກຄອງ ແລະ ການຈັດລະບຽບສັງຄົມລາວ

### 6.1 ການຈັກການປົກຄອງ

ສ.ປ.ປ. ລາວເປັນປະເທດເອກະພາບແລະເອກະລາດປະເທດໜຶ່ງທີ່ປົກຄອງດ້ວຍລະບອບປະຊາທິປະໄຕປະຊາຊົນໂດຍມີທ່ານປະທານປະເທດເປັນປະມຸກລັດ. ອຳນາດລັດຂັ້ນສູງກາງຮວມມີ 3 ສະຖາບັນດ້ວຍກັນຄື: ສະພາແຫ່ງຊາດ, ລັດຖະບານ ແລະ ສານປະຊາຊົນສູງສຸດ ຊຶ່ງສິດ ແລະ ໜ້າທີ່ຂອງແຕ່ລະສະຖາບັນນີ້ ໄດ້ກຳນົດໄວ້ໃນລັດຖະທຳມະນູນ. ສຳນັກງານຂອງອຳນາດລັດຂັ້ນສູນກາງທັງໝົດເຫຼົ່ານີ້ຕັ້ງຢູ່ນະຄອນວຽງຈັນ ຊຶ່ງເປັນນະຄອນຫຼວງຂອງປະເທດ.

ລັດຖະບານ ຄື ອົງການບໍລິການແຫ່ງລັດ ຊຶ່ງຄຸ້ມຄອງເປັນເອກະພາບການປະຕິບັດໜ້າທີ່ຂອງລັດໃນທຸກໆດ້ານຄື: ດ້ານການເມືອງ, ເສດຖະກິດ, ວັດຖະນາທຳ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ. ລັດຖະບານລາວປະກອບດ້ວຍ ກະຊວງຕ່າງໆ ຊຶ່ງທຸກກະຊວງນັ້ນ ມີທ່ານລັດຖະມົນຕີເປັນຜູ້ວ່າການ ແລະ ມີບັນດາລັດຖະມົນຕີເປັນຜູ້ວ່າການ ແລະ ມີບັນດາລັດຖະມົນຕີຊ່ວຍວ່າການເປັນຜູ້ຊ່ວຍບໍລິຫານ. ແຕ່ລະກະຊວງກໍແບ່ງອອກເປັນຫຼາຍກົມ, ຫຼາຍພະແນກການ ແລະ ເປັນໜ່ວຍງານຕ່າງໆ ຊຶ່ງມີທ່ານຫົວໜ້າກົມ, ຫົວໜ້າພະແນກ ແລະ ຫົວໜ້າໜ່ວຍງານເປັນຜູ້ຮັບຜິດຊອບ.

ໃນປັດຈຸບັນນີ້ ສ.ປ.ປ. ລາວ ໄດ້ແບ່ງເຂດປົກຄອງທ້ອງຖິ່ນອອກເປັນ 17 ແຂວງຄື: ຜົ້ງສາລີ, ບໍ່ແກ້ວ, ຫຼວງນ້ຳທາ, ອຸດົມໄຊ, ໄຊຍະບູລີ, ຫຼວງພະບາງ, ຫົວພັນ, ຊຽງຂວາງ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ, ສາລະວັນ, ເຊກອງ, ອັດຕະປື ແລະ ນະຄອນຫຼວງວຽງຈັນ. ບັນດາແຂວງຕ່າງໆເຫຼົ່ານີ້ ຄືອົງການບໍລິຫານຂັ້ນທ້ອງຖິ່ນ ທີ່ປະກອບດ້ວຍພະແນກການຕ່າງໆ ເຊັ່ນ: ພະແນກອຸດສາຫະກຳ, ກະສິກຳ-ປ່າໄມ້, ການຄ້າ, ສຶກສາທິການ, ຄົມມະນາຄົມ...ຄືກັບຢູ່ຂັ້ນສູນກາງ. ຢູ່ແຕ່ລະແຂວງທີ່ກ່າວມານີ້ ມີທ່ານເຈົ້າແຂວງເປັນຜູ້ບໍລິຫານສູງສຸດ. ແຂວງໜຶ່ງໆແບ່ງເປັນຫຼາຍເມືອງ ຊຶ່ງໃນແຕ່ລະເມືອງກໍມີລະບົບການຈັດຕັ້ງເຊັ່ນດຽວກັນກັບແຂວງ ແລະ ມີທ່ານເຈົ້າເມືອງເປັນຜູ້ປົກຄອງ ແລະ ແຕ່ລະເມືອງກໍແບ່ງອອກເປັນຫຼາຍບ້ານເປັນຜູ້ປົກຄອງ.




ແຜນທີ່ 5: ແຜນທີ່ການປົກຄອງຂອງ ສ.ປ.ປ. ລາວ

### 6.2 ພື້ນຖານການຈັດລະບຽບສັງຄົມ

ຊາດລາວເປັນຊາດທີ່ປະກອບດ້ວຍຫຼາຍຊົນເຜົ່າຊຶ່ງມີພາສາເວົ້າ, ວັດທະນາທຳ, ວາດຳລົງຊີວິດ...ແຕກຕ່າງກັນໄປ. ແຕ່ບັນດາເຜົ່າລາວເຫຼົ່ານີ້ ກໍມີຄວາມສາມັກຄີເປັນເອກະພາບ ແລະ ເຕົ້າໂຮມກັນຊາດໜຶ່ງມາແຕ່ເຫິງນານແລ້ວ. ການທີ່ຊາວລາວບັນດາເຜົ່າສາມາດຢູ່ຮ່ວມກັນເປັນຊາດໜຶ່ງ ຫຼື ສັງຄຍມໜຶ່ງຢ່າງເປັນລະບຽບຮຽບຮ້ອຍນີ້ກໍເພາະວ່າ ຊາດລາວມີລະບຽບແຜນພຶດຕິກຳ ແລະ ຂໍ້ບັງຄັບຕ່າງໆເພື່ອຄຸ້ມຄອງສັງຄົມ. ສິ່ງເຫຼົ່ານັ້ນເອີ້ນວ່າ “ບັນທັດຖານ'' ຫຼືລະບຽບການທາງສັງຄົມຊຶ່ງມີຄື: ວິຖີປະຊາ, ກົດສິນທຳຫຼືຈາຮີດ, ກົດໝາຍແລະອື່ນໆອີກ.

**1. ວິຖີປະຊາ:** ແມ່ນແບບແຜນພຶດຕິກຳທີ່ຊາວລາວທັງປວງເຫັນພ້ອມກັນວ່າເປັນອັນ “ຄວນ'' ຫຼື “ບໍ່ຄວນ''ກະທຳ ຫຼື ປະຕິບັດຕົນໃນສັງຄົມ ໂດຍທີ່ພາກັນຍອມຮັບປະຕິບັດຕາມຈົນເປັນປະເພນີ ແລະ ເປັນຄວາມເຄີຍຊິນ ເຊັ່ນ: ການແຕ່ງກາຍຢ່າງເໝາະສົມກັບກາລະເທສະ, ການປະຕິບັດຕໍ່ໜ້າແຂກ ຫຼື ລະຫວ່າງຄົນຢູ່ໃນສັງຄົມ, ການຍໍມືໄຫວ້ພໍ່ແມ່,ຄູບາອາຈານ ແລະ ຜູ້ອາວຸໂສ ຫຼື ມາລະຍາດທາງສັງຄົມເນື່ອງໃນໂອກາດຕ່າງໆ ...ຜູ້ທີ່ຜ່າຝືນຕໍ່ແບບແຜນພຶດຕິກຳເຫຼົ່ານີ້ ເຖິງວ່າຈະບໍ່ຖືກລົງໂທດຢ່າງເປັນທາງການ ແຕ່ກໍຈະຖືກຕັດສິນນິນທາກ່າວຂວັນຕ່າງໆ ຫຼື ຖືກກີດກັນບໍ່ໃຫ້ເຂົ້າຮ່ວມກຸ່ມນຳ ແລະ ອື່ນໆອີກ. ວິຖີປະຊານີ້ມີບົດບາດ ແລະ ມີຄວາມສຳຄັນຫຼາຍຕໍ່ວາດດຳລົງຊີວິດຂອງຊາວລາວ.

**2. ຈາຮີດ:** ແມ່ນຂະໜົບທຳນຽມປະເພນີ ຫຼື ຮີດຄອງຕ່າງໆທີ່ປະຕິບັດກັນມາ, ເປັນກົດສິນທຳທີ່ກຳນົດວ່າອັນໃດຖືກອັນໃດຜິດ ໂດຍບໍ່ຕ້ອງອະທິບາຍເຫດຜົນ. ຊາວລາວຖືວ່າຈາຮີດເປັນ “ກົດສິນທຳ” ທີ່ມີຄວາມສຳຄັນທີ່ສຸດຕໍ່ສະຫວັດດີພາບ ແລະ ຄວາມປອດໄພຂອງຕົນ ແລະ ຖ້າຜູ້ໃດຜ່າຝືນກໍຈະຖືກສັງຄົມລົງໂທດຢ່າງຮຸນແຮງ. ໃນສັງຄົມລາວ, ຈາຮີດຫຼາຍຢ່າງມີຄວາມກ່ຽວຂ້ອງກັບຂໍ້ຫ້າມ ເຊັ່ນ: ຫ້າມທຳຮ້າຍ ຫຼື ຂ້າຜູ້ອື່ນ, ຫ້າມປະພຶດຜິດທາງເພດ, ຫ້າມລັກໂລບເອົາຂອງຜູ້ອື່ນ, ຫ້າມສົມລົດກັບບິດາມານດາ ຫຼື ພີ່ນ້ອງຮ່ວມອຸທອນດຽວກັນ, ຫ້າມນອກໃຈສາມີພັນລະຍາ, ຫ້າມກິນຊີ້ນຄົນ...ເປັນຕົ້ນ. ແຕ່ຈາຮີດຄອງອີກຫຼາຍຢ່າງກໍມີຄວາມກ່ຽວຂ້ອງກັບ

ຂໍ້ບັງຄັບໃຫ້ປະຕິບັດ ເຊັ່ນ: ຕ້ອງເຄົາລົບ ແລະ ມີຄວາມກະຕັນຍູຮູ້ບຸນຄຸນພໍ່ແມ່, ຕ້ອງນັບຖືຜູ້ໃຫຍ່ ແລະ ຜູ້ອາວຸ ໂສ, ຕ້ອງຊ່ວຍເຫຼືອຜູ້ອື່ນໆ, ຕ້ອງມີຄວາມຊື່ສັດຕໍ່ກັນລະຫວ່າງສາມີພັນລະຍາ ແລະ ອື່ນໆອີກ.

**3. ກົດໝາຍ:**ໄດ້ແກ່ຂໍ້ລະບຽບກົດໝາຍຕ່າງໆຂອງການຄຸ້ມຄອງຂອງລັດ - ຄຸ້ມຄອງສັງຄົມລາວ ຊຶ່ງບັນທຶກໄວ້ເປັນລາຍລັກອັກສອນຄັກແນ່ ໂດຍທີ່ມີການກຳນົດເຖິງຂໍ້ຫ້າມບໍ່ໃຫ້ກະທຳ, ຂໍ້ບັງຄັບທີ່ໃຫ້ປະຕິບັດຕາມ ແລະ ລະບຸລົງໂທດຕາມຄວາມຜິດທີ່ບຸກຄົນໃດໜຶ່ງໄດ້ກະທຳໄວ້ຢ່າງບໍ່ມີຂໍ້ຍົກເວັ້ນໃດໆກັບຜູ້ໃດຜູ້ໜຶ່ງເລີຍທັງມີລັກສະນະຊັດເຈນດີກວ່າບັນທັດຖານປະເພດອື່ນໆ. ຢູ່ໃນ ສ.ປ.ປ. ລາວ ເຖິງວ່າກົດໝາຍຈະມີຂຶ້ນຕາມຫຼັງວິຖີປະຊາ ແລະ ຈາຮີດແຕ່ກໍເຫັນວ່າມັນມີຄວາມສຳຄັນເປັນພິເສດ ຊຶ່ງຈະຂາດເສຍບໍ່ໄດ້ໃນການຄຸ້ມຄອງລັດ - ຄຸ້ມຄອງສັງຄົມທັງໃນປັດຈຸບັນ ແລະ ອານາຄົດ.

ນອກຈາກວິຖີປະຊາ, ຈາຮີດ ແລະ ກົດໝາຍທີ່ໄດ້ກ່າວມານີ້ແລ້ວ ໃນການຈັດລະບຽບສັງຄົມລາວ ກໍຍັງ ມີບັນທັດຖານປະເພດອື່ນໆອີກຈຳນວນໜຶ່ງ ເຊັ່ນ: ມາລະຍາດສັງຄົມ, ພິທີກຳ, ພິທີການ, ຄ່ານິຍົມ... ເປັນຕົ້ນ. ໃນການຈູງໃຈ ຫຼື ບັງຄັບໃຫ້ທຸກຄົນປະຕິບັດຕາມລະບຽບການທາງສັງຄົມທັງໝົດທີ່ໄດ້ກ່າວຂ້າງເທິງນີ້ ເພິ່ນນຳໃຊ້ 2 ວິທີການຄື: ການໃຫ້ລາງວັນ ແລະ ການລົງໂທດ.

- **ການໃຫ້ລາງວັນ:**ມີຄືການຍອມຮັບ, ຍົກຍ້ອງ, ເຊີດຊູກຽດຕິຍົດ, ໃຫ້ອຳນາດ, ໃຫ້ຊັບສິນຕ່າງໆ...
- **ການລົງໂທດ:** ມີຄືການຊຸບຊິບນິນທາ, ໝິ່ນປະໝາດ, ຢຽດຢາມ, ເຍີ້ຍຫຍັນ, ຫົວຂວັນ, ບໍ່ເວົ້າລົມນຳ, ບໍ່ຍອມຮັບເປັນພວກ, ປັບໃໝ, ເນລະເທດ, ຈຳຄຸກ, ປະຫານຊີວິດ...

# ບົດທີ 3
# ເສດຖະກິດແຫ່ງຊາດລາວ

## 1. ພາວະເສດຖະກິດ

### 1.1 ລັກສະນະລວມ

ສ.ປ.ປ. ລາວເປັນປະເທດໜຶ່ງ ຊຶ່ງມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ແລະ ທີ່ຕັ້ງທີ່ມີຜົນສຳຄັນຕໍ່ສະພາບທາງເສດຖະສິດ ແລະ ການເມືອງຂອງປະເທດເພາະຕັ້ງຢູ່ໃນເສັ້ນທາງຄົມມະນາຄົມຕິດຕໍ່ກັບຕ່າງປະເທດຕ່າງໆໄດ້ສະດວກ. ແຕ່ເນື່ອງຈາກວ່າ ບໍ່ທັນພຽບພ້ອມໃນຫຼາຍປັດໄຈຂອງການພັດທະນາເຊັ່ນ: ຂາດພະນັກງານເຕັກນິກ, ນັກວິຊາການ, ນັກບໍລິຫານງານ ແລະ ກຳມະກອນຜູ້ມີຄວາມສາມາດ ແລະ ຊຳນິຊຳນານ, ຂາດທຶນຮອນ ແລະ ປັດໄຈບວກດ້ານອື່ນໆ ຈຶ່ງພາໃຫ້ເສດຖະກິດຂະຫຍາຍຕົວຊ້າ ແລະ ບໍ່ດູນດ່ຽງກັນລະຫວ່າງຂະແໜງການຕ່າງໆ. ພື້ນຖານເສດຖະກິດແຫ່ງຊາດແມ່ນການກະສິກຳ ຊຶ່ງຍັງມີລັກສະນະອ່ອນນ້ອຍ ແລະ ຍັງຂຶ້ນກັບທຳມະຊາດຢູ່. ການຜະລິດກະສິກຳຕົ້ນຕໍແມ່ນການປູກເຂົ້າ, ສ່ວນການລ້ຽງສັດໂດຍສະເພາະແມ່ນສັດໃຫຍ່ນັ້ນຈຸດໝັກຈະລ້ຽງໄວ້ເພື່ອໃຊ້ແຮງງານ ແລະ ຖ້າໃຊ້ເປັນອາຫານ ຫຼື ເປັນສິນຄ້າກໍໃນຄາວຈຳ ເປັນເທົ່ານັ້ນ. ການຫັດຖະກຳຍັງແມ່ນແບບກຸ້ມຕົນເອງຄືຜະລິດເພື່ອການໃຊ້ສອຍພາຍໃນເປັນຕົ້ນຕໍ. ການອຸດສາ ຫະກຳມີໜ້ອຍ ແລະ ບໍ່ທັນມີບົດບາດພົ້ນເດັ່ນໃດໃນເສດຖະກິດແຫ່ງຊາດ. ສິນຄ້າຂາອອກສ່ວນຫຼາຍແມ່ນວັດຖຸດິບຕ່າງໆ.

ແຕ່ວ່າ, ຈາກການປະຕິບັດແນວທາງ “ຈິນຕະນາການໃໝ່” ຢູ່ໃນທຸກຂົງເຂດຂອງຊີວິດສັງຄົມແລະເສດຖະກິດນັບແຕ່ປີ 1986 ເປັນຕົ້ນມານັ້ນໄດ້ເຮັດໃຫ້ສະພາບຄວາມອຶດອາດແລະຊັກຊ້າຂອງເສດຖະກິດຫຼຸດຜ່ອນລົງ, ສະພາບຄວາມຫຍຸ້ງຍາກຫຼາຍໆປະການກໍໄດ້ຮັບການແກ້ໄຂ, ການຜະລິດມີຄວາມເປັນປົກກະຕິແລະຂະຫຍາຍຕົວຢ່າງຕໍ່ເນື່ອງແລະເປັນທີ່ໜ້າພໍໃຈຊຶ່ງເຫັນໄດ້ຮັບການແກ້ໄຂ, ການຜະລິດມີຄວາມເປັນປົກກະຕິແລະຂະຫຍາຍຕົວຢ່າງຕໍ່ເນື່ອງແລະເປັນທີ່ໜ້າພໍໃຈຊຶ່ງເຫັນໄດ້ຈາກການລົງທຶນຂອງລັດແລະຂອງຕ່າງປະເທດໃນຂະແໜງການຕ່າງໆນັບມື້ນັບເພີ່ມຂຶ້ນ, ບັນດາຂະແໜງການເສດຖະກິດໃໝ່ໆໄດ້ເກີດຂຶ້ນ, ບົດບາດຂອງຂະແໜງກະສິກຳໃນເສດຖະກິດແຫ່ງຊາດໄດ້ຄ່ອຍໆລຸດລົງໃນຂະແໜງການອື່ນເຊັ່ນ: ຂະແໜງຫັດຖະກຳ, ອຸດສາຫະກຳ…ໂດຍສະເພາະແລ້ວດ້ານການຄ້າແລະການບໍລິການພວມມີບົດບາດສູງຂຶ້ນ. ເສດຖະກິດຂະຫຍາຍຢ່າງຕໍ່ເນື່ອງໂດຍບໍ່ຫຼຸດ 7% ຕໍ່ປີ. ລາຍໄດ້ຂອງພົນລະເມືອງຕໍ່ຄົນຕໍ່ປີກໍເພີ່ມຂຶ້ນສູງກວ່າແຕ່ກ່ອນແລະເປັນທີ່ໜ້າພໍໃຈ. ຈາກບ່ອນນີ້ຈຶ່ງພາໃຫ້ຊີວິດການເປັນຢູ່ຂອງພົນລະເມືອງລາວໄດ້ຮັບການປົວແປງໃຫ້ດີຂຶ້ນເປັນກ້າວໆມາ.

### 1.2 ໂຄງປະກອບຂອງເສດຖະກິດແລະຍອດຜະລິດຕະພັນພາຍໃນ

ຈາກການປະຕິບັດແນວທາງຈິນຕະນາການໃໝ່ຫຼືເອີ້ນຢ່າງໜຶ່ງວ່າ “ກົນໄກເສດຖະກິດໃໝ່” ນັ້ນເຮັດໃຫ້ເສດຖະກິດຂອງລາວໄດ້ຫັນປ່ຽນຈາກກົນໄກເດີມດ້ວຍການຜ່ອນຄາຍການຄວບຄຸມຈາກສ່ວນກາງລົງ, ເພີ່ມໂອກາດແກ່ພາກເອກຊົນໃນການປະກອບທຸລະກິດ, ເພີ່ມປະສິດທິພາບແກ່ລັດວິສາຫະກິດແລະສົ່ງເສີມການລົງທຶນຈາກຕ່າງປະເທດ. ການປະຕິບັດແນວທາງດັ່ງກ່າວໂດຍສະເພາະການເນັ້ນໃສ່ການພັດທະນາກົນໄກຕະຫຼາດຢູ່ພາຍໃນປະເທດແລະສົ່ງເສີມການຄ້າແລະການລົງທຶນຈາກຕ່າງປະເທດໃຫ້ຫຼາຍຂຶ້ນໂດຍການຫຼຸດກົດເກນຕ່າງໆຫຼືລະບຽບຕ່າງໆໃຫ້ໜ້ອຍລົງນັ້ນໄດ້ສົ່ງຜົນໃຫ້ໂຄງປະກອບຂອງເສດຖະກິດມີການປ່ຽນແປງໄປຈາກເດີມຄືຂະແໜງກະສິກຳຊຶ່ງເຄີຍເປັນຜູ້ກວມອັດຕາສ່ວນສູງກວ່າໝູ່ນັ້ນໄດ້ຫຼຸດລົງໄປເລື້ອຍໆ.




ກ. ໂຄງປະກອບເສດຖະກິດໃນປີ 2011 ຂ. ໂຄງປະກອບເສດຖະກິດໃນປີ 2012

ແຜນພູມ 1: ແຜນພູມສະແດງເຖິງໂຄງປະກອບຂອງເສດຖະກິດລາວ
ໃນປີ 2011 ແລະ 2012 (ໜ່ວຍເປັນສ່ວນຮ້ອຍ)

ພ້ອມດຽວກັນນີ້, ຍອດພະລິດຕະພັນພາຍໃນ (GDP) ກໍໄດ້ເພີ່ມຂຶ້ນເລື້ອຍໆແລະເພີ່ມຂຶ້ນໃນລະດັບທີ່ໄວພໍສົມຄວນໂດຍສະເພາະແລ້ວນັບແຕ່ມີການທຸ່ມເທການລົງທຶນເຂົ້າໃນພາກອຸດສາຫະກໍາຊຶ່ງສ່ວນໃຫຍ່ຢູ່ໃນຂະແໜງເຂື່ອນໄຟຟ້ານໍ້າຕົກແລະຂະແໜງບໍ່ແຮ່.




ກະຣາບ 1: ກະຣາບສະແດງເຖິງຍອດຜົນຜະລິດຕະພັນພາຍໃນຕໍ່ຄົນ/ປີຂອງ
ສ.ປ.ປ. ລາວແຕ່ປີ 1980 – 2012 (ໜ່ວຍເປັນ $US)

ຖ້າທຽບກັບບັນດາປະເທດຕ່າງໆໃນອາຊຽນດ້ວຍກັນສ.ປ.ປ. ລາວກໍນັບວ່າເປັນປະເທດທີ່ມີການປ່ຽນແປງດ້ານເສດຖະກິດໄປໃນທາງທີ່ດີຂຶ້ນຫຼາຍແລະໄດ້ຖືກຈັດເປັນໜຶ່ງໃນປະເທດທີ່ມີອັດຕາການຈະເລີນເຕີບໂຕທາງເສດຖະກິດທີ່ໄວທີ່ສຸດໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ໃນປັດຈຸບັນ. ຂະນະດຽວກັນ, ລະດັບການຂະຫຍາຍຕົວທາງເສດທະກິດຂອງປະເທດ ເມື່ອທຽບໃສ່ໂລກ ແລະ ພາກພື້ນອາຊຽນແລ້ວກໍເຫັນວ່າ ມີລໍາດັບທີ່ກ້າວໜ້າຢ່າງໜ້າພໍໃຈ.




ກ. ຍອດຜະລິດຕະພັນພາຍໃນຕໍ່ຄົນ/ປີ 2005




ຂ. ຍອດຜະລິດຕະພັນພາຍໃນຕໍ່ຄົນ/ປີ 2012

ແຜນພູມ 2: ແຜນພູມສະແດງເຖິງຍອດຜະລິດຕະພັນພາຍຕໍ່ຄົນ/ປີ

ຂອງກຸ່ມປະເທດອາຊຽນ (ໜ່ວຍເປັນ $US)

| ລ/ດ | ປະເທດ | ລຳດັບປີ 2008 | ລຳດັບປີ 2010 | ລຳດັບ 2011 |
|---|---|---|---|---|
| 1 | ສິງກະໂປ | 21 | 15 | 13 |
| 2 | ບະຣູໄນ | 23 | 26 | 24 |
| 3 | ມາເລເຊຍ | 67 | 65 | 64 |
| 4 | ໄທ | 92 | 88 | 91 |
| 5 | ອິນໂດເນເຊຍ | 114 | 109 | 111 |
| 6 | ຟີລິບປິນ | 117 | 128 | 126 |
| 7 | ຫວຽດນາມ | 141 | 141 | 143 |
| 8 | ລາວ | 150 | 147 | 145 |
| 9 | ກຳປູເຈຍ | 153 | 153 | 156 |
| 10 | ມຽນມາ | 173 | 155 | 159 |

ຕາຕະລາງ 1: ຕາຕະລາງສະແດງເຖິງການຈັດລຳດັບການຂະຫຍາຍຕົວທາງເສດຖະກິດ

ຂອງສ.ປ.ປ. ລາວແລະປະເທດອາຊຽນທຽບໃສ່ໂລກ

## 2. ບັນດາຂະແໜ່ງເສດຖະກິດ

### 2.1 ການກະສິກຳແລະການປະມົງ

#### 2.1.1 ການປູກຝັງ

ການປູກຝັງມີຢູ່ 3 ຂະແໜງການດ້ວຍກັນຄື: ການປູກພືດທັນຍາຫານ, ການປູກພືດອຸດສາຫະກຳແລະການປູກພືດໃຫ້ໝາກ. ການປູກພືດທັນຍາຫານຕົ້ນຕໍໄດ້ແກ່ການປູກເຂົ້າຊຶ່ງມີທັງເຂົ້ານາແລະເຮັດໄຮ່. ສຳລັບເຂົ້ານາ (ທັງນາປີແລະນາແຊງ) ແມ່ນມີການປູກຫຼາຍຢູ່ຕາມເຂດທົ່ງພຽງຕ່າງໆ, ສ່ວນເຂົ້າໄຮ່ນັ້ນມີການປູກຢູ່ຕາມເຂດພູແລະພູພຽງເປັນຈຸດໜັກ. ຈາກການທຸ່ມເທໃສ່ຂະແໜງການນີ້ນັບແຕ່ປີ 2000 ເປັນຕົ້ນມາສ.ປ.ປ. ລາວມີເຂົ້າກຸ່ມກິນພຽງພໍແລະຍັງມີສ່ວນທີ່ເຫຼືອເພື່ອສົ່ງອອກຂາຍອີກ. ນອກຈາກເຂົ້າແລ້ວພືດທາດແປ້ງອື່ນໆທີ່ປູກກໍມີມັນຕົ້ນ, ເຜືອກ, ມັນດ້າງ, ສາລີ…ຊຶ່ງປູກໄວ້ເພື່ອເປັນອາຫານເພີ່ມແລະເປັນອາຫານສັດ. ສຳລັບຜັກບາງຊະນິດກໍມີການປູກຫຼາຍຈົນສາມາດສົ່ງເປັນສິນຄ້າຂາອອກໄດ້ເຊັ່ນ: ຜັກບົ່ວ, ຜັກທຽມ, ໝາກສະເຫວີ, ຜັກກະລໍ່າປີ…ເປັນຕົ້ນ.



ກ. ນາເຂົ້າ (ເຂົ້ານາປີ)　　　　ຂ. ສວນຜັກ　　　　ຄ. ສວນພ້າວ

ຮູບ 17: ການປູກພືດຕ່າງໆຢູ່ສ.ປ.ປ. ລາວ

ສຳລັບພືດອຸດສາຫະກຳທີ່ປູກກັນທົ່ວໄປໃນສ.ປ.ປ. ລາວກໍມີຝ້າຍ, ປ່ານ, ຢາສູບ, ມອນ, ຕົ້ນຕານ, ອ້ອຍ, ຖົ່ວດິນ, ກາເຟ, ຍານ, ຕົ້ນໄມ້ປ່ອຍຄັ່ງແລະອື່ນໆອີກ. ສ່ວນພືດໃຫ້ໝາກນັ້ນ, ຢູ່ລາວມີທັງຊະນິດຂອງເຂດຮ້ອນ ແລະ ຂອງເຂດອົບອຸ່ນ ຊຶ່ງທົ່ວໄປແມ່ນປູກໄວ້ເພື່ອໃຊ້ບໍລິໂພກປະຈຳຄອບຄົວເປັນຕົ້ນຕໍ ເຊັ່ນ: ໝາກກ້ຽງ, ໝາກຈອງ, ທຸຣຽນ...ດັ່ງນີ້ເປັນຕົ້ນ.

**2.1.2 ການລ້ຽງສັດ**

ການລ້ຽງສັດຢູ່ລາວ ມີທັງການລ້ຽງສັດໃຫຍ່, ສັດນ້ອຍ ແລະ ສັດປີກ. ສັດໃຫຍ່ທີ່ລ້ຽງທົ່ວໄປໄດ້ ແກ້ງົວ ແລະ ຄວາມຊຶ່ງມີຫຼາຍຢູ່ແຂວງຕ່າງໆ ທີ່ເປັນເຂດທົ່ງພຽງ ແລະ ພູພຽງ ໂດຍລ້ຽງກັນແບບປະປ່ອຍຕາມ ທຳມະຊາດເປັນສ່ວນຫຼາຍ ຢູ່ໃນນັ້ນເດັ່ນກວ່າໝູ່ແມ່ນແຂວງສະຫວັນນະເຂດ, ຈຳປາສັກ, ວຽງຈັນ ແລະ ສາລະວັນ. ນອກຈາກນັ້ນ, ກໍມີມ້າ ຊຶ່ງນິຍົມກັນລ້ຽງຫຼາຍຢູ່ບັນດາແຂວງທາງພາກເໜືອ ແລະ ຢູ່ພູພຽງບໍລິເວນ. ພິເສດ, ຢູ່ແຂວງໄຊຍະບູລີ, ຫຼວງພະບາງ, ອັດຕະປື...ຍັງມີການລ້ຽງຊ້າງອີກ.



ກ. ຄວາຍພື້ນເມືອງຂ. ໝູພັນຊີ້ນຄ. ໄກ່ລາດ

ຮູບທີ 18: ສ່ວນໜຶ່ງຂອງສັດລ້ຽງຊະນິດຕ່າງໆຢູ່ ສ.ປ.ປ. ລາວ

ສຳລັບສັດນ້ອຍທີ່ນິຍົມລ້ຽງຢູ່ທົ່ວໄປນັ້ນໄດ້ແກ່ໝູຊຶ່ງນຳໜ້າໝູ່ແມ່ນແຂວງສະຫວັນນະເຂດ, ສາລະວັນ, ຫົວພັນແລະຫຼວງພະບາງ. ສ່ວນແກະແລະແບ້ນັ້ນມີການລ້ຽງຫຼາຍຢູ່ແຂວງຫຼວງພະບາງ, ອຸດົມໄຊ ແລະ ຫົວພັນ. ນອກຈາກນີ້ ແລ້ວຊາວລາວເກືອບທຸກຄົວເຮືອນຍັງນິຍົມກັນລ້ຽງສັດປີກຕ່າງໆອີກ ເຊັ່ນ: ໄກ່ ລາດ, ເປັດເທບ, ໄກ່ງວງ ແລະ ຫ່ານ ຊຶ່ງທົ່ວໄປຍັງແມ່ນລ້ຽງແບບປະປ່ອຍຕາມທຳມະຊາດຢູ່. ແຕ່ໃນປັດຈຸບັນ ນີ້, ຢູ່ບາງບ່ອນກໍມີການລ້ຽງໄກ່ພັນຊີ້ນ ຫຼື ພັນໄຂ່, ເປັດພັນໄຂ່ ແລະ ນົກກະທາ ໂດຍສະເພາະແມ່ນຢູ່ຕາມຕົວເມືອງໃຫຍ່ຕ່າງໆ.

### 2.1.3 ການປະມົງ

ການປະມົງຢູ່ໃນ ສ.ປ.ປ. ລາວ ເປັນການຫາປານ້ຳຈືດ ຊຶ່ງເປັນການຫາເພື່ອການກິນຢູ່ສຳລັບຄອບຄົວເປັນຕົ້ນຕໍ, ຈະຫາເພື່ອການຄ້າຂາຍນັ້ນ ກໍມີພຽງແຕ່ຢູ່ບາງເຂດເທົ່ານັ້ນ ເຊັ່ນ: ຢູ່ອ່າງໜ້າເຂື່ອນນ້ຳງື່ມ, ຢູ່ຕາມແມ່ນ້ຳຂອງ ແລະ ບາງສາຂາຂອງມັນ. ວິທີການຫາປາຍັງແມ່ນແບບພື້ນເມືອງຢູ່. ໃນປັດຈຸບັນ, ຄຽງຄູ່ກັບການຫາປາຕາມທຳມະຊາດນີ້ ໃນຫຼາຍທ້ອງຖິ່ນກໍມີການຂຸດໜອງລ້ຽງປາ ແຕ່ບໍ່ທັນຂະຫຍາຍຕົວຫຼາຍປານໃດ, ມີແຕ່ພໍຕອບສະໜອງການກິນຢູ່ພາຍໃນຄອບຄົວສ່ວນໃດສ່ວນໜຶ່ງເທົ່ານັ້ນ.



ກ. ການຫາປາຕາມທຳມະຊາດຂ. ການລ້ຽງລູກປາໃນກະຊັງ

ຮູບທີ 19: ສ່ວນໜຶ່ງຂອງການຫາປາ ແລະ ລ້ຽງປາໃນ ສ.ປ.ປ. ລາວ

## 2.2 ການຫັດຖະກຳ

ການຫັດຖະກຳຢູ່ ສ.ປ.ປ ລາວ ມີຫຼາຍຂະແໜງການ ເຊັ່ນ: ການຕ່ຳຫູກ, ການຈັກສານ, ການຖັກແສ່ວ, ການປັ້ນໝໍ້, ການແກະສະຫຼັກ, ການລະບາຍສີ, ການຊ່າງເຄື່ອງເຮືອນ, ການຕີເຫຼັກ, ການຕີເງິນ - ຄຳ ແລະ ອື່ນໆ ຊຶ່ງພວມມີບົດບາດສຳຄັນຕໍ່ເສດຖະກິດແຫ່ງຊາດ. ເຖິງຢ່າງໃດກໍດີ, ການຫັດຖະກຳຂະແໜງຕ່າງໆຢູ່ ສ.ປ.ປ ລາວທົ່ວໄປຍັງມີຜະລິດໃນລະດັບຄອບຄົວ ແລະ ສ່ວນຫຼາຍກໍຂະຫຍາຍຢູ່ເຂດຊົນນະບົດ, ໃນນັ້ນຂະຫຍາຍຫຼາຍກວ່າໝູ່ແມ່ນການຕ່ຳຫູກ. ມີຜະລິດຕະພັນຂອງຫຼາຍທ້ອງຖິ່ນທີ່ມີຊື່ສຽງເປັນທີ່ຮູ້ຈັກກັນດີ ເຊັ່ນ: ສິ້ນໄໝ ວຽງຈັນ, ຊຳເໜືອ ແລະ ຫຼວງພະບາງ, ສິ້ນໝີ່ປາກເຊ, ສະຫວັນນະເຂດ ແລະ ທ່າແຂກ, ຜ້າກະໂດຂອງແຂວງ ອັດຕະປື...ເປັນຕົ້ນ. ບາງທ້ອງຖິ່ນກໍມີຊື່ສຽງໃນດ້ານການປັ້ນໝໍ ເຊັ່ນ: ບ້ານພະຂາວ (ນະຄອນຫຼວງວຽງຈັນ) ແລະ ບ້ານສຸລິວັນນະຄີລີ (ຈຳປາສັກ) ຂະນະທີ່ເມືອງໂພນໂຮງ, ທຸລະຄົມ (ວຽງຈັນ) ແລະ ຫຼາຍທ້ອງຖິ່ນຂອງ ແຂວງຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ ພັດມີຊື່ສຽງໃນດ້ານການຈັກສານ. ພ້ອມດຽວກັນນີ້, ຫຼາຍ ທ້ອງຖິ່ນຂອງແຂວງຫຼວງພະບາງ, ຈຳປາສັກ, ຫົວພັນ ແລະ ຊຽງຂວາງພັດມີຊື່ສຽງໃນດ້ານການຕີເຫຼັກ. ພິເສດ, ແຂວງຫຼວງພະບາງຍັງມີຊື່ສຽງໃນດ້ານການຕີເງິນ - ຄຳ, ແກະສະຫຼັກ ແລະ ຄວັດລາຍລະບາຍສີຕ່າງໆອີກດ້ວຍ.



ກ. ການແກະສະຫຼັກຂ. ການຕໍ່າຫູກຄ. ການຈັກສານ

ຮູບ 20: ການຫັດຖະກຳບາງຂະແໜງໃນ ສ.ປ.ປ ລາວ

**2.3 ການອຸດສາຫະກຳ**

ຖ້າທຽບກັບຂະແໜງການອື່ນແລ້ວການອຸດສາຫະກຳຂອງສ.ປ.ປລາວນັບວ່າຍັງອ່ອນນ້ອຍຢູ່ຊຶ່ງຈະເຫັນໄດ້ຈາກອັດຕາສ່ວນຂອງຜູ້ປະກອບອາຊີບຢູ່ໃນຂະແໜງການນີ້ມີໜ້ອຍຫຼາຍ. ແຕ່ວ່າ, ມາໃນປັດຈຸບັນ ຂະ ແໜງການດັ່ງກ່າວ ພວມມີບົດບາດສຳຄັນຫຼາຍຂຶ້ນເລື້ອຍໆໃນເສດຖະກິດແຫ່ງຊາດ ຊຶ່ງສະແດງອອກຄືຜົນຜະ ລິດຂອງອຸດສາຫະກຳ ໄດ້ກວມເອົາຍອດຜົນຜະລິດຕະພັນແຫ່ງຊາດເຖິງ 27% ໃນປີ 2011 ແລະ 31% ໃນປີ 2012 ຂະນະທີ່ພາກກະສິກຳຍຶດເອົາອັດຕາສ່ວນ 29% ແລະ 28%.

ອຸດສາຫະກຳຂອງ ສ.ປ.ປ. ລາວ ສ່ວນຫຼາຍໄດ້ແກ່ອຸດສາຫະກຳເບົາ ຫຼື ອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ຂະໜາດກາງ ຊຶ່ງໂດຍສ່ວນໃຫຍ່ເຕົ້າໂຮມຢູ່ນະຄອນຫຼວງວຽງຈັນ ແລະ ຢູ່ບາງຕົວເມືອງໃຫຍ່ອື່ນໆ. ສ່ວນອຸດສາຫະກຳໜັກນັ້ນ ຕົ້ນຕໍແມ່ນອຸດສາຫະກຳຂຸດຄົ້ນບໍ່ແຮ່ ແລະ ອຸດສາຫະກຳພະລັງງານ ຊຶ່ງຈຸດໜັກແມ່ນອຸດສາຫະກຳໄຟຟ້ານໍ້າຕົກ.

ອຸດສາຫະກຳເບົາຂອງ ສ.ປ.ປ. ລາວ ໃນປັດຈຸບັນປະກອບດ້ວຍຂະແໜງການຕ່າງໆຄື:

- **ອຸດສາຫະກຳປະກອບ ແລະ ສ້ອມແປງກົນຈັກ:**ມີໂຮງງານຫຼາຍແຫ່ງໃນນະຄອນວຽງຈັນ ແລະ ຢູ່ບາງຕົວເມືອງໃຫຍ່ອື່ນໆ.
- **ອຸດສາຫະກຳຜະລິດວັດສະດຸກໍ່ສ້າງ:** ມີໂຮງດິນຈີ່, ໂຮງງານດິນກະເບື້ອງ, ໂຮງງານເບຕົງສຳເລັດຮູບ, ໂຮງງານສັງກະສີ, ໂຮງງານເຫຼັກເສັ້ນ, ໂຮງງານເຫຼັກຕະປູ - ລວດໜາມ ແລະ ໂຮງງານຊີມັງ ຊຶ່ງສ່ວນໃຫຍ່ເຕົ້າ ໂຮມຢູ່ນະຄອນຫຼວງວຽງຈັນ ແລະ ຢູ່ບາງແຂວງ.
- **ອຸດສາຫະກຳເຄມີ:** ມີໂຮງງານສະບູຝຸ່ນ, ໂຮງງານຢາປົວພະຍາດ, ໂຮງງານອອກຊີເຢັນ - ອາເຊເຕແລນ...ຢູ່ນະຄອນຫຼວງວຽງຈັນ.
- **ອຸດສາຫະກຳຕໍ່າແຜນ ແລະ ຕັດຫຍິບ:** ມີໂຮງງານຕໍ່າແຜ່ນ, ໂຮງງານຍ້ອມຝ້າຍລາວ, ໂຮງງານຕັດຕັດ ຫຍິບຕ່າງໆ...ຢູ່ນະຄອນຫຼວງວຽງຈັນ ແລະ ຢູ່ບາງແຂວງ.
- **ອຸດສາຫະກຳໄມ້:** ມີໂຮງງານແປຮູບໄມ້ຊະນິດຕ່າງໆຄື: ໂຮງຊອຍ, ໂຮງເລື່ອຍ, ໂຮງງານໄມ້ອັດ, ໂຮງ ງານເຟີນີເຈີ...ຊຶ່ງຕັ້ງຢູ່ນະຄອນຫຼວງວຽງຈັນ ແລະ ຢູ່ເກືອບທຸກແຂວງ.
- **ອຸດສາຫະກຳປຸງແຕ່ງເຄື່ອງອຸປະໂພກ:** ມີໂຮງງານເຂົ້າຈີ່ - ເຂົ້າໜົມ, ໂຮງນໍ້າກ້ອນ, ໂຮງງານນໍ້າປາ, ໂຮງ ງານນໍ້າດື່ມ, ໂຮງງານທໍອາຫານສັດ, ໂຮງງານເບຍ, ໂຮງງານນໍ້າຫວານ, ໂຮງງານຢາສູບ, ໂຮງງານຜະລິດປົ້ມ ຂຽນ...ຊຶ່ງຕັ້ງຢູ່ນະຄອນຫຼວງວຽງຈັນ ແລະ ຢູ່ແຂວງຕ່າງໆ.



ກ.ໂຮງງານນໍ້າຕານຂ. ໂຮງງານມາກໄມ້ກະປ໋ອງຄ.ໂຮງງານຊີມັງ

ຮູບ 21: ການອຸດສາຫະກຳເບົາບາງປະເພດໃນ ສ.ປ.ປ. ລາວ

ສຳລັບອຸດສາຫະກຳໜັກນັ້ນເຖິງວ່າ ມີພຽງແຕ່ບາງຂະແໜງແຕ່ກໍມີບົດບາດສູງຕໍ່ເສດຖະກິດແຫ່ງຊາດ. ເວົ້າສະເພາະການຂຸດຄົ້ນແຮ່ທາດຕ່າງໆອັນມີເກືອ, ກົ່ວ, ແກ້ວ, ຫີນກາວ, ຖ່ານຫີນ, ຫີນປູນ, ຄຳ, ທອງແດງ... ນັ້ນເຫັນວ່າ ນັບມື້ນັບມີຄວາມສັບສົນຄືລາຍຮັບຈາກຂະແໜງນີ້ຈາກທີ່ເຄີຍຢູ່ໃນອັນດັບທີ 8 ໃນປີ 2002 ໄດ້ກ້າວມາຢູ່ໃນອັນດັບທີ 1 ນັບແຕ່ປີ 2007 ເປັນຕົ້ນມາ ແລະ ໃນປີ 2011 ຜ່ານມານີ້ ລາຍໄດ້ຈາກແຮ່ທາດຕ່າງໆ ມີເຖິງ 1,237 ລ້ານໂດລາສະຫະລັດ.




ກະຣາບ 2: ກະຣາບສະແດງເຖິງລາຍຮັບຈາກຂະແໜງບໍ່ແຮ່ຂອງ ສ.ປ.ປ. ລາວ
ແຕ່ປີ 1999 - 2011 (ໜ່ວຍເປັນລ້ານ $US)

ໃນບັນດາແຮ່ທາດທີ່ຖືກຂຸດຄົ້ນມານັ້ນ ແຮ່ທາດທີ່ສຳຄັນກວ່າໝູ່ໄດ້ແກ່ແຮ່ຄຳ ແລະ ທອງ. ໃນປີ 2010 ທີ່ຜ່ານມາ ສ.ປ.ປ. ລາວ ສາມາດສົ່ງຄຳອອກສູ່ຕະຫຼາດໂລກໄດ້ 5,105.8 ກກ ແລະ ສົ່ງທອງອອກໄດ້ 366,845 ຕ. ເວົ້າສະເພາະແຕ່ການຂຸດຄົ້ນແຮ່ຄຳ ແລະ ທອງຢູ່ບໍ່ຄຳເຊໂປນແຫ່ງດຽວເທົ່ານັ້ນໃນປີ 2011 ສ.ປ.ປ ລາວ ກໍສາມາດສົ່ງຄຳອອກໄດ້ຫຼາຍເຖິງ 2,000 ກກ (75,000 Oz) ແລະ ສົ່ງທອງອອກໄດ້ 80,000 ຕ. ຜະລິດຕະພັນແຮ່ທາດທີ່ກ່າວມານີ້ ມີສ່ວນເຮັດໃຫ້ຍອດຜະລິດຕະພັນພາຍໃນເຕີບໂຕຂຶ້ນ ແລະ ເປັນປັດໃຈເຮັດໃຫ້ປະເທດຊາດສາມາດຫຼຸດໜີ້ສິນຕ່າງປະເທດລົງໄດ້.




ກ. ເຂື່ອນໄຟຟ້ານ້ຳງື່ມ I ຂ. ບໍ່ຄຳເຊໂປນ

ຮູບ 22: ບາງສ່ວນຂອງຂະແໜງອຸດສາຫະກຳໜັກຕົ້ນຕໍຂອງ ສ.ປ.ປ. ລາວ

ສ່ວນອຸດສາຫະກຳໄຟຟ້ານ້ຳຕົກມາເຖິງປັດຈຸບັນນີ້ ໄດ້ມີກຳລັງຜະລິດເພີ່ມຂຶ້ນຄືໃນປີ 1975 ມີກຳລັງຜະລິດພຽງແຕ່ 35 ມວ ແຕ່ມາເຖິງປີ 2011 ກຳລັງຜະລິດໄດ້ເພີ່ມຂຶ້ນເປັນ 2,419 ມວ ແລະ ສາມາດຜະລິດກະ ແສໄຟຟ້າໄດ້ທັງໝົດ 3,539,000,000 ກວມ ຊຶ່ງໃນນັ້ນ 65.60% ເປັນສ່ວນສົ່ງອອກ. ແຕ່ເຖິງຢ່າງນັ້ນ

ກໍຕາມ, ລາຍໄດ້ຈາກພະລັງງານໄຟຟ້າ ຊຶ່ງເຄີຍຄອງອັນດັບໜຶ່ງ 1 ແຕ່ປີ 1999 ຫາປີ 2003 ໄດ້ມາຢູ່ອັນດັບ 3 ໃນປີ 2011.

| ລ/ດ | ໂຄງການເຂື່ອນ | ຄວາມສູງຂອງຕົວເຂື່ອນ (ມ) | ຂະໜາດບັນຈຸຂອງອ່າງ (ລ້ານມ$^3$) | ກໍາລັງຕິດຕັ້ງ (ມວ) |
|---|---|---|---|---|
| 1 | ນໍ້າງື່ມ I | 75 | 7,010 | 150 |
| 2 | ນໍ້າງື່ມ II | 181 | 2,971 | 615 |
| 3 | ນໍ້າເລີກ | 45 | 185 | 60 |
| 4 | ເຊເສັດ I | 10 | 2 | 45 |
| 5 | ເຊເສັດ II | - | 0.8 | 76 |
| 6 | ເທີນ - ຫີນປູນ | 27 | 130 | 210 |
| 7 | ຫ້ວຍເຫາະ | 79 | 590 | 150 |
| 8 | ນໍ້າເທີນ II | 39 | 3,530 | 1,086 |
| 9 | ນໍ້າລີກ I-II | 328 | 24,4 | 103 |
| | | | ລວມກໍາລັງຕິດຕັ້ງທັງໝົດ: | 2,419 ມວ |

ຕາຕະລາງ 2: ເຂື່ອນໄຟຟ້ານໍ້າຕົກສໍາຄັນທີ່ໃຊ້ງານຢູ່ໃນ ສ.ປ.ປ. ລາວ

## 2.4 ການຄົມມະຄົມຂົນສົ່ງ

ການຄົມມະນາຄົມຂົນສົ່ງຢູ່ ສ.ປ.ປ. ລາວ ໃນປັດຈຸບັນນັບວ່າມີຄວາມສະດວກ ແລະ ວ່ອງໄວກວ່າແຕ່ກ່ອນຫຼາຍ ແລະ ພາຫະນາຂົນສົ່ງກໍທັນສະໄໝອີກດ້ວຍ. ແຕ່ຢ່າງໃດກໍດີ, ກໍຍັງເຫັນວ່າມັນຂະຫຍາຍຕົວຊ້າ ແລະ ບໍ່ທັນຄົບຊຸດຄືມີພຽງແຕ່ທາງບົກ, ທາງນໍ້າ ແລະ ທາງອາກາດເທົ່ານັ້ນ (ຍັງບໍ່ມີທາງລົດໄຟ) ຊຶ່ງໃນນີ້ການຄົມມະນາຄົມຂົນສົ່ງທາງບົກນັບວ່າເປັນຂະແໜງທີ່ຂະຫຍາຍຕົວ ແລະ ນິຍົມໃຊ້ກັນຫຼາຍທີ່ສຸດ. ທຸກໆແຂວງມີເສັ້ນທາງເຊື່ອມຕໍ່ເຖິງກັນ ແຕ່ກໍມີບາງເຂດທີ່ຍັງຂາດເສັ້ນທາງ ແລະ ຕ້ອງໄດ້ໃຊ້ຊ້າງ, ມ້າ...ເຂົ້າໃນການລໍາລຽງຂົນສົ່ງ. ເສັ້ນທາງຫຼວງລະດັບຊາດມີເສັ້ນທາງເລກ 13, ເສັ້ນທາງເລກ 1, ເສັ້ນທາງເລກ 7, ເສັ້ນທາງເລກ 8, ເສັ້ນ ເລກ 9, ເສັ້ນທາງເລກ 12...ໃນນັ້ນ ເສັ້ນທາງເລກ 1 ໄດ້ຖືກກໍານົດເປັນເສັ້ນທາງຫຼັກເສັ້ນທີ 2 ຊຶ່ງຕັດຜ່ານເຂດ ໃຈກາງປະເທດແຕ່ເໜືອເຖິງໃຕ້.

ສໍາລັບການຄົມມະນາຄົມຂົນສົ່ງທາງນໍ້າເຖິງວ່າ ມີຄວາມສະດວກວ່ອງໄວກວ່າແຕ່ກ່ອນຫຼາຍ ແຕ່ກໍບໍ່ເປັນທີ່ນິຍົມປານໃດ ແລະ ຍັງຖືກຈໍາກັດຢູ່ເພາະ ແມ່ນໍ້າສ່ວນຫຼາຍເປັນແມ່ນໍ້າທີ່ໄຫຼແຮງ ແລະ ມີແກ້ງຫຼາຍ ຫຼື ບາງສາຍກໍໃຊ້ເປັນເສັ້ນທາງທຽວໄປມາໄດ້ພຽງແຕ່ໃນລະດູຝົນເທົ່ານັ້ນ.

ສ່ວນການຄົມມະນາຄົມຂົນສົ່ງທາງອາກາດ ກໍໄດ້ຮັບການປັບປຸງໃຫ້ທັນສະໄໝຂຶ້ນ. ຢູ່ເກືອບທຸກໆແຂວງໄດ້ມີການສ້າງສະໜາມບິນຂຶ້ນ. ສະເພາະ ສະໜາມບິນວັດໄຕທີ່ວຽງຈັນ ກໍໄດ້ຖືກປັບປຸງໃຫ້ເປັນສະໜາມບິນລະດັບສາກົນແລ້ວ. ແຕ່ວ່າ, ໃນປັດຈຸບັນ ການຄົມມະນາຄົມທາງອາກາດຂອງລາວ ກໍຍັງແມ່ນການບໍລິການທາງດ້ານການໂດຍສານເປັນຕົ້ນຕໍຢູ່.



ກ. ລົດໂດຍສານ ຂ. ກຳປັ່ນຂົນສົ່ງ ຄ. ເຮືອບິນໂດຍສານ

ຮູບ 23: ພາຫະນະບາງຢ່າງທີ່ໃຊ້ເຂົ້າໃນການຄົມມະນາຄົມຂົນສົ່ງຢູ່ ສ.ປ.ປ. ລາວ

**2.5 ການໄປສະນີ ແລະ ໂທລະຄົມມະນາຄົມ**

ໃນປັດຈຸບັນຕາໜ່າງໄປສະນີຢູ່ ສ.ປ.ປ. ລາວ ໄດ້ຂະຫຍາຍຕົວຢ່າງກ້ວາງຂວາງ. ຈະເຫັນໄດ້ວ່າ ຫ້ອງການໄປສະນີໄດ້ຖືກສ້າງຂຶ້ນຢູ່ເກືອບທຸກເມືອງໃນທົ່ວປະເທດ. ຂະນະດຽວກັນ, ສູນກາງໂທລະຄົມມະນາຄົມລະຫວ່າງຊາດທີ່ຕິດຕໍ່ກັບດາວທຽມ ກໍໄດ້ສ້າງຕັ້ງຂຶ້ນຢູ່ທີ່ນະຄອນຫຼວງວຽງຈັນ. ທ້ອງຖິ່ນຕ່າງໆໃນທົ່ວປະເທດສາມາດຕິດຕໍ່ສື່ສານກັນໄດ້ຢ່າງສະດວກ. ນັບແຕ່ປີ 2010 ມາມີສູນກາງໂທລະສັບອັດຕະໂນມັດ 104 ແຫ່ງ ແລະ ສູນກາງໂທລະສັບມືຖື 7 ແຫ່ງ. ໃນປີນີ້ມີການຕິດຕັ້ງ ແລະ ໃຫ້ບໍລິການໂທລະສັບທັງໝົດ 6,015,851 ເລກໝາຍ ຊຶ່ງໃນນັ້ນສຳລັບມືຖືມີ 5,811,341 ເລກໝາຍ.

**2.6 ການຄ້າ**

ໃນປັດຈຸບັນ, ການຄ້າຂາຍໃນ ສ.ປ.ປ. ລາວ ພວມຂະຫຍາຍຕົວ ແລະ ມີທ່າອ່ຽງເພີ່ມຂຶ້ນຢ່າງຕໍ່ເນື່ອງ. ຈະເຫັນໄດ້ວ່າຕະຫຼາດ ໄດ້ຂະຫຍາຍໄປເຖິງຊົນນະບົດ ແລະ ຫຼາຍຕົວເມືອງໄດ້ກາຍເປັນສູນກາງການຄ້າ ເຊັ່ນ: ນະຄອນຫຼວງວຽງຈັນ, ແຂວງສະຫວັນນະເຂດ, ປາກເຊ, ທ່າແຂກ, ຊຽງຂວາງ...ເປັນຕົ້ນ.

ສ.ປ.ປ. ລາວ ໄດ້ສົ່ງຜົນຜະລິດດ້ານການກະສິກຳ, ໄມ້ທ່ອນ, ໄມ້ແປຮູບ, ເຄື່ອງປ່າ, ກະແສໄຟຟ້າ ແຮ່ທາດ...ອອກຂາຍໃຫ້ຕ່າງປະເທດ ແລະ ພ້ອມດຽວກັນນີ້ ກໍນຳເຂົ້າສິນຄ້າປະເພດຕ່າງໆ ເຊັ່ນ: ເຄື່ອງກົນຈັກ, ນ້ຳມັນເຊື້ອໄຟ, ລົດຈັກ, ລົດໂອໂຕ, ເຄື່ອງເຫຼັກ, ແຜ່ນແພ...ແຕ່ຈະເຫັນໄດ້ວ່າໃນດ້ານການຄ້າກັບຕ່າງປະເທດນີ້ ສ່ວນຫຼາຍ ສ.ປ.ປ. ລາວ ເຮົາເປັນຝ່າຍຂາດດູນຢູ່ຕະຫຼອດມາ.

| ປີ | 1976 | 1980 | 1985 | 1990 | 1994 | 2000 | 2010 | 2011 |
|---|---|---|---|---|---|---|---|---|
| ສົ່ງອອກ | 6.5 | 30.5 | 54 | 79 | 277 | 323.5 | 1,950 | 1,842 |
| ນຳເຂົ້າ | 48.8 | 130 | 193 | 201 | 528 | 540.5 | 2,258 | 2,370 |
| ຂາດດູນ | 42.3 | 99.5 | 139 | 122 | 251 | 217 | 308 | 528 |

ຕາຕະລາງ 3: ມູນຄ່າການຄ້າຕ່າງປະເທດຂອງ ສ.ປ.ປ. ລາວ (ໜ່ວຍເປັນລ້ານ $US)

**2.7 ການທ່ອງທ່ຽວ ແລະ ການບໍລິການອື່ນໆ**

ຕາມຕົວເລກຂອງກະຊວງຖະແຫຼງຂ່າວ, ວັດທະນະທຳແລະທ່ອງທ່ຽວໄດ້ໃຫ້ຮູ້ວ່າໃນແຕ່ລະປີທີ່ຜ່ານມາຈຳນວນຂອງນັກທ່ອງທ່ຽວທີ່ເຂົ້າມາລາວໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍອັນໄດ້ສ້າງລາຍຮັບໃຫ້ແກ່ຊາດເປັນຈຳນວນຫຼວງຫຼາຍເຊັ່ນກັນ. ນັບແຕ່ປີ 1999 ເປັນຕົ້ນມາລາຍຮັບຈາກການທ່ອງທ່ຽວໄດ້ຢືນຢູ່ໃນອັນດັບທີ 1 ຫຼືທີ 2 ໃນລາຍຮັບແຫ່ງຊາດ.




ກະຣາບ 3: ກະຣາບສະແດງເຖິງຈຳນວນນັກທ່ອງທ່ຽວທີ່ເຂົ້າມາສ.ປ.ປ. ລາວ
ແຕ່ປີ 1990 - 2011 (ໜ່ວຍເປັນຄົນ)

ການທ່ອງທ່ຽວບໍ່ພຽງແຕ່ໄດ້ສ້າງລາຍຮັບເປັນເງິນຕາຕ່າງປະເທດໃຫ້ແກ່ຊາດເທົ່ານັ້ນແຕ່ຍັງກໍ່ເກີດການລົງທຶນແລະດຳເນີນທຸລະກິດຢ່າງຫຼວງຫຼາຍຈາກພາຍໃນແລະຕ່າງປະເທດໃນກິດຈະການຕ່າງໆທີ່ກ່ຽວຂ້ອງກັບການທ່ອງທ່ຽວເຊັ່ນ: ກິດຈະການໂຮງແຮມ, ເຮືອນພັກ, ຮ້ານອາຫານ, ການຂົນສົ່ງ, ການນຳທ່ຽວ, ການຄ້າ, ອູ່ສ້ອມແປງລົດ, ຮ້ານເສີມຄວາມງາມແລະອື່ນໆຊຶ່ງສ່ວນຫຼາຍມີການຂະຫຍາຍຕົວເມືອງໃຫຍ່ຕ່າງໆ. ເວົ້າສະເພາະແຕ່ປີ 2010 ຜ່ານມານີ້ໃນທົ່ວປະເທດມີໂຮງແຮມ 388 ແຫ່ງ, ເຮືອນພັກແລະຣີສອດ 1,482 ແຫ່ງ, ຮ້ານອາຫານ 1,254 ແຫ່ງແລະສະຖາບັນເທີງ 229 ແຫ່ງຊຶ່ງສ່ວນໃຫຍ່ເຕົ້າໂຮມຢູ່ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ຫຼວງພະບາງ, ສະຫວັນນະເຂດ, ຈຳປາສັກແລະອຸດົມໄຊ.

# ພາກທີ 2
# ບົດທີ 1
# ຄວາມຮູ້ທົ່ວໄປກ່ຽວກັບປະຫວັດສາດ

## 1. ປະຫວັດສາດ ແລະ ຄວາມສໍາຄັນຂອງປະຫວັດສາດ

### 1.1 ທີ່ມາ

ຄໍາວ່າ "ປະຫວັດສາດ" ມີເຄົ້າຄໍາສັບມາຈາກພາສາກະເຣັກວ່າ "History" ຊຶ່ງກົງກັບພາສາອັງກິດວ່າ "History" ຊຶ່ງໝາຍເຖິງ ການຄົ້ນຄວ້າ, ກວດກາ, ສອບສວນ ແລະ ການສອບຖາມ ໃນບັນຫາທີ່ເອົາມາປະກອບ ແລະ ຈັດຮຽງລໍາດັບເຫດການໃຫ້ຖືກຕ້ອງສອດຄ່ອງກັບກາລະເວລາ ໂດຍມີການວິເຄາະວິພາກຢ່າງມີເຫດຜົນ. ຜູ້ບັນຍັດຄໍາສັບນີ້ ຂຶ້ນມາໃຊ້ເປັນຄັ້ງທໍາອິດຄື ທ່ານ ເຮໂຣໂດຕັສ (Herodotus 484 - 425 BC) ຊຶ່ງເປັນນັກປາດຊາວກະເຣັກບູຮານຜູ້ທໍາອິດທີ່ໄດ້ວາງລະບົບກ່ຽວກັບວິທີການຈົດກ່າຍ, ການບັນທຶກເລື່ອງລາວຄວາມເປັນມາໃນອະດີດຂອງຊຸມນຸມຊົນຕົນເອງ ແລະ ຊຸມນຸມຊົນອື່ນ. ວິທີການບັນທຶກຂອງທ່ານໄດ້ຮັບການຍົກຍ້ອງຈາກຄົນທັງຫຼາຍ ແລະ ໃຫ້ສົມຍານາມວ່າ "ເປັນບິດາແຫ່ງປະຫວັດສາດ".



ຮູບ: ທ່ານ ເຮໂຣໂດຕັສ (Herodotus 484 – 425 BC)

ຕໍ່ຈາກນັ້ນມາທ່ານທູຊີດິດ (Thucydides) ຊາວກະເຣັກ ທີ່ມີຊີວິດຢູ່ໃນລະຫວ່າງປີ 460 – 400 ກ່ອນ ຄ.ສ ໄດ້ໃຊ້ຫຼັກການວິທະຍາສາດເຂົ້າມາເປັນແບບໃນການຂຽນປະຫວັດສາດ ຄື ການຂຽນປະຫວັດສາດຕ້ອງຮູ້ຢູ່ບົນຫຼັກຖານແຫ່ງຄວາມເປັນຈິງ ແລະ ເປັນກາງໃນການເບິ່ງເຫດການຢ່າງກົງໄປກົງມາ ໂດຍມີການສອບສ່ວນຢ່າງຄັກແນ່ເຮັດໃຫ້ການຂຽນປະຫວັດສາດເປັນລະບົບ, ລະບຽບກາຍເປັນວິທະຍາສາດຂະແໜງການໜຶ່ງໃນວົງການວິຊາການທາງສັງຄົມສາດ. ດັ່ງນັ້ນ, ຜົນງານການຂຽນປະຫວັດສາດຂອງທ່ານຈຶ່ງເປັນງານທີ່ມີຄຸນຄ່າທາງວິຊາການມາຮອດປັດຈຸບັນ. ຈາກຮູບແບບ ແລະ ວິທີການຂຽນນັ້ນ ທ່ານຈຶ່ງໄດ້ຮັບສົມຍານາມໃຫ້ເປັນ

"ນັກປະຫວັດສາດຄົນທຳອິດທີ່ໃຊ້ຫຼັກການວິທະຍາສາດເຂົ້າໃນການຂຽນປະຫວັດສາດ" ໜຶ່ງໃນບັນດາຜົນງານການຂຽນປະຫວັດສາດທີ່ສຳຄັນຂອງທ່ານຄື "ປະຫວັດສາດສົງຄາມເປໂລໂປແນເຊີ".

## 1.2 ຄວາມໝາຍ

ຄຳວ່າ "ປະຫວັດສາດ" ໄດ້ມີນັກວິຊາການຫຼາຍທ່ານໃຫ້ຄວາມໝາຍໄວ້ແຕກຕ່າງກັນເຊັ່ນ:

ອາຣິດສະໂຕດ (Aristotle ອ້າງໃນ Louis Gotts Chalk 1956: 41) ໄດ້ໃຫ້ຄຳຈຳກັດຄວາມວ່າປະຫວັດສາດຄືການບອກເລົ່າຢ່າງມີລະບຽບແບບແຜນກ່ຽວກັບເລື່ອງລາວຄວາມເປັນມາ ແລະ ປະກົດການ ທຳມະຊາດ.

ໂຣບິນ ຢອດ ຄໍລິງວູດ (Robin Geoge Collingwood 1959: 6) ໃຫ້ຄວາມໝາຍຂອງປະຫວັດສາດວ່າ ເປັນຄວາມຮູ້ທີ່ວ່າດ້ວຍຄວາມພະຍາຍາມທີ່ຈະຕອບຄຳຖາມກ່ຽວກັບພຶດຕິກຳຂອງມະນຸດໃນອະດີດ.

ແຮັນຣີຈອນສັນ (Hanry Johnson) ໃຫ້ຄວາມໝາຍວ່າ ປະຫວັດສາດຄືທຸກສິ່ງທຸກຢ່າງທີ່ເກີດຂຶ້ນໃນໂລກເຊັ່ນ ປາກົດການທຳມະຊາດ ແລະ ສິ່ງຕ່າງໆທີ່ມະນຸດເຮັດຂຶ້ນນັ້ນຖືວ່າເປັນປະຫວັດສາດທັງນັ້ນ.

ອີ-ເອັດ-ແຄ (E-H-Carr) ໄດ້ໃຫ້ຄວາມໝາຍຂອງປະຫວັດສາດວ່າ ປະຫວັດສາດຄືເລື່ອງລາວອັນຕໍ່ເນື່ອງຂອງການຕອບໂຕ້ກັນກັນລະຫວ່າງປະຫວັດສາດກັບຫຼັກຖານຂໍ້ມູນຄວາມຈິງ ຄືເປັນເລື່ອງທີ່ຕ້ອງຖົກຖຽງລະຫວ່າງປັດຈຸບັນກັບອະດີດທີ່ບໍ່ສິ້ນສຸດ.

ນິທິ ອ່ຽວສີວົງ (2525:65) ໃຫ້ຄວາມໝາຍຂອງປະຫວັດສາດວ່າເປັນການສຶກສາຄວາມເປັນມາຂອງມະນຸດຫຼື ສັງຄົມໃດໜຶ່ງຕັ້ງແຕ່ອະດີດ, ປັດຈຸບັນ ເຖິງອະນາຄົດ ໂດຍອາໄສວິທີການທາງປະຫວັດສາດ.

ສະຫຼຸບແລ້ວຈາກຄວາມໝາຍຂອງປະຫວັດສາດທີ່ບັນດານັກວິຊາການໄດ້ກ່າວມາຂ້າງເທິງນັ້ນສາມາດສັງລວມໄດ້ໃນສອງປະເດັນຄື:

1) ປະຫວັດສາດ ຄືວິທະຍາສາດຂະແໜງການໜຶ່ງ ດ້ວຍເຫດນັ້ນປະຫວັດສາດຈຶ່ງມໝາຍເຖິງ ການສຶກສາຄົ້ນຄວ້າເພື່ອອະທິບາຍກ່ຽວກັບອະດີດຂອງສັງຄົມມະນຸດໃນຂອບເຂດ, ເວລາຂອງແຕ່ລະຍຸກແຕ່ລະສະໄໝ. ນອກຈາກນີ້ ປະຫວັດສາດຍັງເປັນແຫຼ່ງປະສົບການແຫ່ງວິທະຍາຄວາມຮູ້ທີ່ມະນຸດໃນອະດີດໄດ້ພາກພຽນ ແລະ ພະຍາຍາມສ້າງສັນມັນຂຶ້ນ ໂດຍທີ່ນັກປະຫວັດສາດໄດ້ດຳເນີນການສຶກສາຄົ້ນຄວ້າ, ວິເຄາະ, ຕີຄວາມໝາຍຈາກຫຼັກຖານຕ່າງໆຕະຫຼອດຮອດວິທີການໃຊ້ເຫດຜົນຄວາມເປັນຈິງ ເພື່ອຊ່ວຍໃຫ້ຄົນຮຸ່ນຫຼັງໄດ້ສຶກ ສາຮ່ຳຮຽນ ແລະ ໃຊ້ເປັນແນວທາງໃນການດຳລົງຊີວິດ.

2) ປະຫວັດສາດ ຄືວິຊາຄວາມຮູ້ທີ່ບັນທຶກເລື່ອງລາວ ແລະ ເຫດການຂອງໂລກ ແລະ ມະນຸດຕັ້ງແຕ່ອະດີດຈົນຮອດປະຈຸບັນ ຊຶ່ງສ່ວນໃຫຍ່ຈະກ່ຽວຂ້ອງກັບຄວາມເປັນມາຂອງໂລກ ແລະ ສັງຄົມໃນດ້ານຕ່າງໆ. ດ້ວຍເຫດນັ້ນ, ປະຫວັດສາດຈຶ່ງແບງອອກເປັນຫຼາຍຂະແໜງການເຊັ່ນ: ປະຫວັດສາດການປົກຄອງ, ປະຫວັດສາດເສດຖະກິດ, ປະຫວັດສາດວັດທະນາທຳ ແລະ ອື່ນໆ.

## 1.3 ຄວາມສຳຄັນ

ປະຫວັດສາດມີຄຸນຄ່າຄວາມສຳຄັນມະຫານສານໃນການສຶກສາ ແລະ ທຳຄວາມເຂົ້າໃຈກ່ຽວກັບອະດີດຂອງສັງຄົມມະນຸດ. ໃນປັດຈຸບັນນີ້ສັງຄົມໂລກສ່ວນໃຫຍ່ຍອມຮັບກັນວ່າການກະທຳໃດໆຫຼືການຕັດສິນໃຈໃດໆກໍຕາມທີ່ບໍ່ຍືນຢູ່ບົນພື້ນຖານປະຫວັດສາດແລ້ວມັກຈະຜິດພາດໄດ້ງ່າຍແລະນຳໄປສູ່ການປະພຶດທີ່ມີຜົນບໍ່ດີຕໍ່ກັບຕົນເອງກໍຄືສັງຄົມ. ຄວາມຈິງແລ້ວນັກປະຫວັດສາດກໍບໍ່ໄດ້ອ້າງຕົນວ່າເປັນຜູ້ແກ້ໄຂບັນຫາໄດ້ແຕ່ກໍສາມາດ

ແກ້ໄຂບັນຫາໃຫ້ມີປະສິດທິພາບດີຂຶ້ນກວ່າອັນທີ່ຄວນຈະເປັນຊຶ່ງມັນສອດຄ່ອງກັບຄໍາເວົ້າຂອງທ່ານເນຫຼູນັກປະຫວັດສາດຊາວອິນເດຍທີ່ໄດ້ກ່າວວ່າ: "ສຶກສາ ອະດີດ ເພື່ອຮູ້ປັດຈຸບັນ, ເຂົ້າໃຈປັດຈຸບັນ ເພື່ອພະຍາກອນອະນາຄົດ".

ອາດີດສາມາດໃຫ້ຂໍ້ມູນວ່າມະນຸດພວກເຮົາໄດ້ກະທໍາສິ່ງໃດໜຶ່ງມາແລ້ວ ຊຶ່ງຜົນການກະທໍາອັນນັ້ນມີທັງຜົນດີ ແລະ ຜົນລົບ. ດ້ວຍເຫດນັ້ນ, ອະດີດຈຶ່ງເປັນບົດຮຽນ ແລະ ແນວທາງປັດຈຸບັນຢ່າງມີຄຸນຄ່າ ຖ້າເຮົາໃຊ້ອາດີດໃຫ້ເປັນ ເພາະປະຫວັດສາດຄື ປະສົບການທີ່ສອງຖັດຈາກປະສົບການຈິງ ຫຼື ຊີວິດຈິງຂອງຜູ້ທີ່ສຶກສາປະຫວັດສາດ ຄວາມຮູ້, ຄວາມເຂົ້າໃຈປະຫວັດສາດມີອິດທິພົນຕໍ່ຄວາມຄິດ, ບຸກຄະລິກກະພາບ ແລະ ມີພະລັງພຽງພໍທີ່ ຈະປ່ຽນແປງມະນຸດໄດ້.

ປະຈຸບັນນີ້ ເຮົາຍອມຮັບວ່າ ຍັງມີບາງຄົນ, ບາງສັງຄົມມີຄວາມເຂົ້າໃຈຜິດກ່ຽວກັບປະຫວັດສາດ ແລະປະຕິເສດຄວາມສໍາຄັນຂອງປະຫວັດສາດ. ແຕ່ບັນຫາດັ່ງກ່າວນັ້ນ ກໍບໍ່ໄດ້ໝາຍຄວາມວ່າປະຫວັດສາດ ຈະໝົດຄວາມໝາຍຄວາມສໍາຄັນ ມັນເປັນພຽງແຕ່ຄົນເຫຼົ່ານັ້ນ, ສັງຄົມນັ້ນໆບໍ່ຮູ້ຈັກ ຫຼື ບໍ່ເຂົ້າໃຈ ແລະ ໃຊ້ປະໂຫຍດຈາກປະຫວັດສາດຕ່າງຫາກ, ສັງລວມແລ້ວ ປະຫວັດສາດມີຄວາມສໍາຄັນດັ່ງນີ້:

1) ປະຫວັດສາດ ສອນໃຫ້ຄົນເຮົາຮູ້ວິທີການທີ່ຈະເຂົ້າໃຈສິ່ງແວດລ້ອມທາງສັງຄົມຢ່າງມີປະສິດທິພາບ.

ການທີ່ມະນຸດທີ່ຈະດໍາເນີນການສິ່ງໃດໜຶ່ງ ກ່ອນອື່ນຕ້ອງເຂົ້າໃຈສິ່ງແວດລ້ອມຕົນເອງ, ສິ່ງແວດລ້ອມນັ້ນມີສອງຢ່າງຄື ສິ່ງແວດລ້ອມທັງສັງຄົມ ແລະ ສິ່ງແວດລ້ອມທາງທໍາມະຊາດ. ສິ່ງແວດລ້ອມທາງສັງຄົມ ໝາຍເຖິງທຸກສິ່ງທຸກຢ່າງທີ່ມະນຸດສ້າງຂຶ້ນເພື່ອຜົນປະໂຫຍດຂອງການດໍາລົງຄົງຢູ່ຂອງຕົນກໍຄືສັງຄົມ. ວິທີທີ່ຈະໃຫ້ຄົນເຂົ້າໃຈສິ່ງແວດລ້ອມທາງສັງຄົມໄດ້ກໍຄືການຮູ້ຈັກທີ່ມາ ແລະ ພັດທະນາການຂອງສິ່ງນັ້ນໆ. ການເຂົ້າໃຈສິ່ງໃດສິ່ງໜຶ່ງໂດຍການສຶກສາການກໍາເນີດ ແລະ ພັດທະນາການຂອງມັນ ເອີ້ນວ່າ ການເຂົ້າສູ່ບັນຫາດ້ວຍປະຫວັດສາດອັນເປັນວິທີການທີ່ຄົນເຮົາໃຊ້ກັນເປັນປົກກະຕິໃນຊີວິດປະຈໍາວັນ ແລະ ໃນວິຊາການຢ່າງເປັນປະຈໍາ.

2) ປະຫວັດສາດສອນໃຫ້ຄົນເຮົາຮູ້ຈັກຕົນເອງ ແລະ ຄວາມເປັນຕົນຂອງຕົນເອງການເຂົ້າສູ່ບັນຫາປະຫວັດສາດ ບໍ່ພຽງແຕ່ຈະເຂົ້າໃຈສິ່ງແວດລ້ອມທາງສັງຄົມເທົ່ານັ້ນ, ແຕ່ມະນຸດເຮົາຍັງຈະຕ້ອງເຂົ້າໃຈຕົນເອງອີກດ້ວຍວ່າ ຕົນເອງສາມາດເຮັດຫຍັງໄດ້ແດ່ ແລະ ບໍ່ສາມາດເຮັດຫຍັງໄດ້ ແລະ ພາຍ ໃຕ້ເງື່ອນໄຂອັນໃດ? ການຮູ້ຈັກສ່ວນທີ່ເປັນພະລັງ ແລະ ຄວາມອ່ອນແອຂອງຕົນເອງນີ້ ຄືຄວາມຮູ້ທີ່ໄດ້ຈາກການສຶກສາຕົນເອງ. ຄວາມຮູ້ທີ່ໄດ້ຈາກການສຶກສາຕົນເອງຈະເຮັດໃຫ້ມະນຸດເຮົາຮູ້ຈັກຄວາມເປັນຕົນຂອງຕົນເອງຫຼາຍຂຶ້ນຄື ຈະບໍ່ຍອມຫຼົງເຊື່ອໃນສິ່ງໃດງ່າຍໆທີ່ປາສະຈາກເຫດຜົນ. ນອກຈາກນີ້ ຍັງເຮັດໃຫ້ເຮົາເປັນຄົນມີ ນໍ້າໃຈກວ້າງຂວາງ, ຍອມຮັບຟັງຄວາມຄິດເຫັນຂອງຄົນອື່ນ ແລ້ວນໍາມາວິເຄາະວິດ້ວຍສະຕິປັນຍາຂອງຕົນຢ່າງມີ ເຫດຜົນ. ເວົ້າລວມແລ້ວ ການຮູ້ຈັກຄວາມເປັນຕົນເອງນັ້ນຄື ການຮູ້ຈັກຮັບຜິດຊອບ, ການໃຫ້ກຽດຄົນອື່ນ ແລະ ການນັບຖືຕົນເອງ.

3) ປະຫວັດສາດສອນໃຫ້ຄົນເຮົາຮູ້ວິທີການຄິດທີ່ມີເຫດຜົນ ແລະ ວາງຢູ່ບົນຄວາມຈິງການສຶກສາປະຫວັດສາດຕ້ອງການເສລີພາບໃນຄວາມຄິດ ແຕ່ຄວາມຄິດນັ້ນຕ້ອງວາງຢູ່ບົນພື້ນຖານຂອງຄວາມມີເຫດຜົນ. ດັ່ງນັ້ນ ການສຶກສາປະຫວັດສາດຈຶ່ງວາງກົນລະຍຸດການສຶກສາ ໂດຍຍຶດຖືເຫດຜົນເປັນຫຼັກສໍາຄັນຄືການຮູ້ຈັກການກວດສອບ ແລະ ວັດຄ່ານໍ້າໜັກຄວາມເຊື່ອຖືຂອງຫຼັກຖານທີ່ສາມາດພິສູດ ແລະ ອະ ທິບາຍໃຫ້ເຂົ້າໃຈໄດ້.

ສະຫຼຸບແລ້ວປະຫວັດສາດເປັນວິທະຍາສາດຂະແໜງການໜຶ່ງທີ່ສໍາຄັນໃນການສຶກສາປະສົບການຂອງມະນຸດໄດ້ດີເທົ່າກັບວິທະຍາສາດສາຂາອື່ນໆເພາະປະຫວັດສາດເປັນເລື່ອງທີ່ກ່ຽວຂ້ອງກັບການກະທໍາຂອງ

ມະນຸດຕາມກາລະເວລາ. ດ້ວຍເຫດນັ້ນ, ປະຫວັດສາດຈຶ່ງເປັນແຫຼ່ງປະສົບການທີ່ມີຄຸນຄ່າຊ່ວຍໃຫ້ຄົນເຮົາຮູ້, ເຂົ້າໃຈຈະແຈ້ງເຖິງທຳມະຊາດ ແລະ ຂອບເຂດຈຳຈັດຂອງມະນຸດ. ນອກຈາກນັ້ນ ຍັງນຳໃຊ້ປະສົບການເຫຼົ່ານັ້ນມາພັດທະນາຊີວິດ - ສັງຄົມ ໃຫ້ໄປສູ່ອະນາຄົດທີ່ດີກວ່າ.

## 2. ພັດທະນາການກ່ຽວກັບການບັນທຶກປະຫັວດສາດລາວ

ລາວເປັນຊາດໜຶ່ງທີ່ມີປະຫວັດຄວາມມາອັນຍາວນານ ຕັ້ງແຕ່ສະໄໝດຶກດຳບັນຈົນເຖິງປັດຈຸບັນ. ໂດຍຜ່ານຂະບວນວິວັດອັນຍາວນານນັ້ນມີຫຼາຍເຫດການທີ່ເກີດຂຶ້ນນັ້ນສ້າງຄວາມສັບສົນໃຫ້ແກ່ການສຶກສາແລະຍາກຈະທີ່ຈະຫາຄຳຕອບເນື່ອງຈາກຂໍ້ມູນມີທີ່ມາທີ່ໄປແຕກຕ່າງກັນໃນທາງເຫດຜົນ ແລະ ວິທີການບັນທຶກກໍມີການແຊກຊ້ອນບັນຈຸເນື້ອໃນເພື່ອຮັບໃຊ້ຈຸດປະສົງໃນລັກສະນະທີ່ແຕກຕ່າງກັນ. ເທົ່າທີ່ມີຂໍ້ມູນຫຼັກຖານໃນປັດຈຸບັນກ່ຽວກັບການຂຽນປະຫວັດສາດລາວນັ້ນພົບວ່າມີການຂຽນຢູ່ໃນ 3 ລັກສະນະຄື:

1) ການຂຽນປະຫວັດໃນລັກສະນະຂອງ "ພື້ນ ຫຼື ຕຳນານ"

ການຂຽນປະຫວັດສາດໃນລັກສະນະແບບນີ້ ເທົ່າທີ່ສຶກສາພົບວ່າ ເປັນການບັນທຶກເຫດການປະຫວັດສາດຂອງອະດີດທີ່ເກົ່າແກ່ທີ່ສຸດເທົ່າທີ່ພົບໃນລາວ. ການຂຽນຕຳນານ ສ່ວນໃຫຍ່ບັນທຶກໃສ່ໃບລານເປັນຕົວອັກສອນເດີມ, ອັກສອນບາລີ ຫຼື ຕົວທຳ ຊຶ່ງຄົນລາວເອີ້ນວ່າ: "ໜັງສືຜູກໃບລານ". ຮູບແບບການຂຽນມີລັກສະນະແຊກເນື້ອໃນເຫດການປະຫວັດສາດເຂົ້າກັບເລື່ອງໄສຍະສາດ (ນິທານປະລຳປະລາ) ແລະ ພຸດທະສາດສະໜາ ເຊັ່ນ: ຕຳນານຂຸນບູລົມ[1], ຕຳນານພຣະແກ້ວມໍຣະກົດ, ຕຳນານພະບາງ, ຕຳນານເມືອງວຽງຈັນ ແລະ ອື່ນໆ.

2) ການຂຽນປະຫວັດສາດໃນລັກສະນະຂອງ "ພົງສາວະດານ".

ການຂຽນປະຫວັດສາດໃນລັກສະນະແບບນີ້ ເທົ່າທີ່ສຶກສາພົບວ່າເປັນການບັນທຶກເຫດການປະຫວັດສາດຂອງອະດີດໃນລັກສະນະການຂຽນຍຶດຖືເອົາຮຽງລຳດັບວັນເດືອນປີກຳກັບຄັກແນ່. ເນື້ອໃນສ່ວນໃຫຍ່ທີ່ຂຽນໃນພົງສະວະດານຍຶດເອົາເປັນເລື່ອງຂອງກະສັດຜູ້ປົກຄອງ ແລະ ລາຊະວົງເປັນຫຼັກ ເຊັ່ນ: ເຫດການກ່ຽວກັບພາລະກິດການເຄື່ອນໄຫວຂອງກະສັດ, ລະບຽບແບບແຜນການປົກຄອງເມືອງ ແລະ ການຕິດຕໍ່ສຳພັນກັບຕ່າງແດນ. ແຫຼ່ງຂໍ້ມູນທີ່ນຳໃຊ້ແມ່ນໄດ້ມາຈາກເລື່ອງບອກເລົ່າ, ສີລາຈາລຶກ, ຕຳນານ, ຈົດໝາຍ… ຜົນງານສຳຄັນຂອງປະຫວັດສາດແບບນີ້ໄດ້ແກ່: ພົງສະວະດານລ້ານຊ້າງ, ພົງສາວະດານເມືອງພວນ, ພົງສະວະດານເມືອງຫຼວງພະບາງແລະອື່ນໆ.

3) ການຂຽນປະຫວັດສາດໃນທາງວິທະຍາປະຫວັດສາດ:

ເປັນການຂຽນປະຫວັດສາດໃນລັກສະນະ ທີ່ອາໄສການເຊື່ອມໂຍງລະຫວ່າງຫຼັກຖານຂໍ້ມູນຕ່າງໆເພື່ອອະທິບາຍເລື່ອງລາວຄວາມເປັນມາໃນອະດີດ ເຊັ່ນ: ໃຊ້ການບອກເລົ່າ ແລະ ໃຊ້ການອ້າງເຫດອ້າງຜົນດ້ວຍການອີງຫຼັກຖານໃສ່ກັບກົດ ຫຼື ທິດສະດີທາງສັງຄົມສາດ, ພິຈາລະນາຮຽບຮຽງຕາມລຳດັບເວລາເພື່ອໃຫ້ສອດຄ່ອງເປັນອັນໜຶ່ງອັນດຽວກັນຢ່າງມີເຫດຜົນ. ໃນນັ້ນສິ່ງສຳຄັນທີ່ສຸດໃນການຂຽນປະຫວັດສາດໃນລັກສະນະແບບນີ້ຄືຕ້ອງຫຼີກລຽງ "ອະຄະຕິ" ໃຫ້ຫຼາຍທີ່ສຸດ ຈຶ່ງຈະສາມາດອະທິບາຍເຫດການໃນອະດີດ ຕາມຄວາມເປັນຈິງ ຫຼື ຢ່າງນ້ອຍກໍໃກ້ຄຽງຄວາມເປັນຈິງ.

ມາຮອດບັນຈຸບັນນີ້ ການຂຽນປະຫວັດສາດໃນປະເທດລາວພັດທະນາການຂຽນອອກມາໃນຫຼາຍລັກສະນະ ນອກຈາກປະຫວັດສາດລະດັບສາດແລ້ວຍັງມີ ປະຫວັດສາດກ່ຽວກັບປະຫວັດຂອງບຸກຄົນ, ປະຫວັດ

ສາດທ້ອງຖິ່ນ, ປະຫວັດສາດເສດຖະກິດ, ປະຫວັດສາດການເມືອງ - ການປົກຄອງ, ປະຫວັດສາດກອງທັບປະຫວັດສາດພັກ ແລະ ອື່ນໆ.

## 3. ສັກກະລາດທີ່ນຳໃຊ້ການຂຽນປະຫວັດສາດລາວ

ລາວເປັນຊາດໜຶ່ງທີ່ມີປະຫວັດສາດອັນຍາວນານ ອີງຕາມຂໍ້ມູນທາງປະຫວັດສາດລາວຈະພົບວ່າ ມີການນຳໃຊ້ສັກກະລາດມາບັນທຶກເຫດການທາງປະຫວັດສາດຢູ່ໃນຫຼາຍຮູບແບບເຊັ່ນ: ພຸດທະສັກກະລາດ, ຈຸນລະສັກກະລາດ ແລະ ຄຣິດຕະສັກກະລາດ.

**ພຸດທະສັກກະລາດ**

ເປັນການນັບສັກກະລາດທາງພຸດທະສາສະໜາແລະມີການນຳໃຊ້ຫຼາຍປະເທດໂດຍສະເພາະປະເທດທີ່ນັບຖືສາດສະໜາພຸດ. ສຳລັບປະເທດລາວມີການນຳໃຊ້ໃນຍຸກອານາຈັກລາວລ້ານຊ້າງສະໄໝຊຽງທອງໃນລາຊະການພະເຈົ້າວິຊຸນນະລາດ. ການກຳເນີດພຸດທະສັກກະລາດນີ້ກຳນົດເອົາເມື່ອພະພຸດທະເຈົ້າປະລິນິພານເປັນການຕັ້ງຕົ້ນພຸດທະສັກກະລາດຫຼືພຸດທະສັງກາດທີ 1 ຊຶ່ງນິຍົມຂຽນຫຍໍ້ວ່າ "ພສ 1". ພຸດທະສັກກະລາດເກີດກ່ອນຄຣິດຕະສັກກະລາດ 543 ປີ.

**ຈຸນລະສັກກະລາດ**

ໝາຍເຖິງການນັບສັກກະລາດຕາມກະສັດຂອງພະມ້າໃນສະໄໝອານາຈັກພູກາມທີ່ໄດ້ປະກາດໃຊ້ໃນປີພສ 1181. ຈຸນລະສັກກະລາດເກີດຕາມຫຼັງພຸດທະສັກກະລາດ 1181 ປີແລະແລະຖືກນຳເຂົ້າໃຊ້ໃນອານາຈັກລາວລ້ານຊ້າງໂດຍຜ່ານການແຜ່ຜາຍເຂົ້າມາທາງອານາຈັກລ້ານນາ.

**ຄຣິດຕະສັກກະລາດ**

ເປັນການນັບສັກກະລາດຕາມທາງສາດສະໜາຄຣິດໂດຍກຳນົດເອົາແຕ່ສະໄໝພະເຍຊູເກີດເປັນການຕັ້ງຕົ້ນຄຣິດຕະສັກກະລາດທີ 1 ຫຼືຄສ 1. ສ່ວນໃນຊ່ວງກ່ອນພະເຍຊູເກີດເອີ້ນວ່າກ່ອນຄຣິດຕະສັກກະລາດຫຼືກ່ອນຄສ (BF = Before Common Era). ຄຣິດຕະສັກກະລາດກຳເນີດຕາມຫຼັງພຸດທະສັກກະລາດ 543 ປີ ແລະ ເກີດກ່ອນຈຸນລະສັກກະລາດ 638 ປີ. ການທຽບຄຣິດຕະສັກກະລາດ ເປັນພຸດທະສັກກະລາດໃຫ້ບວກ 543 ເຮົາຈະໄດ້ ພສ ທີ່ຖືກຕ້ອງ.

## 4. ຫຼັກຖານທີ່ໃຊ້ປະກອບການສຶກສາປະຫວັດສາດລາວ

ໃນປະຫວັດສາດລາວຍັງມີຫຼາຍບັນຫາທີ່ຜູ້ສຶກສາແລະນັກຄົ້ນຄວ້າຫຼາຍທ່ານຕ້ອງການຮູ້ຂໍ້ມູນຄວາມຈິງແຕ່ຊອກຫາຄຳຕອບໄດ້ຍາກ. ສາເຫດມາຈາກການມີຫຼັກຖານແລະຂໍ້ມູນທາງປະຫວັດສາດມີໜ້ອຍແລະບໍ່ຄົບຖ້ວນຊຶ່ງມີສາເຫດມາຈາກຫຼັກຖານດັ່ງກ່າວໄດ້ຖືກທຳລາຍໄປໃນຍາມເສິກສົງຄາມ, ກຸ່ມຄົນຊາດອື່ນເກັບກອດເອົາໄປແລະບາງຫຼັກຖານມີການປົກປັກຮັກສາບໍ່ຖືກວິທີຈຶ່ງມີການສູນຫາຍໄປຕາມກາລະເວລາ. ເຖິງຢ່າງໃດກໍຕາມເຮົາກໍຍັງມີຫຼັກຖານພໍທີ່ຈະນຳມາສຶກສາແລະເປັນຂໍ້ມູນຄົ້ນຄວ້າປະຫວັດສາດຊາດສົມທົບກັບຂໍ້ມູນຫຼັກຖານຂອງຊາດຕ່າງດາວທີ່ບັນທຶກ. ຫຼັກຖານທີ່ນຳມາປະກອບການສຶກສາຄົ້ນຄວ້າປະຫວັດສາດລາວປະກອບມີດັ່ງນີ້:

### 4.1 ຫຼັກຖານທີ່ມີການບັກທຶກ (Written Records)

ຫຼັກຖານປະເພດນີ້ ໝາຍເຖິງຫຼັກຖານທີ່ມີການບັນທຶກເປັນລາຍລັກອັກສອນໃສ່ແຜນຫີນ, ໃບລານ, ແຜ່ນແພ ແລະ ເຈ້ຍເປັນຕົ້ນຊຶ່ງປະກອບມີ: ສີລາຈາຣຶກ, ຈົດໝາຍເຫດ, ພົງສາວະດານ, ບັນທຶກຄວາມຊົງຈຳ

ຕ່າງໆ ແລະ ອື່ນໆ. ຫຼັກຖານດັ່ງກ່າວນີ້ປະກົດຕົວຂຶ້ນ ເມື່ອມະນຸດປະດິດຕົວອັກສອນຂຶ້ນມາໃຊ້ ແລະ ຮູ້ຈັກຂຽນໜັງສືແລ້ວ.

**4.2 ຫຼັກຖານປະເທດວັດຖຸ (Material Remains)**

ຫຼັກຖານປະເພດນີ້ໄດແກ່: ສາກວັດສະດຸສິ່ງຂອງທີ່ຍັງເຫຼືອຕົກຄ້າງມາຮອດປັດຈຸບັນຊຶ່ງປະກອບມີຊາກຂອງສິ່ງທີ່ມີຊີວິດທີ່ເອີ້ນວ່າ: "Fossil" ໃນອາດິດທີ່ຕົກເຫຼືອຍັງຄ້າງຢູ່ໃນຊັ້ນດິນປະເພດດິນປະເພດຕ່າງໆເຊັ່ນ: ຊາກໂຄງກະດູກຂອງມະນຸດ, ສັດແລະພືດ. ຊາກບູຮານສະຖານ, ບູຮານວັດຖຸຊຶ່ງໄດ້ແກ່ສິ່ງທີ່ມະນຸດທີ່ເຮົາປະດິດຂຶ້ນມາໃນອະດີດທີ່ເປັນຫຼັກຖານສຳຄັນ ຊ່ວຍໃຫ້ເຮົາຮູ້ຂໍ້ມູນຄວາມຈິງກ່ຽວກັບວິຖີການດຳລົງຊີວິດ, ຄວາມເຊື່ອຖື ຕະຫຼອດຮອດຂະນົບທຳນຽມປະເພນີບາງຢ່າງ ຂອງມະນຸດໃນສະໄໝບູຮານ ໂດຍອາໄສການກວດ ສອບ, ຕີລາຄາ ຈາກນັກບູຮານຄະດີ.

**4.3 ຫຼັກຖານປະເພດຄຳບອກເລົ່າ (Oral Sources)**

ຫຼັກຖານປະເພດນີ້ ໝາຍເຖິງຫຼັກຖານທີ່ມີການບອກເລົ່າສືບທອດຕໍ່ກັນມາໃນອາດິດໄດ້ແກ່: ຕຳນານ, ນິທານ ແລະ ເລື່ອງເລົ່າຕ່າງໆກ່ຽວກັບຂະນົບທຳນຽມປະເພນີລວມທັງຫຼັກຖານທີ່ໃຫ້ຂໍ້ມູນຄວາມຈິງຈາກການສຳພາດບອກເລົ່າຂອງຜູ້ທີ່ຮ່ວມຮູ້ ແລະ ເຫັນເຫດການ.

## 5. ການຈັດແບ່ງຍຸກສະໄໝຂອງປະຫວັດສາດລາວ

ໂດຍທົ່ວໄປແລ້ວ ການແບ່ງຍຸກສະໄໝປະຫວັດສາດຈະມີຄວາມແຕກຕ່າງກັນທາງດ້ານກາລະເວລາ, ຊຶ່ງນັກປະຫວັດສາດແຕ່ລະກຸ່ມຕ່າງກໍມີເຫດຜົນຂອງໃຜລາວ. ສະເພາະປະຫວັດສາດລາວເຖິງແມ່ນວ່າ ຍັງບໍ່ທັນມີຄວາມເປັນເອກະພາບກັນໃນດ້ານການກຳນົດ ແຕ່ໂດຍທົ່ວໄປເພິ່ນໄດ້ກຳນົດການແບ່ງໄລຍະປະຫວັດສາດໄວ້ດັ່ງນີ້:

- ສະໄໝບູຮານ ນັບຕັ້ງແຕ່ປາກົດມີມະນຸດອາໃສແຜນດິນລາວ ຈົນຮອດປີ ຄສ 1353 ຊຶ່ງເປັນປີທີ່ພະເຈົ້າຟ້າງຸ່ມຂຶ້ນຄອງລາດທີ່ນະຄອນຊຽງທອງ.
- ສະໄໝກາງ ນັບຕັ້ງແຕ່ປີ ຄສ 1353 ຈົນຮອດປີ ຄສ 1893 ຊຶ່ງເລີ່ມນັບເອົາແຕ່ບັນດາຫົວເມືອງຂຶ້ນລາວບູຮານຖືກເຕົ້າໂຮມເຂົ້າ ກັນເປັນອານາຈັກລ້ານຊ້າງເອກະພາບ ຈົນຮອດປີທີ່ດິນແດນລາວຖືກຕັດແບ່ງອອກເປັນສອງສ່ວນຄື ດິນແດນ ຝັ່ງຊ້າຍຢູ່ພາຍໃຕ້ການປົກຄອງຂອງຝຣັ່ງ ແລະ ດິນແດນຝັ່ງຂວາຂຶ້ນກັບສັກດີນາສະຫຍາມ ໃນນັ້ນຍົກເວັ້ນສອງ ແຂວງໄຊຍະບູລີ ແລະ ຈຳປາສັກທີ່ຂຶ້ນກັບລາວໃນປີ ຄສ 1904.
- ສະໄໝໃໝ່ ນັບຕັ້ງແຕ່ປີ ຄສ 1893 ຈົນຮອດປີ ຄສ 1975 ຊຶ່ງເປັນປີທີ່ປະເທດລາວໄດ້ສຳເລັດໃນພາລະກິດການຕໍ່ສູ້ປົດປ່ອຍຊາດ ແລ້ວສະຖາປະນາປະເທດເປັນ ສາທາລະນະ ປະຊາທິປະໄຕ ປະຊາຊົນລາວ.
- ສະໄໝປະຈຸບັນ ນັບຕັ້ງແຕ່ປີ ຄສ 1975 ຈົນມາຮອດປັດຈຸບັນ.

# ບົດທີ 2
# ຄວາມເປັນມາຂອງຊາດລາວ

## 1. ທີ່ມາ ແລະ ຄວາມໝາຍຂອງຄຳວ່າ ລາວ

ສຳລັບຄຳວ່າ "ລາວ" ນັ້ນ ມີນັກວິຊາການຫຼາຍທ່ານໄດ້ອະທິບາຍ ແລະ ໃຫ້ທັດສະນະໄວ້ແຕກຕ່າງກັນ ເຊັ່ນ:

**1) ລາວຸ**

ຄຳວ່າ "ລາວ" ມາຈາກຄຳໃນພາສາບາລີວ່າ "ລາວຸ" ທີ່ມີຄວາມໝາຍໃນພາສາລາວວ່າ ໝາກນໍ້າເຕົ້າ. ການທີ່ຄຳວ່າ "ລາວ" ກ່ຽວຂ້ອງກັບໝາກນໍ້າເຕົ້ານີ້ ກໍເພາະວ່ານັກປາດຂອງລາວບູຮານໄດ້ເວົ້າວ່າ ຄົນລາວເກີດມາຈາກໝາກນໍ້າເຕົ້າປຸງ ຊຶ່ງເປັນນະໂຍບາຍທາງການເມືອງຂອງຂຸນບູລົມ ທີ່ມີຈຸດປະສົງເພື່ອ ໃຫ້ກຸ່ມຄົນໄທລາວມີຄວາມສາມັກຄີຮັກແພງກັນ[2].

**2) ລົວະ ຫຼື ລະວ້າ**

ຄຳວ່າ "ລາວ" ມາຈາກຄຳວ່າ "ລົວະ ຫຼື ລະວ້າ" ຊຶ່ງເປັນຊື່ຂອງກຸ່ມຄົນພື້ນເມືອງເດີມທີ່ອາໄສຢູ່ດິນແດນ ແຫ່ງນີ້ມາກ່ອນ[3] ຕໍ່ມາເມື່ອຊົນຊາດອ້າຍລາວເຄື່ອນຍ້າຍເຂົ້າມາຢູ່ປະປົນກັບກຸ່ມຄົນພວກນີ້ ກໍຮຽກເອີ້ນຄົນພວກນີ້ວ່າ ລາວ.

**3) ຫຼົ້ງ, ລີ, ລຸງ, ລວງ**

ຄຳວ່າ "ລາວ"ມາຈາກຄຳວ່າ "ຫຼົ້ງ, ລີ, ລຸງ, ລວງ" ຕໍ່ມາໄດ້ປ່ຽນເປັນລາວ[4].

**4) ດາວ**

ນັກປາດບາງທ່ານມີຄວາມຄິດເຫັນວ່າຄຳວ່າ "ລາວ" ມາຈາກຄຳວ່າ "ດາວ" ທີ່ມີຄວາມໝາຍວ່າ ຈະເລີນ, ສູງ... ຊຶ່ງຄຳຄຳນີ້ສັນນິຖານວ່າຄົນຈີນເປັນຜູ້ເອີ້ນຊື່ໃຫ້ຄົນກຸ່ມໜຶ່ງທີ່ດຳລົງຊີວິດໃນດິນແດນຈີນ ແຕ່ເນື່ອງຈາກວ່າ ຜັນສຽງຕົວ "ດ" ບໍ່ຊັດເຈນຈຶ່ງອອກເປັນສຽງຕົວ "ລ". ດັ່ງນັ້ນ ຄຳວ່າ "ອ້າຍດາວ" ຈຶ່ງກາຍເປັນ "ອ້າຍລາວ"[5].

ສະຫຼຸບແລ້ວ ເຖິງແມ່ນວ່າ ຈະມີນັກວິຊາການຫຼາຍທ່ານໃຫ້ທີ່ມາຂອງຄຳວ່າລາວ "ລາວ"ໄວ້ໃນຫຼາຍໆເຫດຜົນກໍຕາມ ແຕ່ຫາກພິຈາລະນາດ້ວຍເຫດຜົນແລ້ວ "ລາວ" ນັ້ນຄົງມາຈາກຄວາມໝາຍທີ່ສະແດງເຖິງຄວາມເຄົາລົບນັບຖື ແລະ ຍົກຍ້ອງ ດ້ວຍເຫດ ແລະ ຜົນ ດັ່ງນີ້:

ກ. ພິຈາລະນາຈາກຕຳນານ ໄທ - ລາວ ແລ້ວ ຄຳວ່າ "ລາວ" ຈະມີຄວາມໝາຍໃນທາງຍົກຍ້ອງຢ່າງສູງສົ່ງເຖິງຜູ້ເປັນໃຫຍ່ ແລະ ມີຖິ່ນຖານຢູ່ບໍລິເວນສອງຟາກຝັ່ງແມ່ນໍ້າຂອງຄືລາວ ແລະ ຕາເວັນອອກສຽງເໜືອຂອງໄທໃນປັດຈຸບັນນີ້ ເຊັ່ນ:

- ໃນຕຳນານ ສິງຫານຸວັນ (ສະບັບຂອງມານິດ ວັດລີໂພດົມ ທີ່ຄະນະກຳມະການຈັດພິມເອກະສານທາງປະຫວັດສາດ ສຳນັກນາຍົກລັດຖະມົນຕີ ປະເທດໄທ ພິມເຜີຍແຜ່ ໃນປີ ຄສ 1973) ໄດ້ບອກວ່າ ຫົວໜ້າຄົນ ພື້ນເມືອງທີ່ອາໄສຢູ່ໃນດິນແດນສອງຟາກຝັ່ງແມ່ນໍ້າຂອງທາງພາກເໜືອຂອງປະເທດລາວ ແລະ ໄທໃນປັດຈຸບັນ ນີ້ມີຊື່ວ່າ "ລາວກະຍູ" ເມື່ອສິ້ນລາວກະຍູ ກໍແມ່ນ "ປູ່ເຈົ້າລາວຈົກ[6]" ສືບທອດເປັນຫົວໜ້າຄົນພື້ນເມືອງ.

- ຕຳນານເມືອງຊຽງໃໝ່ ແລະ ຕຳນານເມືອງພະເຢົາ ຕ່າງກໍໄດ້ກ່າວເຖິງຄຳວ່າ "ລາວ" ໂດຍສະເພາະ "ປູ່ເຈົ້າລາວຈົກ" ວ່າເປັນຕົ້ນຕະກຸນຂອງກຸ່ມຄົນລາວໃນພາກເໜືອແລ້ວສືບທອດລູກຫຼານ ເຊັ່ນ: ຕຳນານຊຽງໃ

ໜ່ ເລີ່ມຈາກ ປູ່ເຈົ້າລາວຈິກ, ລາວເກົ້າແກ້ວ ຈົນມາຮອດລາວເມັງ ຊຶ່ງລູກຊາຍຂອງລາວເມັງຄົນໜຶ່ງຊື່ວ່າ ມັງຣາຍ ໄດ້ສ້າງເມືອງ ຊຽງໃໝ່ຂຶ້ນ ແລ້ວເອີ້ນຕົນເອງວ່າ "ພະຍາມັງຣາຍ". ສ່ວນໃນຕຳນານພະເຢົານັ້ນກໍບອກວ່າ ປູ່ເຈົ້າ ລາວຈິກເປັນຕົ້ນຕະກຸນ ແລ້ວສືບລູກຫຼານຈາກລາວເກົ້າແກ້ວ ຈົນມາຮອດຂຸນເງິນ ແລ້ວລູກຂຸນເງິນຊື່ວ່າ ຂຸນຈອມທຳ ໄດ້ໄປສ້າງຕັ້ງພະເຢົາ ຈາກນັ້ນລູກຊາຍຂອງຂຸນຈອມທຳຊື່ວ່າ ຂຸນເຈືອງໄດ້ປົກຄອງສືບຕໍ່ມາ.

- ຕຳນານຂອງລາວເອີ້ນ "ຂຸນເຈືອງ" ວ່າຕຳນານທ້າວຮຸ່ງທ້າວເຈືອງຊຶ່ງໄດ້ຂຽນໄວ້ຢ່າງຊັດເຈນໃນວັນນະຄະດີເອກຂອງລາວລ້ານຊ້າງ. ແຕ່ຄຳນີ້ໃນພາສາຂອງກຸ່ມຄົນໄຕລື້ສືບສອງສອງພັນນາຂອງຈີນເອີ້ນວ່າ "ພະຍາເຈິງ" ແລະໃນຕຳນານຊຽງໃໝ່ເອີ້ນວ່າ "ລາວເຈິງ"[7].

ດ້ວຍເຫດນັ້ນ, ກຸ່ມຄົນທີ່ອາໄສຢູ່ລ້ານນາແລະລ້ານຊ້າງຈຶ່ງໄດ້ຊື່ວ່າເປັນ "ຄົນລາວ" ຕາມຊື່ "ລາວເຈືອງ" ທີ່ສືບເນື່ອງມາຈາກຕະກຸນລາວຂອງປູ່ເຈົ້າລາວຈິກຄືດັ່ງປະກົດການຢູ່ໃນພົງສາວະດານເມືອງເງິນຢາງຊຽງແສນ (ພົງສາວະດານເມືອງນາຍົກສະບັບປີ 1964: 238) ວ່າ "ແຕ່ນັ້ນມາເມືອງຍອນລ້ານນາແລະເມືອງລ້ານຊ້າງທັງສອງເມືອງນີ້ຈຶ່ງເອີ້ນວ່າລາວ".

ຂພິຈາລະນາຈາກ "ຄຳສັບພະນາມ" ຊຶ່ງໃຊ້ເປັນຄຳຮຽກເອີ້ນບູລຸດທີສາມໃນພາສາລາວຊຶ່ງມີທັງຄຳທີ່ສຸພາບແລະທຳມະດາ. ໃນນັ້ນ ຄຳວ່າ "ລາວ" ຊຶ່ງໃນປັດຈຸບັນກໍເປັນຄຳສັບພະນາມບູລຸດທີສາມ ທີ່ສະແດງເຖິງຄວາມເຄົາລົບນັບຖືໃນຖານະຄວາມຮັກແພງຊຶ່ງມີຄວາມໝາຍຄ້າຍຄືກັນກັບຄຳວ່າ "ທ່ານ" ເຊັ່ນ: "ລາວບອກວ່າມື້ອື່ນຈະມາ" ນີ້ກໍສະແດງວ່າ "ທ່ານບອກວ່າມື້ອື່ນທ່ານຈະມາ".

ດັ່ງນັ້ນ, ດ້ວຍເຫດທີ່ຄຳວ່າ "ລາວ" ໃນອະດີດມີຄວາມໝາຍສູງສົ່ງແລະມີຖານັນດອນເປັນ "ຜູ້ໃຫຍ່ຫຼືເຈົ້ານາຍ" ຊຶ່ງສະແດງອອກໃນທາງຍົກຍ້ອງແລະເຄົາລົບນັບຖືເທົ່າທີ່ມີຮ່ອງຮອຍຫຼັກຖານປາກົດໃນຕຳນານນີ້ຈຶ່ງເຮັດໃຫ້ກຸ່ມຄົນທີ່ດຳລົງຊີວິດໃນສອງຝັ່ງແມ່ນ້ຳຂອງໄດ້ນຳມາເປັນຊື່ຮຽກເອີ້ນຕົນເອງວ່າ "ລາວ" ກໍຄືຄົນລາວແລະກໍເອີ້ນປະເທດຕົນເອງໃນຕໍ່ມາວ່າ "ປະເທດລາວ" ຈົນມາຮອດປັດຈຸບັນ.

## 2. ຖິ່ນກຳເນີດຊາດລາວ

ຜົນການສຶກສາ ແລະ ຈາກການສຳຫຼວດເອກະສານຕ່າງໆຂອງນັກວິຊາການ ທີ່ຄົ້ນຄວ້າກ່ຽວກັບຖິ່ນກຳເນີດຂອງກຸ່ມຄົນລາວນັ້ນພົບວ່າ ມີຫຼາຍກະແສແນວຄິດທີ່ແຕກຕ່າງກັນ, ໂດຍພື້ນຖານແລ້ວມີ 4 ກະແສແນວຄິດໃຫຍ່ໆ ເຊັ່ນ:

### 2.1 ແນວຄວາມຄິດທີ່ໜຶ່ງ: ແນວຄິດ ອານໄຕ

ນັກວິຊາການກຸ່ມນີ້ຊື່ວ່າ "ດິນແດນທີ່ເປັນບໍລິເວນປະເທດລາວ ໃນຈຸບັນບໍ່ແມ່ນຖິ່ນຖານກຳເນີດຂອງກຸ່ມຄົນຕະກຸນໄທລາວ. ຖິ່ນກຳເນີດຂອງກຸ່ມຄົນໄທລາວຢູ່ດິນແດນບໍລິເວນສາຍພູອານໄຕ". ກຸ່ມຄົນນີ້ໄດ້ສ້າງຕັ້ງອານາຈັກຂອງຕົນຂຶ້ນຊື່ວ່າ "ອານາຈັກອ້າຍລາວ" ຢູ່ຕາມລ່ອງແມ່ນ້ຳເຫຼືອງ, ແມ່ນ້ຳຢັງຊີກຽງໂດຍມີນະຄອນລຸງ, ນະຄອນປາແລະນະຄອນງ້ຽວເປັນລາຊະທານີ. ຈາກນັ້ນຈຶ່ງມີການອົບພະຍົບລົງມາທາງພາກໃຕ້ຂອງຈີນແລ້ວສ້າງອານາຈັກຂອງຕົນເອງຂຶ້ນຢູ່ໃນເຂດຢູ່ນານຊື່ວ່າ "ອານາຈັກນານເຈົ້າ". ຫຼັງຈາກນັ້ນຕໍ່ມາ ຈຶ່ງໄດ້ອົບພະຍົບເຂົ້າສູ່ດິນແດນລາວທາງພາກເໜືອເມື່ອປະມານສະຕະວັດທີ 6.

### 2.2 ແນວຄວາມຄິດທີສອງ: ແນວຄິດເສສວນ

ນັກວິຊາການກຸ່ມນີ້ ປະຕິເສດແນວຄິດອານໄຕ ແລະ ມີຄວາມເຊື່ອວ່າ "ດິນແດນບໍລິເວນ ມົນທົນເສສວນຂອງຈີນ ຄືຖິ່ນຖານກຳເນີດຂອງກຸ່ມຄົນໄທລາວ". ປະມານສັດຕະວັດທີ 6 ກ່ອນ ຄ.ສ ກຸ່ມຄົນດັ່ງກ່າວນີ້

ໄດ້ຖືກກຸ່ມຄົນຈີນຮຸກຮານແລ້ວອົບພະຍົບມາຢູ່ເຂດຢູນານທາງພາກໃຕ້ຂອງຈີນ ແລະ ແຈກຢາຍກັນຢູ່ຕາມທິດຕ່າງໆທາງຕອນໃຕ້ຂອງຈີນ ແລ້ວກະຈາຍເຂົ້າສູ່ອານາຈັກລ້ານຊ້າງ ແລະ ລ້ານນາ ໃນສະຕະວັດທີ 6.

**2.3 ແນວຄວາມຄິດທີສາມ: ແນວຄິດ ຢູນານ ພາກໃຕ້ຂອງຈີນ**

ນັກວິຊາການກຸ່ມນີ້ ປະຕິເສດແນວຄິດ ອານໄຕ ແລະ ເສສວນ ແຕ່ເຊື່ອວ່າ "ຖິ່ນກຳເນີດຂອງກຸ່ມຄົນໄທລາວກະຈາຍຢູ່ທົ່ວໄປໃນດິນແດນບໍລິເວນຕອນໃຕ້ຂອງຈີນ ແລະ ທາງພາກເໜືອຂອງອາຊີຕາເວັນອອກສຽງ ໃຕ້". ເຫດຜົນທີ່ພາໃຫ້ເກີດຄວາມເຊື່ອແບບນີ້ກໍເພາະວ່າ ກຸ່ມຄົນໄຕເປັນກຸ່ມຄົນໃຫຍ່ມີຫຼາຍເຜົ່າຊົນທີ່ມີຄວາມ ສຳພັນທາງເຊື້ອຍາດທີ່ໃກ້ສິດກັນ ໂດຍສະເພາະທາງດ້ານວັດທະນາທຳ, ພາສາ ແລະ ການກະຈາຍຢູ່ທົ່ວໄປ ໂດຍ ມີສູນກາງຄື "ນ່ານເຈົ້າ". ຕໍ່ມາກຸ່ມຄົນດັ່ງກ່າວນີ້ໄດ້ຖືກກຸ່ມຄົນຈີນຮຸກຮານແລ້ວກໍອົບພະຍົບເຄື່ອນຍ້າຍເຂົ້າສູ່ດິນ ແດນບໍລິເວນທີ່ເປັນປະເທດລາວ ປະມານສະຕະວັດທີ 8 ຫຼັງຈາກທີ່ອານາຈັກ ໜອງແສງ ຫຼື ນ່ານເຈົ້າຂອງເຂົາ ເຈົ້າຖືກແຕກມ້າງ.

**2.4 ແນວຄວາມຄິດທີສີ່: ແນວຄິດອິນດູຈີນ ຫຼື ສຸວັນນະພູມ**

ແນວຄິດທີສີ່ນີ້ເປັນແນວຄິດທີ່ເກີດມາຈາກການບໍ່ຍອມຮັບເອົາແນວຄິດນ່ານເຈົ້າວ່າເປັນອານາຈັກດັ້ງເດີມຂອງກຸ່ມຄົນໄຕ. ນັກວິຊາການກຸ່ມນີ້ເຊື່ອວ່າ "ຕະກຸນເຜົ່າໄທລາວມີຖິ່ນກຳເນີດແລະວິວັດທະນາການຢູ່ເທິງດິນແດນລ່ອງແມ່ນ້ຳຂອງບໍລິເວນທີ່ເປັນດິນແດນປະເທດລາວ - ໄທໃນປັດຈຸບັນ".

ເຫດຜົນຂອງຄວາມເຊື່ອນີ້ມາຈາກ:

- ການຄົ້ນພົບວັດຖຸບູຮານແລະຊາກກະດູກມະນຸດບູຮານໃນດິນແດນທີ່ເປັນປະເທດລາວປັດຈຸບັນຊຶ່ງການພົບຊາກສິ່ງດັ່ງກ່າວເຊື່ອວ່າອາດຈະເປັນບັນພະບູລຸດຂອງຄົນລາວໃນປັດຈຸບັນກໍໄດ້.
- ປັດໃຈທີສອງກໍຄືກຸ່ມຄົນດັ່ງກ່າວນີ້ເປັນກຸ່ມຄົນທີ່ມີຈຳນວນປະຊາກອນຫຼາຍແລະປະກອບໄປດ້ວຍຫຼາຍເຜົ່າທີ່ກະຈາຍກັນຕັ້ງຖິ່ນຖານຕາມສະຖານທີ່ແຕກຕ່າງກັນໄປຕາມຄວາມເໝາະສົມ.

ສະຫຼຸບລວມແລ້ວ, ຄວາມເປັນມາ ແລະ ຖິ່ນກຳເນີດຂອງຊາດລາວ ຫາກພິຈາລະນາຈາກຫຼັກຖານ ແລະ ເຫດຜົນແລ້ວ ຖິ່ນກຳເນີດຂອງກຸ່ມຄົນລາວນ່າຈະຍອມຮັບກັນວ່າ ກະຈາຍຢູ່ທົ່ວໄປໃນດິນແດນບໍລິເວນຕອນໃຕ້ຂອງຂອງຈີນ, ທາງພາກເໜືອຂອງອາຊີຕາເວັນອອກສຽງໃຕ້ ແລະ ບໍລິເວນດິນແດນທີ່ປະເທດລາວ, ປະເທດໄທ ໃນປັດຈຸບັນ. ບັນດາກຸ່ມຄົນທີ່ຕັ້ງຖິ່ນຖານຢູ່ແຜ່ນດິນລາວປະຈຸບັນແມ່ນມີຫຼາຍຊົນເຜົ່າປະສົມປະສານ ເຂົ້າກັນທັງກຳເນີດຢູ່ທີ່ນີ້ເອງ ແລະ ເຄື່ອນຍ້າຍໄປມາໃນຂົງເຂດໃກ້ຄຽງທາງຕອນໃຕ້ຂອງຈີນຮ່ວມເຂົ້າກັນເປັນຊົນ ເຜົ່າພື້ນເມືອງຢູ່ຂົງເຂດນີ້ ຊຶ່ງປະກອບມີ ລະວ້າ, ຂອມ, ມອນ ແລະ ໄທລາວ. ຈາກນັ້ນ ກໍໄດ້ສຳພັນ ແລະ ພ້ອມ ພາກັນສ້າງເປັນອານາຈັກເມືອງ ຫຼື ນະຄອນລັດຂອງຕົນເອງຂຶ້ນຄົງຕົວມາເປັນປະເທດລາວ ແລະ ຄົນລາວບັນດາ ເຜົ່າໃນປັດຈຸບັນ.

## 3. ຮ່ອງຮ້ອຍບູຮານຄະດີໃນແຜ່ນດິນລາວ

ຜົນການຄົ້ນຄວ້າຂອງນັກປະຫວັດສາດ ແລະ ນັກບູຮານຄະດີຫຼາຍທ່ານໄດ້ຢັ້ງຢືນໃຫ້ຮູ້ວ່າ ບໍລິເວນດິນ ແດນທີ່ເປັນປະເທດລາວໃນປັດຈຸບັນນີ້ມະນຸດອາໄສຢູ່ມາແຕ່ດຶກດຳບັນ ແລະ ມີພັດທະນາການຢ່າງເປັນລະບົບຕໍ່ເນື່ອງມາຕັ້ງແຕ່ຍຸກຫີນເກົ່າ, ຫີນກາງ, ຫີນໃໝ່ ແລະ ຍຸກໂລຫະ ເຊັ່ນ:

**3.1 ຍຸກຫີນ**

**ກ. ຍຸກຫີນເກົ່າ (Paleolithic)**

ຍຸກຫີນເກົ່າໃນລາວຄາດວ່າມີ ອາຍຸຕັ້ງແຕ່ 500.000 ຫາ 10.000 ປີກ່ອນ ຄສ. ມະນຸດໃນຍຸກນີ້ດຳເນີນຊີວິດດ້ວຍການເກັບເດັດ - ລ່າສັດເປັນອາຫານຕາມທຳມະຊາດ ແລະ ມີການເຄື່ອນທີ່ໄປຕາມເຂດທຳມາຫາກິນເພື່ອການມີຊີວິດຢູ່ລອດ. ທີ່ພັກອາໄສແມ່ນຖໍ້າ, ເງີບຜາຫີນ ແລະ ໂກນໄມ້ມີການນຳໃຊ້ ເຄື່ອງມືຫີນ ແບບງ່າຍໆ. ໃນລາວເຮົາເພິ່ນໄດ້ຄົ້ນພົບຮ່ອງຮອຍສະໄໝຫີນເກົ່າໃນຫຼາຍແຫ່ງເຊັ່ນ: ຫົວພັນ, ຊຽງຂວາງ, ຫຼວງພະບາງ, ວຽງຈັນ ແລະ ຄຳມ່ວນ; ໃນນັ້ນເດັ່ນແມ່ນການຄົ້ນພົບແຂ້ວບົ້ງກະດູກສະໜັບຊ້າຍຂອງຄົນບູຮານຢູ່ຖໍ້າ ຜາເລີຍຍອດນໍ້າຖານ (ແຂວງຫົວພັນ) ມີອາຍຸຢູ່ໃນລະຫວ່າງ 500.000 – 40.000 ກ່ອນ ຄສ[8].

**ຂ. ຍຸກຫີນກາງ (Mesolithic)**

ຍຸກຫີນກາງໃນລາວຄາດວ່າ ມີອາຍຸຢູ່ລະຫວ່າງ 10.000 – 8000 ກ່ອນ ຄສ ຊຶ່ງເປັນຍຸກເຊື່ອມ ຕໍ່ລະຫວ່າງຍຸກຫີນເກົ່າກັບຍຸກຫີນໃໝ່. ການດຳລົງຊີວິດຍັງອາໄສທຳມະຊາດເປັນຕົ້ນຕໍ ໂດຍສະເພາະອາຫານ ການກິນ ແລະ ທີ່ພັກອາໄສ. ຍຸກນີ້ເປັນຍຸກທີ່ມະນຸດເຮົາເລີ່ມມີແນວຄິດຂັ້ນຕົ້ນຂອງການກະສິກຳກຳເນີດ. ມະ ນຸດໃນຍຸກນີ້ຮູ້ຈັກປະດິດເຄື່ອງມືຫີນດ້ວຍການໃສ່ດ້າມ ແລະ ນຳໃຊ້ເຂົາສັດເປັນອາວຸດ. ຮ່ອງຮອຍມະນຸດບູຮານ ຍຸກຫີນກາງໄດ້ຖືກຄົ້ນພົບຢູ່ໃນຫຼາຍບ່ອນໃນດິນແດນລາວໃນປະຈຸບັນ ເຊັ່ນ: ເພິ່ນໄດ້ຄົ້ນພົບຮ່ອງຮອຍໂຄງກະ ດູກ ແລະ ເຄື່ອງມືຫີນຕ່ອຍ[9] ທີ່ຖໍ້າດິນ ບ້ານວັງ ເມືອງຊະນະຄາມ, ເຄື່ອງມືຫີນຕ່ອຍ[10] ຖໍ້າຜາຮອມ ເມືອງວັງວຽງ.

**ຄ. ຍຸກຫີນໃໝ່ (Neolithic)**

ຍຸກຫີນໃໝ່ໃນລາວ ນັກວິຊາການໄດ້ຄາດກະວ່າມີອາຍຸຢູ່ລະຫວ່າງ 8000 ກ່ອນ ຄສ - 4000 ກ່ອນ ຄສ ໂດຍປະມານ. ຍຸກຫີນໃໝ່ ເປັນຍຸກທີ່ມະນຸດປ່ຽນວິຖີຊີວິດຈາກການດຳລົງຊີວິດແບບເຄື່ອນທີ່ມາເປັນແບບຄົງທີ່, ເປັນຍຸກທີ່ມະນຸດປ່ຽນຈາກການເກັບເດັດລ່າສັດມາເປັນການກະສິກຳຄື: ປູກຝັງ ແລະ ລ້ຽງສັດ. ໃນຍຸກນີ້ເທັກນິກ ຫຼື ກຳມະວິທີໃນການປະດິດເຄື່ອງມືຫີນມີການປ່ຽນແປງໃຫ້ມີລັກສະນະຄ່ອງແຄ້ວ, ປານີດມີຄວາມສະດວກໃນການນຳໃຊ້ ເຊິ່ງນັກບູຮານຄະດີເອີ້ນວ່າ "ເຄື່ອງມືຫີນຝົນ ຫຼື ຫີນຂັດ" ເອກະລັກຂອງເຄື່ອງມືຫີນໃນຍຸກນີ້ຄື ຂວານຫີນພາດບ່າ. ຮ່ອງຮອຍຍຸກຫີນໃໝ່ທີ່ຄົ້ນພົບໃນລາວໄດ້ແກ່: ໂຄງກະດູກມະນຸດ, ເຄື່ອງມືຫີນຝົນ ແລະ ເປືອກຫອຍທະເລ ທີ່ຖໍ້າມະຫາໄຊ ແຂວງຄຳມ່ວນ ຊຶ່ງມີອາຍຸຢ່າງນ້ອຍ 6000 ປີ.

**ງ. ຍຸກໂລຫະ**

ອີງໃສ່ຫຼັກຖານທີ່ພົບ ນັກວິຊາການໄດ້ຄາດຄະເນວ່າ ຍຸກໂລຫະໃນລາວມີອາຍຸຢູ່ລະຫວ່າງປະມານ 4000 ປີກ່ອນ ຄສ - 500 ປີກ່ອນ ຄສ. ຫຼັກຖານທີ່ບົ່ງບອກເຖິງພັດທະນາການຂອງມະນຸດຍຸກໂລຫະໃນ ປະເທດລາວ ນັ້ນເປັນປັດໃຈທີ່ສຳຄັນຄື ການມີແຫ່ງໂລຫະ ແລະ ການຄົ້ນພົບເຕົາ ຫຼື ເບົ້າຫຼອມໂລຫະ. ນັກວິຊາ ເຊື່ອກັນວ່າໂລຫະປະເພດທຳອິດທີ່ມະນຸດນຳມາໃຊ້ໃນລາວເຮົາກໍຄົງຈະແມ່ນ ທອງແດງ, ກົ່ວ, ຊືນ, ເງິນ ຊຶ່ງເປັນ ສ່ວນປະສົມຂອງສຳລິດ. ຮ່ອງຮອຍການນຳໃຊ້ໂລຫະໄດ້ຖືກຄົ້ນພົບຫຼາຍແຫ່ງໃນດິນແດນລາວປັດຈຸບັນ ເຊັ່ນ:

ແຂວງຫຼວງພະບາງ: ທີ່ຖໍ້າຫົວພູ ເພິ່ນໄດ້ພົບເຄື່ອງທອງສຳລິດເຊັ່ນ: ໂອທອງ, ກະດິງ, ປອກແຂນ ແລະ ເຄື່ອງໃຊ້ທີ່ເຮັດດ້ວຍເຫຼັກ ມີໃບຫອກ, ກ່ຽວ, ມີດ ແລະ ອື່ນໆ. ຖໍ້ານາງອັ່ນ ເພິ່ນໄດ້ຄົ້ນພົບພາຊະນະເຄື່ອງໃຊ້ທີ່ເຮັດດ້ວຍໂລຫະ ເຊັ່ນ: ຂວານທອງແດງ, ຂວານທອງເຫຼືອງ, ຄ້ອງບ້າງ ແລະ ສິ່ງເອ້ຍ້ອງອື່ນໆ ເພິ່ນ ສັນນິຖານວ່າ ມີອາຍຸຢູ່ລະຫວ່າງ 1000 ຫາ 500 ປີກ່ອນ ຄສ.

ແຂວງຄຳມ່ວນ: ເຂດລ່ອງແມ່ນ້ຳເທີນ ເພິ່ນໄດ້ຄົ້ນພົບຮ່ອງຮອຍບູຮານວັດຖຸຍຸກໂລຫະ ເຊັ່ນ: ຄົກຫີນ, ແກ່ວຫີນຕ່ຳ ແລະ ກົງລໍ້ຫີນ ທີ່ສັນນິຖານວ່າສ້າງຂຶ້ນໃນຍຸກທອງ ແລະ ຍຸກເຫຼັກ.

ນະຄອນຫຼວງ: ທີ່ເລົ່າປາໂກ, ເມືອງໄຊທານີເພິ່ນໄດ້ຄົ້ນພົບວັດຖຸບູຮານ, ເຄື່ອງມືເຄື່ອງໃຊ້ທີ່ເຮັດດ້ວຍໂລຫະ ໂດຍສະເພາະທອງສຳລິດ ເຊັ່ນ: ຄ້ອງບາງສຳລິດ, ຂວານ, ຫອກ, ຫົວລູກສອນ, ຂັນໂອ ແລະ ເຄື່ອງປະດັບ. ເລົ່າປາໂກນີ້ ສັນນິຖານວ່າ ເປັນສຸສານຄົນບູຮານທີ່ມີອາຍຸຢູ່ໃນຍຸກໂລຫະທີ່ຂະຫຍາຍຕົວແລ້ວ.

ນອກຈາກເຄື່ອງປະດິດທີ່ເຮັດຈາກໂລຫະແລ້ວ ຫຼັກຖານສຳຄັນທີ່ເປັນຮ່ອງຮອຍໃນຍຸກໂລຫະຂອງລາວຄື ການປະດິດເຄື່ອງຫີນຂະໜາດໃຫຍ່ ໂດຍສະເພາະໄດ້ມີການນຳເອົາແທ່ງຫີນຂະໜາດໃຫຍ່ມາສ້າງເປັນ “ອະນຸສາວະລີຫີນ” (Megalithic Monument) ຫຼື “ອະນຸສອນສະຖານ” ຫຼື ເພື່ອຜົນປະໂຫຍດ ທາງພິທີກຳຄວາມເຊື່ອຖື ຫຼືໃຊ້ເພື່ອກິດຈະກຳອື່ນໆ. ຫຼັກຖານສະໄໝຫີນໃຫຍ່ທີ່ພົບໃນລາວໄດ້ແກ່:

ຫີນຕັ້ງ (Menhir) ທີ່ພົບໃນແຂວງຫົວພັນ ຊຶ່ງມີກະຈາຍຢູ່ທົ່ວໄປໃນຫຼາຍບ່ອນ ເຊັ່ນ: ເມືອງຫົວເມືອງ, ເມືອງ ຊຳໃຕ້ ແລະ ເມືອງ ວຽງໄຊ[11]. ຫີນຕັ້ງ (Stone henge) ແລະ (Alignement) ທີ່ພົບຢູ່ໃນເຂດພູຈອມສີ ເມືອງນາແລ ແຂວງຫຼວງນ້ຳທາ. ຕັ່ງຫີນ: ທີ່ພົບເທິງພູເຂົ້າລີບ, ບ້ານຫົວສະຄົງ ແລະ ສິບແອກເມືອງປາກແຊງ ແຂວງຫຼວງພຣະບາງ. ໄຫຫີນ (Stone jar) ແຂວງຊຽງຂວາງ ເປັນກຸ່ມໄຫຫີນຂະໜາດໃຫຍ່ທີ່ກະຈາຍຢູ່ທົ່ວໄປໃນຫຼາຍແຫ່ງ ເຊັ່ນ: ທົ່ງໄຫຫີນ, ບ້ານສ່ວງ, ບ້ານບານ, ບ້ານຊຽງດີ, ເມືອງສຸ້ຍ, ເມືອງຄຳ, ນາມອນ ແລະ ຜາໄຊ. ກຸ່ມທີ່ມີຫຼາຍກວ່າໝູ່ແມ່ນ ບ້ານສ່ວງ ມີເຖິງ 200 ໜ່ວຍ, ໜ່ວຍໃຫຍ່ທີ່ສຸດມີນ້ຳໜັກ 15 ໂຕນ, ເສັ້ນຜ່າໃຈກາງແທກໄດ້ 3 ແມັດ, ສູງ 3.25 ແມັດ, ສາມາດບັນຈຸຄົນໄດ້ 6 ຄົນ. ໄປຄຽງຂ້າງ ກັບໄຫຫີນເພິ່ນຍັງພົບ ແຜ່ນຫີນ ທີ່ແກະສະລັກເປັນຮູບຄົນ ຫຼື ສັດ ແລະ ພົບພາຊະນະວັດສະດຸເຄື່ອງໃຊ້ທີ່ເຮັດດ້ວຍໂລຫະ ເຊັ່ນ: ປອກແຂນທອງສຳລິດ, ມີດ, ພ້າ, ລູກໝາກປັດ, ເຄື່ອງປັ້ນດິນເຜົາ ແລະ ອື່ນໆ.

ນັກປະຫວັດສາດ ແລະ ນັກບູຮານຄະດີ ໄດ້ຈັດກຸ່ມຫີນຕັ້ງ, ໄຫຫີນ ຫຼື ກຸ່ມແທ່ງຫີນເຫຼົ່ານີ້ເຂົ້າໃນ “ວັດທະນາທຳຫີນໃຫຍ່” ຫຼື ເອີ້ນວ່າ “ຍຸກຫີນໃຫຍ່ (Megalithic)” ທີ່ມີອາຍຸໃນຍຸກທອງສຳລິດ ແລະ ຍຸກ ເຫຼັກປະມານ 2000 – 400 ປີກ່ອນ ຄສ[12].

# ບົດທີ 3
# ລາວສະໄໝນະຄອນລັດ

ສະໄໝນະຄອນລັດຂອງລາວ ເປັນສະໄໝທີ່ສັງຄົມຂອງລາວນອນຢູ່ໃນສະໄໝບູຮານ ຊຶ່ງນັກປະຫວັດສາດກຳນົດເອົາແຕ່ເລີ່ມປາກົດມີມະນຸດອາໄສຢູ່ໃນດິນແດນລາວມາຈົນຮອດປີຄ.ສ 1353 ຊຶ່ງເປັນຊ່ວງທີ່ບັນດາກຸ່ມຊົນເຜົ່າຕ່າງໆອັນປະກອບມີລະວ້າ, ຂອມ, ມອນແລະໄທລາວທີ່ອາໄສຢູ່ຮ່ວມກັນພື້ນແຜນດິນຕອນນີ້ສຳພັນກັນເຂົ້າແລະພ້ອມພາກັນສ້າງເປັນອານາຈັກເມືອງຫຼືນະຄອນລັດຂອງຕົນເອງຂຶ້ນ.

ຂະບວນວິວັດແຫ່ງການຕັ້ງຖິ່ນຖານເປັນເມືອງ, ນະຄອນລັດຫຼືອານາຈັກຂອງຄົນລາວນັ້ນມີຄວາມເປັນມາຍາວນານ, ລະອຽດລະອ້ຽວແລະສະຫຼັບຊັບຊ້ອນເພາະຄຳວ່າ "ເມືອງ" ນັ້ນມີການຮຽກຊື່ເອີ້ນແຕກຕ່າງກັນໄປເຊັ່ນ: ວຽງ, ຊຽງ, ນະຄອນ, ແຄວ້ນ ແລະ ອານາຈັກ. ອານາຈັກເມືອງບູຮານຂອງຊົນເຜົ່າລາວນັ້ນ ມີຫຼາຍ ເມືອງທີ່ກະຈາຍກັນຢູ່ທົ່ວໄປເທິງດິນແດນບໍລິເວນສອງຟາກຝັ່ງແມ່ນໍ້າຂອງແລະສາຂາຂອງມັນ ຊຶ່ງແຕ່ລະເມືອງ ມີການປົກຄອງເປັນອິດສະຫຼະພໍໃຜພໍລາວຄ້າຍຄືກັນກັບລັດໜຶ່ງ. ບັນດາເມືອງລາວບູຮານທີ່ສຳຄັນປະກອບມີ: ເມືອງຊຽງແສນ, ເມືອງສຸວັນນະໂຄມຄຳ, ເມືອງແຖນ, ເມືອງຊວາ, ເມືອງພວນ, ເມືອງວຽງຈັນ, ເມືອງສີໂຄດຕະບອງ, ເມືອງຮ້ອຍເອັດ, ເມືອງຈຳປານະຄອນ ແລະ ເມືອງອື່ນໆ ເປັນຕົ້ນ. ແຕ່ໃນທີ່ນີ້ ເນື່ອງຈາກມີຄວາມຈຳກັດໃນຈຳນວນໜ້າທາງດ້ານການພິມ ຂ້າພະເຈົ້າຂໍນຳສະເໜີບາງນະຄອນລັດລາວບູຮານເທົ່ານັ້ນຄື:

## 1. ອານາຈັກສີໂຄດຕະບອງ

ສີໂຄດຕະບອງເປັນອານາຈັກເມືອງເກົ່າແກ່ຂອງລາວ, ມີສູນກາງຕັ້ງຢູ່ລ້ອງແມ່ນໍ້າເຊບັ້ງໄຟນັບແຕ່ປາກແມ່ນໍ້າເຊບັ້ງໄຟເລີກເຂົ້າໄປປະມານ 15 ກິໂລແມັດ. ອານາຈັກນີ້ ສ້າງຕັ້ງຂຶ້ນໃນລະຫວ່າງສະຕະວັດທີ 10 – 6 ກ່ອນ ຄ.ສ (1000 – 600 ປີ ກ່ອນ ຄສ)[13] ມີສູນກາງການປົກຄອງທຳອິດຕັ້ງຢູ່ລ້ອງແມ່ນໍ້າເຊບັ້ງໄຟນັບແຕ່ປາກ ແມ່ນໍ້າເຊບັ້ງໄຟເລີກເຂົ້າໄປປະມານ 15 ກິໂລແມັດ[14], ມີກະສັດປົກຄອງເມືອງທຳອິດທີ່ປະກົດຕາມຊື່ເມືອງວ່າ ພະຍາສີໂຄດຕະບູນ. ປະມານ 400 ປີກ່ອນ ຄສ ໄດ້ຍ້າຍສູນກາງການປົກຄອງ ມາຕັ້ງຢູ່ຝັ່ງຂວາແມ່ນໍ້າຂອງບໍລິ ເວນຕາເວັນຕົກຂອງທາດພະນົມ ເອີ້ນຊື່ວ່າ "ມະລຸກຂະນະຄອນ"[15]. ມາເຖິງຕົ້ນສະຕະວັດທີ 3 ອານາຈັກຟູນັນ ຊຶ່ງມີສູນກາງຕັ້ງຢູ່ສາມຫຼ່ຽມປາກແມ່ນໍ້າຂອງໄດ້ມີຄວາມເຂັ້ມແຂງ ແລະ ແຜ່ອຳນາດຂຶ້ນມາທາງພາກເໜືອກວມເອົາບັນດາອານາຈັກອ້ອມຂ້າງ ຮ່ວມທັງສີໂຄດຕະບອງ ກໍຕົກຢູ່ໃນອິດທິພົນຂອງອານາຈັກຟູນັນ.

ກາງສະຕະວັດທີ 6 ອານາຈັກຟູນັນ ໄດ້ຊຸດໂຊມລົງ, ສະນັ້ນ ຊາວສີໂຄດຕະບອງ ພາຍໃຕ້ການນຳພາຂອງພະຍານັນທະເສນ ໄດ້ປະກາດແຍກຕົວອອກເປັນເອກະລາດ ແລະ ປັບປຸງບ້ານເມືອງໃຫ້ເຂັ້ມແຂງ, ມີອານາເຂດກວ້າງຂວາງກວ່າເກົ່າ. ແຕ່ເມື່ອສິ້ນສຸດສະໄໝການປົກຄອງຂອງພະຍານັນທະເສນແລ້ວ ສີໂຄດຕະບອງໄດ້ເລີ່ມຊຸດໂຊມລົງ ແລະ ມີການຍົກຍ້າຍສູນກາງໄປຢູ່ຝັ່ງຂວາແມ່ນໍ້າຂອງ ບໍລິເວນທາດພະນົມ (ນະຄອນພະນົມປະເທດໄທໃນປັດຈຸບັນ) ແລະ ໄດ້ຕັ້ງຊື່ເມືອງວ່າ "ເມືອງ ມະຣຸກຂະນະຄອນ" ແຕ່ໄລຍະນີ້ ຫຼາຍຫົວເມືອງໄດ້ແຍກຕົວອອກ ເປັນເອກະລາດບໍ່ຍອມຂຶ້ນກັບສູນກາງ. ສວຍໂອກາດນີ້ ອານາຈັກທະວາຣະວະດີ ແລະ ອານາຈັກ ຈັນລາ ກໍໄດ້ບຽດຍຶດເອົາຫົວເມືອງຕ່າງໆຂອງສີໂຄດຕະບອງ.

ກ້າວເຂົ້າໄລຍະທ້າຍສະຕະວັດທີ 7 ອານາຈັກຈັນລາກ້າວເຂົ້າສູ່ຄວາມອ່ອນເພຍລົງ, ສະນັ້ນ ພະຍາສຸມິດຕະທຳ ມະວົງສາ ຈຶ່ງໄດ້ປະກາດແຍກສີໂຄດຕະບອງ ອອກຈາກອຳນາດຂອງອານາຈັກຈັນລາ. ພາຍຫຼັງໄດ້

ຮັບເອກະລາດແລ້ວ ພະຍາສຸມິດຕະທຳມະວົງສາ ໄດ້ທຳການປັບປຸງອຳນາດໃຫ້ເຂັ້ມແຂງ ແລະ ມີອານາເຂດກວ້າງ ຂວາງ. ແຕ່ມາຮອດຕອນທ້າຍການປົກຄອງ ອານາຈັກສີໂຄດຕະບອງໄດ້ແຍກອອກເປັນສອງອານາຈັກເມືອງ ຄື: ເມືອງສີໂຄດຕະບອງ ແລະ ເມືອງຈັນທະບຣູລີ ຢູ່ທາງເໜືອມີແມ່ນ້ຳກະດິງເປັນສາຍແດນ. ມາຮອດສະຕະວັດທີ 10 ອານາຈັກສີໂຄດຕະບອງ ໄດ້ກ້າວເຂົ້າສູ່ຄວາມອ່ອນເພຍ ແລະ ຖືກພວກຂອມແຫ່ງອານາຈັກອັງກໍ ຍຶດຄອງດິນແດນຕັ້ງແຕ່ຫຼີຜີເຖິງວຽງຈັນ ແລ້ວຕັ້ງສູນກາງການປົກຄອງຢູ່ເມືອງຫາດຊາຍຟອງ.

ໃນສະຕະວັດທີ 13 ອານາຈັກອັງກໍ ໄດ້ເຊື່ອມອຳນາດລົງ, ບັນດາຫົວເມືອງລາວທີ່ຂຶ້ນກັບສີໂຄດຕະບອງ ໃນເມື່ອກ່ອນ ຕ່າງກໍໄດ້ແຍກຕົວອອກເປັນເອກະລາດ ແລະ ປົກຄອງພໍໃຜລາວຕາມແຕ່ລະຫົວເມືອງຈົນຮອດກາງສະຕະວັດທີ 14 ຈຶ່ງໄດ້ຮັບການທ້ອນໂຮມເຂົ້າເປັນອານາຈັກລາວລ້ານຊ້າງເອກະພາບພ້ອມກັນກັບບັນດາຫົວເມືອງລາວບູຮານອື່ນໆ.

## 2. ອານາຈັກເມືອງຊວາ

ເມືອງຊວາສ້າງຕັ້ງຂຶ້ນກ່ອນສະຕະວັດທີ 8 ໂດຍແມ່ນກຸ່ມຄົນລະວ້າ ແລະ ມີສາມຕະກຸນຄອບຄອງຄື: ຕະກຸນ "ນັນທາ", ຕະກຸນ "ພະຍານາກ" ແລະ ຕະກຸນຈັນທະພານິດ. ບັນດາວົງຕະກຸນນີ້ ນັກປະຫວັດສາດສ່ວນ ໃຫຍ່ເຊື່ອຖືກັນວ່າ ແມ່ນກຸ່ມຄົນໄທລາວ ຫຼື ພວກອ້າຍລາວຮຸ່ນທຳອິດ ທີ່ເຄື່ອນຍ້າຍເຂົ້າມາອາໄສຢູ່ດິນແດນແຫ່ງນີ້.

ຕົກມາຮອດກາງສະຕະວັດທີ 8 ບຸດຊາຍຂອງຂຸນບູຣົມຊື່ວ່າ ຂຸນລໍ ຊຶ່ງເປັນຂົນເຜົ່າລາວ ຫຼື ອ້າຍລາວກຸ່ມໜຶ່ງ ທີ່ຕັ້ງຖິ່ນຖານຢູ່ພາກເໜືອຄື ບໍລິເວນແຄບສິບສອງປັນນາ ຊຶ່ງເປັນທີ່ຮູ້ຈັກກັນດີໃນນາມອານາຈັກໜອງແສ ໄດ້ເຄື່ອນຍ້າຍແຜ່ຂະຫຍາຍລົງມາທາງໃຕ້ເຂົ້າຍຶດເອົາເມືອງຊວາໃນປີ ຄ.ສ 757 ແລ້ວກໍຂຶ້ນປົກຄອງເມືອງຊວາ ແລະ ໄດ້ປ່ຽນຊື່ເມືອງຊວາມາເປັນ "ຊຽງດົງຊຽງທອງ" ແລ້ວເອີ້ນວ່າ "ນະຄອນຊຽງທອງ". ຈາກນັ້ນມາຮອດປີ ຄ.ສ 1353 ເມືອງຊຽງທອງກໍໄດ້ຖືກທ້ອນໂຮມເຂົ້າເປັນເມືອງໜຶ່ງຂອງອານາຈັກລ້ານຊ້າງ ແລະ ກາຍເປັນສູນກາງການປົກຄອງຂອງອານາຈັກລ້ານຊ້າງ ມາຮອດຈົນປີ ຄ.ສ 1560 ຈຶ່ງໄດ້ມອບໜ້າທີ່ລາຊະທານີຂອງອານາຈັກໃຫ້ແກ່ເມືອງວຽງຈັນ.

## 3. ອານາຈັກເມືອງວຽງຈັນ

ເມືອງວຽງຈັນເປັນເມືອງເກົ່າແກ່ໜຶ່ງຂອງຄົນລາວ ທີ່ມີການພັດທະນາການຄວາມເປັນມາອັນຍາວນານຊຶ່ງໃນອະດີດນັ້ນ ມີທີ່ຕັ້ງກວມເອົາດິນແດນບໍລິເວນສອງຟາກຝັ່ງແມ່ນ້ຳຂອງຄື ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ສ່ວນໜຶ່ງຂອງແຂວງບໍລິຄຳໄຊ ແລະ ແຂວງໜອງຄາຍ ໃນປັດຈຸບັນ.

ຕາມຫຼັກຖານທາງບູຮານຄະດີພົບວ່າ ບໍລິເວນອ້ອມແອ້ມເມືອງວຽງຈັນ ມີຫຼາຍເມືອງບໍລິວານຂຶ້ນກັບເຊັ່ນ: ທາງທິດຕາເວັນອອກສຽງເໜືອ ຫ່າງຈາກນະຄອນຫຼວງວຽງຈັນປະມານ 70 ກິໂລແມັດ ຕາມແຄມຝັ່ງນ້ຳງື່ມມີເມືອງໜຶ່ງຊື່ວ່າ ວຽງຄຳ, ທິດເໜືອຫ່າງຈາກນະຄອນຫຼວງວຽງຈັນປະມານ 100 ກິໂລແມັດ ແຄມຝັ່ງນ້ຳຂອງມີເມືອງໜຶ່ງຊື່ວ່າ ເມືອງຊຽງຄານ (ຊະນະຄາມໃນປັດຈຸບັນ), ທິດຕາເວັນຕົກທາງຝັ່ງຂວາແມ່ນ້ຳຂອງມີເມືອງປາກຫວ້ຍຫຼວງ, ວຽງຄຸກ... ທາງທິດໃຕ້ມີ ເມືອງວຽງຜານ້ຳຮຸ່ງ ຊຶ່ງຕັ້ງຢູ່ບໍລິເວນປາກນ້ຳຊັນ ແລະ ນ້ຳກະດິງ[16]. ນອກຈາກພົບຮ່ອງຮອຍເມືອງບູຮານແລ້ວ ຍັງພົບເຫັນຮ່ອງຮອຍສິລະປະວັດທະນາທຳບູຮານ ເປັນຕົ້ນເຄື່ອງມືເຄື່ອງໃຊ້ທີ່ເຮັດດ້ວຍຫີນ, ໂລຫະ ແລະ ເຄື່ອງປັ້ນດິນເຜົາ ທີ່ມີລັກສະນະແຕກຕ່າງກັນໄປຕາມກາລະເວລາ. ຜົນການວິໄຈພົບວ່າ ວັດຖຸບູຮານທີ່ພົບໃນເຂດນີ້ມີສາມຮູບແບບອັນເປັນສັນຍາລັກຂອງ ສາມຍຸກສະໄໝ

ແຫ່ງສິລະປະວັດທະນາທຳທີ່ພົບໃນລາວ ເຊັ່ນ: ສິລະປະ ສະໄໝສີໂຄດຕະບອງ, ສິລະປະ ສະໄໝຊາຍຟອງ ແລະ ສິລະປະ ສະໄໝລ້ານຊ້າງ.

ສຳລັບຄວາມເປັນມາຂອງເມືອງວຽງຈັນສະໄໝບູຮານນັ້ນ ຂ້ອນຂ້າງມີຄວາມສັບສົນທາງດ້ານເວລາໃນການກຳເນີດວ່າສ້າງຂຶ້ນໃນເວລາໃດ? ແຕ່ອີງຫຼັກຖານປະເພດຕຳນານ ແລະ ຄຳບອກເລົ່າແລ້ວເຫັນວ່າ ຈຸດກຳເນີດ ຂອງເມືອງວຽງກ່ຽວກັບພັນກັນກັບຕຳນານດັ່ງນີ້:

- ຕຳນານພະຍານາກ: ທີ່ເປັນຕຳນານແບບເລົ່າປາກຕໍ່ປາກສືບຕໍ່ກັນມາ ທີ່ກ່ຽວຂ້ອງກັບເມືອງວຽງຈັນວ່າ ເມືອງວຽງຈັນນີ້ສ້າງຂຶ້ນໂດຍພະຍານາກ ດ້ວຍເຫດນັ້ນເມືອງວຽງຈັນຈຶ່ງມີເມືອງໜຶ່ງເອີ້ນວ່າ ວຽງຈັນສັດຕະນາກ ຫຼື ເມືອງສີສັດຕະນາກ ໃນປັດຈຸບັນ.
- ຕຳນານພະລັກພະລາມບອກວ່າ ເມືອງວຽງຈັນສ້າງຕັ້ງຂຶ້ນໂດຍ ທ້າວທະຕະອັດຖະທີ່ເດີນທາງມາຈາກເມືອງອິນທະປັດຖະນະຄອນໄດ້ມາພັກເຊົາໃນເຂດດອນຈັນ ແລ້ວມີນາກເຈັດຫອນຂຶ້ນມາ ບອກໃຫ້ສ້າງເມືອງໃໝ່ຂຶ້ນທີ່ຝັ່ງນ້ຳຕາເວັນອອກຈຶ່ງຈະເລີນຮຸ່ງເຮືອງ ດັ່ງນັ້ນ, ເມືອງໃໝ່ແຫ່ງນີ້ຈຶ່ງມີຊື່ວ່າ "ເມືອງ ສີສັດຕະນາກ" ຕາມນາກເຈັດຫອນບອກ.
- ຕຳນານອຸຣັງຄະທາດ ບອກວ່າເມືອງວຽງຈັນ ສ້າງຕັ້ງຂຶ້ນທຳອິດໂດຍທ້າວບູຣີຈັນ ຊຶ່ງໄລຍະທຳອິດມີຊື່ວ່າ "ໜອງຄັນແທພີເສື້ອນ້ຳ". ຕໍ່ມາໃນໄລຍະສະຕະວັດທີ 4 ທ້າວຄຳບາງ ທີ່ເປັນເຊື້ອສາຍຂອງພະຍາສຸວັນນະພິງຄານ ແຫ່ງເມືອງໜອງຫານຫຼວງ ໄດ້ນຳພາໄພ່ພົນຂອງຕົນອົບພະຍົບຈາກໜອງຫານຫຼວງ ຂຶ້ນມາຕັ້ງບ້ານເມືອງ ຢູ່ບໍລິເວນປາກຫ້ວຍເກົ້າລ້ຽວເກົ້າຄົດ (ບໍລິເວນບ້ານເກົ້າລ້ຽວ, ກຳແພງນະຄອນ) ໂດຍໃຫ້ຊື່ເມືອງຂອງຕົນວ່າ "ສຸວັນນະພູມ" ແລ້ວໃຫ້ໄພ່ພົນຂອງຕົນ ແຍກຍ້າຍກັນໄປຕັ້ງບ້ານເຮືອນຢູ່ອ້ອມແອ້ມໃກ້ຄຽງກັນນັ້ນ. ຕໍ່ມາທ້າວຄຳບາງ ໄດ້ໃຫ້ລູກສາວຂອງຕົນຊື່ວ່າ ນາງ ອິນທະ ສະຫວ່າງ ແຕ່ງງານກັບ ທ້າວ ບູຣີຈັນ ຊຶ່ງເປັນຫົວໜ້າບ້ານໜອງຄັນແທເສື້ອນ້ຳ ແລ້ວບູຣີຈັນກໍໄດ້ປ່ຽນຊື່ບ້ານໜອງຄັນແທເສື້ອນ້ຳ ມາເປັນເມືອງເອີ້ນວ່າ "ເມືອງຈັນທະບູຣີ" ແລະ ບູຣີຈັນກໍໄດ້ຈັດແຈງເຄື່ອງບັນນາການໄປຖວາຍເຈົ້າສຸມິດຕະທຳມະວົງສາ ຊຶ່ງເປັນເຈົ້າເມືອງມະຣຸກຂະນະຄອນ ຫຼື ສີໂຄດຕະບູດໃຫ້ຮັບຮູ້. ຈາກນັ້ນ ພະຍາສຸມິດຕະທຳມະວົງສາ ກໍໄດ້ເຮັດພິທີອະພິເສກບູຣີຈັນຂຶ້ນເປັນຜູ້ປົກຄອງເມືອງ ມີພະນາມວ່າ ພະຍາຈັນທະບູຣີ ປະສິດທິສັກ ພ້ອມນັ້ນ ກໍໄດ້ກຳນົດເຂດໝາຍແດນດິນ ຊຶ່ງທາງໃຕ້ນັບແຕ່ນ້ຳກະດິງຂຶ້ນມາ ແລະ ເມືອງນີ້ກໍມີຊື່ວ່າ "ວຽງຈັນ" ໃນຕໍ່ມາຕາມຄວາມໝາຍຂອງບູຣີຈັນ.

ຈາກນັ້ນມາ ຈົນຮອດປະມານສະຕະວັດທີ 6 ຈຶ່ງປາກົດມີຊື່ເມືອງວຽງຈັນນອນຢູ່ໃນ 17 ຕົວເມືອງ ທີ່ຂຶ້ນກັບອານາຈັກສີໂຄດຕະບອງ ແລະ ມາຮອດກາງສະຕະວັດ8 ເມືອງວຽກຈັນກໍຖືກສະຖາປະນາເປັນນະ ຄອນຫຼວງຂອງອານາຈັກສີໂຄດຕະບອງຈົນມາຮອດສະຕະວັດທີ 11. ຈາກນັ້ນພວກຂອມ ທີ່ໄດ້ແຜ່ກະຈາຍອຳນາດມາປົກຄຸມອານາຈັກສີໂຄດຕະບອງ ຈຶ່ງສັນນິຖານວ່າ ເມືອງວຽງຈັນໃນຊ່ວງເວລານີ້ກໍຕົກຢູ່ໃຕ້ການປົກຄອງຂອງພວກຂອມ. ມາຮອດສະຕະວັດທີ 14 ປະມານ ຄ.ສ 1357 ເມືອງວຽງຈັນກໍຖືກເຕົ້າໂຮມເຂົ້າກັນເປັນເມືອງ ໜຶ່ງ ຂອງອານາຈັກລ້ານຊ້າງໃຕ້ການນຳພາຂອງພະເຈົ້າເຈົ້າຟ້າງຸ່ມ.

# ບົດທີ 4
# ລາວສະໄໝລ້ານຊ້າງ

## 1. ການສ້າງຕັ້ງອານາຈັກລາວລ້ານຊ້າງ

ລ້ານຊ້າງເປັນຊື່ອານາຈັກໜຶ່ງຂອງຄົນລາວທີ່ກຳເນີດຂຶ້ນໃນສະຕະວັດທີ 14 ມີອານາເຂດກວມເອົາດິນແດນປະເທດລາວໃນປັດຈຸບັນ ຮອມໄປເຖິງດິນແດນພາກອີສານຂອງປະເທດໄທ, ເຂດເມືອງແຖງຂອງຫວຽດນາມ ແລະ ເຂດກະແຈະ - ຊຽງແຕງ ຂອງກຳປູເຈຍ ຊຶ່ງໃນອະດີດປັນດິນແດນຂອງອານາຈັກລ້ານຊ້າງ.

ດິນແດນທີ່ເອີ້ນວ່າອານາຈັກລ້ານຊ້າງ ກ່ອນໜ້າການທ້ອນໂຮມຂອງພະເຈົ້າຟ້າງຸ່ມນັ້ນ ເປັນດິນແດນທີ່ມີຫຼາຍອານາຈັກເມືອງຂອງກຸ່ມຄົນລາວ ທີ່ມີການປົກຄອງເປັນເອກະລາດພໍໃຜມັນ. ບັນດາອານາຈັກເມືອງທີ່ສຳຄັນໄດ້ແກ່: ເມືອງຊວາ, ເມືອງພວນ, ເມືອງວຽງຈັນ, ເມືອງກະບອງ, ເມືອງຈຳປາສັກ ແລະ ເມືອງອື່ນໆ ຕາມສອງຟາກຝັ່ງແມ່ຂອງຕັ້ງແຕ່ຍອດອູເຖິງຫຼີຜີ. ໃນສະຕະວັດທີ 10-11 ອານາຈັກອັງກໍ ແຫ່ງພວກຂອມມີຄວາມເຂັ້ມແຂງໄດ້ດຳເນີນການຂະຫຍາຍອານາເຂດແຜ່ອິດທິພົນຂຶ້ນຕາມລອງແມ່ນໍ້າຂອງ ເຮັດໃຫ້ຫົວເມືອງລາວຕ່າງໆທີ່ຢູ່ທາງພາກໃຕ້ ແລະ ພາກກາງ ຕົກຢູ່ໃຕ້ອິດທິພົນຂອງພວກຂອມແຫ່ງອັງກໍ[17]. ມາຮອດກາງສະຕະວັດທີ 13 ອານາຈັກອັງກໍມີຄວາມອ່ອນເພຍ ແລ້ວບັນດາຫົວເມືອງລາວທາງພາກກາງ ແລະ ພາກໃຕ້ ນັບແຕ່ຫຼີຜີຂຶ້ນມາຕາມ ສອງຟາກຝັ່ງແມ່ນໍ້າຂອງຈົນຮອດວຽງຈັນ ກໍໄດ້ແຍກຕົວອອກເປັນເອກະລາດ.

ກາງສະຕະວັດທີ 14 ອານາຈັກເມືອງຊວາ ຊຶ່ງເປັນອານາຈັກໜຶ່ງທີ່ມີຄວາມເຂັ້ມແຂງກວ່າໝູ່ໃນບັນດາຫົວເມືອງລາວບູຮານຕ່າງໆ ຈຶ່ງໄດ້ມີແຜນການທ້ອນໂຮມແຜນດິນລາວເຫຼົ່ານັ້ນເຂົ້າກັນເປັນ ອານາຈັກເອກະພາບຄືກັນກັບອານາຈັກອື່ນໆອ້ອມຂ້າງ. ແຕ່ວ່າສະພາບພາຍໃນຂອງເມືອງຊວາເອງ ໃນເວລານັ້ນກໍມີການຂັດແຍ່ກັນລະຫວ່າງ ກຸ່ມສັກດີນາພາຍໃນດ້ວຍກັນ. ດັ່ງນັ້ນ, ເຈົ້າຟ້າງ້ຽວທີ່ເປັນບິດາຂອງເຈົ້າຟ້າງຸ່ມ ຈຶ່ງມີແຜນຍຸດໂທບາຍດ້ວຍຮູບການສົ່ງເຈົ້າຟ້າງຸ່ມ ພ້ອມດ້ວຍເສນາອາມາດທີ່ໃກ້ສິດລົງໄປທາງພາກໃຕ້ ດ້ວຍກົນອຸບາຍທີ່ວ່າ"...ເຈົ້າຟ້າງຸ່ມເກີດມາເປັນຄົນເຂັດຄົນຂວາງ, ແພ້ບ້ານແພ້ເມືອງ ຕ້ອງເອົາໃສ່ແພໄຫຼນໍ້າເສຍ..." ໃນຄວາມເປັນຈິງແລ້ວ ສິ່ງດັ່ງກ່າວນັ້ນ ເປັນພຽງຂໍ້ອ້າງເພື່ອເອົາເປັນເຫດຜົນໃນການກະກຽມ, ເກັບກຳຂໍ້ມູນ ແລະ ສະສົມກຳລັງຕາມແຜນການທ້ອນໂຮມຫົວເມືອງລາວບູຮານຕ່າງໆເຂົ້າກັນເປັນອານາຈັກດຽວ. ໃນຂະນະທີ່ ເຈົ້າຟ້າງຸ່ມກຳລັງດຳເນີນການເຄື່ອນໄຫວເຕົ້າໂຮມກຳລັງຢູ່ພື້ນຖານຕາມທ້ອງຖິ່ນຕ່າງໆ ທາງພາກໃຕ້ນັ້ນ, ເຫດການທາງເມືອງຊວາກໍມີການປ່ຽນແປງ ປະກອບກັບສະພາບການໃນເຫຼັ້ມສຸວັນນະພູມກໍມີການປ່ຽນແປງອີກເຊັ່ນກັນ. ສະພາບການປ່ຽນແປງດັ່ງກ່າວນັ້ນ ໄດ້ກາຍເປັນເງື່ອນໄຂອັນດີໃຫ້ແກ່ ແຜນການເຕົ້າໂຮມຫົວເມືອງລາວທີ່ຕັ້ງຢູ່ສອງຟາກຝັ່ງແມ່ນໍ້າຂອງເຂົ້າເປັນອານາຈັກດຽວກັນ ຂອງພະເຈົ້າຟ້າງຸ່ມ. ດັ່ງນັ້ນ ມາໃນປີ ຄ.ສ 1349 ພະເຈົ້າຟ້າງຸ່ມພ້ອມດ້ວຍພັກພວກໄດ້ນຳພາປະຊາຊົນ ດຳເນີນການທ້ອນໂຮມຫົວເມືອງລາວຕ່າງໆ ເຂົ້າກັນເປັນອານາຈັກເອກະພາບໃຕ້ຊື່ດຽວກັນກັນ ເອີ້ນວ່າ: "ອານາຈັກລ້ານຊ້າງ" ຢ່າງສຳເລັດຜົນໃນປີ ຄ.ສ 1357 ຊຶ່ງມີສູນກາງການປົກຄອງຢູ່ ນະຄອນຊຽງທອງ.




## 2. ພັດທະນາການຂອງອານາຈັກລາວລ້ານຊ້າງ

ອານາຈັກລ້ານຊ້າງ ເປັນອານາຈັກໜຶ່ງທີ່ມີພັດທະນາການທາງດ້ານການເມືອງສັງຄົມຢ່າງຕໍ່ເນື່ອງຄືກັນກັບ ອານາຈັກອື່ນໆໃນແຖບອາຊີຕາເວັນອອກສຽງໃຕ້. ໂດຍທົ່ວໄປແລ້ວ ເຮົາສາມາດແບ່ງຂອບເຂດພັດທະນາການທາງສັງຄົມການເມືອງ ຂອງອານາຈັກລ້ານຊ້າງອອກເປັນ 3 ໄລຍະດັ່ງນີ້:

### 2.1 ລ້ານຊ້າງສະໄໝວຽງທອງ

ອານາຈັກລ້ານຊ້າງສະໄໝວຽງທອງນີ້ ເປັນຊ່ວງທີ່ອານາຈັກລ້ານຊ້າງຢູ່ໃນໄລຍະເລີ່ມຕົ້ນ ແລະ ກຳລັງພັດນາຈາກສັງຄົມຂະໜາດນ້ອຍມາເປັນສັງຄົມຂະໜາດໃຫຍ່ທີ່ເປັນປຶກແຜ່ນ. ອານາຈັກລ້ານຊ້າງສະໄໝຊຽງທອງນີ້ ກຳນົດເອົາແຕ່ ຄ.ສ 1357 ຈົນຮອດ ປີ ຄ.ສ 1560 ແລະມີສູນກາງການປົກຄອງຢູ່ທີ່ເມືອງຊຽງທອງ.

**ບັນດາກະສັດທີ່ຄອບຄອງລ້ານຊ້າງຊຽງທອງ**

| ລຳດັບ | ປີຄອງລາດ | ຊື່ກະສັດ | ນາມມະຍົດ |
|---|---|---|---|
| 1 | ຄສ 1353 - 1373 | ພະເຈົ້າຟ້າງຸ່ມ | ພະເຈົ້າຟ້າຫຼ້າທໍລະນີ ສີສັດຕະນາຄະນະຫຸດ |
| 2 | ຄສ 1374 - 1417 | ພະເຈົ້າອຸ່ນເຮືອງ | ພະຍາສາມແສນໄທ ໄຕພູວະນາຖາປັດ ສີສັດຕະນາກ |
| 3 | ຄສ 1417 - 1428 | ພະຍາລ້ານຄຳແດງ | |
| | ຄສ 1428 - 1430 | ພະຍາພົມມະທັດ | ຄອງລາຊະບັນລັງ 10 ເດືອນ |
| | ຄສ 1430 - 1431 | ທ້າວຄຳເຕັມ | ຄອງລາຊະບັນລັງ 5 ເດືອນ |
| | ຄສ 1431 - 1432 | ທ້າວໝື່ນໄຊ/ລືໄຊ | ຄອງລາຊະບັນລັງ 6 ເດືອນ |
| | ຄສ 1432 - 1435 | ທ້າວຜາໄດ/ໄຄ່ບົວບານ | ຄອງລາຊະບັນລັງ 3 ປີ |
| | ຄສ 1435 - 1436 | ທ້າວກ້ອນຄຳ | ຄອງລາຊະບັນລັງ 1 ປີກັບ 6 ເດືອນ |
| | ຄສ 1436 - 1437 | ທ້າວຍຸນ/ຍຸຄອນ | ຄອງລາຊະບັນລັງ 8 ເດືອນ |
| | ຄສ 1437 - 1439 | ທ້າວຄຳເກີດ | ຄອງລາຊະບັນລັງ 2 ປີ |
| 4 | ຄສ 1456 - 1479 | ທ້າວ ວັງບູລີ | ພະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ |
| 5 | ຄສ 1479 - 1487 | ເຈົ້າແທ່ນຄຳ | ພະເຈົ້າສຸວັນນະບັນລັງ |
| 6 | ຄສ 1487 - 1496 | ເຈົ້າຫຼ້າແສນໄຕ | ພະຍາຫຼ້າແສນໄຕພູວະນາດ |
| 7 | ຄສ 1496 - 1500 | ພະເຈົ້າຊົມພູ | |
| 8 | ຄສ 1500 - 1520 | ເຈົ້າວິຊຸນນະລາດ | ພະຍາວິຊຸນລາຊາໄຕພູວະນາທິປັດສີສັດຕະນາຄະນະຫຸດ |
| 9 | ຄສ 1521 - 1550 | ເຈົ້າໂພທິສາລາດ | ພະໂພທິສາຣະລາດມະຫາລາຊາທິປະຕິຈັກກະພັດພູ ມິນນໍຣິນທະລາດເຈົ້າ |

**ກ. ການປົກຄອງ**

ອານາຈັກລ້ານຊ້າງສະໄໝຊຽງທອງນີ້ ແມ່ນປົກຄອງດ້ວຍລະບອບສັກດີນາລາວລວມສູນ ແບບກະຈາຍອຳນາດ. ກະສັດເປັນຜູ້ມີສິດເດັດຂາດ ໃນການແຕ່ງຕັ້ງຜູ້ເຂົ້າດຳລົງຕຳແໜ່ງສຳຄັນຕ່າງໆພາຍໃນອານາຈັກ ແລະ ເປັນຜູ້ມີສິດເດັດຂາດໃນການບໍລິຫານແຜ່ນດິນ. ການປົກຄອງໃນໄລຍະນີ ສ່ວນໃຫຍ່ໃຊ້ຄຳສັ່ງ ຫຼື ພະລາຊະໂອງການຂອງເຈົ້າຊີວິດ ເປັນແນວທາງໃນການປະຕິບັດສົມທົບກັບ ຮີດ - ຄອງ ຊຶ່ງເອີ້ນວ່າ "ຂະນົບທຳນຽມ ຫຼື ປະເພນີ" ທີ່ອີງໃສ່ຫຼັກທຳຄະຕິຄຳສອນຂອງພຸດທະສາສະໜາ ມາເປັນຫຼັກໃນການປົກຄອງ ແລະ ຄຸ້ມຄອງສັງຄົມ. ການຈັດການປົກຄອງຂອງອານາຈັກລ້ານຊ້າງສະໄໝຊຽງທອງນີ້ ມີການປັບປຸງໃຫ້ເປັນລະບົບຊັດເຈນຂຶ້ນມາໂດຍຕະຫຼອດ ເພື່ອໃຫ້ມີຄວາມສອດຄ່ອງກັບການຂະຫຍາຍຕົວຂອງສັງຄົມ.

**ຂ. ສັງຄົມ ແລະ ເສດຖະກິດ**

ສັງຄົມສະໄໝລ້ານຊ້າງຊຽງທອງ ໄດ້ການແບ່ງຊັ້ນຄົນອອກເປັນປະເພດໃຫ່ຍໆດັ່ງນີ້: ກະສັດ, ຂຸນນາງ ຂ້າລາສະການ ແລະ ໄພ່. ນອກຈາກນີ້ ຍັງມີຊັ້ນຄົນພິສາດ ຄື ພຣະສົງ. ການຄຸ້ມຄອງສັງຄົມໃນໄລຍະນີ້

ສ່ວນໃຫ່ຍໃຊ້ລະບົບຮີດ-ຄອງ ປະສົມປະສານກັບພະລາຊະໂອງການຂອງເຈົ້າຊີວິດທີ່ອີງໃສ່ຫຼັກທຳຄະຕິຄຳສອນ ຂອງພຸດທະສາສະໜາມາເປັນເກນໃນການຄວບຄຸມການປະພຶດປະຕິບັດຂ້ອງຄົນໃນສັງຄົມ.

ພື້ນຖານເສດຖະກິດໃນສະໄໝຊຽງທອງ ແມ່ນການກະສິກຳໂດຍມີຫັດຖະກຳ ແລະ ການຄ້າ ເປັນອົງປະກອບ. ເສດຖະກິດສະໄໝນີ້ເປັນເສດຖະກິດຂະໜາດນ້ອຍທີ່ມີລັກສະນະກະແຈກກະຈາຍ ແບບກຸ້ມຕົນເອງເພິ່ງຕົນເອງ. ເຖິງແມ່ນວ່າລັດຈະມີແຜນການສົ່ງເສີມ ແລະ ຂະຫຍາຍເນື້ອທີ່ເຮັດການຜະລິດ ແຕ່ກໍຍັງຂຶ້ນກັບທຳມະຊາດເປັນສ່ວນໃຫຍ່. ການປະສິກຳປະກອບມີ ການປູກຝັງ, ການຫາປາ, ການລ້ຽງສັດ ແລະ ການເກັບຂອງປ່າ. ການປູກຝັງສ່ວນໃຫຍ່ ແມ່ນການເຮັດນາດຳ, ການເຮັດສ່ວນ ແລະ ການເຮັດໄຮ່. ການຫັດຖະກຳຂອງລ້ານຊ້າງ ເທົ່າທີ່ມີຫຼັກຖານທາງບູຮານຄະດີ ໂດຍສະເພາະປະເພດພາຊະນະເຄື່ອງໃຊ້, ເຄື່ອງເອ້ຍ້ອງຕ່າງໆທີ່ພົບ ເຫັນເປັນຈຳນວນຫຼວງຫຼາຍໃນດິນແດນລ້ານຊ້າງ ແຕ່ວ່າສິ່ງດັ່ງກ່າວນັ້ນ ຍັງບໍ່ທັນໄດ້ຮັບການພິສູດ ແລະ ຢືນຢັນ ຢ່າງເປັນທາງການວ່າ ມັນປະກົດຂຶ້ນໃນສະໄໝການປົກຄອງຂອງກະສັດລ້ານຊ້າງອົງໃດ. ການຫັດຖະກຳຂອງລ້ານຊ້າງ ໃນສະໄໝຊຽງທອງມີ ຫັດຖະກຳຕ່ຳແຜ່ນ, ປັ້ນດິນເຜົາ, ປະດິດເຄື່ອງເອ້ຍ້ອງ, ຄວັດລາຍ ແລະ ຫຼອມໂລຫະ.

ການຄ້າລ້ານຊ້າງສະໄໝຊຽງທອງມີສອງປະເທດ: ການຄ້າພາຍໃນ ແລະ ການຄ້າພາຍນອກ. ການຄ້າ ພາຍໃນໝາຍເຖິງ ການຄ້າລະຫວ່າງຫົວເມືອງພາຍໃນອານາຈັກ, ສ່ວນການຄ້າພາຍນອກ ໝາຍເຖິງການຄ້າຕ່າງ ແດນກັບອານາຈັກຕ່າງໆ. ຕາມຫຼັກຖານທາງປະຫວັດສາດຂອງອານາຈັກໃກ້ຄຽງບອກໃຫ້ຮູ້ວ່າ ອານາຈັກລ້ານ ຊ້າງສະໄໝຊຽງທອງ ມີການພົວພັນການຄ້າພາຍນອກກັບອານາຈັກຕ່າງໆ ມາແຕ່ດົນນານ ໂດຍຜ່ານສີ່ເສັ້ນທາງ ຄື ທາງຕາເວັນຕົກ, ທາງເໜືອ, ທາງຕາເວັນອອກ ແລະ ທາງໃຕ້. ດ້ວຍເຫດນັ້ນ "ນະຄອນຊຽງທອງ" ກໍນ່າຈະເປັນລັດສູນກາງການຄ້າພາຍໃນພາກພື້ນທະວີ.

**ຄ. ການຕໍ່ສູ້ຕ້ານການຮຸກຮານຂອງສັກດີນາຕ່າງດ້າວ**

ອານາຈັກລ້ານຊ້າງສະໄໝຊຽງທອງ ເຖິງແມ່ນວ່າຈະມີຄວາມເຂັ້ມແຂງ ແລະ ເປັນທີ່ເກງຂາມຂອງບັນດາອານາຈັກອ້ອມຂ້າງ ແຕ່ໃນບາງຊ່ວງອານາຈັກລ້ານຊ້າງກໍຖືກອານາຈັກສັກດີນາອ້ອມຂ້າງດຳເນີນການຂົ່ມຂູ່ ແລະ ຮຸກຮານ ເຊັ່ນ:

1) ສົງຄາມລ້ານຊ້າງ - ອານາມ:

ສົງຄາມລ້ານຊ້າງກັບສັກດີນາອານາມເກີດຂຶ້ນໃນລະຫວ່າງ ປີ ຄສ 1479 ໂດຍພະເຈົ້າເລແທັງ ຕົງກະສັດແຫ່ງອານາມທີ່ຕ້ອງການແຜ່ຂະຫຍາຍອານາເຂດ ແລະ ດິນແດນໄດ້ເປີດສາກດຳເນີນການຮຸກຮານອາ ນາຈັກລ້ານຊ້າງພາຍໃຕ້ຂໍ້ອ້າງຂອງການເປີດສົງຄາມວ່າ "ສົງຄາມຊ້າງ" ດ້ວຍການຍົກກຳລັງ 5 ທັບໃຫຍ່ບຸກຕີເຂົ້າທາງພາກເໜືອ ແລະ ພາກກາງ ຂອງອານາຈັກລ້ານຊ້າງແບບສາຍຟ້າ. ສຸດທ້າຍກໍຖືກກອງທັບ ແລະ ປະຊາ ຊົນຊາວລ້ານຊ້າງຕີໃຫ້ປະລາໄຊ ແລະ ຂັບໄລ່ອອກຈາກອານາຈັກລ້ານຊ້າງຢ່າງບໍ່ເປັນລະບຽບ. ຜົນຂອງສົງຄາມ ຄັ້ງນີ້ ເຮັດໃຫ້ກະສັດແຫ່ງອານາມຍອມຮັບວ່າ "ແຕ່ນີ້ເມື່ອໜ້າຢ່າຊວນຂ້າໄລ່ຕີລາວອີກ".

2) ສົງຄາມລ້ານຊ້າງ - ອາຍຸດທະຍາ

ສົງຄາມລະຫວ່າງລ້ານຊ້າງກັບອະຍຸດທະຍາ ເກີດຂຶ້ນໃນສະໄໝການປົກຄອງຂອງພະເຈົ້າໂພທິສາຣະຣາດ ໃນປີ ຄ.ສ 1533 ໂດຍແມ່ນສັກດີນາອະຍຸດທະຍາ ເປັນຜູ້ຍົກທັບມາຮຸກຮານອານາຈັກລ້ານຊ້າງພາຍໃຕ້ຂໍ້ອ້າງວ່າ "ເພື່ອຈັບກຸມເອົາເຈົ້າໄຊຍະຣາຊາໄປລົງໂທດ" ຕາມແຜນການຄວາມຕ້ອງການ ເພື່ອຂະຫຍາຍອິດທິພົນ ແລະ ດິນແດນຂອງສັກດີນາສະຫຍາມອະຍຸທະຍາ ໂດຍໃຊ້ກອງກຳລັງຫຼວງແຫ່ງອາຍຸດທະຍາບຸກ

ໂຈມຕີເຂົ້າສູ່ດິນແດນອານາຈັກລ້ານຊ້າງ ຍຶດເອົາເມືອງວຽງຄຸກ ຊຶ່ງເປັນເມືອງສຳຄັນທາງດ້ານຕາເວັນຕົກຂອງນະຄອນວຽງຈັນ. ຜ່ານສົງຄາມຄັ້ງນີ້, ກອງທັບອາຍຸດທະຍາ ທີ່ຕັ້ງຢູ່ທົ່ງສາລາຄຳ ແລະ ວຽງຄຸກ ໄດ້ຖືກກອງທັບປະຊາຊົນລາວລ້ານຊ້າງທຳການບຸກໂຈມຕີຂັບໄລ່ ຈົນແຕກທັບອອກຈາກດິນແດນລ້ານຊ້າງຢ່າງບໍ່ເປັນລະບຽບ ແລະ ໄດ້ສູນເສຍກຳລັງພົນ, ຊ້າງເສິກ ແລະ ມ້າເສິກເປັນຈຳນວນຫຼວງຫຼາຍ.

### 2.2 ລ້ານຊ້າງສະໄໝວຽງຈັນ

ອານາຈັກລ້ານຊ້າງສະໄໝວຽງຈັນນີ້ເປັນຊ່ວງທີ່ອານາຈັກລ້ານຊ້າງມີຄວາມຈະເລີນຮຸ່ງເຮືອງ, ເພາະເປັນຊ່ວງທີ່ສັງຄົມລ້ານຊ້າງໄດ້ຜ່ານການບູລະນາການມາເປັນເວລາຍາວນານ. ດັ່ງນັ້ນ, ສັງຄົມລ້ານຊ້າງໃນໄລຍະນີ້ ຈຶ່ງເປັນສັງຄົມທີ່ມີລະບົບແບບແຜນຢ່າງຊັດເຈນ. ການຄຸ້ມຄອງສັງຄົມມີການນຳໃຊ້ກົດໝາຍ ທີ່ເປັນລາຍລັກອັກສອນທີ່ອີງໃສ່ຫຼັກທຳຂອງພຸດທະສາດສະໜາມາເປັນເຄື່ອງມືຊ່ວຍ ໃນການຄວບຄຸມຄົນໃຫ້ມີການຢູ່ຮ່ວມກັນໂດຍສັນຕິ. ອານາຈັກລ້ານຊ້າງສະໄໝວຽງຈັນນີ້ ກຳນົດເອົາ ແຕ່ ປີ ຄ.ສ 1560 ຈົນຮອດ ຄ.ສ 1713 ແລະ ມີສູນກາງການປົກຄອງຢູ່ທີ່ເມືອງວຽງຈັນ.

**ບັນດາກະສັດທີ່ປົກຄອງໃນສະໄໝລ້ານຊ້າງວຽງຈັນ:**

| ລັບດຳ | ປີຄອງລາດ | ຊື່ກະສັດ | ນາມມະຍົດ |
|---|---|---|---|
| 1 | ຄສ 1550 - 1572 | ພະເຈົ້າເຊຖະວົງໂສ | ພະອຸໄທພູທອນບໍອອນໄຊຍະເຊດຖາ ພູວະນາຖາທິປັດສີສັດຕະນະຄະນະຫຸດ |
| 2 | ຄສ 1573 - 1579 | ພະຍາແສນສຸລິນທະລືໄຊ | ພະສຸມັງຄະລະໄອຍະໂກໂພທິສັດ |
| 3 | ຄສ 1575 - 1579 | ພະເຈົ້າວໍລະວົງໂສ | ພະມະຫາອຸປະລາຊາວໍລະວັງໂສ |
| 4 | ຄສ 1580 - 1582 | ພະຍາແສນສຸລິທະລືໄຊ | ພະສຸມັງຄະລະໄອຍະໂກໂພທິສັດ |
| 5 | ຄສ 1582 | ພະຍານະຄອນນ້ອຍ | |
| | ຄສ 1582 - 1590 | ບໍ່ມີກະສັດປົກຄອງເປັນເວລາ 7 ປີ | |
| 6 | ຄສ 1591 - 1598 | ພະໜໍ່ເມືອງ | |
| 7 | ຄສ 1598 - 1600 | ພະວໍລະວົງສາ | ພະວໍລະວົງສາທຳມິກະລາດ |
| 8 | ຄສ 1600 - 1622 | ພະອຸປະຍຸວະລາດ | |
| 9 | ຄສ 1623 - 1627 | ພະຍາມະຫານາມ | ພະບັນດິດໂພທິສານ |
| 10 | ຄສ 1627 - 1638 | ເຈົ້າໜ່ອມແກ້ວ | ພະໜ່ອມແກ້ວ |
| 11 | ຄສ 1638 - 1690 | ເຈົ້າສຸລິຍະກຸມມານ | ພະເຈົ້າສຸລິຍະວົງສາທຳມະທິລາດ |
| 12 | ຄສ 1690 - 1695 | ເຈົ້າອົງຫຼໍ່ | |
| 13 | ຄສ 1695 - 1698 | ເຈົ້ານັນທະຣາດ | |
| 14 | ຄສ 1698 - 1730 | ເຈົ້າໄຊວົງເວ້ | ພຣະໄຊຍະເຊດຖາທິຣາດ 2 |

ອານາຈັກລ້ານຊ້າງພາຍຫຼັງທີ່ຍ້າຍສູນກາງການປົກຄອງຈາກຊຽງທອງມາຢູ່ວຽງຈັນແລ້ວບັນຫາທຳອິດທີ່ກະສັດລ້ານຊ້າງແຕ່ລະອົງໃນແຕ່ລະສະໄໝໄດ້ດຳເນີນໄປພ້ອມໆກັບການພັດທະນາອານາຈັກຄືເຊັ່ນ:

**ກ. ການປັບປຸງອານາຈັກ**

- ການກຳເນີດນະໂຍບາຍການປົກຄອງຄືການປັບປຸງລະບົບການຈັດຕັ້ງສາຍງານຂອງລັດ ໃຫ້ສອດຄ່ອງ ຊຶ່ງໄດ້ແກ່ ການກຳນົດຖານະ ແລະ ສິດອຳນາດຂອງສະຖາບັນກະສັດໃຫ້ຈະແຈ້ງ ພ້ອມທັງກຳນົດຖານະ ແລະ ສິດອຳນາດຂອງກົງຈັກການຊ່ວຍວຽກກະສັດໃຫ້ຊັດເຈນ. ການປັບປຸງລະບົບຕ່າງໆ ການປ້ອງກັນຊາດປ້ອງກັນຄວາມສະງົບໃຫ້ເຂັ້ມແຂງ ສ້າງລະບົບປ້ອງກັນນະຄອນຫຼວງ ດ້ວຍການປັບປຸງບູລະນະກຳແພງເມືອງ

ແລະ ການສ້າງລະບົບການຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະ ລະບຽບການຕ່າງໆ, ກຳຈັດກຸ່ມຄົນທີ່ຂັດແຍ່ງ ແລະ ເປັນປໍລະປັກ ຕໍ່ອຳນາດລັດດ້ວຍຮູບການຕ່າງໆ. ດຳເນີນການສ້າງສາຍພົວພັນກັບອານາຈັກອ້ອມຂ້າງຢ່າງມີໄມຕຣີຈິດ ທາງໃນຮູບແບບສາຍສຳພັນທາງໂລຫິດ ແລະ ແບບສ້າງສິ່ງຖາວອນທາງວັດຖຸ.

- ການຈັດຕຳແໜ່ງບໍລິຫານການປົກຄອງ ຄື ລະບົບບໍລິຫານອຳນາດສ່ວນກາງໃນສະໄໝລ້ານຊ້າງວຽງຈັນ ກວມເອົາເຂດເມືອງຫຼວງ ແລະ ເມືອງປ້ອມປາການ ຫຼື ເອີ້ນວ່າ ເມືອງກາງຢ້າວ. ລະບົບບໍລິຫານການປົກຄອງສ່ວນກາງຮວມມີອຳນາດລາຊະຕະກຸນ ແລະ ອຳນາດເສນາບໍດີ. ສະຖາບັນກະສັດປະກອບມີ ກະສັດ, ອຸປະລາດ, ລາຊະວົງ ແລະ ລາຊະບຸດ. ສະຖາບັນຂຸນນາງ ປະກອບມີ ຄະນະເສນາບໍດີຝ່າຍຂວາ, ຄະນະເສນາບໍດີຝ່າຍຊ້າຍ ແລະ ຄະນະເສນາບໍດີຝ່າຍກາງ. ຄະນະເສນາບໍດີ ຫຼື ເສນາມຸນຕີ ແມ່ນຄະນະບໍລິຫານວຽກງານຂອງອານາຈັກ ເຮັດໜ້າທີ່ເປັນກົງຈັກຊ່ວຍວຽກກະສັດ, ຮັບຜິດຊອບໃນຫຼາຍຖະແຫຼງການ, ມີການແບ່ງໜ້າທີ່ຂອບເຂດຮັບຜິດຊອບຢ່າງລະອຽດຊັດເຈນ. ອຳນາດທ້ອງຖິ່ນ ປະກອບມີເມືອງເອກເປັນນະຄອນຫຼວງ, ເປັນສູນກາງການປົກຄອງຂອງອານາຈັກ. ເຂື່ອນເມືອງເປັນເມືອງໃຫຍ່ເມືອງຍຸດທະສາດ, ເປັນເມືອງທີ່ມີການຈັດການ ປົກຄອງເປັນຂອງຕົນເອງ. ຂອບເມືອງ ເປັນເມືອງທີ່ຕັ້ງຢູ່ຕາມເຂດຊາຍແດນຂອງອານາຈັກ, ຜູ້ປົກຄອງເມືອງເຫຼົ່ານີ້ ມີຖານະເປັນເຈົ້າຄອງເມືອງ, ມີສັກດິນາ 1200 ເງິນ. ອຳນາດການປົກຄອງຂຶ້ນກົງກັບເຂດຫຼວງທີ່ວຽງຈັນ.

**໒. ສັງຄົມ ແລະ ເສດຖະກິດ**

ໂຄງປະກອບສ້າງຂອງສັງຄົມສະໄໝລ້ານຊ້າງວຽງຈັນ ມີລັກສະນະຄ້າຍຄືກັບສະໄໝຊຽງທອງ ໂດຍພິຈາລະນາຕາມກົດໝາຍໂຄສາລາດ ເຫັນວ່າໂຄງປະກອບສ້າງທາງສັງຄົມ ໄດ້ມີການແບ່ງຊັ້ນຄົນອອກ ເປັນປະເພດທີ່ມີຄວາມຊັດເຈນພໍສົມຄວນ ຄື ແບ່ງອອກເປັນຊັ້ນຄົນໃຫຍ່ດັ່ງນີ້: ກະສັດ, ຂຸນນາງ ຂ້າລາຊະການ ແລະ ໄພ່. ນອກຈາກນີ້ ຍັງມີຊັ້ນຄົນພິເສດ ຄື ພະສົງ. ການຄວບຄຸມຄົນໃນສັງຄົມຖືເອົາກົດໝາຍເປັນຫຼັກສົມທົບກັບຮີດຄອງ ແລະ ຄຳສອນຂອງພຸດທະສາດສະໜາບວກກັບວັນນະກຳຄຳສອນ. ລັດໃນສັງຄົມລ້ານຊ້າງວຽງຈັນ ຖືເອົາບັນຫາກຳລັງພົນ ຫຼື ໄພ່ລາສະດອນເປັນອົງປະກອບພື້ນຖານທີ່ສຳຄັນຂອງການດຳລົງຄົງຕົວຂອງລັດ. ດັ່ງນັ້ນ, ລັດຈຶ່ງມີມາຕະການຕ່າງໆ ເພື່ອເຂົ້າຄວບຄຸມກຳລັງພົນໃຫ້ຢູ່ໃນກອບຂອງຮີດບ້ານຄອງເມືອງ ເພື່ອໃຫ້ມີການຢູ່ຮ່ວມກັນໂດຍສັນຕິ.

ໃນດ້ານເສດຖະກິດນັ້ນ ພື້ນຖານເສດຖະກິດຂອງລ້ານຊ້າງສະໄໝວຽງຈັນ ເປັນການກະສິກຳ ຫັດຖະກຳ ແລະ ການຄ້າອົງປະກອບ. ເສດຖະກິດລ້ານຊ້າງ ຫາກພິຈາລະນາຈາກຜົນຜະລິດ ແລະ ສິນຄ້າທີ່ສົ່ງອອກແລ້ວເຫັນວ່າ ເປັນເສດຖະກິດຂະໜາດນ້ອຍ, ມີລັກສະນະກະແຈກກະຈາຍ. ເຖິງວ່າລັດຈະມີແຜນການສົ່ງເສີມຂະຫຍາຍການຜະລິດ ແຕ່ກໍມີລັກສະນະຂຶ້ນກັບທຳມະຊາດ. ການກະສິກຳ ມີສອງປະເພດ: ການປູກຝັງ ແລະ ລ້ຽງສັດ. ການປູກຝັງແມ່ນໃຈກາງຂອງອາຊີບ ມີສອງຮູບແບບຄືການເຮັດດຳນາແລະ ການເຮັດໄຮ່ເຮັດສວນ. ສະໄໝການປົກຄອງຂອງພະເຈົ້າສຸລິຍະວົງສາ ລັດມີການສົ່ງເສີມການຜະລິດການກະສິກຳ ແລະ ອອກກົດລະບຽບກ່ຽວກັບການຄຸ້ມຄອງທີ່ດິນ. ການຫັດຖະກຳ ຕາມຫຼັກຖານແລ້ວໄດ້ຮັບການພັດທະນາໃຫ້ຂະຫຍາຍຕົວໃນທຸກດ້ານ. ຕາມການບັນທຶກຂອງທູດການຄ້າໂຮນລັງບອກໃຫ້ຮູ້ວ່າ “ພໍ່ຄ້າຕ່າງແດນເຊັ່ນຈີນ, ສະຫຍາມ... ໄດ້ເອົາຜ້າຈາກອິນເດຍ ແລະ ຈີນມາແລກປ່ຽນກັບຜ້າຝ່າຍລາວລ້ານຊ້າງ ຢ່າງໜ້ອຍສາມຄັ້ງຕໍ່ປີ...” ການຄ້າ ໃນສະໄໝວຽງຈັນທຽບໃສ່ໃນສະໄໝຊຽງທອງເຫັນວ່າ ມີການຂະຫຍາຍຕົວຫຼາຍຈົນເອີ້ນວ່າ “ຍຸກຄຳ” ຂອງລ້ານຊ້າງ. ອີງຕາມການບັນທຶກຂອງພໍ່ຄ້າຊາວຕາເວັນຕົກ ທີ່ເດີນທາງເຂົ້າມາວຽງຈັນໃນສະຕະວັດທີ 17

ບອກວ່າ ລ້ານຊ້າງມີສິນຄ້າຂາອອກຢູ່ສາມປະເພດ ຄື ແຮ່ທາດ, ເຄື່ອງປ່າຂອງດົງ ແລະ ແຜ່ນແພ. (Lejosne: 1978 : 103 - 164). ສິນຄ້າສົ່ງອອກທີ່ມີລາຄາແພງໄດ້ແກ່: ຍານ, ຄັ່ງ, ງາຊ້າງ, ນໍແຮດແລະ ແຮ່ທາດ. ສ່ວນສິນຄ້າຂາເຂົ້າແມ່ນເປັນສິນຄ້າປະເພດຟູມເຟືອຍ. ລາຍຮັບສ່ວນໃຫຍ່ຂອງລັດໄດ້ມາຈາກງວດງາ, ອາກອນ ແລະ ການເກັບສ່ວຍ. ການຄ້າໃນເວລານັ້ນ ມີການໃຊ້ເງິນເປັນພາຫານະສື່ກາງໃນການແລກປ່ຽນ. ຄ່າຂອງເງິນກຳນົດເອົາ "ບາດ" ເປັນຫົວໜ່ວຍ.

**ຄ. ການຕໍ່ສູ້ຕ້ານການຮຸກຮານຂອງສັກດີນາສະຫຍາມ**

ສົງຄາມລ້ານຊ້າງກັບພະມ້າເກີດຂຶ້ນຫຼັງຈາກທີ່ພະເຈົ້າໄຊຍະເສດຖາທິລາດກັບຈາກລ້ານນາມາປົກຄອງຢູ່ວຽງຈັນແລ້ວມອບບ້ານເມືອງໃຫ້ເຊື້ອສາຍກະສັດລ້ານນາ ພ້ອມດ້ວຍເສນາອາມາດພາກັນປົກຄອງ. ແຕ່ຍ້ອນຄວາມຄັດແຍ່ງພາຍໃນສັກດີນາລ້ານນາເອງ ຊຶ່ງສັກດີນາກຸ່ມໜຶ່ງ ໄດ້ໄປຂໍຄວາມຊ່ວຍເຫຼືອຈາກພະມ້າມາຊ່ວຍເລີຍກາຍເປັນສາເຫດໄດ້ນຳໄປສູ່ການເກີດສົງຄາມລ້ານຊ້າງກັບພະມ້າເຖິງສີ່ຄັ້ງຄື: ຄັ້ງທີ່ 1 ເກີດຂຶ້ນໃນປີຄສ 1564 ໂດຍແມ່ນພະມ້າເປັນຜູ້ປະລາໄຊ; ຄັ້ງທີສອງເກີດຂຶ້ນໃນປີຄສ 1571 ແລະຄັ້ງທີສາມໃນປີຄສ 1574 ກໍຍັງແມ່ນພະມ້າເປັນຜູ້ປະລາໄຊອີກ. ແຕ່ສົງຄາມຄັ້ງທີສີ່ເກີດຂຶ້ນໃນປີ ຄສ 1575 ນັ້ນ ແມ່ນພະມ້າເປັນຜູ້ໄດ້ຮັບໄຊຊະນະ. ເຖິງແມ່ນວ່າ ພະຍາແສນສຸລິນຈະເປັນຜູ້ຊຳນານສົງຄາມມາແລ້ວກໍຕາມ, ພະອົງກໍບໍ່ສາມາດ ນຳພາກອງທັບ ແລະ ປະຊາຊົນລ້ານຊ້າງ ສະກັດກັ້ນການຮຸກຮານຂອງກອງທັບບູເລັງນອງຄັ້ງນີ້ໄດ້. ໃນທີ່ສຸດກອງ ທັບພະມ້າກໍສາມາດຍຶດຄອງນະຄອນວຽງຈັນ ແລະ ໄດ້ແຕ່ງຕັ້ງມະຫາອຸປະຮາດວໍຣະວົງໂສ ເປັນເຈົ້າແຜ່ນດິນລ້ານຊ້າງ. ນັບແຕ່ນັ້ນມາ ອານາຈັກລ້ານຊ້າງກໍໄດ້ຕົກເປັນປະເທດສະລາດຂອງສັກດີນາພະມ້າ ແລະ ແກ່ຍາວເປັນເວລາ 20 ກວ່າປີ. ຈົນມາຮອດປີ ຄສ 1600 ພະເຈົ້າວໍລະວົງສາ ຈຶ່ງສາມາດປະກາດເອກະລາດອອກມາຈາກພະມ້າໄດ້ສຳເລັດ.

**2.3 ລ້ານຊ້າງສະໄໝແຕກແຍກ**

ອານາຈັກລ້ານຊ້າງສະໄໝນີ້ ເປັນຍຸກສະໄໝທີ່ອານາຈັກລ້ານຊ້າງມີຄວາມຂັດແຍ່ງພາຍໃນ ໂດຍສະເພາະກຸ່ມສັກດີນາ ທີ່ມີອຳນາດຫຼັງຈາກການສິ້ນພະຊົນຂອງພະເຈົ້າສຸລິຍະວົງສາ. ການຂັດແຍ່ງພາຍໃນຂອງກຸ່ມສັກດີນານີ້ ໄດ້ກາຍເປັນສາເຫດເຮັດໃຫ້ອານາຈັກຊ້າງທີ່ເຄີຍຮຸ່ງເຮືອງ ແລະ ເປັນເອກະພາບມາແຕ່ບູຮານນະການຕ້ອງຍຸດຕິລົງ ແລ້ວຖືກແບ່ງອອກເປັນ 3 ອານາຈັກ ຄື: ປີ ຄສ 1707 ແຍກອອກເປັນ 2 ອານາຈັກ ລະຫວ່າງວຽງຈັນກັບຫຼວງພຣະບາງ ແລະ ປີ ຄສ 1713 ແຍກເປັນສາມອານາຈັກຄື ຈຳປາສັກແຍກອອກຈາກວຽງຈັນ. ສຸດທ້າຍກໍຕົກຢູ່ໃຕ້ອິດທິພົນຂອງສັກດີນາຕ່າງດ້າວ ໂດຍສະເພາະສັກດີນາສະຫຍາມ ໃນປີ ຄ.ສ 1779. ອານາຈັກຊ່ວງນີ້ກຳນົດເອົາແຕ່ ຄ.ສ 1713 ຈົນຮອດ ຄ.ສ 1893.

**2.3.1 ການແຊກແຊງ ແລະ ຍຶດຄອງລາວຂອງສັກດີນາສະຫຍາມ**

ສວຍໂອກາດທີ່ອານາຈັກລ້ານຊ້າງກຳລັງມີຄວາມຄັດແຍ່ງພາຍໃນ ປະກອບກັບແນວຄິດຄຽດແຄ້ນສັກດີນາລາວ ແລະ ແນວຄິດຂະຫຍາຍອານາເຂດຂອງສັກດີນາສະຫຍາມ ທີ່ຕ້ອງການຄວາມເປັນໃຫຍ່ສົມ ທົບກັບການຮ້ອງຂໍກຳລັງຊ່ວຍເຫຼືອຂອງພັກພວກພະວໍລະລາດວົງສາ ໂດຍສະເພາະທ້າວກ່ຳໄດ້ມີສານເຖິງກຸງທົນ ບູລີ ໃຫ້ເອົາກຳລັງມາຊ່ວຍ; ພະຍາຕາກສິນຈຶ່ງເຫັນໂອກາດເໝາະສົມນຳເອົາກຳລັງຂຶ້ນມາບຸກໂຈມຕີເອົາອານາຈັກ ລ້ານຊ້າງ ດ້ວຍການຍຶດເອົານະຄອນຈຳປາສັກ ໃນປີ ຄສ 1776 ແລະ ມາໃນປີ ຄ.ສ 1778 ກໍລະດົມກຳລັງພົນ ເປັນຈຳນວນຫຼວງຫຼາຍ ສືບຕໍ່ສົງຄາມຮຸກຮານບຽດຍຶດເອົານະຄອນວຽງຈັນ ແຕ່ກໍຖືກກອງທັບ

ຂອງປະຊາຊົນລາວຊາວນະຄອນວຽງຈັນ ທຳການຕໍ່ຕ້ານຄືນຢ່າງແຂງແຮງ ຈົນມາຮອດປີ ຄ.ສ 1779 ສັກດີນາສະຫຍາມ ຈຶ່ງສາ ມາດຍຶດຄອງນະຄອນວຽງຈັນໄດ້.

ຫຼັງຈາກຍຶດເອົານະຄອນຈຳປາສັກຂອງເຈົ້າໄຊຍະກຸມມານ ແລະ ຍຶດເອົານະຄອນວຽງຈັນຂອງເຈົ້າສິລິບຸນຍະສານໄດ້ແລ້ວ ພວກສັກດີນາສະຫຍາມກໍບັງຄັບໃຫ້ເຈົ້າສຸລິຍະວົງ ແຫ່ງອານາຈັກຫຼວງພຣະບາງຍອມເປັນເມືອງສ່ວຍຂອງສະຫຍາມ. ຈາກນັ້ນພວກສັກດີນາສະຫຍາມ ໃຕ້ການບັນຊາຂອງມະຫາກະສັດສຶກກໍດຳເນີນການກວາດຕ້ອນເອົາຄົນລາວ ພ້ອມດ້ວຍວັດຖຸສິ່ງຂອງທີ່ມີຄ່າລົງໄປບາງກອກ.

### 2.3.2 ການຕໍ່ສູ້ຕ້ານສັກດີນາສະຫຍາມຂອງປະຊາຊົນລາວ ຄ.ສ 1779 - 1829

ໃນຕະຫຼອດທີ່ສັກດີນາສະຫຍາມຍຶດຄອງລ້ານຊ້າງນັ້ນປະຊາຊົນລາວ ໄດ້ຖືກກົດຂີ່ຂູດຮີດຢ່າງໜັກໜ່ວງ ບໍ່ວ່າຈະເປັນກຸ່ມຄົນທີ່ຍັງອາໄສຢູ່ໃນຖິ່ນຖານເດີມ ແລະ ກຸ່ມຄົນທີ່ຖືກກວາດຕ້ອນໄປ ໂດຍສະເພາະກຸ່ມຄົນລາວທີ່ຖືກກວາດຕ້ອນໄປ ຖືກບັງຄັບໃຫ້ຂຸດຄອງອອ້ມບາງກອກ ແລະ ວຽກສັບພະທຸກອື່ນໆ; ຜູ້ທີ່ເປັນນາຍຊ່າງກໍຖືກບັງຄັບໃຫ້ສ້າງຫໍໂຮງ, ພະລາຊະວັງໃຫ້ແກ່ສັກດີນາ, ຂຸນນາງສະຫຍາມ. ເວົ້າລວມແລ້ວຄົນລາວເຫຼົ່ານັ້ນ ໄດ້ຖືກບັງຄັບໃຫ້ເປັນທາດຮັບໃຊ້ໃຫ້ສັກດີນາສະຫຍາມ. ດັ່ງນັ້ນ, ໃນຕະຫຼອດທີ່ສັກດີນາສະຫຍາມປົກນັ້ນ ປະຊາຊົນລາວກໍ່ໄດ້ດຳເນີນການເຄື່ອນໄຫວຕໍ່ຕ້ານໂດຍຕະຫຼອດ ເປັນຕົ້ນຂະບວນການຕໍ່ຕ້ານສະຫຍາມຂອງຊາວຈຳປາສັກທີ່ນຳພາໂດຍເຈົ້າໂອ, ເຈົ້າອິນໃນປີ ຄສ 1780 - 1782 ໃນນັ້ນຂະບວນການທີ່ເດັ່ນຄື ຂະບວນການທີ່ນຳພາໂດຍເຈົ້າອະນຸວົງ 1826 - 1829.

ສົມເດັດພະເຈົ້າອະນຸວົງເປັນລາສະບຸດຂອງເຈົ້າສິຣິບຸນຍະສານ, ເປັນພະອະນຸຊາ (ນ້ອງຊາຍ) ຂອງເຈົ້ານັນທະເສນແລະເຈົ້າອິນທະວົງ. ພະອົງເກີດປີຄສ 1767 ຖືກຈັບໄປເປັນຕົວປະກັນທີ່ບາງກອກໃນປີຄສ 1779 ແລະໄດ້ຖືກແຕ່ງເປັນມະຫາອຸປະຣາດໃນປີຄສ 1795 ແລ້ວຂຶ້ນເປັນກະສັດແຫ່ງອານາຈັກ. ປີຄສ 1804 ຄສ 1826 ດຳເນີນການກູ້ຊາດແລະຄສ 1829 ໄດ້ສິ້ນພະຊົນທີ່ບາງກອກ.

ພາຍຫຼັງຂຶ້ນຄອງລາດພະອົງໄດ້ປັບປຸງກົງຈັກການປົກຄອງແລະຟື້ນຟູອານາຈັກລ້ານຊ້າງໃຫ້ກັບຄືນສູ່ປົກກະຕິເຊັ່ນ: ສ້າງພະລາຊະວັງ, ຫໍໂຮງ, ວັດວາອາຮາມ[18]... ໃນປີ 1822 ພະອົງໄດ້ຫາວິທີສົ່ງເຈົ້າລາຊະບຸດໂຍ້ໄປປົກຄອງຈຳປາສັກແລະດຳເນີນການເກ້ຍກ່ອມກະສັດຫຼວງພະບາງໃຫ້ຮ່ວມມືກັນເພື່ອກອບກູ້ເອກະລາດ, ອິດສະຫຼະພາບຄືນມາ. ສວຍໂອກາດທີ່ສະຖານະການຢູ່ສະຫຍາມມີການປ່ຽນແປງຄືໃນເວລານັ້ນກະສັດສະຫຍາມລາຊະການທີສອງພະພຸດທະເລີດຫຼ້ານະພາໄລ[19] ໄດ້ສິ້ນພະຊົນ ແລະ ມີການຊ່ວງຊີງບັນລັງຢູ່ກຸງເທບ, ເຈົ້າອະນຸວົງ ຈຶ່ງໄດ້ຮີບຮ້ອນກະກຽມການລຸກຮື້ຂຶ້ນ ກອບກູ້ເອກະລາດ, ອິດສະຫຼະພາບຢ່າງຈິງຈັງ. ພາຍຫຼັງກະກຽມຮຽບຮ້ອຍແລ້ວ, ໃນຕົ້ນປີ ຄ.ສ 1827 ການເຄື່ອນທັບໄດ້ເລີ່ມຕົ້ນຂຶ້ນໂດຍແບ່ງເປັນ ສາມປີກຄື: ປີກທີ 1 ແລະທີ 2 ອອກຈາກວຽງຈັນແລະປີກທີ 3 ອອກຈາກຈຳປາສັກ. ໃນຂະນະທີ່ກອງທັບລ້ານຊ້າງພວມເຄື່ອນໄຫວອົບພະຍົກຄອບຄົວຊາວລາວກັບຄືນບ້ານເດີມຢູ່ນັ້ນ, ກອງທັບສະຫຍາມໄດ້ເຄື່ອນອອກມາຈາກກຸງເທບແລະຈາກພະຕະບອງຢ່າງຂະໜາດໃຫຍ່, ມີທັງກອງທະຫານຮັບຈ້າງຕ່າງຊາດເຊັ່ນ: ອັງກິດ, ຂະແມ, ມອນ…ສະນັ້ນ, ກອງທັບລ້ານຊ້າງໄດ້ຖອຍທັບກັບຄືນເພື່ອຮັກສາກຳລັງແລະປ້ອງກັນວຽງຈັນໄວ້. ຜ່ານການສູ້ຮົບຢ່າງດຸເດືອດ, ເຖິງວ່າກອງທະຫານລ້ານຊ້າງອົງອາດກ້າຫານປານໃດກໍຕາມກໍບໍ່ສາມາດສະກັດກັ້ນກອງທັບສະຫຍາມທີ່ມີກຳລັງພົນຫຼວງຫຼາຍແລະອາວຸດທັນສະໄໝກວ່າ; ແມ່ທັບລ້ານຊ້າງຫຼາຍຄົນໄດ້ເສຍສະຫຼະຊີວິດຢ່າງວິລະຊົນເຊັ່ນ: ພະຍານະລິນ…

ເມື່ອຊັ່ງຊາກຳລັງເຫັນວ່າ ຈະຕ້ານທານກອງທັບສະຫຍາມບໍ່ໄດ້, ເຈົ້າອານຸວົງ ຈຶ່ງໄດ້ພາຄອບຄົວໜີໄປຢູ່ຫວຽດນາມ (ເມືອງວິນ) ເພື່ອປັບປຸງກຳລັງຕໍ່ສູ້ອີກຄັ້ງໜຶ່ງ. ສ່ວນກອງທັບສະຫຍາມພາຍຫຼັງ ທີ່ບຸກຍຶດເອົານະຄອນວຽງຈັນໄດ້ແລ້ວພວກເຂົາກໍດຳເນີນການປຸ້ນສະດົມຍຶດເອົາເງິນ, ຄຳ, ຊັບສົມບັດ, ພະພຸດທະຮູບອົງສຳຄັນ: ພະສຸກ, ພະໃສ, ພະເສີມ, ພະແຊກຄຳ, ພະແກ່ນຈັນ, ພະເງິນຫຼໍ່, ພະເງິນບຸ, ພະສັນສົ້ມມໍ, ພະນາກສະຫວາດ, ພະສິ່ງນ້ຳ, ພະນາກປົກສິລາ..., ຕັດຕົ້ນໄມ້ກິນໝາກ, ທຳລາຍກຳແພງເມືອງວຽງຈັນ; ຈາກນັ້ນພວກເຂົາກໍຈັບກຸມກວາດຕ້ອນຊາວວຽງຈັນໄປບາງກອກແລະຈູດເຜົາວຽງຈັນອີກ. ສ່ວນພະເຈົ້າອະນຸວົງ, ເຈົ້າລາຊະວົງຫຼັງຈາກປັບປຸງກຳລັງຢູ່ອານາມໄດ້ປີໜຶ່ງກໍໄດ້ກັບຄືນມາວຽງຈັນແລະຍຶດເອົາເມືອງວຽງຈັນຄືນ.ຈາກນັ້ນກໍວາງແຜນການແລະຈັດຕັ້ງກຳລັງເພື່ອປົດປ່ອຍດິນແດນແຕ່ກໍບໍ່ສາມາດດຳເນີນຕາມແຜນການໄດ້ສຳເລັດເນື່ອງຈາກຂາດກຳລັງຄົນ. ສະນັ້ນເຈົ້າອານຸວົງຈຶ່ງໄດ້ຕັດສິນໃຈໜີຈາກວຽງຈັນອີກຄັ້ງ, ແຕ່ກໍຖືກກອງທັບສະຫຍາມຈັບຕົວໄດ້ຢູ່ແດນເມືອງພວນ. ຈາກນັ້ນພະອົງພ້ອມຄອບຄົວໄດ້ຖືກຄຸມຕົວໄປກຸງເທບແລະພະອົງໄດ້ຖືກທໍລະມານຈົນສິ້ນພະຊົນໃນປີຄ.ສ 1829. ຂະບວນການຕໍ່ສູ້ດັ່ງກ່າວນີ້ເຖິງແມ່ນວ່າຈະບໍ່ປະສົບຜົນສຳເລັດກໍຕາມແຕ່ມັນກໍໄດ້ເປັນແວ່ນແຍງແລະເປັນບົດຮຽນອັນປະເສີດໃຫ້ແກ່ຊາວລາວໃນຮຸ່ນຄົນຕໍ່ມາຮໍ່າຮຽນເອົາເປັນແບບຢ່າງ.

### 2.3.3 ສະພາບຂອງອານາຈັກລ້ານຊ້າງແຕ່ປີຄສ 1829 - 1893

ອານາຈັກລ້ານຊ້າງແຕ່ປີຄສ 1829 - 1893 ເປັນຊ່ວງທີ່ອານາຈັກລ້ານຕົກເປັນເມືອງຂຶ້ນຂອງສັກດີນາສະຫຍາມແລະເປັນຊ່ວງທີ່ອານາຈັກລ້ານຊ້າງຖືກທຳລາຍຢ່າງໜັກໜ່ວງຈາກການກະທຳຂອງສັກດີນາສະຫຍາມຊຶ່ງຄົນລາວທັງຊາດບໍ່ສາມາດລືມແລະອະໄພໃຫ້ໄດ້.

ຫຼັງຈາກສັກດີນາສະຫຍາມສຳເລັດໃນແຜນການປາບປາມຂະບວນການກູ້ຊາດຂອງປະຊາຊົນລາວແລ້ວ, ສັກດີນາສະຫຍາມໄດ້ດຳເນີນການຈັດການປົກຄອງລາວຕາມນະໂຍບາຍ "ກືນກິນຊາດອື່ນເພື່ອຫັນເອົາລາວລ້ານຊ້າງເປັນເມືອງຂຶ້ນໂດຍກົງແລະຕະຫຼອດການ". ພວກເຂົາໄດ້ຈັດແບ່ງອານາຈັກລ້ານຊ້າງອອກເປັນ 3 ເຂດເພື່ອປົກຄອງ: ຫົວເມືອງລາວພາກຕາເວັນອອກສຽງເໜືອ, ຫົວເມືອງລາວພາກຕາເວັນອອກແລະຫົວເມືອງລາວພາກເໜືອ[20]ຊຶ່ງແຕ່ລະເຂດມີຂ້າຫຼວງໃຫຍ່ສະຫຍາມປະຈຳການແລະບັນຊາໂດຍກົງ. ຈາກນັ້ນສັກດີນາສະຫຍາມກໍໄດ້ດຳເນີນການເກັບສ່ວຍຈາກຊາວລາວຢ່າງໜັກໜ່ວງ ພ້ອມທັງບັງຄັບໃຫ້ສົ່ງບັນນາການ: ຕົ້ນໄມ້ເງິນ, ຕົ້ນໄມ້ຄຳ, ງາຊ້າງ, ໝາກແໜ່ງ...ນອກຈາກກົດຂີ່ຂູດຮີດທາງດ້ານເສດຖະກິດແລ້ວ, ສັກດີນາສະຫຍາມຍັງໄດ້ອອກນະໂຍບາຍບີບຮັດທາງດ້ານຈິດໃຈຂອງຄົນລາວເຊັ່ນ: ໃນປີ ຄສ 1865 ສັກດີນາສະຫຍາມໄດ້ອອກກົດໝາຍ "ຫ້າມຄົນລາວເປົ່າແຄນ" ຊຶ່ງເປັນການບີບບັງຄັບທີ່ໄຮ້ມະນຸດສະທຳທີ່ສຸດ.

ຕໍ່ມາເພື່ອເຮັດໃຫ້ການປົກຄອງລາວຮັດກຸມກວ່າເກົ່າສັກດີນາສະຫຍາມກໍໄດ້ຈັບແບ່ງຫົວເມືອງລາວຄືນໃໝ່ຄືແບ່ງອອກເປັນ 4 ເຂດໃຫຍ່[21]ມາໃນປີຄສ 1890 ແລະປີຄສ 1981[22]ເພື່ອແນ່ໃສ່ສະກັດກັ້ນຂະບວນການຕໍ່ສູ້ຂອງປະຊາຊົນລາວແລະການແຊກແຊງຂອງຈັກກະພັດຝຣັ່ງ. ແຕ່ເຖິງຢ່າງໃດກໍຕາມພວກສັກດີນາສະຫຍາມກໍບໍ່ສາມາດຢຸຕິການຕໍ່ສູ້ຂອງຊາວລາວຜູ້ຮັກຊາດໄດ້ແລະບໍ່ສາມາດຢັບຢັ້ງການແຜ່ອິດທິພົນຂອງຈັກກະພັດລ່າເມືອງຂຶ້ນຝຣັ່ງເຂົ້າສູ່ດິນແດນລາວຝັ່ງຊ້າຍແມ່ນ້ຳຂອງໄດ້.

# ບົດທີ 5

# ລາວສະໄໝໃໝ່ ແລະ ປັດຈຸບັນ

## ລາວສະໄໝໃໝ່:

ປະຫວັດສາດລາວສະໄໝໃໝ່ນີ້ກຳນົດເອົາແຕ່ປີຄສ 1893 ຈົນຮອດປີຄສ 1975 ຊຶ່ງເປັນຊ່ວງທີ່ຊາດລາວເຮົາຕ້ອງປະເຊີນກັບການແຊກແຊງ, ຮຸກຮານແລະຄອບຄອງຂອງຈັກກະພັດຕ່າງດ້າວເຊັ່ນ: ຈັກກະພັດຝຣັ່ງ , ຍີ່ປຸ່ນແລະອາເມຣິກາກ່ອນທີ່ປະຊາຊົນລາວຈະຕໍ່ສູ້ຂັບໄລ່ໄດ້ສຳເລັດໃນປີຄສ 1975 ຊຶ່ງຈະນຳສະເໜີດັ່ງນີ້:

## 1. ການຄອບຄອງລາວຝຣັ່ງ

ຫຼັງຈາກທີ່ຈັກກະພັດລ່າເມືອງຂຶ້ນຝຣັ່ງສຳເລັດໃນການແຊກແຊງແລະຍຶດຄອງລາວແລ້ວພວກເຂົາກໍດຳເນີນການຕັດແບ່ງດິນແດນລາວມາ.

### 1.1 ການຕັດແບ່ງດິນລາວຂອງຝຣັ່ງ

**ກ. ຊາຍແດນດ້ານທິດຕາເວັນຕົກ**

ວັນທີ 3 ຕຸລາ ຄ.ສ 1893 ຈັກກະພັດຝຣັ່ງກັບສັກດີນາສະຫຍາມ ໄດ້ເຮັດສົນທິສັນຍາ ເພື່ອແບ່ງປັນດິນແດນກັນຄອບຄອງ ຊຶ່ງເອີ້ນວ່າ "ສົນທິສັນຍາບາງກອກ". ສັນຍານີ້ໄດ້ຕັດແບ່ງດິນແດນອານາຈັກ ລາວລ້ານຊ້າງອອກເປັນສອງສ່ວນ ຄື ຝັ່ງຊ້າຍແມ່ນ້ຳຂອງຂຶ້ນກັບຝຣັ່ງ ແລະ ຝັ່ງຂວາແມ່ນ້ຳຂອງຂຶ້ນກັບສະຫຍາມ ໂດຍກຳນົດເອົາລຳນ້ຳຂອງເປັນເສັ້ນຊາຍແດນລະຫວ່າງ ລາວ - ສະຫຍາມ ຊຶ່ງການກຳນົດນັ້ນ ເປັນການລ່ວງລະເມີດສິດທິພື້ນຖານຂອງປະຊາຊົນລາວ. ສະນັ້ນ ເຂົາເຈົ້າໄດ້ທຳການຕໍ່ຕ້ານ, ຄັດຄ້ານ, ປະທ້ວງຝຣັ່ງ ແລະ ສະຫຍາມ ດ້ວຍຫຼາຍຮູບການອັນເປັນຜົນເຮັດໃຫ້ຝຣັ່ງ ແລະ ສະຫຍາມ ຈຳຕ້ອງເຈລະຈາແບ່ງປັນດິນແດນກັນຄືນໃໝ່ໃນວັນທີ 13 ກຸມພາ ປີ 1904. ໂດຍທີ່ສະຫຍາມຍົກເອົາດິນຝັ່ງຂວາຂອງ ແຂວງຫຼວງພະບາງ ຮວມທັງໄຊຍະບູລີ ແລະ ຈຳປາສັກ ໃຫ້ແກ່ຝຣັ່ງ. ມາຮອດປີ ຄ.ສ 1907[23] ຝຣັ່ງ ໄດ້ຍົກດິນແດນເມືອງດ່ານຊ້າຍໃຫ້ແກ່ສະ ຫຍາມ ເພື່ອແລກປ່ຽນເອົາແຂວງສຽມຣຽບ, ສີໂສພົນ, ພະຕະບອງ ແລະ ພະນົມສົກຂອງກຳປູເຈຍ.

ສ່ວນຊາຍແດນດ້ານຕາເວັນຕົກສຽງເໜືອນັ້ນ ຈັກກະພັດຝຣັ່ງ ກໍໄດ້ເຈລະຈາຕົກລົງເຊັນສັນຍາກັນກັບອັງກິດ ໃນວັນທີ 20 ເມສາ 1904 ໂດຍໄດ້ກຳນົດວ່າ ບໍ່ໃຫ້ອັງກິດຍຶດປະເທດສະຫຍາມເປັນຫົວເມືອງຂຶ້ນ, ໃຫ້ສະຫຍາມເປັນລັດກັນຊົນລະຫວ່າງຝຣັ່ງກັບອັງກິດ ແລະ ໄດ້ກຳນົດຊາຍແດນ ລາວ - ພະມ້າ ໂດຍກຳນົດເອົາຄອງນ້ຳເລິກຂອງ ແມ່ນ້ຳຂອງເປັນເສັ້ນແບ່ງເຂດແດນ. ສັນຍານີ້ ເຮັດໃຫ້ປະເທດລາວ ເສຍດິນແດນຝັ່ງຂວາແມ່ນ້ຳຂອງ ເຊັ່ນ: ເມືອງຊຽງຕຸງ, ທ່າເດື່ອ, ທົ່ງຂີ້ເຫຼັກ, ລັດຊານ, ຊຽງລາບ, ເມືອງຍອງ ຈົນຮອດປັດຈຸບັນ.

**ຂ. ຊາຍແດນພາກຕາເວັນອອກ:**

ເມື່ອຝຣັ່ງ ໄດ້ມີສິດປົກຄອງແຜນດິນລາວຝັ່ງຊ້າຍແມ່ນ້ຳຂອງຢ່າງເຕັມຕົວແລ້ວ, ພວກເຂົາໄດ້ຈັດໃຫ້ ລາວເຂົ້າເປັນໜຶ່ງໃນແຄວ້ນທີ່ຂຶ້ນກັບ "ສະຫະພັນອິນດູຈີນຝຣັ່ງ"[24]. ຝຣັ່ງໄດ້ກຳນົດຊາຍແດນລະຫວ່າງແຄວ້ນນີ້ ຕາມໃຈຊອບ ເພື່ອສະດວກໃນການປົກຄອງຂອງພວກເຂົາ ເຊັ່ນ: ຝຣັ່ງໄດ້ຕັດແບ່ງດິນແດນລາວໃນເຂດສິບໂມ້, ເມືອງແສນ, ກະຢາ, ກອນກວາງ, ໄລ່, ລ້າ ແລະ ແຖງ ໄປຂຶ້ນກັບແຄວ້ນຕັງແກັງປະເທດຫວຽດນາມ.

**ຄ. ຊາຍແດນພາກເໜືອ:**

ຫຼັງຈາກສົງຄາມຈີນ - ຍີ່ປຸ່ນ ສິ້ນສຸດລົງແລ້ວ ຝຣັ່ງກໍຊຸ້ນຂ້ຽວເຈລະຈາກັບຈີນ ກ່ຽວກັບການກຳນົດຊາຍແດນ ແລະ ສຳເລັດລົງໃນວັນທີ 20 ມິຖຸນາ ຄ.ສ 1895 ຊຶ່ງສັນຍານີ້ ຝຣັ່ງໄດ້ຍົກດິນແດນລາວ ເຂດສິບສອງພັນນາລື້ໃຫ່ແກ່ຈີນ ໂດຍກຳນົດເອົາຫ້າງອໍ້ ເປັນເຂດແດນລາວ - ຈີນ ເພື່ອແລກປ່ຽນເອົາສິດການຄ້າໃນປະເທດຈີນ. ສັນຍານີ້ ເຮັດໃຫ້ປະເທດລາວໄດ້ສູນເສຍເຂດສິບສອງພັນນາລື້ ໂດຍສະເພາະເມືອງຊຽງຮຸ່ງ...ມາຈົນເທົ້າປັດຈຸບັນ.

**ງ. ຊາຍແດນພາກໃຕ້:**

ເນື່ອງຈາກດິນແດນທາງພາກຕາເວັນອອກ ແລະ ທາງໃຕ້ ຢູ່ໃນເຂດຄອບຄອງຂອງຝຣັ່ງ. ດັ່ງນັ້ນ, ຝຣັ່ງຈຶ່ງໄດ້ນຳເນີນການຕັດແບ່ງດິນລາວຕາມໃຈ ເຊັ່ນ: ກຳນົດເອົາເຂດກະແຈະຊຽງແຕະ, ແສນປານ ແລະ ເວີນໄຊ ໄປຂຶ້ນກັບແຄວ້ນກຳປູເຈຍ ແລະ ຕັດແບ່ງດິນລາວແຂວງຢາລາຍ, ກອນຕູມ ໄປຂຶ້ນກັບແຄວ້ນອານນາມ. ການກຳນົດດັ່ງກ່າວນັ້ນ ຊຶ່ງຕໍ່ມາໄດ້ກາຍເປັນເສັ້ນຊາຍແດນຖາວອນມາຈົນຮອດປັດຈຸບັນ ແລະ ມັນກໍໄດ້ເຮັດໃຫ້ ປະຊາຊົນລາວ ໄດ້ສູນເສຍດິນແດນເຫຼົ່ານີ້ມາຈົນຮອດປັດຈຸບັນເຊັ່ນກັນ.

**1.2 ການຈັດການປົກຄອງລາວຂອງຝຣັ່ງ**

ນັບແຕ່ປີ ຄສ 1893 ຈົນຮອດປີ ຄສ 1945 ຈັກກະພັດຝຣັ່ງ ໄດ້ດຳເນີນການຈັດການປົກຄອງລາວໄປຕາມແຕ່ລະໄລຍະ ເພື່ອສະດວກໃນການຄຸ້ມຄອງຂອງພວກເຂົາ ເຊັ່ນ:

**ກ. ໄລຍະທີ I ຄ.ສ 1893 - 1895**

ເພື່ອປະຕິບັດຍຸດໂທບາຍ “ເອົາໃຈສັກດິນາລາວ”, ໃນຕອນຕົ້ນນີ້ ຝຣັ່ງໄດ້ຮັກສາຮູບການຈັດຕັ້ງເດີມຂອງສັກດິນາລາວໄວ້ຄື ເຈົ້າຊີວິດ ມີຫໍສະໜາມຫຼວງຕາມແບບເດີມ, ມີລະບົບຂ້າລາຊະການຄົບຊຸດ ເຊັ່ນ ເຈົ້າອຸ ປະຮາດ, ເຈົ້າລາຊະວົງ, ເຈົ້າລາຊະບຸດ, ເຈົ້າລາຊະສຳພັນທະວົງ, ເຈົ້າລາຊະພາຄີໃນ, ເຈົ້າກົມມະຂຸນ, ເຈົ້າກົມພະຄັງ.

**ຂ. ໄລຍະທີ II ຄ.ສ 1895 - 1899**

ປີ ຄ.ສ 1895 ຝຣັ່ງໄດ້ເລີ່ມປ່ຽນແປງລະບົບການປົກຄອງຢູ່ລາວ ຄືໄດ້ປະກາດລົບລ້າງກົດໝາຍເກົ່າ ຂອງສັກດິນາບາງສະບັບ ທີ່ຂັດກັບການປົກຄອງແບບລ່າເມືອງຂຶ້ນຂອງພວກເຂົາ. ຈາກນັ້ນ, ພວກເຂົາໄດ້ຈັດແບ່ງປະເທດລາວອອກເປັນສອງເຂດດັ່ງນີ້:

- ເຂດເໜືອ: ໝາຍເຖິງຂອບເຂດອານາຈັກຫຼວງພະບາງ ຝຣັ່ງໄດ້ຈັດໃຫ້ເປັນເຂດອາລັກຂາ (Protectorat) ຊຶ່ງມີເຈົ້າຊີວິດສັກກະຣິນ ເປັນຜູ້ປົກຄອງ. ແຕ່ກໍຕ້ອງຢູ່ໃຕ້ການຄວບຄຸມບົ່ງການຂອງ ບູໂຢສ (Boulloche) ຜູ້ສຳເລັດລາຊະການຝຣັ່ງປະຈຳລາວ.
- ເຂດໃຕ້: ນັບແຕ່ວຽງຈັນຈົນໄປຮອດຊາຍແດນກຳປູເຈຍ ແມ່ນຈັດເປັນເຂດເມືອງຂຶ້ນໂດຍກົງ (Colony).

**ຄ. ໄລຍະທີ III ຄ.ສ 1899 - 1941**

ປີ ຄ.ສ 1899 ຝຣັ່ງໄດ້ຈັດເອົາປະເທດລາວເຂົ້າເປັນແຄວ້ນທີ 5 ຂອງສະຫະພັນອິນດູຈີນຝຣັ່ງໃນໄລຍະນີ້ເອງທີ່ປະຊາຊົນລາວໄດ້ຕໍ່ສູ້ທວງໃຫ້ຝຣັ່ງທ້ອນໂຮມປະເທດລາວໃຫ້ເປັນເອກະພາບໂດຍເອົານະຄອນວຽງຈັນເປັນນະຄອນຫຼວງ. ສະນັ້ນໃນປີນີ້ເອງທີ່ຝຣັ່ງໄດ້ທ້ອນໂຮມ 2 ພາກຄືພາກໃຕ້ແລະພາກເໜືອເຂົ້າກັນແລະເອົານະຄອນວຽງຈັນເປັນນະຄອນຫຼວງ.

ສະຫຼຸບແລ້ວນັບແຕ່ປີຄສ 1893 ຈົນຮອດຄສ 1941 ຈັກກະພັດລ່າເມືອງຂຶ້ນຝຣັ່ງໄດ້ຖືເອົາປະເທດລາວເປັນ "ເມືອງຂຶ້ນຫຼືອານານິຄົມ" ໂດຍກົງ. ແບ່ງເຂດປົກຄອງອອກມາເປັນແຂວງແຕ່ລະແຂວງມີຄົນຝຣັ່ງເປັນເຈົ້າແຂວງ. ສ່ວນຄົນລາວໄດ້ເປັນພຽງແຕ່ເຈົ້າເມືອງແລະຂ້າລາຊາການຂັ້ນຕໍ່າລົງມາແຕ່ຕ້ອງໄດ້ຮັບການເຫັນດີຈາກຝຣັ່ງ. ຮອດປີຄ.ສ 1941 ຟາຊິດຍີ່ປຸ່ນໄດ້ແຊກແຊງເຂົ້າມາເຮັດໃຫ້ລະບົບການປົກຄອງຂອງຝຣັ່ງຢູ່ໃນລາວເຊື່ອມໂຊມລົງແລະມີການປະສົມປະສານ ຂອງສອງຮູບແບບການປົກຄອງຢູ່ໃນລາວ ຄື ຟາຊິດຍີ່ປຸ່ນ ແລະ ແບບລ່າເມືອງຂຶ້ນຝຣັ່ງ.

ຕະຫຼອດໄລຍະທີ່ຈັກກະພັດຝຣັ່ງຄອບຄອງລາວ ພວກເຂົາໄດ້ວາງນະໂຍບາຍຂູດຮີດກອບໂກຍເອົາຄວາມອຸດົມຮັ່ງມີຂອງລາວ ຄື ກໍານົດໃຫ້ພົນລະເມືອງລາວຜູ້ຊາຍ ອາຍຸ 18 - 60 ໄປອອກແຮງງານຮັບໃຊ້ຝຣັ່ງຢ່າງນ້ອຍ 100 ວັນ/ປີ, ດໍາເນີນການເກັບພາສີນໍາຄົນລາວຢ່າງໜັກໜ່ວງ ທັງພາສີທາງກົງ ແລະ ພາສີທາງອ້ອມ [25]. ປີ 1923 ຝຣັ່ງໄດ້ເລີ່ມຂຸດຄົ້ນບໍ່ກົ່ວໂພນຕີ້ວ ແລະ ປີ 1933 ເລີ່ມຂຸດຄົ້ນບໍ່ກົ່ວຢູ່ບໍ່ແໜ່ງຄໍາມ່ວນ. ນອກຈາກນີ້ ຍັງໄດ້ຂຸດຄົ້ນເຄື່ອງປ່າຂອງດົງ, ໄມ້ທ່ອນ ເພື່ອຂາຍສົ່ງອອກ.

ທາງດ້ານການກໍ່ສ້າງພື້ນຖານໂຄງລ່າງ, ຈັກກະພັດຝຣັ່ງບໍ່ໄດ້ເອົາໃຈໃສ່ແຕ່ຢ່າງໃດເລີຍ. ລະບົບເສັ້ນທາງຄົມມະນາຄົມ ໄດ້ຮັບການກໍ່ສ້າງຂຶ້ນບົນພື້ນຖານການບົບບັງຄັບແຮງງານຄົນລາວ ເຊັ່ນ: ຄສ 1904 ສ້າງເສັ້ນ ທາງເລກທີ 9, ເລກທີ 13 (1911), ເລກທີ 12 (1927), ເລກທີ 6 ແລະ ເລກທີ 7 (1930), ແລະເລກທີ 23 (1942). ປີ ຄ.ສ 1900 ປະເທດລາວມີພຽງແຕ່ໂຮງໝໍແຫ່ງດຽວຢູ່ວຽງຈັນ, ເຖິງປີ 1938 ມີໂຮງມໍໃຫຍ່ພຽງແຕ່ ແຫ່ງດຽວຢູ່ວຽງຈັນ ແລະ ໂຮງໝໍນ້ອຍຢູ່ ຫຼວງພະບາງ, ຊຽງຂວາງ, ຄໍາມ່ວນ, ສະຫວັນນະເຂດ ແລະ ຈໍາປາສັກ. ທາງດ້ານສັງຄົມ - ວັດທະນາທໍາ ກໍບໍ່ໄດ້ຮັບການພັດທະນາ, ປີ 1902 ເປັນປີທໍາອິດ ທີ່ພວກເຂົາເລີ່ມລົງທຶນ ໃສ່ການສຶກສາພຽງເລັກນ້ອຍ ຄື ສ້າງໂຮງຮຽນນ້ອຍສອງຫຼັງ (ວຽງຈັນ 1 ແລະ ຫຼວງພະບາງ 1). ປີ 1915 ໂຮງຮຽນປະຖົມໄດ້ເພີ່ມຂຶ້ນ 12 ແຫ່ງ ແຕ່ໃນນັ້ນ ຜູ້ທີ່ໄດ້ເຂົ້າຮຽນແມ່ນລູກຫຼານຂອງຝຣັ່ງ, ຂຸນນາງ ແລະ ຂ້າລາ ຊະການຮັບໃຊ້ຝຣັ່ງເທົ່ານັ້ນ. ພວກຝຣັ່ງ ຍັງໄດ້ນໍາເອົາຮູບແບບການດໍາລົງຊີວິດ ຂອງຊາວຕາເວັນຕົກເຂົ້າມາເຜີຍ ແຜ່ ເພື່ອເຮັດໃຫ້ຄົນລາວລືມຊາດ, ລືມວັດຖະນາທໍາອັນດີງາມ ແລະ ຫັນໄປນິຍົມຊາດຕາເວັນຕົກ; ໂດຍສະ ເພາະ ພວກເຂົາໄດ້ນໍາເອົາວັດທະນາທໍາອັນເປື່ອຍເຍື່ອຍ ເຂົ້າມາເຜີຍແຜ່ ເຊັ່ນ: ສິ່ງເສີມໂຮງງານໂສເພນີ, ໂຮງສູບ ຝິ່ນກິນກັນຊາ, ໂຮງການພະນັນ...

**1.3 ຂະບວນການຕໍ່ສູ້ຂອງປະຊາຊົນລາວຕ້ານຈັກກະພັດລ່າເມືອງຂຶ້ນຝຣັ່ງ**

ຕະຫຼອດໄລຍະທີ່ປະຊາຊົນລາວຕົກຢູ່ໃຕ້ແອກປົກຄອງຂອງຈັກກະພັດລ່າເມືອງຂຶ້ນຝຣັ່ງນັ້ນ, ປະຊາຊົນລາວ ໄດ້ລຸກຂຶ້ນຕໍ່ສູ້ຕ້ານການປົກຄອງຢ່າງທໍລະຫົດອົດທົນ ແລະ ຫຼາຍຮູບການເຊັ່ນ: ຕ້ານການເສຍສ່ວຍ, ບໍ່ຍອມໄປເປັນກູລີ, ບໍ່ປະຕິບັດຄໍາສັ່ງຂອງຝຣັ່ງ, ຈັດຕັ້ງກໍາລັງປະກອບອາວຸດ ເຄື່ອນໄຫວຕໍ່ຕ້ານ. ຂະບວນການຕໍ່ສູ້ໄດ້ເກີດຂຶ້ນຢູ່ທົ່ວທຸກເຂດຂອງລາວ ເຊັ່ນ:

- ພາກເໜືອ: ຂະບວນການຕໍ່ສູ້ຂອງປະຊາຊົນເມືອງສິງ ໃນປີ ຄສ 1908 ແລະ ຂະບວນການຕໍ່ສູ້ໃຕ້ການນໍາພາຂອງເຈົ້າຟ້າປາໄຈ ຄ.ສ 1718 - 1922 ຊຶ່ງມີສູນກາງຂອງຂະບວນການນີ້ ຢູ່ບໍລິເວນພູຈອມຈິກຈອມຈັນ[26] ແຂວງຫົວຂອງ, ຈາກນັ້ນໄດ້ແຜ່ລາມລົງມາເຂດອຸດົມໄຊ, ຫຼວງພະບາງ, ຊໍາເໜືອ ແລະ ຊຽງຂວາງ.
- ພາກກາງ: ຂະບວນການຕໍ່ສູ້ໃຕ້ການນໍາພາຂອງພໍ່ກະດວດໃນປີ ຄສ 1901 - 1903 ຢູ່ສະຫວັນນະເຂດ ແລະ ຂະບວນການຕໍ່ສູ້ຂອງຊາວບ້ານຫ້ອມ, ບ້ານຫາດກັນຊາ (ນະຄອນວຽງຈັນ) ນໍາພາໂດຍນາຍ ຄູຄໍາໃນປີ 1920.

- ພາກໃຕ້: ຂະບວນການຕໍ່ສູ້ໃຕ້ການນໍາພາຂອງອົງແກ້ວ ແລະ ອົງກົມມະດໍາໃນປີ ຄສ 1901 - 1937 ຊຶ່ງມີໃຈກາງຂອງຂະບວນການຕໍ່ສູ້ຢູ່ເຂດພູບໍລິເວນ. ຈາກນັ້ນຈຶ່ງໄດ້ແຜ່ກະຈາຍ ໄປທົ່ວແຂວງສາລະວັນ, ອັດຕະປື, ປາກເຊ.

ນອກຈາກນີ້ ຍັງມີຂະບວນການຕໍ່ສູ້ທີ່ນໍາພາໂດຍບັນດານັກກອມມູຍນິດລາວທີ່ເຕີບໂຕມາຈາກພັກກອມມູຍນິດອິນດູຈີນ ໄດ້ເຄື່ອນໄຫວຢ່າງຕັ້ງໜ້າໃນໝູ່ມະຫາຊົນ, ຂົນຂວາຍປະຊາຊົນຕໍ່ຕ້ານອໍານາດຂອງຝຣັ່ງຢູ່ ລາວ ຊຶ່ງມີຫຼາຍຮູບການເຊັ່ນ: ແຫ່ຂະບວນປະທ້ວງ, ນັດຢຸດງານ...ສະແດງອອກດັ່ງນີ້: ໃນປີ ຄ.ສ 1930 ປະຊາ ຊົນວຽງຈັນໄດ້ບຸກລຸກໂຮງການຕໍາຫຼວດສັນຕິບານ ທວງໃຫ້ປ່ອຍຕົວຜູ້ຖືກຈັບກຸມ. ປີ ຄ.ສ 1932 - 1933 ຢູ່ບໍ່ ກົ່ວໂພນຕິ້ວ ແລະ ບໍ່ແໜ່ງ, ກໍາມະກອນໄດ້ປະທ້ວງຢ່າງເນື່ອງນິດລຽນຕິດ ເພື່ອທວງໃຫ້ຫຼຸດຜ່ອນໂມງເຮັດວຽກ, ເພີ່ມເງິນເດືອນ, ດັດແປງເງື່ອນໄຂເຮັດວຽກ ແລະ ປັວແປງຊີວິດການເປັນຢູ່.

ຈາກການເຄື່ອໄຫວຢ່າງຕັ້ງໜ້າຂອງສະມາຊິກພັກກອມມູຍນິດ, ມາຮອດປີຄ.ສ 1934 ກອງປະຊຸມໃຫຍ່ຜູ້ແທນໜ່ວຍພັກພື້ນຖານທົ່ວປະເທດໄດ້ໄຂຂຶ້ນແລະວາງທິດທາງການຕໍ່ສູ້ແລະຕົກລົງສ້າງຕັ້ງ "ອົງຄະນະພັກແຄ້ວນລາວ" ຂຶ້ນເພື່ອຊີ້ນໍາການຕໍ່ສູ້ຂອງປະຊາຊົນລາວຕ້ານຈັກກະພັດລ່າເມືອງຂຶ້ນຝຣັ່ງ.

### 1.4 ການປະກາດເອກະລາດ 12 ຕຸລາຄ.ສ 1945

ສົງຄາມໂລກຄັ້ງທີ II ເກີດຂຶ້ນ ມັນໄດ້ເຮັດໃຫ້ອິດທິພົນຂອງປະເທດຈັກກະພັດ ໂດຍສະເພາະຝຣັ່ງຢູ່ອິນ ດູຈີນອ່ອນເພຍລົງ ແລະ ຍອມຖອຍເທື່ອລະກ້າວໃຫ້ແກ່ ຟາດຊິດຍີ່ປຸ່ນ. ໃນວັນທີ 23 ກໍລະກົດ 1941 ລັດຖະ ບານຝຣັ່ງຈໍາຕ້ອງເຊັນສັນຍາ "ຮ່ວມປ້ອງກັນອິນດູຈີນ" ກັບຍີ່ປຸ່ນ. ນັບແຕ່ນັ້ນມາ ປະຊາຊົນອິນດູຈີນໄດ້ຕົກຢູ່ໃຕ້ ສອງແອກຄອບຄອງຄື ແອກລ່າເມືອງຂຶ້ນຝຣັ່ງ ແລະ ແອກຟາດຊິດຍີ່ປຸ່ນ. ໃນສະພາບເງື່ອນໄຂຄືດັ່ງກ່າວນີ້ ນັກກອມມູຍນິດລາວກໍໄດ້ຈັດຕັ້ງແນວໂຮມຂຶ້ນເພື່ອຕໍ່ຕ້ານຈັກກະພັດຝຣັ່ງ ແລະ ຟາດຊິດຍີ່ປຸ່ນ ຊຶ່ງມີຊື່ວ່າ "ພັນທະມິດລາວເອກະລາດ" ອົງການນີ້ເຄື່ອນໄຫວ ຂົນຂວາຍກໍາລັງ ໂດຍໃຊ້ຄໍາຂວັນ "ຕໍ່ຕ້ານຝຣັ່ງ, ຂັບໄລ່ຍີ່ປຸ່ນ, ຍາດ ເອົາເອກະລາດ" ຕໍ່ມາໄດ້ກໍາເນີດອົງການ "ລາວອິດສະຫຼະ". ວັນທີ 9 ມີນາ ຄ.ສ 1945 ຟາດຊິດຍີ່ປຸ່ນ ໄດ້ເຮັດ ລັດຖະປະຫານໂຄ່ນລົ້ມອໍານາດຂອງຝຣັ່ງຢູ່ອິນດູຈີນ, ຂັບໄລ່ຝຣັ່ງອອກຈາກລາວ ແລະ ສ້າງຕັ້ງລະບອບຟາດຊິດ ຂຶ້ນແທນ, ຈາກນັ້ນ ກໍດໍາເນີນການກວາດລ້າງເຂດທີ່ໝັ້ນ, ປາບປາມປະຊາຊົນຢ່າງປ່າເຖື່ອນ.

ຕໍ່ໜ້າສະພາບການນີ້, ມາຮອດທ້າຍເດືອນມີນາ ຄ.ສ 1945 ກໍາລັງປະຕິວັດລາວໄດ້ສ້າງທີ່ໝັ້ນນາແກ (ນະຄອນພະນົມ, ປະເທດໄທ ໃນປັດຈຸບັນ), ຢູ່ທີ່ນີ້ໄດ້ສ້າງຕັ້ງ "ກອງທະຫານປະສົມລາວ - ຫວຽດນາມ" ຂຶ້ນຊຶ່ງຕໍ່ມາໄດ້ພັດທະນາເປັນກອງທະຫານອິດສະຫຼະ. ມາຮອດເດືອນພຶດສະພາ ຄ.ສ 1945 ຟາດຊິດເຢຍລະມັນໄດ້ຍອມຈໍານົນຕໍ່ຝ່າຍສໍາພັນທະມິດຢູ່ເອີຣົບ. ສ່ວນພາກຕາເວັນອອກ, ຟາດຊິດຍີ່ປຸ່ນ ກໍນັບມື້ນັບປະລາໄຊ ແລະ ຍອມຈໍານົນຢ່າງສິ້ນເຊີງ ໃນວັນທີ 2 ກັນຍາ 1945 ຊຶ່ງເປັນອາວະສານຂອງສົງຄາມໂລກຄັ້ງທີ II. ວັນທີ 19 ສິງຫາ ຄ.ສ 1945 ປະຊາຊົນຫວຽດນາມ ໄດ້ລຸກຮື້ຂຶ້ນຍຶດອໍານາດເປັນຜົນສໍາເລັດ. ສະພາບການດັ່ງກ່າວ ໄດ້ເອື້ອອໍານວຍຄວາມສະດວກໃຫ້ແກ່ປະຊາຊົນລາວລຸກຮື້ຂຶ້ນຍຶດອໍານາດ.

ວັນທີ 16 ສິງຫາ 1945 ຂະບວນກໍາມະກອນໂຮງງານຕໍ່າແຜນກາຟາ ທີ່ນະຄອນຫຼວງວຽງຈັນ ໄດ້ເລັ່ງທວງໃຫ້ຍີ່ປຸ່ນມອບໂຮງງານຕໍ່າແຜນ ໃຫ້ແກ່ລາວ. ຂະບວນການນີ້ໄດ້ຮັບການສະໜັບສະໜູນຢ່າງກວ້າງຂວາງຈາກມະຫາຊົນ, ເຮັດໃຫ້ຟາດຊິດຍີ່ປຸ່ນຢ້ານກົວ ແລະ ຍອມປະຕິບັດຕາມຄວາມຮຽກຮ້ອງຂອງມະຫາຊົນ. ຈາກນັ້ນ ປະຊາຊົນຢູ່ແຂວງຕ່າງໆ ກໍໄດ້ລຸກຮື້ຂຶ້ນຍຶດອໍານາດ ເຊັ່ນ ວັນທີ 20 ສິງຫາ 1945 ຢູ່ສະຫວັນນະເຂດ, 21

ສິງຫາ 1945 ຢູ່ທ່າແຂກ. ວັນທີ 23 ສິງຫາ 1945 ມວນຊົນຊາວນະຄອນວຽງຈັນທຸກຊັ້ນຄົນຫຼາຍພັນຄົນ ໄດ້ໂຮມຊຸມນຸມຄັ້ງໃຫຍ່ຢູ່ສະໜາມກິລາແຫ່ງຊາດ ເພື່ອສະແດງກຳລັງແຮງຂອງມະຫາຊົນ ແລະ ໄດ້ອອກຖະແຫຼງການປະຊາຊົນຮຽກຮ້ອງເອກະລາດ ແລະ ອິດສະຫຼະພາບ.

ວັນທີ 1 ກັນຍາ 1945 ເຈົ້າເພັດຊະລາດ ໃນຖານະເປັນມະຫາອຸປະຮາດ, ທັງເປັນນາຍົກລັດຖະມົນຕີ ໄດ້ອອກຖະແຫຼງການກ່ຽວກັບ "ສິດອຳນາດ ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດລາວ". ພ້ອມທັງປະກາດລົບລ້າງບັນດາສັນຍາ ແລະ ຂໍ້ຜູກພັນທາງການເມືອງທີ່ເຄີຍມີມາລະຫວ່າງລາວກັບຝຣັ່ງ.

ວັນທີ 15 ກັນຍາ ປະກາດເຕົ້າໂຮມເອົາທຸກແຂວງຂອງປະເທດລາວເຂົ້າເປັນຜືນແຜ່ນດິນຕອນດຽວກັນ ແລະ ຢູ່ໃຕ້ອຳນາດລັດດຽວກັນຢ່າງເອກະພາບ.

ວັນທີ 10 ຕຸລາ ກອງປະຊຸມຄະນະກຳມະການປະຊາຊົນ ໄດ້ເລືອກຕັ້ງເອົາຄະນະລັດຖະບານ ໂດຍແມ່ນ ພະຍາ ຄຳມ້າວ ວິໄລ (ເຈົ້າແຂວງວຽງຈັນ) ເປັນນາຍົກລັດຖະມົນຕີ ແລະ ຄະນະລັດຖະບານ 10 ທ່ານ ຄື ເຈົ້າ ສຸວັນນະພູມມາ, ເຈົ້າ ສຸພານຸວົງ, ເຈົ້າ ສົມສະນິດ, ເພຍອຸ່ນເຮືອນ, ທ່ານ ເກື່ອງ ປະທຸມຊາດ, ທ່ານ ທຳ ໄຊຍະສິດເສນາ, ທ່ານ ກະຕ່າຍ ໂດນສະໂສລິດ, ທ່ານ ຫຍຸຍ ອະໄພ, ທ່ານ ພັນຕີ ສິງ ລັດຕະນະສະໄໝ ແລະ ທ່ານ ອຸ່ນ ຊະນະນິກອນ.

ໃນຕອນເຊົ້າຂອງວັນທີ 12 ຕຸລາ 1945 ໄດ້ມີການໂຮມຊຸມນຸມຄັ້ງໃຫຍ່ ຢູ່ຕໍ່ໜ້າໂຮງການແຂວງ ເພື່ອຮັບຟັງຄຳປາໄສຂອງ ພະຍາ ຄຳມ້າວ. ຈາກນັ້ນ ທ່ານ ທຳ ໄຊຍະສິດເສນາ ໄດ້ອ່ານຄຳປະກາດເອກະລາດ ແລະ ອິດສະຫຼະພາບແຫ່ງຊາດລາວ, ຄຳປະກາດໂຮມຜືນແຜ່ນດິນ ເຂົ້າເປັນອັນດຽວກັນ, ຄຳປະກາດປ່ຽນແປງການປົກຄອງ, ຄຳປະກາດໃຊ້ລັດຖະທຳມະນູນຊົ່ວຄາວ ແລະ ຄຳປະກາດແຕ່ງຕັ້ງຄະນະລັດຖະບານຂອງປະເທດລາວເອກະລາດ (ໄຊຍະວົງຄຳດີ ພ້ອມຄະນະ, 1989 : 165 - 167). ໃນວັນດຽວກັນນີ້ ສະພາປະຊາຊົນ ກໍໄດ້ຖືກຮັບຮອງຢ່າງເປັນທາງການ, ໂດຍແມ່ນ ທ່ານ ຄູນ ພິລາວັນ ເປັນປະທານ ແລະ ທ່ານ ຄຳພອນ ພົນລາດ ເປັນເລຂາທິການ. ຈາກນັ້ນ ສະພາປະຊາຊົນ ກໍໄດ້ຮັບຮອງເອົາ ຄະນະລັດຖະບານລາວເອກະລາດຢ່າງເປັນທາງການ ໂດຍມີເຈົ້າ ເພັດຊະລາດ ເປັນປະມຸກລັດ.

## 2. ການກັບມາຮຸກຮານລາວຄັ້ງທີສອງຂອງຝຣັ່ງ ຄ.ສ 1945 - 1954

ຫຼັງຈາກປະກາດເອກະລາດ, ສະພາບການຢູ່ພາຍໃນປະເທດຍັງມີຄວາມສັບສົນຫຍຸ້ງຍາກ. ໃນຂະນະທີ່ຢູ່ສູນກາງພວມມີການຈັດຕັ້ງກົງຈັກການປົກຄອງເອກະລາດຢ່າງຟົດຟື້ນຢູ່ນັ້ນແຕ່ສະຖານະການຢູ່ຕາມແຂວງທ້ອງຖິ່ນອື່ນໆຍັງບໍ່ທັນສະຫງົບເທື່ອ. ບັນດາຕົວເມືອງໃຫຍ່ເຊັ່ນ: ສະຫວັນນະເຂດ, ປາກເຊ, ທ່າແຂກແລະວຽງຈັນໄດ້ຖືກກອງທະຫານແຕກທັບຂອງຝຣັ່ງປິດລ້ອມ, ຊົນນະບົດກັບຕົວເມືອງຖືກຕັດແບ່ງຕິດຕໍ່ພົວພັນກັນບໍ່ໄດ້. ສະນັ້ນການຊີ້ນຳຂອງລັດຖະບານເອກະລາດຈຶ່ງບໍ່ສະດວກບໍ່ທັນການແລະບໍ່ເປັນເອກະພາບກັນໃນທົ່ວປະເທດ. ສວຍໂອກາດທີ່ຟາຊິດຍີ່ປຸ່ນກຳລັງຊຸດໂຊມລົງໃນໄລຍະທ້າຍຂອງສົງຄາມໂລກຄັ້ງທີ II ຈັກ ກະພັດຝຣັ່ງກໍເລັ່ງລັດແຜນການ "ກັບຄືນມາປົກຄອງອິນດູຈີນ" ໂດຍອາໄສການຊ່ວຍເຫຼືອຂອງກອງທະຫານຈີນຈຽງໄຄເຊັກແລະທະຫານອັງກິດ.

ໃນເດືອນມີນາຄ.ສ 1946 ຈັກກະພັດຝຣັ່ງໄດ້ເປີດການບຸກໂຈມຕີເຂົ້າລາວດ້ວຍກຳລັງອາວຸດໂດຍສົມທົບກອງທະຫານດໂດດຈ້ອງກອມມັງໂດແລະກອງທະຫານແຕກທັບໃນເມື່ອກ່ອນເຄື່ອນທັບເຂົ້າລາວໃນສາມດ້ານຄື:

- ພາກເໜືອ: ທະຫານຝຣັ່ງຍູນານເຂົ້າມາພາກເໜືອຂອງລາວໃນເຂດເມືອງສິງ, ຫຼວງນໍ້າທາ...

- ພາກກາງ: ຈາກພາກກາງວຽດນາມ ເຄື່ອນເຂົ້າພາກກາງຂອງລາວ.
- ພາກໃຕ້: ກອງທະຫານອັງກິດ ທີ່ເຂົ້າມາປົດອາວຸດທະຫານຍີ່ປຸ່ນ ຕາມສັນຍາປົດສະດໍານັ້ນກໍໄດ້ໃຫ້ການຊ່ວຍເຫຼືອຂອງຝຣັ່ງ, ໂດຍເຊື່ອງຊ້ອນກອງທະຫານຝຣັ່ງດ້ວຍການນຸ່ງເຄື່ອງແບບທະຫານອັງກິດເຂົ້າພາກໃຕ້ລາວສືບຕໍ່ບຸກຍຶດບັນດາຕົວເມືອງຂຶ້ນມາທາງພາກກາງເຊັ່ນ: ວັນທີ 21 ມີນາ ຄ.ສ 1946 ບຸກຍຶດທ່າແຂກ. ຢູ່ທີ່ນີ້ ເຈົ້າສຸພານຸວົງ* ໄດ້ບັນຊາການປ້ອງກັນເມືອງທ່າແຂກໂດຍກົງ ແຕ່ເນື່ອງຈາກວ່າ ສັດຕູມີກໍາລັງ ແລະ ອາວຸດທີ່ ເໜືອກວ່າ ພວກເຂົາໄດ້ຍິງປືນໃຫຍ່ ແລະ ໃຊ້ຍົນຖິ້ມລະເບີດເຜົາຜານຕົວເມືອງທ່າແຂກ. ເມື່ອຍຶດໄດ້ແລ້ວ ພວກເຂົາຍັງໄດ້ຈັບກຸມ ແລະ ເຂັ່ນຂ້າຊາວເມືອງຢ່າງໂຫດຫ້ຽມ. ບັ້ນຮົບນີ້ ທະຫານ ແລະ ປະຊາຊົນຜູ້ຮັກຊາດ ເສຍຊີວິດປະມານ 2000 ຄົນ. ວັນທີ 21 ເມສາ 1946 ບຸກຍຶດຕົວເມືອງວຽງຈັນ (24 ເມສາ ສໍາເລັດ). ວັນທີ 24 ພຶດສະພາ 1946 ບຸກຍຶດຫຼວງພະບາງ.

ເພື່ອຊອກຫາກໍາລັງເຄື່ອນໄຫວຕໍ່ຕ້ານແບບຍາວນານນັ້ນ, ພາກສ່ວນໜຶ່ງຂອງກອງທັບລາວອິດສະຫຼະໄດ້ຫຼົບໜີເຂົ້າປ່າ, ສ່ວນເຈົ້າເພັດຊະຣາດໄດ້ພາທະຫານຈໍານວນໜຶ່ງຂ້າມຊາຍແດນໄປຫຼົບໄພຢູ່ປະເທດໄທແລະໄດ້ຈັດຕັ້ງລັດຖະບານລາວອິດສະຫຼະພັດຖິ່ນຂຶ້ນ[27]. ພາຍຫຼັງກໍາລັງປະຕິຫວັດ ໄດ້ຖອນອອກຈາກຕົວເມືອງໄປຢູ່ຊົນນະບົດ, ກໍໄດເຄື່ອນໄຫວກໍ່ສ້າງເຂດທີ່ໝັ້ນ ແລະ ໄດ້ຂະຫຍາຍສົງຄາມກອງຫຼອນປຸກລະດົມມວນຊົນໃຫ້ເຂົ້າຮ່ວມຂະບວນການປະຕິຫວັດ. ຜ່ານການເຄື່ອນໄຫວຈຶ່ງເຮັດໃຫ້ຂະບວນຕໍ່ຕ້ານນັບມື້ນັບເຕີບໃຫຍ່. ມາຮອດ ວັນທີ 20 ມັງກອນ 1949 ກໍາລັງປະຕິຫວັດ ໄດ້ຈັດຕັ້ງກອງທະຫານຫຼວງຂຶ້ນເອີ້ນວ່າ:"ກອງທັບລາວອິດສະຫຼະ" ໂດຍແມ່ນ ທ່ານ ໄກສອນ ພົມວິຫານ ເປັນຜູ້ບັນຊາການສູງສຸດ.

ມາໃນວັນທີ 13 ສິງຫາ ຄ.ສ 1950 ອີງຄະນະພັກແຄ້ວນລາວໄດ້ຈັດຕັ້ງກອງປະຊຸມໃຫຍ່ຜູ້ແທນລາວຕໍ່ ຕ້ານທົ່ວປະເທດຂຶ້ນຢູ່ແຂວງຫົວພັນ. ກອງປະຊຸມນີ້ ໄດ້ຕົກລົງສ້າງຕັ້ງແນວໂຮມແຫ່ງຊາດຂຶ້ນຊື່ວ່າ: "ແນວລາວ ອິດສະຫຼະ" ໂດຍຄັດເລືອກເອົາ ເຈົ້າສຸພານຸວົງ ເປັນປະທານ ແລະ ກອງປະຊຸມໄດ້ຕົກລົງຈັດຕັ້ງລັດທະບານຕໍ່ ຕ້ານຂຶ້ນ, ໂດຍຄັດເລືອກເອົາ ເຈົ້າສຸພານຸວົງ ເປັນນາຍົກລັດທະມົນຕີ ທັງເປັນລັດທະມົນຕີວ່າການກະຊວງການ ຕ່າງປະເທດ. ນັບແຕ່ປີ ຄ.ສ 1950 ເປັນຕົ້ນມາ, ຈັກກະພັດອາເມລິກາໄດ້ແຊກຊຶມເຂົ້າມາຮ່ວມກັບຈັກກະພັດ ຝຣັ່ງ ດໍາເນີນສົງຄາມຮຸກຮານອິນດູຈີນ. ປີ ຄ.ສ 1953 ລັດຖະບານຝຣັ່ງໄດ້ປະຕິບັດແຜນຍຸດທະສາດ "ແຜນ ການນາວາ (Navarre plan)" ຮ່ວມກັບອາເມຣິກາ ຊຶ່ງເປັນເປົ້າໝາຍດັບສູນກໍາລັງປະຕິຫວັດໃຫ້ສໍາເລັດພາຍໃນ 18 ເດືອນ. ເພື່ອຕອບໂຕ້ກັບ "ແຜນການນາວາ" ກອງທັບລາວອິດສະຫຼະໄດ້ເປີດສົງຄາມ ກອງຫຼອນບຸກຕີສັດຕູຢ່າງຫລຽນຕິດ, ສາມາດປົດປ່ອຍພາກສ່ວນໃຫຍ່ຂອງແຂວງຜົ້ງສາລີ ໃນເດືອນພະຈິກ ຄ.ສ 1953. ທ້າຍເດືອນ ທັນວາ 1953 ຕົວເມືອງທ່າແຂກໄດ້ຮັບການປົດປ່ອຍ ແລະ ຂະຫຍາຍເຂດປົດປ່ອຍຮອດແຄມຂອງຈາກນັ້ນກໍ່ສືບຕໍ່ເອົາ ເມືອງຫີນບູນ, ເມືອງຄໍາເກີດ, ເມືອງມະຫາໄຊ, ເມືອງເຊໂປນ, ເມືອງພີນ, ເມືອງເລົ່າງາມ, ອັດຕະປື, ສາລະວັນ, ພາກສ່ວນໜຶ່ງຂອງຈໍາປາສັກ. ມາຮອດຕົ້ນປີ ຄ.ສ 1954 ກໍາລັງປະຕິວັດລາວສາມາດປົດ ປ່ອຍດິນແດນໄດ້ກວ່າ ½ ຂອງເນື້ອທີ່ທົ່ວປະເທດ.

ຈາກໄຊຊະນະໃນບັ້ນຮົບລະດູແລ້ງແລະໄຊຊະນະດຽນບຽນຟູໄດ້ເປັນຜົນບັງຄັບໃຫ້ຈັກກະພັດລ່າເມືອງຂຶ້ນຝຣັ່ງຈໍາຕ້ອງຍອມເຊັນສັນຍາເຊີແນວໃນວັນທີ 21 ກໍລະກົດ 1954. ສັນຍານີ້ໄດ້ຮັບຮູ້ເອກະລາດ, ອໍານາດອະທິປະໄຕ, ເອກະພາບແລະຜືນແຜນດິນອັນຄົບຖ້ວນຂອງສາມຊາດອິນດູຈີນ.

## 3. ການຄອບຄອງລາວຂອງຈັກກະພັດອາເມລິກາແຕ່ປີຄ.ສ 1955 – 1975

### 3.1 ການແຊງລາວຂອງຈັກກະພັດອາເມລິກາ

ສັນຍາເຊີແນວ 1954 ວ່າດ້ວຍການຟື້ນຟູສັນຕິພາບຢູ່ອິນດູຈີນໄດ້ເປັນຂີດໝາຍສິ້ນສຸດອຳນາດ, ຍຸຕິເອກຄອບຄອງອິນດູຈີນຂອງຈັກກະພັດລ່າເມືອງຂຶ້ນຝຣັ່ງທີ່ແກ່ຍາວກວ່າ 60 ກວ່າປີ. ແຕ່ໃນຂະນະທີ່ຈັກກະພັດຝຣັ່ງພວມກະກຽມຖອນອອກຈາກອິນດູຈີນນັ້ນ, ຈັກກະພັດອາເມຣິກາກໍພວມຊຸ້ນຂ້ຽວປະຕິບັດແຜນການແຊກແຊງເຂົ້າແທນບ່ອນຈັກກະພັດຝຣັ່ງຢູ່ອິນດູຈີນ; ໂດຍແນ່ໃສ່ເອົາປະເທດລາວກໍຄືອິນດູຈີນເປັນຫົວເມືອງຂຶ້ນ ແບບໃໝ່.

ການແຊງເຂົ້າລາວຂອງອາເມຣິກາສະແດງອອກໃນໄລຍະຕົ້ນຄື ທັນເອົາກົງຈັກການປົກຄອງຂອງລາຊະອານາຈັກລາວ ຊຶ່ງເຄີຍເປັນເຄື່ອງມືຮັບໃຊ້ຈັກກະພັດຝຣັ່ງໃນເມື່ອກ່ອນໃຫ້ມາຮັບໃຊ້ພວກເຂົາ, ບັງຄັບໜີບຮັດຜູ້ທີ່ນິຍົມຝຣັ່ງ ແລະ ຜູ້ທີ່ມີທ່າອ່ຽງສັນຕິພາບເປັນກາງໃຫ້ມານິຍົມອາເມຣິກາ, ບີບບັງຄັບໃຫ້ລັດຖະບານທີ່ນຳພາໂດຍສະເດັດ ເຈົ້າສຸວັນນະພູມມາ ຕ້ອງຍົກເລີກ ໃນເດືອນ ພະຈິກ ຄ.ສ 1954, ສ້າງຕັ້ງລັດທະບານໃໝ່ທີ່ນິຍົມອາເມຣິກາຂຶ້ນແທນ, ໂດຍມີ ກະຕ່າຍ ໂດນສະໂສລິດ ເປັນນາຍົກ, ເພີ່ມຈຳນວນທະຫານຂຶ້ນຢ່າງໄວວາເຖິງ 10 ກອງທັບ, ໂດຍມີ ນາຍທະຫານ ອາເມຣິກາ ເປັນທີ່ປຶກສາ ແລະ ກຽມພ້ອມເຮັດສົງຄາມ. ໃນເອນທັນວາ ຄ.ສ 1955, ໂດຍປະຕິບັດຕາມຄຳສັ່ງຂອງອາເມຣິກາ ກະຕ່າຍ ໂດນສະໂສລິດ ໄດ້ທຳການປ່ອນບັດເລືອກຕັ້ງທົ່ວປະເທດ ແຕ່ກີດກັ້ນການເຂົ້າຮ່ວມຂອງຄົນຝ່າຍປະເທດລາດ (ກຳລັງປະຕິວັດ). ນອກຈາກນີ້ຍັງດຳເນີນບຸກໂຈມ ຕີສອງແຂວງເຕົ້າໂຮມ ຫວັງຈະດັບສູນກຳລັງປະຕິວັດ,

### 3.2 ການຕໍ່ສູ້ຕ້ານຈັກກະພັດອາເມຣິກາ ຂອງປະຊາຊົນລາວເພື່ອການເຕົ້າໂຮມຊາດ

#### 3.2.1 ການຕໍ່ສູ້ເພື່ອການຮ່ວມລາວຄັ້ງທີ 1

ຫຼັງຈາກທີ່ກຳລັງຮັກຊາດຖອນກຳລັງໄປເຕົ້າໂຮມຢູ່ສອງແຂວງແລ້ວ ຈັກກະພັດອາເມຣິກາ ແລະ ລູກມືກໍໄດ້ສືບຕໍ່ການບຸກໂຈມຕີ 2 ແຂວງເຕົ້າໂຮມ ແລະ ດຳເນີນການປາບປາມຜູ້ຈັກຊາດໃນ 10 ແຂວງ. ແຕ່ການບຸກໂຈມຕີຂອງພວກເຂົາໄດ້ຖືກກຳລັງຮັກຊາດ ຕີໃຫ້ປະລາໄຊໃນທຸກບັ້ນຮົບ. ຕໍ່ໜ້າສະພາບການທີ່ພວມຜັນແປ, ກຳລັງປະຕິວັດ ກໍໄດ້ເຕີບໃຫຍ່ຂະຫຍາຍຕົວຂຶ້ນ. ຜ່ານການສູ້ຮົບເກືອບ 3 ປີ ເພື່ອປົກປັກຮັກສາ 2 ແຂວງເຕົ້າໂຮມ ກຳລັງຮັກຊາດສາມາດດັບສູນສັດຕູເກືອບ 5000 ຄົນ, ຈັບເປັນສະເລີຍ 200 ກວ່າຄົນ, ຍຶດອາວຸດໄດ້ 2000 ກວ່າກະບອກ. ກຳລັງປະຕິວັດ ສາມາດຮັກສາເຂດທີ່ໝັ້ນ 2 ແຂວງເຕົ້າໂຮມໄວ້ໄດ້ຢ່າງໝັ້ນຄົງ. ມາຮອດວັນທີ 6 ມັງກອນ ຄ.ສ 1956 ກອງປະຊຸມໃຫຍ່ຜູ້ແທນແນວລາວອິດສະຫຼະ ຄັ້ງທີ II ກໍໄດ້ໄຂຂຶ້ນທີ່ຊຳເໜືອ. ກອງປະຊຸມນີ້ໄດ້ຄົ້ນຄວ້າ ແລະ ຜ່ານເອກະສານທີ່ສຳຄັນ, ໂດຍສະເພາະໂຄງການເມືອງຂອງແນວ ໂຮມ ຊຶ່ງໃນກອງປະຊຸມຄັ້ງນີ້ໄດ້ປ່ຽນຊື່ເປັນ "ແນວລາວຮັກຊາດ". ໂດຍມີເຈົ້າສຸພານຸວົງ ໄດ້ອອກຖະແຫຼງການ "ນະໂຍບາຍ ສັນຕິພາບ, ເປັນກາງ ຂອງລາວ" ຮຽກຮ້ອງໃຫ້ພີ່ນ້ອງຮ່ວມຊາດຂອງລາວລຸກຂຶ້ນຕໍ່ສູ້ຕ້ານອາເມຣິ ກາ ແລະ ລູກມືທີ່ທຳລາຍສັນຍາເຊີແນວ 1954, ທວງໃຫ້ລັດຖະບານລາຊະອານາຈັກ ຮ່ວມມືກັບຝ່າຍປະເທດ ລາວດ້ວຍຄວາມຈິງໃຈເພື່ອເຮັດໃຫ້ປະເທດລາວມີສັນຕິພາບ ແລະ ເອກະລາດ ຢ່າງແທ້ຈິງ.

ການຕໍ່ສູ້ຂອງແນວລາວຮັກຊາດເລັ່ງທວງໃຫ້ລັດທະບານລາຊະອານາຈັກປະຕິບັດຕາມສັນຍາເຊີແນວ 1954 ນັ້ນໄດ້ຮັບການສະໜັບສະໜູນຢ່າງກວ້າງຂວາງຈາກມວນຊົນທັງພາຍໃນແລະຕ່າງປະເທດ, ສົມທົບກັບການປະລາໄຊຢູ່ສະໜາມຮົບ. ສະນັ້ນຈຶ່ງເປັນການບັງຄັບໃຫ້ຝ່າຍລາຊະອານາຈັກຈຳຕ້ອງເຂົ້າຮ່ວມເຈລະຈາກັບຝ່າຍປະເທດລາວ. ການເຈລະຈາດຳເນີນໄປຢູ່ທັງພາຍໃນແລະຕ່າງປະເທດແກ່ຍາວເວລາເກືອບ 3

ປີຍ້ອນຄວາມບໍ່ຈິງໃຈຂອງຝ່າຍລາຊະອານາຈັກທີ່ຄອຍປະຕິບັດຕາມຄຳບັນຊາຂອງຈັກກະພັດອາເມລິກາ. ມາເຖິງກາງປີ 1957 ຝ່າຍແນວລາວຮັກຊາດ ໄດ້ຕົກລົງຜ່ອນຜັນບາງບັນຫາ ເພື່ອເຮັກໃຫ້ສະພາບການໂນະຍານລົງ ເຊັ່ນ: ເຫັນດີໃຫ້ລັດຖະສະພາຂອງຝ່າຍລາຊະອານາຈັກສືບຕໍ່ດຳເນີນງານ ແຕ່ຕ້ອງເພີ່ມເຕີມຕົກລົງ, ຕົກລົງຈະມອບ 2 ແຂວງເຕົ້າໂຮມ ໃຫ້ແກ່ລັດທະບານປະສົມ ແລະ ຕົກລົງຍຸບກອງທະຫານຂອງຕົນສ່ວນໜຶ່ງ, ຮັກສາໄວ້ພຽງແຕ່ສອງກອງພັນເພື່ອເຂົ້າຮ່ວມກັບກອງທັບລາຊະອານາຈັກລັດຖະບານປະສົມ.

ມາຮອດວັນທີ 2 ພະຈິກ 1957 ສັນຍາສົມບູນລະຫວ່າງສອງຝ່າຍຈຶ່ງໄດ້ຮັບການລົງນາມ. ແລະວັນທີ 19 ພະຈິກ 1957 ສະພາຜູ້ແທນລາສະດອນກໍໄດ້ຮັບຮອງເອົາຄະນະລັດຖະບານປະສົມແຫ່ງຊາດຄັ້ງທຳອິດຢ່າງເປັນທາງການ, ຊຶ່ງປະກອບດ້ວຍ 12 ທ່ານໂດຍແມ່ນເຈົ້າສຸວັນນະພູມາເປັນນາຍົກແລະຄະນະຜູ້ແທນຂອງຝ່າຍແນວລາວຮັກຊາດເຂົ້າຮ່ວມ 2 ທ່ານເຈົ້າສຸພານຸວົງແລະທ່ານພູມີວົງວິຈິດ. (ສ້າງຕັ້ງລັດຖະບານປະສົມ 22 ຕຸລາ 1957)

**3.2.2 ການຕໍ່ສູ້ເພື່ອການຮອມລາວຄັ້ງທີ 2**

**ກ. ການຫັນທິດຕໍ່ສູ້ຂອງກຳລັງປະຕິວັດລາວ**

ຫຼັງຈາກທີ່ຝ່າຍລັດທະບານວຽງຈັນປະລາໄຊໃນການເລືອກຕັ້ງເພີ່ມເຕີມແລ້ວ ອາເມລິກາ ແລະ ລູກມືກໍໄດ້ຊອກທຸກວິທີການເພື່ອພະຍາຍາມທຳລາຍລັກທະບານປະສົມ. ມາຮອດວັນທີ 22 ກໍລະກົດ ຄ.ສ 1958 ລັດຖະບານປະສົມຊຸດທຳອິດໄດ້ຖືກຍຸບເລີກລົງດ້ວຍການເຮັດລັດຖະປະຫານໂດຍແມ່ນຜຸຍ ຊະ ນະນິກອນເປັນນາຍຍົກ. ຈາກນັ້ນລັດຖະບານລາຊະອານາຈັກກໍໄດ້ອອກແຮງປາບປາມຄົນຝ່າຍປະເທດລາວແລະຜູ້ທີ່ມີທ່າອ່ຽງເປັນກາງຮັກຊາດຢ່າງເປີດແປງ. ໃນວັນທີ 11 ພຶດສະພາ 1959 ພວກເຂົາໄດ້ອອກຄຳສັ່ງໃຫ້ປິດລ້ອມກອງພັນທີ I ຢູ່ເມືອງຊຽງເງິນ (ຫຼວງພະບາງ) ແລະກອງພັນທີ II ຢູ່ທົ່ງໄຫຫີນ (ຊຽງຂວາງ); ໃນວັນຕໍ່ມາກໍອອກຄຳສັ່ງໃຫ້ຕຳຫຼວດ ປິດລ້ອມເຮືອນພັກຂອງຜູ້ແທນແນວລາວຮັກຊາດຢູ່ວຽງຈັນ.

ຕໍ່ໜ້າສະພາບການອັນເຄັ່ງຮ້ອນນີ້ ພັກ ປ.ປ ລາວ ໄດ້ມີຍຸກໂທບາຍຫັນທິດການຕໍ່ສູ້ "ຈາກການຕໍ່ສູ້ດ້ວຍການເມືອງຖືກກົດໝາຍ ມາເປັນການຕໍ່ສູ້ດ້ວຍອາວຸດ ສົມທົບກັບການຕໍ່ສູ້ດ້ວຍການເມືອງ" ດັ່ງນັ້ນ ມາຮອດວັນທີ 18 ພຶດສະພາ 1959 ກອງທັບທີ II ຂອງຝ່າຍປະເທດລາວ ໄດ້ຜ່າວົງລ້ອມຂອງສັດຕູ ຢູ່ທົ່ງໄຫຫີນ ໄປສູ່ເຂດປົດປ່ອຍຢ່າງປອດໄພ. ສ່ວນກອງພັນທີ I ຢູ່ເມືອງຊຽງເງິນສາມາດແຫກຜ່າວົງລ້ອມສັດຕູໄປຮອດເຂດປົດປ່ອຍ. ໃນຂະນະທີ່ກອງພັນທີ II ຜ່າວົງລ້ອມໄປສູ່ເຂດປົດປ່ອຍນັ້ນ, ລັດຖະບານ ຜຸຍ ຊະນະນິກອນ ໄດ້ຈັບກຸມຜູ້ນຳແນວລາວຮັກຊາດ ຈຳນວນ 16 ທ່ານ ຄື ເຈົ້າສຸພານຸວົງ, ທ່ານ ສິງກະໂປ ສີໂຄດຈຸນນະມາລີ, ທ່ານ ພູມີ ວົງວິຈິດ, ທ່ານ ໜູຮັກ ພູມສະຫວັນ, ທ່ານ ຄຳພາຍ ບຸບຜາ, ທ່ານ ສີຊະນະ ສີສານ...ໂດຍເອົາໄປຂັງໄວ້ທີ່ຄຸກໂພນເຄັງ. ຕະຫຼອດໄລຍະ 10 ເດືອນ ທີ່ຢູ່ຄຸກນັ້ນ, ບັນດາທ່ານຜູ້ນຳໄດ້ອອກແຮງປຸກລະດົມຂົນຂວາຍທະຫານຍາມ ໃຫ້ກາຍເປັນພະນັກງານແກ່ນສານ, ມີແນວຄິດປະຕິວັດ ແລະ ໃນທີ່ສຸດກໍຊ່ວຍເຫຼືອຜູ້ນຳປະຕິວັດແຫກຄຸກຢ່າງເປັນຜົນສຳເລັດ ໃນຄືນວັນທີ 23 - 24 ພຶດສະພາ 1960 ແລະ ມຸ່ງໜ້າໄປສູ່ເຂດປົດປ່ອຍ ເພື່ອສືບຕໍ່ການປະຕິວັດ.

**ຂ. ການສ້າງຕັ້ງລັດຖະບານປະສົມ**

ລັດຖະບານປະສົມແຫ່ງຊາດຄັ້ງທີ 2 ຖືກສ້າງຕັ້ງມາຈາກຜົນການຕໍ່ສູ້ຂອງກອງທັບ ແລະ ປະຊາຊົນລາວ ໃນການຕີຕ້ານການເຄື່ອນໄຫວຂອງຝ່າຍທະຫານລາຊະອານາຈັກ ໃຫ້ປະລາໄຊລົງໃນຫຼາຍບັ້ນຮົບ ໂດຍສະເພາະນັບແຕ່ກອງກຳລັງລັດຖະປະຫານ[28] ແລະ ກຳລັງແນວລາວຮັກຊາດຖອນອອກ.

ຈາກວຽງຈັນ; ກອງກຳລັງທະຫານຂອງຝ່າຍປະເທດລາວ ໄດ້ດຳເນີນການບຸກໂຈມຕີໃສ່ກອງທັບຝ່າຍລາຊະອານາຈັກໃຫ້ປະລາໄຊລົງຢ່າງລຽນຕິດ ແລະ ສາມາດປົດປ່ອຍເອົາຕົວເມືອງຊຽງຂວາງ ໃນວັນທີ 1 ມັງກອນ 1961. ຕໍ່ມາກໍປົດປ່ອຍ ແຂວງຫົວພັນ, ຜົ້ງສາລີ, ພາກສ່ວນໃຫຍ່ຂອງ ແຂວງຫຼວງພະບາງ, ບັນດາແຂວງພາກກາງ ແລະ ພາກໃຕ້. ມາຮອດ ເດືອນພຶດສະພາ 1961 ເຂດປົດປ່ອຍໄດ້ຈອດກັນ ແຕ່ເໜືອເຖິງໃຕ້ ກວມ 2/3 ຂອງເນື້ອທີ່ທົ່ວປະເທດ. ໃນທີ່ສຸດ ກໍບັງຄັບໃຫ້ຝ່າຍວຽງຈັນກ້າວເຂົ້າສູ່ ການເຈລະຈາ ຂອງຜູ້ແທນທັງ 3 ຝ່າຍທີ່ຫີນເຫີບ ໃນວັນທີ 3 ພຶດສະພາ 1961, ວັນທີ 16 ມິຖຸນາ 1961 ເປີດກອງປະຊຸມທີ່ເຊີແນວເພື່ອແກ້ໄຂບັນຫາລາວ, ໂດຍມີ 14 ປະເທດເຂົ້າຮ່ວມ ແລະ ວັນທີ 17 ມິຖຸນາ 1961 ເປີດກອງປະຊຸມ 3 ສະ ເດັດ[29] ທີ່ຊູຣິກ (Zurich ປະເທດສະວິສ). ກອງປະຊຸມນີ້ ໄດ້ຕົກລົງຈັດຕັ້ງລັດຖະບານປະສົມຊົ່ວຄາວຂຶ້ນ, ໂດຍປະກອບຜູ້ຕາງໜ້າຂອງສອງຝ່າຍຢ່າງສົມຄວນ.

ໄປຄຽງຄູ່ກັບການເຈລະຈາທີ່ເຊີແນວ, ອາເມຣິກາ ແລະ ລູກມື ຍັງໄດ້ສວຍໂອກາດ ບຸກໂຈມຕີເຂດປົດປ່ອຍຢ່າງຜິດສັນຍາ, ແຕ່ພວກເຂົາກໍຖືກປະລາໄຊຢ່າງໜັກໜ່ວງ ໂດຍສະເພາະບັ້ນຮົບຫຼວງນໍ້າທາ; ອັນໄດ້ກາຍເປັນບົບບັງຄັບໃຫ້ພວກເຂົາຈຳຕ້ອງເຈລະຈາກັບຝ່າຍແນວລາວຮັກຊາດ ແລະ ຝ່າຍເປັນກາງອີກທີ່ທົ່ງໄຫຫີນ ເພື່ອປະຕິບັດການຮວມລວມຄັ້ງທີ II. ໃນວັນທີ 22 ມິຖຸນາ 1962 ລັດຖະບານປະສົມຄັ້ງທີII ໄດ້ ຮັບການຮັບຮອງຢ່າງເປັນທາງການ ໂດຍແມ່ນ ເຈົ້າສຸວັນນະພູມາ ເປັນນາຍົກລັດຖະມົນຕີ. ເຈົ້າສຸພານຸວົງເປັນຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງເສດຖະກິດ ແລະ ແຜນຜັງ. ພູມີ ໜໍ່ສະຫວັນ ເປັນຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງປ້ອງກັນປະເທດ.

ການຮວມລາວຄັ້ງນີ້ ໄດ້ຕົກລົງໃຫ້ຝ່າຍເປັນກາງ ແລະ ຝ່າຍແນວລາວຮັກຊາດ ນຳເອົາກອງທະຫານຂອງຕົນ ຝ່າຍລະ 1 ກອງຮ້ອຍ ມາຕັ້ງຢູ່ວຽງຈັນເພື່ອຮັກສາຄວາໄປອດໄພ. ພ້ອມນີ້ ລັດຖະບານໃໝ່ຍັງ ໄດ້ແຕ່ງຕັ້ງຄະນະຜູ້ແທນຂອງຕົນໄປເຊີແນວ ເພື່ອສືບຕໍ່ກອງປະຊຸມ ຈົນຮອດວັນທີ 23 ກໍລະກົດ 1962 ສັນຍາ ຈຶ່ງໄດ້ຮັບການລົງນາມ (14 ປະເທດ). ບັນດາປະເທດທີ່ໄດ້ເຂົ້າຮ່ວມກອງປະຊຸມເຊີແນວໄດ້ຮັບຮູ້ລັດຖະບານປະສົມ 3 ຝ່າຍ, ຢືນຢັນຄວາມເປັນເອກະລາດ, ອະທິປະໄຕ, ເອກະພາບ ແລະ ຜືນແຜນດິນອັນຄົບຖ້ວນຂອງລາວ.

### 3.2.3 ການຕໍ່ສູ້ເພື່ອການຮວມລາວຄັ້ງທີ 3

#### ກ. ການຕໍ່ສູ້ຕ້ານສົງຄາມພິເສດເພີ່ມທະວີ

ຫຼັງຈາກທີ່ຈັກກະພັດອາເມຣິກາ ແລະ ລູກມືຝ່າຍຂວາວຽງຈັນສຳເລັດໃນການທຳລາຍລັດຖະບານປະສົມຄັ້ງທີສອງ ດ້ວຍການເຮັດລັດຖະປະຫານຂອງ ກຸປະສິດ ອະໄພ ແລະ ສີໂຫດ ໃນວັນທີ 19 ເມສາ 1964. ເພື່ອຍາດເອົາທ່າຄວາມເປັນເຈົ້າການໃນການຄອບຄອງລາວ ຈັກກະພັດອາເມຣິກາ ແລະ ລູກມືໄດ້ເພີ່ມທະວີສົງຄາມຮຸກຮານລາວຕາມແຜນຍຸດທະສາດ “ສົງຄາມພິເສດ” ຂອງຈອນສັນ ຄ.ສ 1962 - 1969 ແລະ “ສົງຄາມພິເສດເພີ່ມທະວີ” ຂອງນິກສັນ ແຕ່ປີ ຄ.ສ 1969 - 1973 ຊຶ່ງປະຕິບັດການຂອງສົງຄາມພິເສດນີ້ ແມ່ນການໃຊ້ກອງກຳລັງທັບອາກາດ ດ້ວຍການຖິ້ມລະເບີດບຸກໂຈມຕີທຳລາຍເຂດປົດປ່ອຍຢ່າງຂະໜານໃຫຍ່ ແຕ່ກໍຖືກກອງທັບ ແລະ ປະຊາຊົນລາວໃຕ້ການນຳພາຂອງພັກຕິໃຫ້ປະລາໄຊໃນແຕ່ລະບັ້ນຮົບ ເຊັ່ນ:

1) ໄຊຊະນະຂອງກອງທັບ ແລະ ປະຊາຊົນເຮົາ ໃນການຕິຕໍ່ສູ້ຕ້ານສົງຄາມພິເສດຂອງຈອນສັນໃນປີ ຄ.ສ 1963 - 1969 ໃຫ້ປະລາໄຊໃນຫຼາຍບັ້ນຮົບ ເຊັ່ນ: ບັ້ນຮົບທົ່ງໄຫຫີນ ໃນກາງປີ ຄສ 1963 ທີ່ພວກເຂົາໃຊ້ກຳລັງຂະໜາດໃຫຍ່ຕີບຸກໂຈມຕີເຂດປົດປ່ອຍ ແລະ ບັ້ນຮົບບຸກໂຈມຕີເຂດນໍ້າເຫີນ ແຂວງຄຳມວນ

ກໍລ້ອນແລ້ວແຕ່ຖືກກອງທັບ ແລະ ປະຊາຊົນເຮົາຕີໃຫ້ປະລາໄຊລົງ. ຕໍ່ມາພວກເຂົາກໍ ໄດ້ເປີດບັ້ນຮົບໃຫຍ່ລຽນຕິດ ເພື່ອຫວັງດັບສູນກໍາລັງປະຕິວັດ ຍຶດເອົາເຂດປົດປ່ອຍ ເຊັ່ນ: ແຕ່ປີ ຄສ 1964 - 1968 ມີບັ້ນຮົບສາມສອນ, ບັ້ນຮົບສອນໄຊ 1, ບັ້ນຮົບສອນໄຊ 2, ບັ້ນຮົບມັງກອນ, ບັ້ນຮົບສີໂຄດຕະບອງ. ທຸກໆບັ້ນຮົບທີ່ພວກເຂົາຈັດຂຶ້ນລ້ວນແຕ່ຖືກຕອບໂຕ້ຄືນຢ່າງຮ້າຍແຮງ ຈາກກໍາລັງປະຕິລັດລາວ ເຮັດໃຫ້ພວກເຂົາປະລາໄຊຢ່າງເຈັບແສບ. ກົງກັນຂ້າມ, ກໍາລັງປະຕິວັດນັບມື້ນັບເຕີບໃຫຍ່ເຂັ້ມແຂງ, ເປັນເຈົ້າການບຸກຕີສັດຕູຢູ່ນໍ້າບາກເຖິງ 3000 ຄົນ ແລະ ສາມາດປົດປ່ອຍນໍ້າບາກໄດ້ໃນເດືອນມັງກອນ 1968. ມາຮອດປີ 1968 ຝ່າຍປະຕິວັດມີເຂດປົດປ່ອຍເຖິງ 2/3 ຂອງເນື້ອທີ່ ກວມເອົາພົນລະເມືອງເກືອບເຄິ່ງໜຶ່ງ ຂອງທົ່ວປະເທດ.

2) ໄຊຊະນະຂອງກອງທັບ ແລະ ປະຊາຊົນເຮົາ ໃນການຕໍ່ສູ້ຕ້ານ "ສົງຄາມພິເສດ ເພີ່ມທະວີ" ຂອງນິກສັນ ໃນປີ ຄ.ສ 1969 – 1973: ກ້າວເຂົ້າປີ ຄ.ສ 1969 ອາເມຣິກາໄດ້ປະຕິບັດຍຸດທະສາດສົງຄາມ "ລົງຂັ້ນໄດໃນທ່າແຂງ" ຕາມທິດສະດີນິກສັນ. ພວກເຂົາໄດ້ເລີ່ມຖອນກອງທະຫານຂອງຕົນອອກ ແລະ ສ້າງກອງທະຫານທ້ອງຖິ່ນຂຶ້ນແທນຢ່າງຫຼວງຫຼາຍ, ໂດຍມີເປົ້າໝາຍ ໃຊ້ຄົນອິນດູຈີນ ປ່ຽນແທນຄົນອາເມຣິກາ; ໃຫ້ຄົນອິນດູຈີນສູ້ຮົບກັບຄົນອິນດູຈີນ, ເຮັດໃຫ້ສົງຄາມເປັນຂອງສົງຄາມອິນດູຈີນ. ປະຕິບັດການຂອງຍຸດທະສາດສົງຄາມພິເສດເພີ່ມທະວີຂອງນິກເສັນ ສະແດງອອກໃນການເປີດບັ້ນຮົບບຸກໂຈມຕີເຂດປົດປ່ອຍໃນຫຼາຍໆບັ້ນຮົບ ເຊັ່ນ: ບັ້ນຮົບ O.D.N, ບັ້ນຮົບ ສອນເພັດ, ບັ້ນຮົບ ກູ້ກຽດ, ບັ້ນຮົບ ທະນົງກຽດ, ບັ້ນຮົບ ກັນຍາກຽດ, ບັ້ນຮົບ ມັງກອນກຽດ, ບັ້ນຮົບ ລາມເຊີນ 719, ບັ້ນຮົບ ສິນໄຊ, ບັ້ນຮົບ ຟ້າງຸ່ມ, ບັ້ນຮົບ ສົງດໍາ, ບັ້ນຮົບ ຕຸລາ, ບັ້ນຮົບ ປະສານຕຸລາ, ບັ້ນຮົບ ດິນແດນ 1 ແລະ ດິນແດນ 2. ທຸກໆບັ້ນຮົບ ທີ່ອາເມຣິກາ ແລະ ລູກມືກໍ່ຂຶ້ນນີ້ລ້ວນແຕ່ຖືກກໍາລັງປະຕິວັດ ຕີຕ້ານຄືນຢ່າງແຂງແຮງ ແລະ ຖືກປະລາໄຊຢ່າງເຈັບແສບ. ບໍ່ພຽງແຕ່ເທົ່ານັ້ນ ກໍາລັງປະຕິວັດ ຍັງໄດ້ເປັນເຈົ້າການບຸກໂຈມຕີສັດຕູຢູ່ຫຼາຍແຫ່ງ, ເຮັດໃຫ້ເຂດປົດປ່ອຍກວ້າງຂວາງອອກ. ມາຮອດຕົ້ນປີ ຄ.ສ 1973 ກໍາລັງປະຕິວັດ ສາມາດປົດປ່ອຍໄດ້ 4/5 ຂອງເນື້ອທີ່ ແລະ ປະຊາຊົນກວ່າ 1/2 ຂອງທົ່ວປະເທດ.

**ຂ. ການຮວມລາວຄັ້ງທີ 3**

ການຮວມລາວຄັ້ງທີ 3 ເກີດຂຶ້ນມາຈາກການປະລາໄຊຢ່າງລຽນຕິດໃນສະໜາມຮົບໃນການເມືອງແລະການທະຫານຂອງຝ່າຍລາຊະອານາຈັກ. ສົມທົບກັບຄວາມຮຽກຮ້ອງຕ້ອງການຂອງປວງຊົນລາວທັງຊາດແລະທິດນໍາຂອງແນວລາວຮັກຊາດ. ດັ່ງນັ້ນມາໃນເດືອນກັນຍາປີຄສ 1972 ຝ່າຍວຽງຈັນຈໍາຕ້ອງຍອມເຈລະຈາກັບຝ່າຍແນວລາວຮັກຊາດທີ່ວຽງຈັນແລະວັນທີ 21 ກຸມພາຄສ 1973 ສັນຍາວ່າ "ດ້ວຍການຟື້ນຟູສັນຕິພາບແລະປະຕິບັດຄວາມຖືກຕ້ອງປອງດອງຊາດຢູ່ແລ້ວ" ໄດ້ຮັບການລົງນາມ.

ສັນຍານີ້ໄດ້ກໍານົດຍຸຕິສົງຄາມເຮັດໃຫ້ສອງຕົວເມືອງຄືວຽງຈັນແລະຫຼວງພະບາງເປັນນະຄອນກາງ, ຕົກລົງສ້າງລັດຖະບານປະສົມຊົ່ວຄາວແຫ່ງຊາດແລະຄະນະມົນຕີປະສົມການເມືອງແຫ່ງຊາດ. ແຕ່ວ່າມາຮອດວັນທີ 20 ສິງຫາຄສ 1973 ກຸ່ມຂວາໄດ້ຮ່ວມມືກັບພູຍຊະນະນິກອນ, ສີສຸກນະຈໍາປາສັກ, ກຸປະສິດອະໄພ, ນາຍພົນທ້າວມາ…ເຮັດລັດຖະປະຫານຂຶ້ນເພື່ອໂຄ່ນລົ້ມເຈົ້າສຸວັນນະພູມາ, ລົບລ້າງສັນຍາວຽງຈັນ. ແຕ່ກໍຖືກກໍາລັງຮັກຊາດ, ຮັກສັນຕິພາບລະງັບເຫດການລົງຢ່າງທັນເວລາ.

ວັນທີ 14 ກັນຍາປີຄສ 1973 ອະນຸສັນຍາກໍໄດ້ຮັບການລົງນາມ. ບັນດາກໍາລັງຮັກຊາດໄດ້ເລັ່ງທວງໃຫ້ລັດຖະບານວຽງຈັນຮັບຮ້ອນປະຕິບັດສັນຍາຢ່າງເຂັ້ມງວດ. ສະນັ້ນຕໍ່ມາບໍ່ດົນກໍໄດ້ຈັດຕັ້ງຄະນະປະສົມສູນກາງເພື່ອປະຕິບັດສັນຍາ,ຈັດຕັ້ງກອງທະຫານປະສົມແລະຕໍາຫຼວດປະສົມຢູ່ສອງຕົວເມືອງ (ວຽງຈັນ

ແລະຫຼວງພະບາງ). ວັນທີ 5 ເມສາ 1974 ລັດຖະບານປະສົມຊົ່ວຄາວໂດຍແມ່ນເຈົ້າສຸວັນນະພູມມາເປັນນາຍົກແລະຄະນະມົນຕີປະສົມການເມືອງແຫ່ງຊາດໂດຍແມ່ນເຈົ້າສຸພານຸວົງເປັນປະທານກໍໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ.

## 4. ການຍຶດອຳນາດປີຄສ 1975

ພາຍຫຼັງທີ່ລັດຖະບານປະສົມແລະຄະນະມົນຕີປະສົມການເມືອງໄດ້ຮັບການສ້າງຕັ້ງຂຶ້ນຂະບວນການຕໍ່ສູ້ຂອງປະຊາຊົນລາວໄດ້ເປັນກະແສຟອງຟົດເດືອດໃນທົ່ວປະເທດເຊັ່ນ: ໃນວັນທີ 24 ທັນວາ 1974 ປະຊາຊົນແລະທະຫານຝ່າຍຂວາກອງໜຶ່ງຢູ່ເມືອງຫ້ວຍຊາຍໄດ້ລຸກຮື້ຂຶ້ນແລະປະກາດຕົນຂຶ້ນກັບລັດຖະບານປະສົມໂດຍກົງ. ຕໍ່ມາວັນທີ 6 ມັງກອນ 1975 ປະຊາຊົນເມືອງໜອງບົກແຂວງຄຳມ່ວນກໍໄດ້ລຸກຮື້ຂຶ້ນຕໍ່ສູ້ເອົາສິດເສລີພາບ, ພ້ອມດຽວກັນນັ້ນຢູ່ຕາມແຂວງຕ່າງໆກໍມີຂະບວນລຸກຮື້ຂຶ້ນຢ່າງເນື່ອງນິດລຽນຕິດ.

ອີງໃສ່ສະພາວະການປະຕິວັດທີ່ສຸກງອມນີ້, ພັກປະຊາຊົນປະຕິວັດລາວຈຶ່ງໄດ້ວາງແຜນກ່ຽວກັບ "ການຍຶດອຳນາດ" ອອກໂດຍຮຽກຮ້ອງໃຫ້ປວງຊົນທັງຊາດລຸກຮືຂຶ້ນພາບດຽວເພື່ອຍຶດອຳນາດທົ່ວປະເທດ. ຫຼັງຈາກນັ້ນປະຊາຊົນ, ນັກຮຽນ, ນັກສຶກສາ, ຂ້າລາຊະການ, ຕະຫຼອດຮອດທະຫານ, ຕຳຫຼວດຝ່າຍຂວາກໍໄດ້ລຸກຮືຂຶ້ນທັບມ້າງກົງຈັກການປົກຄອງເກົ່າແລະສ້າງຕັ້ງອຳນາດການປົກຄອງໃໝ່ຂອງຕົນຂຶ້ນເທື່ອລະຂັ້ນ.

ມາໃນວັນທີ 23 ສິງຫາ 1975 ຢູ່ນະຄອນຫຼວງວຽງຈັນ, ປະຊາຊົນປະມານ 200.000 ກວ່າຄົນໄດ້ໂຮມຊຸມນຸມໃຫຍ່ເພື່ອໂຄ່ນລົ້ມອຳນາດການປົກຄອງເກົ່າ, ເຮັດໃຫ້ກົງຈັກການປົກຄອງຂອງພວກຂວາຈັດຖືກແຕກມ້າງຢ່າງສິ້ນເຊີງແລະເປັນຂີດໝາຍໄຊຊະນະແຫ່ງການລຸກຮືຂຶ້ນຍຶດອຳນາດການປົກຄອງໃນທົ່ວປະເທດແລະໄດ້ປະກາດປະເທດເປັນສາທາລະນະລັດປະຊາທິປະໄຕປະຊາຊົນລາວໃນວັນທີ 2 ທັນວາ 1975ໂດຍມີສະເດັດເຈົ້າສຸພານຸວົງເປັນປະທານປະເທດແລະທ່ານໄກສອນພົມວິຫານເປັນນາຍົກລັດຖະມົນຕີ.

**ລາວສະໄໝປັດຈຸບັນ**

ປະຫວັດສາດລາວສະໄໝປັດຈຸບັນກຳນົດເອົາແຕ່ປີຄ.ສ 1975 ເປັນຕົ້ນຊຶ່ງເປັນປີທີ່ປວງຊົນລາວທັງຊາດສຳເລັດໃນພາລະກິດການຕໍ່ສູ້ປົດປ່ອຍຊາດຂັບໄລ່ພວກຈັກກະພັດລ່າເມືອງຂຶ້ນທັງແບບເກົ່າແລະແບບໃໝ່ອອກໄປຈາກດິນແດນລາວຢ່າງສິ້ນເຊີງທັງເປັນຊ່ວງແຫ່ງການເລີ່ມຕົ້ນກໍ່ສ້າງແລະພັດທະນາປະເທດໄປສູ່ຄວາມທັນສະໄໝຕາມຄວາມຕ້ອງການຂອງຄົນລາວໂດຍມີພັກປະຊາຊົນປະຕິວັດລາວເປັນຜູ້ນຳພາ.

### 4.1 ປະເທດລາວແຕ່ປີ ຄສ 1975 - 1985

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍພັກປ.ປ.ລາວໄດ້ກຳນົດແນວທາງພັດນາປະເທດໃນໄລຍະໃໝຄື: ຕັດສິນໃຈນຳພາປະຊາຊົນລາວສ້າງສາປະເທດຊາດຕາມເສັ້ນທາງກ້າວຂຶ້ນສູ່ສັງຄົມນິຍົມໂດຍບໍ່ຜ່ານໄລຍະຂະຫຍາຍຕົວຂອງທຶນນິຍົມ. ແຕ່ໃນເວລານັ້ນສະຖານະການຂອງປະເທດເຮົາແມ່ນຍັງມີຄວາມຫຍຸ້ງຍາກທັງທາງດ້ານການເມືອງແລະທາງດ້ານເສດຖະກິດ; ໂດຍສະເພາະພື້ນຖານເສດຖະກິດຍັງຕ່ຳ, ດ້ອຍພັດທະນາ; ພ້ອມດຽວກັນນັ້ນສັດຕູກໍໃຊ້ກົນອຸບາຍເລ່ລ່ຽມເພື່ອຫວັງທຳລາຍມ້າງເພລະບອບໃໝ່ (ສປປລາວ). ສະນັ້ນ, ພັກ - ລັດຖະບານລາວໄດ້ວາງສອງໜ້າທີ່ຍຸດທະສາດທີ່ຕ້ອງປະຕິບັດໄປພ້ອມໆກັນຄື: "ປົກປັກຮັກສາແລະສ້າງສາປະເທດຊາດ".

ໃນບາດກ້າວທຳອິດແມ່ນເລັ່ງໃສ່ອຳນາດການປົກຄອງໃໝ່ໂດຍການເສີມຂະຫຍາຍສິດອຳນາດປະຊາທິປະໄຕແລະສິດເປັນເຈົ້າຮວມໝູ່ຂອງປະຊາຊົນບັນດາເຜົ່າ, ປັບປຸງກົງຈັກປົກຄອງນັບແຕ່ຂັ້ນສູນກາງຈົນຮອດທ້ອງຖິ່ນຕາມຄຳຂວັນທີ່ວ່າ "ໂດຍປະຊາຊົນຮັບໃຊ້ປະຊາຊົນແລະເພື່ອສິດຜົນປະໂຫຍດຂອງປະຊາຊົນ".

ພ້ອມກັນນັ້ນກໍໄດ້ປັບປຸງກົງຈັກລັດແບບໃໝ່ຊຶ່ງປະກອບດ້ວຍ 3 ອໍານາດຄື: ອໍານາດນິຕິບັນຍັດ, ອໍານາດບໍລິຫານ, ອໍານາດຕຸລາການ. ຄຽງຄູ່ກັບການປັບປຸງອໍານາດການປົກຄອງຢູ່ໃນສະຖາບັນການປົກຄອງຂອງລັດແບບໃໝ່ນີ້, ບັນດາອົງການຈັດຕັ້ງການເມືອງຕ່າງໆກໍໄດ້ຮັບການປັບປຸງເຊັ່ນ: ການຈັດຕັ້ງແນວໂຮມແຫ່ງຊາດ, ການຈັດຕັ້ງພັກແລະບັນດາອົງການຈັດຕັ້ງມະຫາຊົນຕ່າງໆ. ວຽກງານການປ້ອງກັນຊາດກໍໄດ້ມີການປັບປຸງໃຫ້ເຂັ້ມແຂງແລະມີຄຸນນະພາບທັງສາມປະເພດຄື: ທະຫານຫຼວງ, ທະຫານທ້ອງຖິ່ນແລະທະຫານລາດກອງຫຼອນ.

ເສດຖະກິດ - ສັງຄົມຂອງສປປລາວໄດ້ຮັບການພັດທະນາຕາມແຜນການຊຶ່ງເລີ່ມຈາກແຜນການ 3 ປີ (1978 - 1980) ເພື່ອຟື້ນຟູເສດຖະກິດ - ສັງຄົມຫຼັງສົງຄາມ. ເນື້ອໃນຂອງແຜນການແມ່ນສຸມໃສ່ແກ້ໄຂທາງດ້ານສະບຽງອາຫານແລະສິນຄ້າໃຊ້ສອຍ, ເອົາການກະສິກໍາ - ປ່າໄມ້ເປັນຂອດໃຈກາງແລະດໍາເນີນການປະຕິວັດ 3 ປະການໄປພ້ອມໆກັນ. ພາຍຫຼັງສໍາເລັດແຜນການ 3 ປີ, ພັກ - ລັດຖະບານສປປລາວໄດ້ວາງແຜນການ 5 ປີ ຄັ້ງທໍາອິດ (1981 - 1985) ໂດຍມີເປົ້າໝາຍເລັງໃສ່: ເຮັດໃຫ້ສະພາບການມີຄວາມສະຫງົບຢ່າງຮອບດ້ານໂດຍພື້ນຖານ, ສຸມໃສ່ວຽກງານກະສິກໍາ - ປ່າໄມ້, ກ່ອນອື່ນແມ່ນໃຫ້ກຸ້ມຕົນເອງດ້ານສະບຽງອາຫານແລະມີສ່ວນແຮໄວ້, ຊຸກຍູ້ການຫັນເປັນສະຫະກອນກະເສດ, ຂະຫຍາຍຂະແໜງການປະຊາສຶກສາແລະບໍາລຸງພະນັກງານ. ສະຫຼຸບແລ້ວຜ່ານໄລຍະທໍາອິດແຫ່ງການປົກປັກຮັກສາແລະກໍ່ສ້າງລະບອບສາທາລະນະລັດປະຊາທິປະໄຕປະຊາຊົນ, ປະເທດເຮົາບໍ່ພຽງແຕ່ໄດ້ຮັບການປົກປ້ອງໃຫ້ມີສະຖຽນລະພາບຢ່າງໝັ້ນຄົງເທົ່ານັ້ນແຕ່ຫາກຍັງຮັບການພັດທະນາແລະສາມາດກຸ້ມຕົນເອງໄດ້ທາງດ້ານສະບຽງອາຫານໃນຂັ້ນພື້ນຖານ.

### 4.2 ປະເທດລາວແຕ່ປີຄສ 1985 - 2012

ປະເທດລາວແຕ່ປີຄ.ສ 1985 - 2012 ເປັນຊ່ວງທີ່ສັງຄົມລາວກໍາລັງປະເຊີນໜ້ານັບແຕ່ປີ 1986 ເປັນຕົ້ນມານະໂຍບາຍການພັດທະນາປະເທດສ.ປ.ປ.ລາວແມ່ນປະຕິບັດຕາມແນວທາງປ່ຽນແປງໃໝ່ຂອງພັກປະຕິວັດລາວວາງອອກ. ໃນນີ້ໄດ້ເນັ້ນໜັກເຖິງບັນຫາການປ່ຽນແປງດ້ານຈິນຕະນາການ, ດັດແປງກົນໄກຄຸ້ມຄອງເສດຖະກິດແລະແບບແຜນວິທີເຮັດວຽກ. ການປ່ຽນແປງໃໝ່ໄດ້ນໍາມາຊຶ່ງການປ່ຽນແປງດ້ານເສດຖະກິດ, ສັງຄົມຕະຫຼອດຮອດການພົວພັນສາກົນກໍນັບມື້ນັບກວ້າງຂວາງ. ຕະຫຼອດໄລຍະຜ່ານມາລັດຖະບານສ.ປ.ປ. ລາວໄດ້ອອກແຮງແລະໄດ້ມີບົດບາດໃນການສ້າງສັນຕິພາບແລະຄວາມມີສະຖຽນລະພາບໃນອາຊີຕາເວັນອອກສຽງໃຕ້. ມາຮອດປະຈຸບັນສ.ປ.ປລາວໄດ້ມີການພົວພັນທາງການທູດກັບ 100 ກວ່າປະເທດໃນໂລກ. ຜ່ານການເຄື່ອນໄຫວສາກົນຢ່າງຕັ້ງໜ້າມາຮອດວັນທີ 23 ກໍລະກົດ 1997 ສ.ປ.ປລາວກໍໄດ້ເຂົ້າຮ່ວມເປັນສະມາຊິກຂອງກຸ່ມອາຊຽນ (ASEAN) ແລະ ພວມພະຍາຍາມສ້າງບົດບາດຂອງຕົນໃຫ້ທັນທຽມກັບຈັງຫວະຂະຫຍາຍຕົວຂອງອາຊຽນ ກໍຄືສາກົນ.

# ລາວສຶກສາ
# ພາກທີ III: ສຶກສາປະຊາກອນລາວ
# ບົດທີ1: ຄວາມຮູ້ທົ່ວໄປກ່ຽວກັບປະຊາກອນ

## I.ຄວາມໝາຍຂອງວິຊາສຶກສາປະຊາກອນ.

ຄຳວ່າ "ປະຊາກອນ" ແມ່ນໝາຍເຖິງກຸ່ມຂອງສິ່ງວັດຖຸໃດໜຶ່ງຊະນິດດຽວກັນທີ່ມີຢູ່ຮ່ວມກັນໃນສະຖານທີແຫ່ງໃດໜຶ່ງ. ຄຳວ່າ "Population" ມີກົກເຄົ້າມາຈາກພາສາລາຕິນວ່າ: Populous ແມ່ນໝາຍເຖິງ ຈຳນວນຂອງປະຊາກອນທີ່ອາໄສຢູ່ໃນແຫ່ງໃດໜຶ່ງ,ໃນອານາເຂດໃດໜຶ່ງ ຫຼື ຢູ່ໃນໂລກເຊັ່ນ: ປະຊາກອນລາວ ໝາຍເຖິງຈຳນວນຄົນລາວທີ່ອາໄສຢູ່ໃນພື້ນແຜ່ນດິນລາວທັງໝົດ.ແຕ່ໃນທາງຊີວະວິທະຍາຄຳວ່າ "ປະຊາກອນ" ໄດ້ມີຄວາມໝາຍຢ່າງກວ້າງຂວາງ ແລະ ສາມາດໃຊ້ກັບຈຳນວນສິ່ງທີ່ມີຊີວິດ ຫຼື ບໍ່ມີຊີວິດອື່ນໆໄດ້ອີກດ້ວຍ ແຕ່ຕ້ອງໄດ້ອະທິບາຍອີກວ່າມັນແມ່ນປະຊາກອນອັນໃດ, ຢູ່ໃນສະຖານທີ່ແຫ່ງໃດ, ໃນເວລາໃດ ແລະ ມີປະລິມານເທົ່າໃດ ເຊັ່ນ: ປະກອນປາດຸກ, ປະຊາກອນແບ້, ປະຊາກອນພືດ ...

ວິຊາສຶກສາປະຊາກອນ ກໍແມ່ນວິຊາວິຊາໜຶ່ງຊຶ່ງຂະຫຍາຍມາຈາກປະຊາກອນສາດ. ຄຳວ່າປະຊາກອນສາດແມ່ນມາຈາກຄຳວ່າ "ປະຊາກອນ" ທີ່ໄດ້ສະໝາດກັບຄຳວ່າ "ສາດ" ຊຶ່ງກົງກັບພາສາອັງກິດ Demography ນັ້ນເອງ. ປະຊາກອນໝາຍເຖິງກຸ່ມຄົນຫຼືພົນລະເມືອງ. ສ່ວນສາດ ແມ່ນໝາຍເຖິງວິຊາ ຫຼື ຄວາມຮູ້ທີ່ໄດ້ມາຈາກການຮຽນ ຫຼື ການເຝິກຝົນ. ສະນັ້ນ, ປະຊາກອນສາດຈຶ່ງໝາຍເຖິງສາດ ຫຼື ວິຊາວ່າດ້ວຍປະຊາກອນ. ຄຳວ່າປະຊາກອນສາດໄດ້ເລີ່ມຖືກຮັບຮູ້ແຜ່ຫຼາຍພາຍຫຼັງປີ ຄ.ສ 1960 ເປັນຕົ້ນມາ ໂດຍໝາຍເຖິງ "ການສຶກສາຢ່າງມີວິທະຍາສາດກ່ຽວກັບປະຊາກອນມະນຸດ".

ຄວາມເປັນຈິງແລ້ວ ການສຶກສາປະຊາກອນ(Population Studies)ໄດ້ຖືກນຳມາເປັນທີ່ຮູ້ຈັກ ແລະຍອມຮັບກັນທົ່ວໄປໃນຄວາມໝາຍຂອງປະຊາກອນສຶກສາ(Population Education) ຊຶ່ງໝາຍເຖິງການໃຫ້ການສຶກສາທາງດ້ວຍປະຊາກອນນັ້ນເອງ.

ຮວມຄວາມແລ້ວ,ວິຊາສຶກສາປະຊາກອນແມ່ນວິຊາປະຊາກອນ ທີ່ມີຄວາມໝາຍກວ້າງຂວາງທີ່ສຸດ ຊຶ່ງຮວມທັງທິດສະດີ ແລະ ການຄົ້ນຄວ້າຫາສາເຫດຕ່າງໆ ເພື່ອອະທິບາຍສະຖິຕິ, ຂະໜາດ,ໂຄງສ້າງ (ອາຍຸ, ເພດ, ການສຶກສາ, ອາຊີບ) ແລະ ການປ່ຽນແປງຂອງຂະໜາດປະຊາກອນ (ການ ເກີດ, ການຕາຍ, ການຍ້າຍທີ່ຢູ່ອາໄສ) ຫຼື ອະທິບາຍປາການທາງດ້ານປະຊາກອນທີ່ພົນກັບປັດໄຈຕ່າງໆທາງສັງຄົມ, ວັດທະນະທຳ, ເສດຖະກິດ, ການເມືອງ ແລະ ສິ່ງແວດລ້ອມ.

## II. ຄວາມສຳຄັນ ແລະ ປະໂຫຍດຂອງວິຊາສຶກສາປະຊາກອນ.

ວິຊາສຶກສາປະຊາກອນມີຄວາມສຳຄັນອັນໃຫຍ່ຫຼວງທີ່ຊ່ວຍໃຫ້ປະຊາກອນຫຼືຄົນເຮົາຮູ້ຈັກ ແລະເຂົ້າໃຈບັນຫາຂອງຄົນເພື່ອພັດທະນາຕົນເອງ, ຄອບຄົວ ແລະ ປະເທດຊາດໃຫ້ກ້າວໜ້າຢ່າງຖືກຕ້ອງຕາມສະພາວະການຂະຫຍາຍຕົວຂອງເສດຖະກິດ - ສັງຄົມ.ມາເຖິງປັດຈຸບັນ, ສະຫະປະຊາຊາດ ແລະ ບັນດານຳລັດຖະບານຫຼາຍໆປະເທດ ໂດຍສະເພາະແມ່ນບັນດາປະເທດທີ່ກຳລັງພັດທະນາ ແລະ ດ້ອຍພັດທະນາໄດ້ເອົາໃຈໃສ່ໃຫ້

ຄວາມສຳຄັນຕໍ່ວິຊາດັ່ງກ່າວ. ພ້ອມດຽວກັນນັ້ນ, ຫຼາຍປະເທດກໍໄດ້ນຳເອົາເນື້ອໃນທາງດ້ອຍປະຊາກອນ ແລະ ການພັດທະນາເຂົ້າເປັນນະໂຍບາຍໜຶ່ງຂອງຊາດ.

## III. ຄວາມເປັນມາຂອງວິຊາສຶກສາປະຊາກອນ.

ນັບແຕ່ສົງຄາມໂລກຄັ້ງທີ່ 2 ສິ້ນສຸດລົງ, ການປ່ຽນແປງທາງປະຊາກອນໃນປະເທດອື່ນໆນອກຈາກເຂດເອີຣົບຕາເວັນຕົກແລ້ວ ນັບວ່າຜິດດ່ຽງກັບດັ່ງທີ່ຄາດຄະເນໄວ້ໃນທິດສະດີການປ່ຽງແປງທາງປະຊາກອນ. ປະຊາກອນໂລກໄດ້ເພີ່ມຂຶ້ນຢ່າງວ່ອງໄວຈົນຜິດສັງເກດ. ບັນດາປະຊາກອນບໍ່ວ່າຈະເປັນບັນຫາ "ການລະເບີດທາງປະຊາກອນ"ຊຶ່ງໝາຍເຖິງການເພີ່ມຂຶ້ນຢ່າງວ່ອງໄວຂອງຈຳນວນປະຊາກອນຈົນກາຍເປັນ "ບັນຫາສັງຄົມຂອງຍຸກສະໄໝ" .ດັ່ງນັ້ນ "ປະຊາສາດ" ຈຶ່ງເປັນວິຊາໜຶ່ງໃນການວິເຄາະທ່າອ່ຽງຂອງປະຊາກອນ ແລະ ໃຫ້ຄຳອະທິບາຍ, ຫາເຫດຜົນຊີ້ແຈງໃຫ້ແກ່ປະກົດການທາງປະຊາກອນທີ່ເກີດຂຶ້ນ.

ຄວາມສົນໃຈເລື່ອງປະຊາກອນສາດໄດ້ເພີ່ມຫຼາຍຂຶ້ນ ຊຶ່ງສະແດງອອກໃນກອງປະຊຸມປະຊາໂລກຄັ້ງທຳອິດ ໃນປີ ຄ.ສ 1954 ທີ່ກຸງໂຣມ (ອິຕາລີ) ແລະ ຄັ້ງທີ່ 2 ໃນປີ ຄ.ສ 1965 ທີ່ກຸງບູດາແປສຕ໌ (ຮົງກາຣີ). ກອງປະຊຸມປະຊາກອນໂລກດັ່ງກ່າວໄດ້ຊຸກດັນໃຫ້ມີການນຳເອົາປະສົບການ ແລະ ຄວາມຮູ້ດ້ານປະຊາກອນຈາກປະເທດຕ່າງໆ ມາປະສົມປະສານຮ່ວມກັນເປັນຄວາມຮູ້ທີ່ເປັນລະບົບ. ກອງປະຊຸມຄັ້ງທີ່ 3 ໄດ້ໄຂຂຶ້ນເມື່ອປີ ຄ.ສ 1974 ທີ່ກຸງບູກາແຣດ (ຣູມານີ), ຄັ້ງທີ 4 ເມື່ອປີ ຄ.ສ 1984 ທີ່ກຸງເມັກຊິໂກ (ເມັກຊິກໂກຊີ) ແລະ ຄັ້ງທີ່ 5 ເມື່ອປີ ຄ.ສ 1994 ທີ່ກຸງໄຄໂຣ (ເອຢິບ).ກອງປະຊຸມຄັ້ງທີ່ 5 ນີ້ໄດ້ເພີ່ມຫົວຂໍ້ "ການພັດທະນາ" ເຂົ້າຕື່ມອີກ ຊຶ່ງເອີ້ນວ່າ "ກອງປະຊຸມສາກົນເລື່ອງປະຊາກອນກັບການພັດພັດທະນາ" (International conference on Population and Development ຫຼື ICPD).

ສະຫະພັນສາກົນເພື່ອການສຶກສາທາງວິທະຍາສາດດ້ານປະຊາກອນ (International union for Scientific Study of Population ຫຼື IUSSP)ໄດ້ຮອບຮວມສັບວິຊາການທີ່ໃຊ້ໃນວິຊາປະຊາກອນສາດແລ້ວພິມເປັນປຶ້ມ ແລະ ເຜີຍແຜ່ໂດຍອົງການສະຫະປະຊາຊາດໃນປີ ຄ.ສ 1958. ປຶ້ມເຫັກນີ້ປຽບເໝືອນດັ່ງເອກະສານທີ່ຂະຫຍາຍການສຶກສາປະຊາກອນສາດໃຫ້ເປັນສາກົນ. ຈາກນັ້ນ "ປະຊາກອນສາດ" ໄດ້ກາຍເປັນສາຂາວິຊາທີ່ສອນກັນໃນລະດັບມະຫາວິທະຍາໄລຕ່າງໆຕັ້ງແຕ່ປີ 1960 ເປັນຕົ້ນມາ. ກ່ອນໜ້ານັ້ນ, ການສອນປະຊາກອນສາດມັກຈະເປັນພຽງສ່ວນໜຶ່ງຂອງວິຊາ "ສະຖິຕິປະຊາກອນ" ຫຼື ເປັນວິຊາຍ່ອຍຢູ່ໃນຄະນະວິທະຍາສາດສັງຄົມ ຫຼື ເສດຖະສາດ. ຕໍ່ມາ, ມະຫາວິທະນາໄລຫຼາຍແຫ່ງໃນໂລກໄດ້ລິເລີ່ມໂຄງການຕ່າງໆດ້ານປະຊາກອນ ໂດຍບັນຈຸເຂົ້າໃນຫຼັກສູດການຮຽນ-ການສອນ. ບັນດາພາກວິຊາ, ຄະນະວິຊາ ຫຼື ບາງສະຖາບັນກໍໃສ່ຊື່ປະຊາກອນສາດ ໄດ້ທຳການສິດສອນ ແລະ ຄົ້ນຄວ້າກ່ຽວກັບປະຊາກອນສາດໂດຍກົງ.

ສະເພາະຢູ່ປະເທດລາວ, ວິຊາປະຊາກອນໄດ້ຖືກນຳເອົາມາສິດສອນແຕ່ກ່ອນປີ ຄ.ສ 1975 ຢູ່ໃນຊັ້ນປະຖົມ ແລະ ມັດທະຍົມຕົ້ນ, ແຕ່ໃນເວລານັ້ນໄດ້ໃສ່ຊື່ວ່າ "ວິຊາໜ້າທີ່ພົນລະເມືອງ" ຊຶ່ງມີເນື້ອໃນທີ່ກ່ຽວກັບປະຊາກອນບໍ່ຫຼາຍປານໃດ. ຕໍ່ມາໃນປີ ຄ.ສ 1995, ວິຊາປະຊາກອນສຶກສາໄດ້ເລີ່ມບັນຈຸເຂົ້າສອນໃນຫຼັກສູດປະຖົມ, ມັດທະຍົມ ໂດຍກະຊວງສຶກສາທິການ ຊຶ່ງໄດ້ສອດແຊກເນື້ອໃນປະຊາກອນເຂົ້າກັບວິຊາອື່ນໆເຊັ່ນຊີວະສາດ, ພູມີສາດ... ພ້ອມດຽວນີ້, ບາງສະຖາບັນກໍໄດ້ເລີ່ມທຳການສ້າງຫຼັກສູດສິດສອນ ຫຼື ຫຼັກສູດອົບຮົມກ່ຽວກັບວິຊາດັ່ງກ່າວເຊັ່ນພະແນກພູມີສາດ-ປະຫວັດສາດ (ອະດີດ ມ ສ ຄ)ກໍໄດ້ນຳເອົາວິຊາພູມີສາດ

ປະຊາກອນເຂົ້າສອນໃນປີ 1990 ເປັນຕົ້ນມາ. ສຳລັບມະຫາວິທະຍາໄລແຫ່ງຊາດລາວກໍໄດ້ເລີ່ມສ້າງຫຼັກສູດ ວິຊາສຶກສາປະຊາກອນ ແລະ ເລີ່ມນຳມາສິດສອນເປັນໃນສົກຮຽນ 2001-2002 ເປັນຕົ້ນມາ.

# ບົດທີ II:
# ປະຫວັດການຂະຫຍາຍຕົວ ແລະການແຈກຢາຍຂອງປະຊາລາວ

## I. ປະຫວັດການຂະຫຍາຍຕົວຂອງປະຊາກອນລາວ.

ປະຊາຊົນລາວໄດ້ມີປະຫວັດສາດອັນຍາວນານ ແລະ ໄດ້ຕັ້ງຫຼັກແຫ່ງຢູ່ໃນພື້ນແຜ່ນດິນແຫ່ງນີ້ເອີ້ນວ່າ "ອານາຈັກລານຊ້າງ" ໃນເມື່ອກ່ອນ ແລະ ສາທາລະນະລັດປະຊາທິປະໄຕປະຊາຊົນລາວໃນປັດຈຸບັນເປັນເວລາຫຼາຍພັນປີມາແລ້ວ, ແຕ່ມີຄວາມຫຍຸ້ງຍາກທີ່ຈະຫາຫຼັກຖານອັນຈະແຈ້ງເພື່ອຢັ້ງຢືນເຖິງຈຳນວນປະຊາກອນລາວໃນອະໄໝກ່ອນ. ດັ່ງນັ້ນ, ຈຶ່ງຈຳເປັນຈະຕ້ອງໄດ້ສືບຕໍ່ສຶກສາຄົ້ນຄວ້າຕື່ມອີກ.

**<u>ຮູບ 1:</u>**ສະແດງເຖິງລະດັບການຂະຫຍາຍຕົວຂອງປະຊາກອນລາວ
ແຕ່ປີ ຄ.ສ 1900-2012




***(ຂໍ້ມູນຈາກສູນສະຖິຕິແຫ່ງຊາດ 2012)***

ໃນປະຫວັດສາດລາວທີ່ຜ່ານມາ ໄດ້ປາກົດມີການສຳຫຼວດປະຊາຊົນລາວຄັ້ງທຳອິດເມື່ອປີ ຄ.ສ 1377 ຊຶ່ງໄດ້ເຮັດໃຫ້ກະສັດລາວອົງໜຶ່ງໄດ້ນາມວ່າ "ພະເຈົ້າສາມແສນໄທ".ນີ້ກໍເນື່ອງຈາກວ່າໄດ້ມີປະຊາກອນລາວປະມານສາມແສນຄອບຄົວ (ບໍ່ນັບຄອບຄົວຂອງເຜົ່າອື່ນໆ). ຕໍ່ຈາກນັ້ນມາຈົນເຖິງໄລຍະທີ່ຕົກເປັນຫົວເມືອງຂຶ້ນຂອງຝະລັ່ງຈຶ່ງສາມາດຮູ້ອີກວ່າໃນປີ ຄ.ສ 1900 ໃນທົ່ວປະເທດປະຊາກອນລາວມີພຽງແຕ່ປະມານ 400 000 ຄົນເທົ່ານັ້ນ. ຈາກນັ້ນ, ມາຮອດປີ 1912 ປະຊາກອນໄດ້ເພີ່ມຂຶ້ນເຖິງ 813 900 ຄົນ, ໝາຍຄວາມວ່າໃນຮອບເວລາ 20 ປີ ຈຳນວນປະຊາກອນຈຶ່ງໄດ້ເພີ່ມຂຶ້ນເທົ່າຕົວ. ມາຮອດປີ 1960 ຈຳນວນປະຊາກອນລາວໄດ້ເພີ່ຂຶ້ນເປັນ 1 900 000 ຄົນ ຊຶ່ງເຫັນໄດ້ວ່າຈຳນວນດັ່ງກ່າວໄດ້ເພີ່ມຂຶ້ນເທົ່າຕົວໃນຮອບເກືອບ 40 ປີ. ເວົ້າລວມ, ການເພີ່ມຂຶ້ນຂອງປະຊາກອນລາວຢູ່ໃນໄລຍະນີ້ແມ່ນການເພີ່ມແບບທຳມະຊາດເປັນຈຸດໜັກ. ແຕ່ພໍກ້າວເຂົ້າຊຸມປີ 1960-1975 ຈຳນວນປະຊາກອນລາວໄດ້ເລີ່ມຕົ້ນຂຶ້ນຂະຫຍາຍຕົວໄວຂຶ້ນກວ່າແຕ່ກອນຊຶ່ງຕົ້ນຕໍກໍຍັງແມ່ນການເພີ່ມແບບທຳມະຊາດຢູ່, ສ່ວນການອົບພະຍົບເຂົ້າປະເທດນັ້ນແມ່ນມີໜ້ອຍ ໃນນັ້ນຕົ້ນຕໍແມ່ນຊາວຫວຽດນາມ, ຊາວຈີນ, ຊາວອິນເດຍ... ສະນັ້ນຕົກມາເຖິງທ້າຍໄລຍະນີ້ ຄື ໃນປີ 1970 ຈຳນວນປະຊາກອນໄດ້ເພີ່ມຂຶ້ນເປັນປະມານ 3 000 000 ຄົນ.

ນັບແຕ່ວັນທີ 2 ທັນວາ 1975 ເປັນຕົ້ນມາ,ເຖິງແມ່ນວ່າຜົນສະທ້ອນຂອງສົງຄາມຍັງມີຢູ່ກໍຕາມ ແຕ່ຍ້ອນອັດຕາການເກີດສູງ ແລະ ຄຽງຄູ່ກັບອັດຕາການຕາຍຫຼຸດລົງໄວກວ່າ, ສະນັ້ນປະຊາກອນຈຶ່ງເລີ່ມເພີ່ມຂຶ້ນໄວ. ອີງຕາມການສຳຫຼວດປະຊາກອນລາວຄັ້ງທີໜຶ່ງໃນປີ 1985 ໃຫ້ຮູ້ວ່າທົ່ວປະເທດ ມີຈຳນວນປະຊາກອນ 3 584 803 ຄົນ ໃນນັ້ນມີຍິງ 1 827 688ຄົນມາເຖິງການສຳຫຼວດປະຊາກອນລາວໄດ້ເພີ່ມຂຶ້ນເປັນ 4 581 258 ຄົນໃນນັ້ນມີຍິງ 2 315 931 ຄົນ ແລະ ຢູ່ໃນໄລຍະຂອງການສຳຫຼວດນີ້ ອັດຕາການຂະຫຍາຍຕົວຂອງປະຊາກອນແມ່ນ 2,6% ຕໍ່ປີ. ພໍມາເຖິງປີ 2005 ກໍໄດ້ມີການສຳຫຼວດປະຊາກອນທົ່ວປະເທດອີກເປັນຄັ້ງທີສາມ ຊຶ່ງຜົນຂອງການສຳຫຼວດໃນຄັ້ງນີ້ໄດ້ໃຫ້ຮູ້ວ່າ ຈຳນວນປະຊາກອນລາວໄດ້ເພີ່ມຂຶ້ນມາເປັນ 5 621 982 ຄົນ ໃນນີ້ມີຍິງ 2 813 589 ຄົນ ດ້ວຍອັດຕາການຂະຫຍາຍຕົວຂອງປະຊາກອນໃນໄລຍະນີ້ແມ່ນ 2,1%ຕໍ່ປີ. ຈາກຕົວເລກຂໍ້ມູນຂ້າງເທິງນັ້ນ, ພວກເຮົາສາມາດເຫັນໄດ້ບາງສາເຫດຕົ້ນຕໍທີ່ກະທົບເຖິງການຂະຫຍາຍຕົວຂອງປະຊາກອນລາວມີດັ່ງນີ້:

ກ. ປະຊາກອນເພີ່ມຂຶ້ນໄວ້ແມ່ນຍ້ອນອັດຕາການເກີດຢູ່ໃນລະດັບສູງ (CBR= 2,8%) ແລະ ອັດຕາການຕາຍພັດຫຼຸດລົງໄວກວ່າ (CDR=0,8%).ເປັນດັ່ງນີ້ແມ່ນຍ້ອນພັກ ແລະ ລັດຖະບານກໍຄືອຳນາດການປົກຄອງທຸກຂັ້ນ ບໍ່ພຽງແຕ່ໄດ້ຮັບປະກັນຊີວິດການເປັນຢູ່ຂອງປະຊາຊົນທຸກຊັ້ນຄົນໃນທົ່ວປະເທດເທົ່ານັ້ນແຕ່ຍັງໄດ້ເອົາໃຈໃສ່ຕໍ່ສຸຂະພາບຂອງປະຊາຊົນບັນດາເຜົ່າ, ພິເສດແມ່ນສຸຂະພາບຂອງຜູ້ເປັນແມ່ ແລະຂອງເດັກ ແລະອີກດ້ານໜຶ່ງແມ່ນຍ້ອນລະດັບການຫັນປ່ຽນເສດທະກິດ-ສັງຄົມ, ຊີວິດການເປັນຢູ່ດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນທົ່ວປະເທດນັບມື້ດີຂຶ້ນ.

ຂ. ສະພາບການແຕ່ງງານຂອງປະຊາກອນ ກໍມີຜົນສະທ້ອນໂດຍກົງເຖິງການເອົາລູກຂອງຄູ່ຜົວ-ເມຍ. ອາຍຸກາສຽນຂອງການແຕ່ງງານແມ່ນມີຄວາມຈຳເປັນ, ຕາມກົດເກນແລ້ວຍິງ-ຊາຍໄດ້ແຕ່ງງານໄວໂອກາດມີລູກຫຼາຍກໍເພີ່ມຫຼາຍຂຶ້ນ. ຢູ່ປະເທດເຮົາເຖິງວ່າຈະມີການກຳນົດອາຍຸກະສຽນການແຕ່ງງານໄວ້ແລ້ວກໍຕາມແຕ່ຍັງບໍ່ທັນປະຕິບັດຢ່າງເອົາຈິງເອົາຈັງເທື່ອ ແລະ ອີກດ້ານໜຶ່ງແມ່ຍິງລາວທີ່ມີອາຍຸແຕ່ 35-49 ປີ ກໍຍັງມີອັດຕາການເກີດສູງ ເຊັ່ນ ຜົນຂອງການສຳຫຼວດປະຊາກອນປີ 1995 ໄດ້ຊີ້ໃຫ້ເຫັນວ່າແມ່ຍິງລາວທີ່ຢູ່ໃນກຸ່ມອາຍຸ 45-49 ປີ ຍັງສາມາດເກີດລູກເຖິງ 4,4%, ໂດຍສະເພາະແມ່ນແມ່ຍິງຢູ່ໃນເຂດຊົນນະບົດຫ່າງໄກສອກຫຼີກ ແລະ ເຂດພູດອຍ.

ຄ. ສະພາບການຄົງຕົວຂອງຮີດຄອງປະເພນີ ແລະ ຈິດຕະສາດອັນເກົ່າແກ່ຍັງຄົງຄ້າງຢູ່ນຳປະຊາຊົນບັນດາເຜົ່າ ເຊັ່ນ ຜູ້ໃດມີລູກຫຼາຍຖືວ່າມີບຸນຫຼາຍ, ຕ້ອງເກີດລູກຫຼາຍເພື່ອເປັນກຳລັງແຮງງານໃນການຜະລິດ, ຕ້ອງການລູກຫຼາຍຍ້ອນວ່າເມື່ອເວລາເຖົ້າແກ່ສະລາລົງໄປຈະໄດ້ມີຜູ້ລ້ຽງດູເບິ່ງແຍງຕົນ.

ງ. ລະດັບການສຶກສາ ແລະຄວາມຮູ້ດ້ານສຸຂາອະນາໄມຢູ່ເຂດຊົນນະບົດ ແລະ ເຂດພູດອຍຍັງຕໍ່າ. ສະນັ້ນ, ໂອກາດທີ່ຈະເຂົ້າເພື່ອຈະວາງແຜນຄອບຄົວນັ້ນມີໜ້ອຍ, ເຖິງວ່າຈະມີໂຄງການເກີດລູກຫ່າງ ແລະເອົາລູກໜ້ອຍທີ່ກຳລັງປະຕິບັດໃນປັດຈຸບັນນີ້ກໍພຽງແຕ່ດຳເນີນປົກກະຕິຢູ່ໃນເຂດທີ່ສະດວກ ແລະ ເຂດຈະເລີນເທົ່ານັ້ນ.

ບັນດາສາເຫດຕ່າງໆທີ່ໄດ້ກ່າວມາຂ້າງເທິງນັ້ນໄດ້ເຮັດໃຫ້ອັດຕາການເພີ່ມປະຊາກອນແບບທຳມະຊາດຢູ່ໃນລະດັບສູງສົມຄວນ. ໂດຍອີງຕາມຕົວເລກຂອງການເພີ່ມປະຊາກອນລາວດັ່ງໃນປັດຈຸບັນນີ້ (2,1%), ຖ້າຫາກວ່າບໍ່ມີສະພາບອັນໃດກະທົບຕໍ່ອັດຕາສວນຕ່າງໆທາງດ້ານປະຊາກອນແລ້ວຮອດປີ 2015 ທົ່ວປະທດຈະ

ມີຈຳນວນປະຊາກອນເຖິງ 7 500 000 ຄົນ ແລະຮອດປີ 2020 ຈະມີເຖິງ 8 700 000 ຄົນ, ໝາຍຄວາມວ່າແຕ່ລະປີ ຈະມີຈຳນວນປະຊາກອນເພີ່ມຂຶ້ນຫຼາຍກວ່າ 100 000 ຄົນ.

## II. ສະພາບການແຈກຢາຍຂອງປະຊາກອນລາວ.

### 1. ປັດໄຈທີ່ສົ່ງຜົນສະທ້ອນເຖິງການແຈກຢາຍຂອງປະຊາກອນ.

+ ສປປລາວເປັນປະເທດທີ່ມີຫຼາຍຮູບແບບພູມສັນຖານທີ່ສະຫຼັບຊັບຊ້ອນ ແລະ ກັນດານ, ໃນນັ້ນ ພູພຽງ ແລະ ພູສູງກວມເອົາປະມານ 4/5 ຂອງເນື້ອທີ່ທົ່ວປະເທດ ຊຶ່ງສ່ວນຫຼາຍແມ່ນນອນຢູ່ທາງພາກເໜືອ, ພາກຕາເວັນອອກ ແລະ ພາກຕາເວັນອອກສ່ຽງໃຕ້. ສ່ວນທົ່ງພຽງນັ້ນມີໜ້ອຍຊຶ່ງນອນຢູ່ທາງພາກຕາເວັນຕົກສ່ຽງໃຕ້ເປັນຈຸດໜັກ ເຊັ່ນ ທົ່ງພຽງວຽງຈັນ, ສະຫວັນນະເຂດ ແລະ ຈຳປາສັກ, ນອກນັ້ນກໍມີທົ່ງພຽງນ້ອຍລຽບຕາມແຄມແມ່ນ້ຳຂອງ ແລະ ສາຂາຕ່າງໆຂອງມັນ.

+ ໃນຈຳນວນ 11 ປະເທດຂອງພາກພື້ນອາຊີອາຄະເນ ລາວເປັນປະເທດດຽວທີ່ບໍ່ມີທິດໃດຕິດກັບທະເລ. ແມ່ນ້ຳທີ່ໃຫ່ຍແມ່ນແມ່ນ້ຳຂອງເທົ່ານັ້ນ ແຕ່ພັດໄດ້ນຳໃຊ້ນ້ຳພຽງແຕ່ເບື້ອງດຽວ (ເບື້ອງຕາເວັນອອກ ຫຼືເບື້ອງຊ້າຍຂອງມັນ). ນອກຈາກນັ້ນກໍມີແມ່ນ້ຳນ້ອຍສັ້ນທີ່ໄຫຼແຮງ ແລະ ມີແກ້ງມີຕາດຫຼາຍ ຊຶ່ງ ແຈກຢາຍຢູ່ທົ່ວເທດເກືອບສະໝໍ່າສະເໝີ.

☞ປະເທດລາວນອນຢູ່ໃນເຂດອາກາດຮ້ອນຊຸ່ມ ມີລົມມໍລະສຸມພັດຜ່ານມາເປັນປະຈຳ. ອຸນຫະພູມສະເລ່ຍຕໍ່າສຸດ ແລະ ສູງສຸດໃນຮອບໜຶ່ງປີແມ່ນ 17$^0$C-33$^0$C,ແຕ່ໃນຕົວຈິງແລ້ວ ພູມອາກາດຢູ່ລາວມີຄວາມແຕກຕ່າງກັນຫຼາຍລະຫວ່າງເຂດ ເຊັ່ນ ເຂດທົ່ງພຽງ (27$^0$C) ແລະ ເຂດພູສູງ (18$^0$C) ແລະ ຕ່າງກັນລະຫວ່າງພາກ ເໜືອ (15$^0$C), ພາກກາງ (25$^0$C) ແລະ ພາກໃຕ້ (30$^0$C).

☞ດິນຢູ່ປະເທດລາວ ສ່ວນຫຼາຍແມ່ນດິນແຟຣາລິດ ຊຶ່ງມີຢູ່ຕາມເຂດພູດອຍທົ່ວໄປ ແລະ ດິນບາຊານຊຶ່ງມີຫຼາຍຢູ່ທາງພາກໃຕ້. ສ່ວນດິນສັນດອນມີໜ້ອຍ ຄື ມີຢູ່ລຽບຕາມແຄມແມ່ນ້ຳຊຶ່ງຈຸດໜັກແມ່ນແມ່ນ້ຳຂອງເຊັ່ນ ທົ່ງພຽງວຽງຈັນ, ສະຫວັນນະເຂດ ແລະ ຈຳປາສັກ.

+ ແຕ່ກ່ອນກໍຄືປັດຈຸບັນ, ສະພາບການຂະຫຍາຍເສດຖະກິດ-ສັງຄົມຢູ່ພາຍໃນປະເທດບໍ່ສະໝໍ່າສະເໝີ ເຊັ່ນ ເຂດທົ່ງພຽງຂະຫຍາຍຕົວໄວກວ່າເຂດພູດອຍ, ຕົວເມືອງໄດ້ຮັບການພັດທະນາໄວກວ່າງຊົນນະບົດ. ສະນັ້ນ, ປະຊາກອນລາວຈຶ່ງມັກເຕົ້າໂຮມກັນຢູ່ແຕ່ບ່ອນທີ່ມີເສດທະກິດ-ສັງຄົມຂະຫຍາຍຕົວກວ່າ.

+ ສະພາບສົງຄາມອັນຍາວນານໃນເມື່ອກ່ອນ ກໍໄດ້ເຮັດໃຫ້ປະຊາກອນມີການເຄື່ອນຍ້າຍຢ່າງຫຼວງຫຼາຍ.

### 2. ຄວາມໜາແໜ້ນ ແລະ ການແຈກຢາຍຂອງປະຊາກອນ.

ກ. ຄວາມໜາແໜ້ນ.

ຜ່ານໄລຍະປະຫວັດສາດອັນຍາວນານ ຈຳນວນປະຊາກອນລາວໄດ້ນັບມື້ນັບເພີ່ມຂຶ້ນ. ສະນັ້ນ,ຄວາມໜາແໜ້ນກໍນັບມື້ສູງຂຶ້ນ (ເບິ່ງຕາຕະລາງ 1). ແຕ່ເມື່ອທຽບກັບບັນດາປະເທດອອມຂ້າງແລ້ວ ລາວເປັນປະເທດທີ່ມີຄວາມໜາແໜ້ນຂອງປະຊາກອນຕໍ່າສຸດໃນຂົງເຂດນີ້.

**ຕາຕະລາງ 1: ຄວາມໜາແໜ້ນຂອງປະຊາກອນລາວ ແຕ່ສະໄໝກ່ອນເຖິງປັດຈຸບັນ**

| ປີ | ຈຳນວນປະຊາກອນ ( ຄົນ ) | ຄວາມໜາແໜ້ນສະເລ່ຍ ( ຄົນ/Km$^2$ ) |
|---|---|---|
| 1900 | 400 000 | 2 |

| | | |
|---|---|---|
| 1911 | 548 000 | 3 |
| 1962 | 1 881 000 | 10 |
| 1980 | 3 199 000 | 14 |
| 1990 | 4 140 000 | 17 |
| 1995 | 4 581 258 | 19 |
| 2000 | 5 200 000 | 21 |
| 2003 | 5 400 000 | 23 |
| 2012 | 6 514 432 | 27 |

*(ຂໍ້ມູນຈາກການສຳຫຼວດປະຊາກອນປີຄ.ສ 1995 ; 2005 ; 2012, ສູນສະຖິຕິແຫ່ງຊາດ ແລະ ຫໍສະໝຸດແຫ່ງຊາດ)*

ຂ. ລັກສະນະຂອງການແຈກຢາຍ.

ຈຸດພິເສດພື້ນຖານດ້ານການແຈກຢາຍປະຊາກອນລາວ ແມ່ນບໍ່ສະໝ່ຳສະເໝີກັນລະຫວ່າງເຂດທົ່ງພຽງ ແລະ ເຂດພູສູງ, ລະຫວ່າງຕົວເມືອງ ແລະ ຊົນນະບົດ ແລະ ລະຫວ່າງບັນດາເຂດດ້ວຍກັນດັ່ງນີ້:

+ປະຊາກອນລາວ ໄດ້ເຕົ້າກັນຢູ່ເຂດທົ່ງພຽງແຄມແມ່ນ້ຳຂອງເບື້ອງຕາເວັນອອກເຊັ່ນ: ທົ່ງພຽງວຽງຈັນ, ທົ່ງພຽງສະຫວັນນະເຂດ ແລະ ທົ່ງພຽງຈຳປາສັກ. ນອກຈາກນັ້ນປະຊາກອນຍັງດຳລົງຊີວິດກະແຈກກະຈາຍຢູ່ທົ່ງພຽງນ້ອຍຕາມຮ່ອມພູແລະຢູ່ລຽບຕາມແຄມແມ່ນ້ຳທີ່ເປັນສາຂາຂອງແມ່ນ້ຳຂອງນັ້ນກໍ່ຍ້ອນວ່າເຂດທົ່ງພຽງນີ້ເປັນເຂດທີ່ມີດິນອຸດົມສົມບູນເໝາະສົມແກ່ການຜະຫຼິດກະສິກຳ, ມີຄວາມສະດວກດ້ານການຄົມມະນາຄົມ-ຂົນສົ່ງ, ການອຸດສາຫະກຳແລະການບໍລິການອື່ນໆ, ພິເສດເຂດທົ່ງພຽງໄດ້ເປັນເຂດທີ່ມີການພັດທະນາມາແຕ່ດົນນານແລ້ວແລະປັດຈຸບັນເຂດນີ້ໄດ້ກາຍເປັນເຂດເສດຖະກິດ-ສັງຄົມ-ວັດທະນະທຳທີ່ສຳຄັນຂອງຊາດ.

**ຕາຕະລາງ 2: ຈຳນວນປະຊາກອນ, ເນື້ອທີ່ແລະຄວາມໜາແໜ້ນຂອງປະຊາກອນລາວ**

| ລ/ດ | ຊື່ແຂວງ | ຈຳນວນພົນ (ຄົນ) | ຍິງ (ຄົນ) | ເນື້ອທີ່ ($Km^2$) | ຄວາມໜາແໜ້ນ (ຄົນ/$Km^2$) |
|---|---|---|---|---|---|
| 1 | ກຳແພງນະຄອນວຽງຈັນ | 783 032 | 391 647 | 3 920 | 200 |
| 2 | ຜົ້ງສາລີ | 178 006 | 88 531 | 16 270 | 11 |
| 3 | ຫຼວງນ້ຳທາ | 168 140 | 84 686 | 9 325 | 18 |
| 4 | ອຸດົມໄຊ | 307 065 | 153 445 | 15 370 | 20 |
| 5 | ບໍ່ແກ້ວ | 169 807 | 85 190 | 6 196 | 27 |
| 6 | ຫຼວງພະບາງ | 455 532 | 227 312 | 16 875 | 27 |
| 7 | ຫົວພັນ | 325 757 | 161 395 | 16 500 | 20 |
| 8 | ໄຊຍະບູລີ | 381 908 | 189 067 | 16 389 | 23 |
| 9 | ຊຽງຂວາງ | 276 242 | 136 771 | 16 358 | 17 |
| 10 | ວຽງຈັນ | 493 593 | 242 756 | 22 554 | 22 |
| 11 | ບໍລິຄຳໄຊ | 272 794 | 134 843 | 14 863 | 18 |

| | | | | | |
|---|---|---|---|---|---|
| 12 | ຄໍາມ່ວນ | 383 099 | 194 262 | 16 315 | 23 |
| 13 | ສະຫວັນນະເຂດ | 922 210 | 466 039 | 21 774 | 42 |
| 14 | ສາລະວັນ | 375 517 | 190 629 | 10 691 | 35 |
| 15 | ເຊກອງ | 100 595 | 50 707 | 7 665 | 13 |
| 16 | ຈໍາປາສັກ | 661 358 | 332 845 | 15 415 | 43 |
| 17 | ອັດຕະປື | 130 402 | 66 267 | 10 320 | 13 |
| ***ລວມທັງໝົດ*** | | ***6 385 057*** | ***3 196 392*** | ***236 800*** | ***27*** |

*(ຂໍ້ມູນຈາກສູນສະຖິຕິແຫ່ງຊາດຄ.ສ 2011)*

\+ ເຂດທີ່ປະຊາກອນລາວດໍາລົງຊີວິດຢູ່ເບົາບາງແລະກະແຈກກະຈາຍແມ່ນຢູ່ເຂດພູສູງທາງພາກເໜືອ, ພາກຕາເວັນອອກ, ເຂດພູພຽງທາງພາກກາງແລະພາກໃຕ້.ເຂດນີ້ເປັນເຂດທີ່ມີຊັບພະຍາກອນທໍາມະຊາດຫຼາຍຊະນິດແຕ່ພັດເປັນເຂດທຸລະກັນດານ, ການຄົມມະນາຄົມພົບຄວາມຫຍຸ້ງຍາກຫຼາຍ, ພື້ນຖານເສດຖະກິດຂະຫຍາຍຕົວຊ້າ, ລະດັບການສຶກສາຕໍ່າແລະເປັນເຂດທີ່ຊົນເຜົ່າສ່ວນນ້ອຍອາໄສຢູ່.

\+ ປະຊາກອນລາວອາໄສຢູ່ຢ່າງຫຼວງຫຼາຍຕາມຕົວເມືອງໃຫຍ່ແລະນ້ອຍຕ່າງໆໃນທົ່ວປະເທດໂດຍສະເພາະແມ່ນບັນດາຕົວເມືອງທີ່ເປັນທີ່ຕັ້ງຫ້ອງວ່າການແຂວງແລະທີ່ຕັ້ງຫ້ອງວ່າການເມືອງເຊັ່ນເມືອງຫຼວງພະບາງ, ເມືອງໄຊ, ເມືອງໂພນໂຮງ, 4 ຕົວເມືອງຂອງເທດສະບານນະຄອນຫຼວງວຽງຈັນເປັນຕົ້ນ.

\+ ລັກສະນະຂອງການແຈກຢາຍປະຊາກອນລາວບໍ່ສະໝໍ່າສະເໝີຊຶ່ງມັນຍັງສະແດງອອກລະຫວ່າງບັນດາແຂວງ, ບັນດາເມືອງໃຫຍ່-ນ້ອຍແລະລະຫວ່າງບ້ານຕ່າງໆດ້ວຍກັນເຊັ່ນແຂວງທີ່ມີພົນລະເມືອງຫຼາຍກວ່າໝູ່ແມ່ນແຂວງສະຫວັນນະເຂດ, ກໍາແພງນະຄອນວຽງຈັນ, ຈໍາປາສັກ, ຫຼວງພະບາງ... ສ່ວນແຂວງທີ່ມີພົນລະເມືອງນ້ອຍກວ່າໝູ່ແມ່ນແຂວງເຊກອງ.

# ບົດທີIII
# ການປ່ຽນແປງ

ການປ່ຽນແປງລັກສະນະຂອງປະຊາກອນຄືການປ່ຽນແປງທາງດ້ານຈຳນວນ, ການປ່ຽນແປງທາງດ້ານອົງປະກອບ ແລະການປ່ຽນແປງທີ່ຢູ່ອາໄສ. ເນື່ອງຈາກວ່າປະຊາກອນປ່ຽນແປງຢູ່ຕະຫຼອດເວລາ ແລະ ໃນລະຍະເວລາທີ່ໝູນວຽນໄປນັ້ນຈະມີຄົນຈຳນວນໜຶ່ງເສຍຊີວິດ, ຄົນຈຳນວນໜຶ່ງຈະໃຫ້ກຳເນີດບຸດຄົນໃໝ່ອອກມາ, ຄົນຈຳນວນໜຶ່ງຈະຍ້າຍອອກໄປຢູ່ບ່ອນອື່ນ ແລະຄົນອີກຈຳນວນໜຶ່ງຈະປ່ຽນແປງລັກສະນະບາງຢ່າງ. ດັ່ງນັ້ນຈຶ່ງມີຄວາມຈຳເປັນຕ້ອງໄດ້ສຶກສາຄົ້ນຄວ້າເຖິງຈຳນວນ, ອົງປະກອບ ແລະການຍ້າຍຖິ່ນຂອງປະຊາກອນໃນທ້ອງຖິ່ນດັ່ງກ່າວວ່າມັນມີການປ່ຽນແປງແນວໃດ ແລະຈະມີທ່າອ່ຽງຈະປ່ຽນແປງແນວໃດໃນອະນາຄົດ.

## I. ການເກີດ.

ການເກີດແມ່ນປັດໄຈທີ່ເຮັດໃຫ້ປະຊາກອນມີການປ່ຽນແປງຄືກັນກັບການຕາຍ ແລະການຍ້າຍຖິ່ນ, ແຕ່ການເກີດເປັນສະຫຼັບຊັບຊ້ອນກວ່າ. ທັງນີ້ກໍ່ຍ້ອນວ່າການເກີດມີການພົວພັນກັບຄົນຫຼາຍຄົນ ເຊັ່ນຜູ້ກຳເນີດຊຶ່ງເກີດຂຶ້ນພຽງຄັ້ງດຽວໃນຊີວິດ ແລະຜູ້ໃຫ້ກຳເນີດຊຶ່ງພົວພັນກັບການຖືພາ, ການຄອດ, ການເບິ່ງແຍງສຸຂະພາບ... ການໃຫ້ກຳເນີດດັ່ງກ່າວເກີດຂຶ້ນກັບແມ່ຍິງໃນໄວຈະເລີນພັນ (15-49 ປີ) ທີ່ແຕ່ງງານ (ຫຼືມີເພດສຳພັນແລ້ວ) ແລະຄູ່ຜົວເມຍທີ່ມີສຸຂະພາບແຂງແຮງ ແລະສາມາດມີລູກໄດ້ເທົ່ານັ້ນ. ຖ້າເບິ່ງຕາມເງື່ອນໄຂດັ່ງກ່າວແມ່ຍິງແຕ່ລະຄົນສາມາດໃຫ້ກຳເນີດລູກໄດ້ຫຼາຍກວ່າ 1 ຄັ້ງ. ດ້ວຍເຫດນີ້, ຈຶ່ງມີການສຶກສາວິໄຈກ່ຽວກັບການຈະເລີນພັນຢ່າງຈິງຈັງໃນລະຍະ 40-50 ປີທີ່ຜ່ານມາ.

### 1. ປັດໃຈທີ່ມີຜົນສະທ້ອນຕໍ່ການເກີດຂອງປະຊາກອນລາວ.

- **ການແຕ່ງງານ :** ໂດຍທົ່ວໄປແລ້ວປະຊາກອນລາວມັກຈະມີການແຕ່ງງານໄວ (ແຕ່ງງານແຕ່ອາຍຸຍັງນ້ອຍ). ສະນັ້ນ, ໂອກາດທີ່ຈະມີລູກກໍໄວ ແລະຫຼາຍຂຶ້ນຊຶ່ງສ່ວນຫຼາຍແມ່ນຊາວຊົນນະບົດ ແລະຊົນເຜົ່າສ່ວນນ້ອຍທີ່ຢູ່ຫ່າງໄກສອກຫຼີກ.
- **ຈິດຕະສາດ, ວັດທະນະທຳ ແລະຮີດຄອງປະເພນີ :**ດ້ານຈິດຕະສາດ, ວັດທະນະທຳ ແລະຮີດຄອງປະເພນີຂອງແຕ່ລະຊົນເຜົ່າກໍ່ມີຜົນສະທ້ອນຕໍ່ການເກີດຂອງປະຊາກອນ ເຊັ່ນບາງຄອບຄົວຫຼືບາງເຜົ່າແມ່ນຕ້ອງການເພດຍິງຫຼື ເພດຊາຍຫຼາຍກວ່ານັ້ນ, ບາງຄອບຄົວພັດຕ້ອງການກຳລັງແຮງງານຫຼາຍຈຶ່ງຢາກໃຫ້ມີການເກີດຫຼາຍ ໂດຍສະເພາະແມ່ນຄອບຄົວຂອງຊາວກະສິກຳ ແລະບາງຄອບຄົວພັດຕ້ອງການລູກຫຼາຍ ເພາະເມື່ອເວລາເຖົ້າແກ່ຊະລາຈະໄດ້ມີບ່ອນເພິ່ງພາອາໄສຄືທີ່ໄດ້ກ່າວມາ.
- **ລະດັບການສຶກສາ:**ປະຊາກອນລາວຜູ້ທີ່ມີລະດັບການສຶກສາສູງຈະເກີດລູກໜ້ອຍ ແລະມີລູກຫ່າງຍ້ອນວ່າເຂົາເຈົ້າຮູ້ຈັກຫຼັກວິທີການຄຸມກຳເນີດໄດ້ດີ. ສ່ວນບຸກຄົນທີ່ມີການສຶກສາຕ່ຳຫຼືບໍ່ມີເລີຍ ນັ້ນກໍມັກຈະມີການເກີດລູກຫຼາຍ ແລະມີລູກຖີ່. ທັງນີ້ຍ້ອນເຂົາເຈົ້າບໍ່ຮູ້ຈັກຫຼັກການຄຸມກຳເນີດຫຼືການສື່ສານດ້ານນີ້ຍັງບໍ່ທົ່ວເຖິງ ໂດຍສະເພາະແມ່ນໃນເຂດສອກຫຼີກຫ່າງໄກ.
- **ອາຊີບ:**ຈາກການສຶກສາຄວາມແຕກຕ່າງຂອງການຈະເລີນພັນຕາມອາຊີບຕ່າງໆເຫັນວ່າແມ່ຍິງທີ່ເປັນຊາວນາຊາວສວນຈະມີການຈະເລີນພັນສູງ. ສ່ວນແມ່ຍິງທີ່ເຮັດວຽກໃນກິງຈັກບໍລິຫານແລະຜູ້ທີ່ເຮັດວຽກໃນໂຮງຈັກໂຮງງານໃນເຂດຕົວເມືອງຈະມີລະດັບການຈະເລີນພັນຕ່ຳກວ່າ.

- **ທ່າອ່ຽງຄວາມຕ້ອງການຈຳນວນລູກ:**ປະຊາກອນຢູ່ໃນເຂດຕົວເມືອງຫຼືເຂດຊານເມືອງຈະມີທ່າອ່ຽງຂອງຄວາມຕ້ອງການຈຳນວນລູກນັບມືໜ້ອຍລົງຫຼືຂະໜາດຄອບຄົວນ້ອຍທັງຫຼຸດອັດຕາການຈະເລີນພັນລົງ.
- **ວຽກເຮັດງານທຳຂອງແມ່ຍິງ:**ການມີວຽກເຮັດງານທຳຂອງແມ່ຍິງກໍມີຜົນສະທ້ອນເຊັ່ນດຽວກັນຕໍ່ຈຳນວນລູກເຊັ່ນແມ່ຍິງລາວຜູ້ທີ່ບໍ່ໄດ້ເຮັດວຽກ. ແຕ່ສຳລັບປະເທດທີ່ກຳລັງພັດທະນາແມ່ຍິງທີ່ເຮັດວຽກຫຼືບໍ່ເຮັດວຽກກໍຈະມີຈຳນວນລູກບໍ່ແຕກຕ່າງກັນຫຼາຍ.
- **ລາຍໄດ້:**ລະດັບການຈະເລີນພັນມີການພົວພັນກັບລາຍໄດ້ຄືຄົນທີ່ມີລາຍໄດ້ຕໍ່າມັກຈະມີລູກຫຼາຍກວ່າຄົນທີ່ມີລາຍໄດ້ສູງ.

**2. ສະພາບການເກີດຂອງປະຊາກອນລາວ.**

ຍ້ອນໄດ້ຮັບຜົນສະທ້ອນຈາກຫຼາຍປັດໄຈ, ສະພາບການເກີດຢູ່ພາຍໃນປະເທດຈຶ່ງມີຄວາມແຕກຕ່າງກັນຕາມແຕ່ລະຂົງເຂດ, ລະຫວ່າງແຂວງ... ອີງຕາມສະຖິຕິການສຳຫຼວດປະຊາກອນໃນປີ 1995 ອັດຕາການເກີດດິບ (Crude birte Rate (CBR)) ທົ່ວປະເທດແມ່ນ 41,3/1000. ຖ້າທຽບໃສ່ໃນສະໄໝກ່ອນແມ່ນມີລັກສະນະຫຼຸດບົງຊ້າໆຄືດັ່ງຕົວເລກໃນຕາຕາລາງ 3 ຢູ່ໜ້າຕໍ່ໄປນີ້.

ຜົນຂອງການສຳຫຼວດປະຊາກອນລາວປີ 1985 ແລະປີ 1995 ຍັງໃຫ້ຮູ້ວ່າອັດຕາການຈະເລີນພັນ (Total Fertility Rate (TFR)) ຂອງແມ່ຍິງລາວໄດ້ຫຼຸດລົງຈາກ 6,5 ມາເປັນ 5 ແລະຍັງຈະສືບຕໍ່ຫຼຸດລົງເລື້ອຍໆ. ເມື່ອເບິ່ງລວມແລ້ວ, ຄວາມສາມາດໃຫ້ກຳນົດລູກຂອງແມ່ຍິງລາວແມ່ນຕໍ່າຢູ່ໃນກຸ່ມອາຍຸ 15-19 ປີ ຈາກນັ້ນກໍເລີ່ມສູງຂຶ້ນແລະສູງສຸດແມ່ນຢູ່ກຸ່ມອາຍຸ 20-24 ປີແລະຈະຕໍ່າສຸດຢູ່ໃນກຸ່ມອາຍຸ 45-49 ປີ. ເຖິງຢ່າງໃດກໍຕາມ, ຄວາມສາມາດໃຫ້ກຳເນີດລູກຂອງແມ່ຍິງລາວໃນກຸ່ມອາຍຸ 45-49 ປີແມ່ນຍັງສູງຫຼາຍ, ຕົວຢ່າງໃນປີ 1995 ແມ່ຍິງທີ່ຢູ່ໃນກຸ່ມອາຍຸ 45-49 ປີຍັງສາມາດເກີດລູກໄດ້ເຖິງ 31/1000, ເບິ່ງຕາຕະລາງ 4 ຢູ່ລຸ່ມນີ້

**ຕາຕະລາງ 3: ອັດຕາການເກີດດິບຂອງປະຊາກອນລາວໃນຊຸມປີ 1970 ຫາ 2012**

| ປີ | ອັດຕາການເກີດດິບ % | ການປ່ຽນແປງ |
|---|---|---|
| 1970 | 47,0 | - |
| 1985 | 46,1 | -0,9 |
| 1987 | 45,1 | -1,0 |
| 1990 | 43,3 | -1,8 |
| 1995 | 41,3 | -2,0 |
| 2000 | 40,0 | -1,3 |
| 2003 | 39,0 | -1,0 |
| 2012 | 28,0 | -1,0 |

*(ຂໍ້ມູນຈາກສູນສະຖິຕິແຫ່ງຊາດຄ.ສ 2011)*

ເວົ້າລວມແລ້ວແມ່ຍິງລາວໄດ້ໃຫ້ການເກີດລູກຢູ່ໃນລະດັບສູງສົມຄວນ. ອີງຕາມຜົນຂອງການສຳຫຼວດປະຊາກອນປີ 2005 ຍັງໃຫ້ຮູ້ວ່າຄວາມສາມາດເກີດລູກຜູ້ທຳອິດໃນປີທຳອິດພາຍຫຼັງການແຕ່ງງານແລ້ວແມ່ນກວມເອົາປະມານ 85% ຂອງຄູ່ຜົວເມຍແລະຈຳນວນຄູ່ຜົວເມຍທີ່ໄດ້ເກີດລູກຜູ້ທຳອິດໃນປີທີສອງພາຍຫຼັງການ

ແຕ່ງງານມີພຽງແຕ່ 10%. ສ່ວນຈຳນວນທີ່ຍັງເຫຼືອແມ່ນເກີດລູກຜູ້ທຳອິດໃນປີທີສາມພາຍຫຼັງການແຕ່ງງານ. ຢູ່ປະເທດລາວຍັງມີແມ່ຍິງຈຳນວນຫຼາຍສົມຄວນທີ່ສາມາດໃຫ້ການກຳເນີດລູກຫຼາຍກວ່າ 10 ຄົນຊຶ່ງພິເສດແມ່ນຄອບຄົວຊາວລາວຊົນເຜົ່າສ່ວນນ້ອຍທີ່ຢູ່ຫ່າງໄກສອກຫຼີກ. ນອກຈາກນັ້ນແລ້ວຈຳນວນແມ່ຍິງທີ່ແຕ່ງງານແລະເກີດລູກກ່ອນອາຍຸກະສຽນ (<15 ປີ) ກໍຍັງມີຫຼາຍແລະຫຼັງອາຍຸກະສຽນ (>49 ປີ) ກໍຍັງປາກົດມີຢູ່ເຊັ່ນກັນ.

## II.ການຕາຍ.

ການຕາຍແມ່ນກົດເກນການສູນເສຍແບບທຳມະຊາດຂອງສິ່ງທີ່ມີຊີວິດໃດໜຶ່ງ. ການຕາຍຫຼືການເສຍຊີວິດແມ່ນເຫດການທີ່ຈະຕ້ອງເກີດຂຶ້ນກັບທຸກໆຄົນຢ່າງຫຼີກລ້ຽງບໍ່ໄດ້. ການຕາຍໄດ້ສົ່ງຜົນກະທົບຕໍ່ການປ່ຽນແປງປະຊາກອນໃນທາງລົບສະເໝີເພາະວ່າເມື່ອການຕາຍເກີດຂຶ້ນຢູ່ໃນບ້ານໜຶ່ງກໍຈະເຮັດໃຫ້ຈຳນວນປະຊາກອນໃນບ້ານນັ້ນຫຼຸດລົງ. ການຕາຍຈະເກີດຂຶ້ນພຽງຄັ້ງດຽວໃນຊີວິດຂອງແຕ່ລະຄົນເທົ່ານັ້ນຊຶ່ງເປັນການກົງກັນຂ້າມກັບການເກີດຫຼືການຈະເລີນພັນເພາະແມ່ຍິງຄົນໜຶ່ງໆສາມາດແລະມີໂອກາດໃຫ້ກຳເນີດເດັກໄດ້ຫຼາຍກວ່າ 1 ຄັ້ງ.

ການຕາຍເປັນເລື່ອງຂ້ອນຂ້າງຈະສັບສົນເພາະການຕາຍແບ່ງອອກເປັນຫຼາຍລະຍະຄືການຕາຍກ່ອນຫຼືຕາຍໃນລະຍະຄອດຫຼືໃນໄລຍະຄອດທຳອິດ, ຖ້າເດັກຕາຍກ່ອນອາຍຸໄດ້ 4 ອາທິດຫຼື 1 ເດືອນແມ່ນການຕາຍຂອງເດັກເກີດໃໝ່ (Neonatal Death). ຖ້າການຕາຍມີຂຶ້ນໃນລະຫວ່າງ 52 ອາທິດຫຼື 1 ປີນັ້ນແມ່ນການຕາຍຂອງເດັກຫຼັງເກີດໃໝ່ (Post Neonatal Death). ນອກຈາກນັ້ນຍັງມີການຕາຍຂອງເດັກໃນທ້ອງ (Fetal Death) ແລະອື່ນໆອີກເຊັ່ນການຕາຍຂອງເດັກອາຍຸຕ່ຳກວ່າ 5 ປີ, ການຕາຍຂອງແມ່ຍິງໃນໄວຈະເລີນພັນອາຍຸແຕ່ 15-49 ປີ. ເວົ້າລວມ, ການຕາຍມີ 2 ແບບຄືການຕາຍຍ້ອນໝົດອາຍຸສັງຂານແລະການຕາຍແບບກະທັນຫັນ (ການເກີດອຸບັດຕິເຫດ, ພະຍາດໂລຄາ...).

ອັດຕາການດິບ (Crude Death Rate (CDR)) ຂອງປະຊາກອນໂລກປັດຈຸບັນແມ່ນ 9/1000, ໃນນັ້ນຢູ່ບັນດາປະເທດກຳລັງພັດທະນາມີອັດຕາການຕາຍສະເລ່ຍສູງເຖິງ 10-15/1000 ໃນນີ້ອັດຕາການຕາຍຂອງເດັກນ້ອຍແມ່ນສູງກວ່າໝູ່ຄືສະເລ່ຍທົ່ວໂລກອັດຕາການຕາຍຂອງເດັກທີ່ມີອາຍຸຕ່ຳກວ່າ 1 ປີຈະສູງເຖິງ 63/1000, ແຕ່ປະເທດທີ່ພັດທະນາແລ້ວມີພຽງແຕ່ 12/1000, ສ່ວນປະເທດກຳລັງພັດທະນາສູງເຖິງ 70/1000 ປະເທດທີ່ດ້ອຍພັດທະນາກໍຈະສູງເຖິງ 111/1000. ສະເພາະຢູ່ລາວປັດຈຸບັນແມ່ນ 9/1000.

### 1. ປັດໄຈທີ່ມີຜົນສະທ້ອນຕໍ່ການຕາຍຂອງປະຊາກອນລາວ

ການຕາຍຂອງປະຊາກອນລາວເກີດຈາກຫຼາຍປັດໄຈຄື:

- ເກີດຈາກການໝົດອາຍຸສັງຂານ.
- ເກີດຈາກຜົນສະທ້ອນຍ້ອນຫຼັງຂອງໄພສົງຄາມຮຸກຮານໃນເມື່ອກ່ອນ.
- ເກີດຈາກໄພທຳມະຊາດເຊັ່ນ: ນ້ຳຖ້ວມ, ໄພແຫ້ງແລ້ງ, ລົມພາຍຸ... (ມີໜ້ອຍ).
- ເກີດຈາກພະຍາດຕ່າງໆທີ່ຮ້າຍແຮງເຊັ່ນໂລກອະຫິວາ, ມາເລເຣຍ, ເອດສ໌, ວັນນະໂລກ...
- ເກີດຈາກອຸປະຕິເຫດຕາມທ້ອງຖະໜົນຕ່າງໆຍ້ອນການລ່ວງລະເມີດກົດຈາລະຈອນ...
- ເກີດຈາກທາງອ້ອມເຊັ່ນດື່ມເຫຼົ້າຫຼາຍ, ສູບຢາຫຼາຍ, ເສບຢາເສບຕິດປະເພດຕ່າງໆ.

**2. ສະພາບການຕາຍຢູ່ລາວ.**

ສະພາບການຕາຍຂອງປະຊາກອນລາວໃນປັດຈຸບັນໄດ້ຫຼຸດຜ່ອນລົງຢ່າງເຫັນໄດ້ແຈ້ງທຽບກັບສະໄໝກ່ອນ, ພິເສດແມ່ນພາຍຫຼັງທີ່ປະເທດຊາດໄດ້ຮັບການປົດປ່ອຍ. ອັດຕາການຕາຍດິບ (CDR) ໃນຊຸມປີ 1960-1970 ແມ່ນຢູ່ໃນລະດັບສູງເຖິງ 23/1000. ແຕ່ມາເຖິງຊຸມປີ 1980 ອັດຕາການຕາຍຂອງປະຊາກອນລາວໄດ້ຫຼຸດລົງມາເປັນ 17/1000 (ລະດັບປານກາງ), 15/1000 ໃນປີ 2000 ແລະໃນປັດຈຸບັນໄດ້ຫຼຸດລົງເປັນ 9/1000.

**ຕາຕະລາງ 5: ອັດຕາການຕາຍດິບຂອງປະຊາກອນລາວໃນຊຸມປີ 1970 ຫາ 2012**

| ປີ | ຈຳນວນພົນລວມ (ຄົນ) | ອັດຕາການຕາຍດິບ (CDR=Crude Death Rate) (ສ່ວນພັນ) |
|---|---|---|
| 1970 | 3 000 000 | 23,0 |
| 1985 | 3 584 803 | 17,1 |
| 1990 | 4 170 000 | 15.0 |
| 1995 | 4 581 258 | 15.1 |
| 2000 | 5 200 000 | 15,0 |
| 2003 | 5 400 000 | 14,0 |
| 2012 | 6 385 057 | 9,0 |

*(ຂໍ້ມູນຈາກສູນສະຖິຕິແຫ່ງຊາດແລະຫໍສະໝຸດແຫ່ງຊາດ)*

ສະພາບການຕາຍຂອງປະຊາກອນລາວໄດ້ສະແດງອອກດັ່ງນີ້:

ກ. ອັດຕາການຕາຍດິບຂອງປະຊາກອນລາວແມ່ນມີຄວາມແຕກຕ່າງກັນຕາມແຕ່ລະແຂວງຄື:

- ບັນດາແຂວງຢູ່ເຂດພູ ແລະພູພຽງລວມມີເຖິງ 11 ແຂວງທີ່ມີອັດຕາການຕາຍດິບຂອງປະຊາກອນສູງເຊັ່ນ ແຂວງເຊກອງ (20/1000), ຫຼວງນ້ຳທາ (17/1000), ອຸດົມໄຊ ແລະ ອັດຕະປື (15/1000) ... (ເບິ່ງຕາ ຕະລາງທີ 7). ປະຊາກອນໃນເຂດນີ້ມີລະດັບການສຶກສາຕ່ຳ ແລະ ການເບິ່ງແຍງສຸຂະພາບຂອງແມ່ ແລະ ເດັກ ກໍ່ຍັງບໍ່ທັນຖືກຕ້ອງຕາມຫຼັກສຸຂະອານາໄມດີເທົ່າທີ່ຄວນ. ເຂົາເຈົ້າດຳລົງຊີວິດດ້ວຍການເຮັດວຽກງານກະສິກຳ ແບບທຳມະຊາດເປັນຕົ້ນຕໍ. ຢູ່ບາງແຂວງກໍ່ເຮັດນາ, ສວນ, ລ້ຽງສັດ, ເຮັດຫັດຖະກຳ ແລະ ຄ້າຂາຍຍ່ອຍ.

-ບັນດາແຂວງຢູ່ເຂດທົ່ງພຽງສ່ວນໃຫຍ່ແມ່ນມີອັດຕາການຕາຍດິບຕ່ຳ ເຊັ່ນ ກຳແພງນະຄອນຫຼວງວຽງຈັນ (4/1000), ແຂວງວຽງຈັນ (7/1000),ຈຳປາສັກ (9/1000)... (ເບິ່ງຕາຕະລາງທີ 7) ປະຊາກອນຢູ່ໃນເຂດນີ້ມີລະດັບການສຶກສາສູງກວ່າ, ສຸຂະພາບຂອງແມ່ ແລະ ເດັກໄດ້ຮັບການເບິ່ງແຍງດີກວ່າ. ເຂົາເຈົ້າດຳລົງຊີວິດດ້ວຍການເຮັດວຽກງານກະສິກຳແບບທັນສະໄໝກວ່າ,ເຮັດວຽກງານອຸດສາຫະກຳ ແລະ ການຄ້າຂາຍຂະໜາດໃຫຍ່ກວ່າ...

ຂ. ອັດຕາການຕາຍຂອງປະຊາກອນລາວ ຍັງມີຄວາມແຕກຕ່າງກັນຕາມແຕ່ລະກຸ່ມອາຍຸ. ຈຳນວນຄົນຕາຍຫຼາຍແມ່ນຢູ່ໃນກຸ່ມອາຍຸຕ່ຳກວ່າ 1 ປີ (22/1000) ແລະ ສູງທີ່ສຸດແມ່ນຢູ່ໃນກຸ່ມອາຍຸ 1-4 ປີ (26/1000) ຊຶ່ງພິເສດແມ່ນເພດຊາຍ. ຫຼັງຈາກນັ້ນລະດັບການຕາຍໄດ້ຫຼຸດຜ່ອນລົງຢ່າງວ່ອງໄວຢູ່ໃນກຸ່ມອາຍຸ 5-9 ປີ(8,5/1000), ຢູ່ໃນກຸ່ມອາຍຸ 10-14 (3,1/1000), 15-19 (3,1/1000) ແລະ ສືບຕໍ່ຫຼຸດຜ່ອນລົງໃນກຸ່ມອາຍຸ 20-24 ເຖິງ 45-49 (2/1000) ແລະ ເມື່ອຮອດອາຍຸ 60 ປີຂຶ້ນໄປລະດັບການຕາຍໄດ້ເພີ່ມຂຶ້ນເລື້ອຍໆ.

**ຕາຕະລາງ 6 : ອັດຕາການຕາຍດິບຂອງປະຊາກອນລາວ ໃນແຕ່ລະກຸ່ມອາຍຸ**

| **ກຸ່ມອາຍຸ** | **ອັດຕາການຕາຍດິບ (CDR=Ctude Death Rate)** | **ໝາຍເຫດ** |
|---|---|---|
| 0 | 22,0 | |
| 1-4 | 26,2 | |
| 5-9 | 8,5 | |
| 10-14 | 3,6 | |
| 15-19 | 3,1 | |
| 20-24 | 2,2 | |
| 25-29 | 2,2 | |
| 30-34 | 1,9 | |
| 35-39 | 2,4 | |
| 40-44 | 2,1 | |
| 45-49 | 2,6 | |
| 50-54 | 2,9 | |
| 55-59 | 2,9 | |
| 60-64 | 3,7 | |
| 65+ | 13,6 | |
| ບໍ່ບອກ | 0,1 | |
| ທົ່ວປະເທດ | 9,0 | |

*(ຂໍ້ມູນຈາກການສຳຫຼວດປະຊາກອນປີ ຄ.ສ 2005, 2012 ຈາກສູນສະຖິຕິແຫ່ງຊາດ)*

ຄ. ບັນຫາທີ່ຄວນເອົາໃຈໃສ່ທີ່ສຸດກ່ຽວກັບສະພາບການຕາຍຂອງປະຊາກອນລາວ ແມ່ນອັດຕາການຕາຍຂອງເດັກນ້ອຍ (104/1000). ແຂວງທີ່ມີອັດຕາການຕາຍຂອງເດັກນ້ອຍສູງທີ່ສຸດແມ່ນແຂວງບໍລິຄຳໄຊ (136/1000), ໄຊຍະບູລີ (134/1000) ແລະ ຫຼວງພະບາງ (132/1000).ແຂວງທີ່ມີອັດຕາການຕາຍຂອງເດັກນ້ອຍຕຳ່ສຸດແມ່ນກຳແພງນະຄອນວຽງຈັນ. ຍ້ອນອັດຕາການຕາຍຂອງເດັກນ້ອຍສູງຄືດັ່ງກ່າວມານີ້ຈຶ່ງເຮັດໃຫ້ອາຍຸຍືນປານກາງຂອງປະຊາກອນລາວຍັງຕໍ່າຄື ຍິງ 63 ປີ ແລະ ຊາຍ 59 ປີ.

**ຕາຕະລາງ 7 : ອັດຕາການຕາຍຂອງເດັກນ້ອຍ ແລະ ອາຍຸຍືນປານກາງຂອງແຕ່ລະແຂວງ**

| ລ/ດ | ຊື່ແຂວງ | ອັດຕາການຕາຍດິບຕໍ່ 1000 ຄົນ (CDR) | ອັດຕາການຕາຍຂອງເດັກຕໍ່ 1000 ຄົນ (LMR) | ອາຍຸຍືນປານກາງ (ປີ) | |
|---|---|---|---|---|---|
| | | | | ຊາຍ | ຍິງ |
| 1 | ກ.ພ ວຽງຈັນ | 3,9 | 72 | 68 | 71 |
| 2 | ຜົ້ງສາລີ | 13,6 | 94 | 60 | 63 |
| 3 | ຫຼວງນໍ້າທາ | 17,5 | 119 | 56 | 59 |
| 4 | ອຸດົມໄຊ | 15,7 | 88 | 58 | 60 |
| 5 | ບໍ່ແກ້ວ | 13,9 | 82 | 63 | 66 |
| 6 | ຫຼວງພະບາງ | 12,9 | 132 | 59 | 62 |
| 7 | ຫົວພັນ | 9,0 | 125 | 60 | 63 |
| 8 | ໄຊຍະບູລີ | 8,7 | 134 | 63 | 66 |
| 9 | ຊຽງຂວາງ | 9,8 | 121 | 60 | 63 |
| 10 | ວຽງຈັນ | 7,1 | 102 | 65 | 68 |
| 11 | ບໍລິຄຳໄຊ | 8,8 | 136 | 63 | 66 |
| 12 | ຄຳມ່ວນ | 10,6 | 83 | 56 | 59 |
| 13 | ສະຫວັນນະເຂດ | 11,7 | 80 | 60 | 63 |
| 14 | ສາລະວັນ | 13,6 | 86 | 56 | 59 |
| 15 | ເຊກອງ | 20,5 | 96 | 54 | 56 |
| 16 | ຈຳປາສັກ | 9,5 | 91 | 60 | 63 |
| 17 | ອັດຕະປື | 15,9 | 93 | 55 | 58 |
| | ທົ່ວປະເທດ | 9,0 | 104 | 59 | 63 |

*(ຂໍ້ມູນຈາກການສຳຫຼວດປະຊາກອນປີ ຄ.ສ 2005, ສະຖິຕິ 2012 ຈາກສູນສະຖິຕິແຫ່ງຊາດ)*

## III. ການຍ້າຍຖິ່ນ

ການຍ້າຍຖິ່ນແມ່ນແຕກຕ່າງກັບການເກີດ ແລະ ການຕາຍ. ການເກີດ ແລະ ການຕາຍເປັນເຫດການກ່ຽວກັບຊີວິດທີ່ມີແບບແຜນຕາຍຕົວພາຍໃຕ້ຂະບວນການທາງຊີວະພາບ. ສ່ວນການຍ້າຍຖິ່ນບໍ່ໄດ້ກ່ຽວຂ້ອງກັບຂະບວນການຊີວະພາບ ແລະ ຄວາມເປັນຄວາມຕາຍຂອງຄົນໂດຍກົງ, ແຕ່ແມ່ນການເຄື່ອນຍ້າຍຂອງປະຊາກອນຈາກທ້ອງຖິ່ນໜຶ່ງ ຫຼື ຈາກປະເທດໜຶ່ງໄປສູ່ອີກປະເທດໜຶ່ງ. ຄວາມແຕກຕ່າງອີກອັນໜຶ່ງ ຄື ການເກີດ ແລະ ທ້ອງຖິ່ນປາຍທາງ. ໃນການຍ້າຍຖິ່ນແຕ່ລະຄັ້ງນັ້ນ ທ້ອງຖິ່ນຕົ້ນທາງຈະສູນເສຍສະມາຊິກ ໃນຂະນະທີ່ທ້ອງຖິ່ນປາຍທາງຈະໄດ້ຮັບສະມາຊິກໃໝ່.

### 1. ປັດໃຈທີ່ເປັນຜົນກະທົບຕໍ່ການຍ້າຍຖິ່ນ.

ຕາມປົກກະຕິແລ້ວ, ຄົນລາວຈະມີຄວາມຜູກພັນກັບພໍ່ແມ່ຍາດຕິພີ່ນ້ອງ, ສັງຄົມ ແລະ ສະພາບແວດລ້ອມທີ່ຕົນເອງອາໄສຢູ່. ດັ່ງນັ້ນ, ເມື່ອພໍໃຈກັບສະພາບຕ່າງໆໃນທ້ອງຖິ່ນດິນນາຂອງຕົນເອງແລ້ວເຂົາເຈົ້າຈະບໍ່ມັກຄິດ ຫຼື ບໍ່ຕ້ອງການທີ່ຈະປະລະຖິ່ນຖານຄອບຄົວ ແລະ ຍາດຕິພີ່ນ້ອງໄປຢູ່ບ່ອນອື່ນ. ແຕ່ກໍຍັງມີບາງຄັ້ງຄາວທີ່ໂຄງປະກອບທາງດ້ານເສດຖະກິດ, ສັງຄົມ, ການເມືອງ ແລະ ສະພາວະອື່ນໆມີການປ່ຽນແປງໃນລະດັບຂອງຕົນເອງບໍ່ພໍໃຈແລ້ວ ຈຳເປັນຕ້ອງມີການຍ້າຍຖິ່ນໄປອາໄສຢູ່ບ່ອນອື່ນທີ່ຄາດວ່າຊີວິດການເປັນຢູ່ຈະດີຂຶ້ນ.

ການຍ້າຍຖິ່ນຖານສ່ວນໃຫຍ່ແມ່ນການຍ້າຍອອກຈາກທ້ອງຖິ່ນ ທີ່ສະພາບເສດຖະກິດ ແລະ ສັງຄົມມີຄວາມຫຍຸ້ງຍາກສັບສົນ (ຈາກເຂດທຸລະກັນດານ, ເຂດຫ່າງໄກສອກຫຼີກ, ເຂດພູສູງ...) ເຂົ້າໄປຢູ່ທ້ອງຖິ່ນທີ່ມີສະພາວະທາງດ້ານເສດຖະກິດ ແລະ ສັງຄົມດີກວ່າເກົ່າ (ຕົວເມືອງ ຫຼື ນະຄອນຫຼວງ) ຍ້ອນມີການສົມທຽບສະພາບຊີວິດການເປັນຢູ່ລະຫວ່າງທ້ອງຖິ່ນເດີມກັບທ້ອງຖິ່ນອື່ນທີ່ຕົນຈະຍ້າຍເຂົ້າໄປຢູ່ ແລະ ຄາດວ່າເມື່ອຍ້າຍຖິ່ນຖານແລ້ວ ຊີວິດການເປັນຢູ່ຈະດີຂຶ້ນກວ່າເກົ່າ. ກ່ອນຈະຕັດສິນໃຈຍ້າຍຖິ່ນຕ້ອງໄດ້ຄິດໄລ່ໃຊ້ຈ່າຍໃນການເດີນທາງ ແລະ ຄ່າໃຊ້ຈ່າຍອື່ນໆກັບຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບ ຊຶ່ງຖ້າເຫັນວ່າກຸ້ມຄ່າກໍຈະຕົກລົງຍ້າຍ. ກົງກັນຂ້າມ, ຫາກປຽບທຽບທັງສອງຢ່າງບໍ່ຄຸ້ມຄ່າແລ້ວກໍຈະບໍ່ມີການຍ້າຍອອກຈາກບ້ານເກີດເມືອງນອນຂອງຕົນເອງ. ເມື່ອງສັງລວງເບິ່ງແລ້ວເຫັນວ່າ ປັດໃຈທີ່ມີຜົນກະທົບຕໍ່ການຍ້າຍຖິ່ນປະກອບມີ 2 ປັດໃຈ ຄື:

- ປັດໄຈພາຍນອກ ເຊັ່ນ ປັດໄຈທາງດ້ານເສດທະກິດ, ສັງຄົມ, ການເມືອງ ແລະ ອື່ນໆ ທີ່ສົ່ງຜົນຕໍ່ການຍ້າຍຖິ່ນຖານໃນທາງບວກ ແລະ ທາງລົບ, ທັງຊຸກດັນ ແລະ ຕ້ານການຍ້າຍຖິ່ນຖານອອກຈາກທ້ອງຖິ່ນໃດທ້ອງຖິ່ນໜຶ່ງ ແລະ ທັງດຶງດູດ ແລະ ຕ້ານການຍ້າຍຖິ່ນຖານເຂົ້າສູ່ທ້ອງຖິ່ນນັ້ນ.
- ປັດໄຈພາຍໃນ ຊຶ່ງໄດແກ່ຈຳນວນປະຊາກອນ, ອົງປະກອບປະຊາກອນ, ການແຈກຢາຍປະຊາກອນຕາມທ້ອງຖິ່ນ, ພາວະການຕາຍ ແລະ ພາວະການຕາຍ ແລະ ການຈະເລີນເຕີບພັນເຫຼົ່ານີ້ເປັນຕົ້ນ ທີ່ເຮັດໃຫ້ປະຊາກອນເກີດມີການຍ້າຍຖິ່ນຖານໄດ້.

### 2. ສະພາບການຍ້າຍຖິ່ນຂອງປະຊາກອນລາວ

ໃນສະໄໝກ່ອນກໍຄືໃນປັດຈຸບັນ, ສະພາບການຍ້າຍຖິ່ນ ຂອງປະຊາກອນລາວແມ່ນມີຄວາມສັບສົນ ສົມ ຄວນ ແລະ ບັນດາເອກະສານທີ່ຈະຢັ້ງຢືນຢ່າງຊັດເຈນຍັງມີໜ້ອຍ. ກະແສການເຄື່ອນຍ້າຍໃນລະຍະຜ່ານ ມາຕົ້ນຕໍແມ່ນການເຄື່ອນຍ້າຍຈາກພູສູງລົງສູ່ພູພຽງ ແລະ ຈາກຊົນນະບົດເຂົ້າສູ່ຕົວເມືອງໃຫຍ່.

ສໍາລັບການເຄື່ອນຍ້າຍອອກໄປຕ່າງປະເທດນັ້ນມີຄືພາຍຫຼັງທີ່ປະເທດຊາດໄດ້ຮັບການປົດປ່ອຍ (1975) ໄດ້ມີປະຊາກອນຈ□ານວນໜຶ່ງອົບພະຍົບໄປຢູ່ຕ່າງປະເທດເຊັ່ນ ໄທ, ຝະລັ່ງ, ອະເມລິກາ, ອົດ ສະຕຣາລີ, ການາດາ... ຕາມຂໍ້ມູນຂອງຄະນະກໍາມະການແຜນການແຫ່ງລັດປີ 1986 ໄດ້ໃຫ້ຮູ້ວ່າ ຈໍານວນຄົນ ລາວທີ່ອົບໄປຢູ່ຕ່າງປະເທດມີຢູ່ທັງໝົດປະມານ 30360 ຄົນ. ແຕ່ມາຮອດປັດຈຸບັນນີ້ຈ□ານວນຄົນທີ່ໄປຢູ່ ຕ່າງປະເທດນັ້ນໄດ້ມີຈໍານວນຫຼາຍ ກໍໄດ້ກັບຄືນສູ່ບ້ານເກີດ ເມືອງນອນຂອງຕົນເອງ.ຕາມຂໍ້ມູນຂອງສູນສະຖິຕິ ແຫ່ງຊາດໄດ້ໃຫ້ຮູ້ວ່າແຕ່ປີ 1980-1995 ໄດ້ມີຄົນລາວກັບຄືນ ສູ່ປະເທດແລ້ວປະມານ 26 370 ຄົນ.

ເພື່ອປະຕິບັດນະໂຍບາຍຈັດແບ່ງປະຊາກອນ ໃຫ້ເໝາະສົມກັບເງື່ອນໄຂຊັບພະຍາກອນ ແລະ ການປົກ ປັກຮັກສາສະພາບແວດລ້ອມນັ້ນ ລັດຖະບານໄດ້ອອກມະຕິລົງສພບັບໜຶ່ງໃນເດືອນກຸມພາ ປີ 1986 ເພື່ອຢຸດຕິ ການຖາງປ່າເຮັດໄຮ່ ແລະ ກໍໄດ້ຍົກຍ້າຍປະຊາກອນຈໍານວນໜຶ່ງເພື່ອຈັດສັນທີ່ຢູ່ອາໄສໃຫ້ປົກກະຕິຖາວອນ. ພ້ອມດຽວກັນນີ້ລັດຖະບານກໍໄດ້ບຸກເບີກ ແລະ ຂະຫຍາຍເນື້ອທີ່ການຜະລິດ (ອຸດສາຫະກໍາ, ກະສິກໍາ), ເສັ້ນທາງ... ນັບທັງການຂະຫຍາຍຕົວເມືອງຕ່າງໆ ຈຶ່ງສາມາດເຮັດໃຫ້ຈ□ານວນພົນມີການເຄື່ອນຍ້າຍອອກໄປ ອາໄສຢູ່ຕາມຫົວໜ່ວຍເສດຖະກິດ ແລະ ຕາມຕົວເມືອງໃໝ່ດັ່ງກ່າວນັ້ນ.

## IV . ການເພີ່ມຂຶ້ນຂອງປະຊາກອນລາວ

ປະເທດລາວແມ່ນໜຶ່ງໃນບັນດາປະເທດ ທີ່ອັດຕາສ່ວນຂອງການເພີ່ມປະຊາກອນຂ້ອນຂ້າງສູງ ຊຶ່ງ ສະແດງອອກໃນຜົນຂອງການສໍາຫຼວດປະຊາກອນສາມຄັ້ງຜ່ານມາ (1985,1995 ແລະ 2005) ແລະ ຈາກ ຕົວເລກການປະມານໃນປີ 2012. ໃນປັດຈຸບັນນີ້,ລະດັບການເພີ່ມຂຶ້ນຂອງປະຊາກອນແມ່ນ 21/1000. ການ ທີ່ອັດຕາການເພີ່ມຂຶ້ນຂອງປະຊາກອນແບບທໍາມະຊາດຢູ່ໃນລະດັບສູງເຊັ່ນນີ້ ຕົ້ນຕໍແມ່ນບ້ອນອັດຕາການເກີດ ສູງ ແຕ່ພ້ອມດຽວກັນນີ້ອັດຕາການຕາຍພັດຫຼຸດລົງໄວນັ້ນເອງ.

ຖ້າຈັງຫວະການເພີ່ມຂຶ້ນຂອງປະຊາກອນຫາກສືບຕໍ່ປົກກະຕິຄືດັ່ງກ່າວມານີ້ຮອດປີ 2015 ປະຊາກອນ ລາວຈະມີເຖິງ 7 500 000 ຄົນແລະຮອດປີ 2020 ອາດຈະມີເຖິງ 8 700 000 ຄົນ.

| ປີ | ອັດຕາການເກີດ(%o) | ອັດຕາການຕາຍ(%o) | ເພີ່ມແບບທໍາມະຊາດ(‰) | ໝາຍເຫດ |
|---|---|---|---|---|
| 1970 | 47.0 | 23.0 | 24 | |
| 1980 | 49.0 | 20.0 | 26 | |
| 1985 | 17.1 | 17.1 | 29 | |
| 1990 | 43.3 | 15.0 | 28 | |
| 1995 | 41.3 | 15.1 | 26 | |
| 2000 | 40.0 | 15.0 | 25 | |
| 2005 | 34.7 | 9.8 | 24 | |

| | | | | |
|---|---|---|---|---|
| 2012 | 30.2 | 8.5 | 23 | |

*(ຂໍ້ມູນຈາກການສ□ຫຼວດປະຊາກອນປີ ຄ.ສ 1995, 2005, ສະຖິຕິ 2012 ຈາກສູນສະຖິຕິແຫ່ງຊາດ ແລະ ຫໍສະໝຸດແຫ່ງຊາດ)*

## V. ໂຄງປະກອບສ້າງຂອງປະຊາກອນລາວ

### 1. ໂຄງປະກອບສ້າງຂອງອາຍຸ

ແຕ່ກ່ອນກໍຄືປັດຈຸບັນ, ໂຄງປະກອບສ້າງດ້ານອາຍຸຂອງປະສາກອນລາວແມ່ນປະຊາກອນໜຸ່ມ ຊຶ່ງກວມເອົາອັດຕາສ່ວນຫຼາຍ, ຕໍ່ກັບບັນຫາດັ່ງກ່າວນີ້ ອາດສາມາດສົມທຽບກັບບາງຕົວເລກຂອງປີ 1970, 1985 ແລະ 1995, ພວກເຮົາສາມາດເຫັນໄດ້ວ່າ ປີ 1970 ຈຳນວນປະຊາກອນໃນກຸ່ມອາຍຸ 0-4 ປີ ໄດ້ກວມເອົາ 47,6%, ໃນກຸ່ມອາຍຸແຮງງານ 15-59 ປີ ກວມເອົາ 43,8% ແລະ ໃນກຸ່ມອາຍຸສູງກ່ວາ 60 ປີ ມີພຽງແຕ່ 8,6%. ພໍກ້າວເຂົ້າຫາປີ 1985, ອັດຕາສ່ວນດັ່ງກ່າວໄດ້ມີການພັດເພີ່ມຂຶ້ນເປັນ 49,4% ແລະ ກຸ່ມ ອາຍຸສູງກ່ວາ 60ປີຫຼຸດລົງຍັງ 6,3%. ເຫດຜົນຕົ້ນຕໍຂອງບັນຫາດັ່ງກ່າວນີ້ແມ່ນຍ້ອນຜົນສະທ້ອນຍ້ອນຫຼັງຈາກສົງຄາມ, ເສດຖະກິດ, ການເມືອງ...

**ຕາຕະລາງທີ9: ຈຳນວນປະຊາກອນລາວແບ່ງຕາມກຸ່ມອາຍຸຂອງບາງປີ**

| ກຸ່ມອາຍຸ (ປີ) | 1970 | 1985 | 1990 | 1995 | 2005 |
|---|---|---|---|---|---|
| 0-14 | 53 | 50 | 44 | 44 | 39 |
| 15-59 | 41 | 45 | 51 | 52 | 57 |
| >60 | 6 | 5 | 5 | 4 | 4 |

ອີງຕາມຕາຕະລາງຂ້າງເທິງນີ້, ພວກເຮົາສາມາດເຫັນໄດ້ວ່າໂຄງສ້າງຂອງປະຊາກອນ ແຕ່ປີ 1970 ເຖິງ 2005 ມີການປ່ຽນແປງໜ້ອຍ, ແຕ່ວ່າຈ□ານວນປະຊາກອນຂອງປະເທດພັດມີການເພີ່ມຂຶ້ນລຽນຕິດ ຊຶ່ງສະແດງອອກຮູບທາດອາຍຸລຸ່ມນີ້.

ຮູບ2 : ທາດອາຍຸຂອງປະຊາກອນລາວ ປີ 2010 ຮູບ3 : ທາດອາຍຸຂອງປະຊາກອນລາວ ປີ2020







ໃນສະພາບທີ່ລາວມີພື້ນຖານ ເສດຖະກິດຍັງບໍ່ທັນຈະຫຍາຍຕົວ, ລັດຖະບານຄວນມີທິດນຳທີ່ເໝາະສົມ ເພື່ອຄວບຄຸມຈຳນວນປະຊາກອນໃຫ້ແທດເໝາະກັບການຂະຫຍາຍຕົວຂອງເສດຖະກິດໃນປັດຈຸບັນ ແລະ

ອະນາຄົດ, ໂດຍສະເພາະແມ່ນສ້າງເງື່ອນໄຂໃຫ້ແກ່ກຸ່ມຄົນທີ່ຢູ່ໃນໄວອອກແຮງງານໃຫ້ມີວຽກງານທຳ ຖ້າບໍ່ດັ່ງນັ້ນຈະພາໃຫ້ເກີດມີບັນຫາຕ່າງໆດ້ານປະຊາກອນຕາມມາຕົວຢ່າງເຊັ່ນອັດຕາການອີງອາໄສ (ການເອື່ອຍອີງ) ຂອງໄວເດັກແລະຜູ້ເຖົ້າແມ່ນຈະສູງເຊັ່ນໃນປີ 1995 ອັດຕາການອີງອາໄສແມ່ນ 99/100 ໝາຍຄວາມວ່າເດັກນ້ອຍ 99 ຄົນໄດ້ອາໄສກິນນຳຜູ້ອອກແຮງງານ 100 ຄົນຕ້ອງໄດ້ຮັບພາລະລ້ຽງດູເດັກ (0-14ປີ) ຈຳນວນ 99 ຄົນ. ຖ້າວ່າຄິດໄລ່ຜູ້ເຖົ້າໃສ່ນຳ (0-14 ປີ + $60^{+}$ປີ) ອັດຕາດັ່ງກ່າວຈະສູງເຖິງ 102/100 ໝາຍຄວາມວ່າຜູ້ອອກແຮງງານ 100 ຄົນຈະຕ້ອງຮັບພາລະລ້ຽງດູເດັກນ້ອຍ ແລະ ຜູ້ເຖົ້າ 102 ຄົນ.

ອັດຕາການອີງອາໄສນີ້ຈະມີຄວາມແຕກຕ່າງກັນຕາມແຕ່ລະແຂວງ, ໝາຍຄວາມວ່າແຂວງໃດມີອັດຕາການອີງອາໄສ ກໍຈະເຮັດໃຫ້ລະດັບຄ່າຄອງຊີບສູງກ່ວາແຂວງທີ່ມີອັດຕາການອີງອາໄສຕ່ຳ ຊຶ່ງນີ້ແມ່ນບັນຫາທີ່ຄວນເອົາໃສ່ແກ້ໄຂຢູ່ໃນຂອດນະໂຍບາຍປະຊາກອນຂອງແຕ່ລະແຂວງ.

## 2. ໂຄງປະກອບສ້າງທາງເພດ

ໂຄງປະກອບສ້າງທາງເພດຂອງປະຊາກອນລາວແມ່ນອັດຕາສ່ວນເພດຍິງຫຼາຍກ່ວາເພດຊາຍປະມານ 2%. ນັບແຕ່ປີ 1985 ເຖິງປັດຈຸບັນ ຄວາມແຕກຕ່າງລະຫວ່າງສອງເພດນີ້ເກືອບບໍ່ມີການປ່ຽນແປງ ຄື ຈຳນວນເພດຊາຍແມ່ນ 49% ແລະ ຈຳນວນເພດຍິງ 51%, ໂຄງປະກອບນີ້ຄ້າຍຄືກັບໂຄງປະກອບສ້າງຂອງເພດຂອງບັນດາປະເທດໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້ທົ່ວໄປ.

ໂຄງປະກອບສ້າງທາງເພດນີ້ ຍັງມີຄວາມແຕກຕ່າງກັນລະຫວ່າງເມືອງ ແລະ ຊົນນະບົດ. ພິເສດ, ຢູ່ນະຄອນຫຼວງວຽງຈັນຈຳນວນເພດຊາຍພັດຫຼາຍກວ່າເພດຍິງຊຶ່ງກົງກັນຂ້າມກັບທ່າອ່ຽງລວມຂອງປະເທດ ເຊັ່ນໃນປີ 1985 ມີຜູ້ຊາຍ 105 ຄົນຕໍ່ກັບແມ່ຍິງ 100 ຄົນ (ຊາຍ 105/ຍິງ 100) ມາຮອດປັດຈຸບັນ, ອັດຕາດັ່ງກ່າວໄດ້ຫຼຸດລົງເປັນຊາຍ 102 ຄົນ/ຍິງ 100 ຄົນ. ປາກົດການນີ້ຍັງມີຢູ່ແຂວງວຽງຈັນຄືມີຊາຍ 101 ຄົນຕໍ່ຍິງ 100 ຄົນ. ສາເຫດຂອງປາກົດການນີ້ແມ່ນຍ້ອນການເຄື່ອນຍ້າຍຂອງປະຊາກອນຈາກຊົນນະບົດເຂົ້າມາອາໄສຢູ່ຕົວເມືອງຊຶ່ງໃນນັ້ນຈຳນວນຫຼາຍແມ່ນເພດຊາຍທີ່ມາຈາກແຂວງຕ່າງໆເພື່ອຊອກວຽກງານເຮັດງານທຳ ແລະການສຶກສາຮ່ຳຮຽນ.

## 3. ໂຄງປະກອບສ້າງແຮງງານ ແລະ ການນາໃຊ້ແຮງງານ

ຕາມການສຳຫຼວດປະຊາກອນເມື່ອປີ 2005, ຈຳນວນປະຊາກອນລາວມີທັງໝົດ 5 621 982 ຄົນ, ໃນນີ້ຈຳນວນປະຊາກອນທີ່ມີອາຍຸແຕ່ 15-60 ປີມີ 4 171 199 ຄົນຊຶ່ງເທົ່າກັບ 74,2% ແລະຈຳນວນປະຊາກອນທີ່ມີອາຍຸຕ່ຳກວ່າ 15 ປີ ແລະ ສູງກວ່າ 60ປີມີ 1 450 123 ຄົນ ຊຶ່ງເທົ່າກັບ 25,8%. ປະປະຊາກອນທີ່ເຄື່ອນໄຫວທາງເສດທະກິດມີປະມານ 66,6% ໃນນີ້ຜູ້ທີ່ມີວຽກເຮັດງານທຳມີ 98,6% ແລະ ຜູ້ທີ່ຍັງບໍ່ທັນມີວຽກເຮັດມີປະມານ 1,4%. ສ່ວນຈ�ານວນປະຊາກອນທີ່ບໍ່ເຄື່ອນໄຫວເສດຖະກິດໂດຍກົງ 32,4% ໃນນີ້ປະກອບມີນັກສຶກສາ 70%. ນອກນັ້ນກໍມີປະຊາກອນທີ່ເຮັດວຽກຢູ່ກັບຄອບຄົວຊຶ່ງມີ 14%, ຜູ້ບຳນານ ແລະ ຄົນເຖົ້າຊຶ່ງມີ 17%... (ເບິ່ງແຜນວາດທີ 1 ) . ທັງໝົດນັ້ນແມ່ນບັນຫາທີ່ສຳຄັນຂອງປະເທດ, ລັດຖະບານຄວນມີວິທີການແກ້ໄຂໃຫ້ເໝາະສົມທີ່ສຸດໃນແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເພື່ອຮອງຮັບເອົາບັນຫາດັ່ງກ່າວມານັ້ນ.

ປະຊາກອນໃນໄວອອກແຮງງານ ຫຼື ໃນໄວກຳລັງແຮງງານຢູ່ລາວໃນປັດຈຸບັນເພິ່ນໄດ້ກຳນົດເອົາຄົນຜູ້ມີອາຍຸ 15 ປີ ເຖິງ 60 ປີ ສຳລັບເພດຊາຍ ແລະ 15 ປີ ເຖິງ 55 ປີ ສຳລັບເພດຍິງ.

ຮູບທີ 1 : ແຜນວາດການຈັດແບ່ງແຮງງານຂອງປະຊາກອນລາວປີ 2005




*(ແຫຼ່ງຂໍ້ມູນ : ການສຳຫຼວດປະຊາກອນລາວປີ 2005 ໂດຍສູນສະຖິຕິແຫ່ງຊາດ)*

ສະນັ້ນ ຈຶ່ງເວົ້າໄດ້ວ່າປະຊາກອນຜູ້ອອກແຮງງານ ແລະ ໂຄງປະກອບສ້າງດ້ານອາຍຸແມ່ນມີການພົວພັນກັນແບບກາຍົນຊີ. ມາເຖິງປັດຈຸບັນ, ຈຳນວນແຮງງານລາວນັບມື້ເພີ່ມຂຶ້ນສະເລ່ຍແຕ່ລະປີປະມານ 40 000 ຄົນ, ຈຳນວນແຮງງານຍິງມີຫຼາຍກວ່າຊາຍ (51%-49%). ຜ່ານຕົວເລກດັ່ງກ່າວນີ້ສາມາດເວົ້າໄດ້ວ່າ ປະເທດລາວມີຈຳນວນແຮງງານພຽງພໍເພື່ອກໍ່ສ້າງ ແລະ ພັດທະນາປະເທດໃຫ້ຈະເລີນໄດ້, ແຕ່ທີ່ຍັງເປັນບັນຫາຢູ່ກໍຄືລະດັບການສຶກສາ (ຄຸນນະພາບ) ຂອງແຮງງານລາວຍັງຕ່ຳຫຼາຍເມື່ອ ທຽບກັບສາກົນ.

# ບົດທີ IV

# ກໍລະນີສຶກສາປະຊາກອນ

## I. ປະຊາກອນກັບການພັດທະນາ

### 1. ຄວາມໝາຍ ແລະ ຄວາມສຳຄັນຂອງການພັດທະນາ

ໃນປັດຈຸບັນນີ້, ບັນດາປະເທດຕ່າງໆໃນໂລກ ໄດ້ມີການວາງແຜນການພັດທະນາຫຼາຍຮູບການເພື່ອແນໃສ່ຫຼຸດຜ່ອນຄວາມທຸກຈົນຂອງປະຊາຊົນໃນປະເທດ. ສະນັ້ນ, ລັດຖະບານຈຶ່ງໄດ້ໃຫ້ຄວາມສຳຄັນກັບຄວາມຈະເລີນກ້າວໜ້າທາງເສດຖະກິດ. ແຕ່ການພັດທະນາກໍບໍ່ໝາຍຄວາມວ່າຈະພັດທະນາພຽງແຕ່ເສດຖະກິດຢ່າງດຽວ, ມັນຍັງຄອບຄຸມໄປທົ່ວສັງຄົມມະນຸດ.ການພັດທະນາຖືວ່າເປັນຂະບວນການຫຼາຍມິຕິ ທີ່ກ່ຽວຂ້ອງກັບການປັບປຸງແກ້ໄຂລະບົບຕ່າງໆທາງດ້ານເສດຖະກິດ ແລະ ສັງຄົມ ເຊັ່ນ ການປັບປຸງລາຍໄດ້ ແລະ ການຜະລິດ, ປ່ຽນແປງແກ້ໄຂໂຄງສ້າງທາງສັງຄົມ, ໂຄງສ້າງຂອງສາຖາບັນຕ່າງໆ, ໂຄງສ້າງການບໍລິຫານລວມທ່າທີຕ່າງໆຂອງຄົນໃນຊາດ ແລະ ຢູ່ໃນຫຼາຍປະເທດຕ້ອງໄດ້ປັບປຸງແກ້ໄຂຂະນົບທຳນຽມຮີດຄອງປະເພນີ ແລະ ຄວາມເຊື່ອຖືຂອງປະຊາຊົນບັນດາເຜົ່າທີ່ເຫັນວ່າມີບາງອັນບໍ່ສອດຄ່ອງກັບຍຸກສະໄໝໃໝ່.

### 2.ສະພາບລວມຂອງການພັດທະນາກັບປະຊາກອນລາວ

ກ.ປະຊາກອນກັບການພັດທະນາເສດຖະກິດ

ຕາມທຳມະດາແລ້ວ, ຢູ່ໃນປະເທດທີ່ມີລາຍໄດ້ສະເລ່ຍໃສ່ຫົວຄົນສູງອັດຕາການເພີ່ມຂອງປະຊາກອນຈະຕໍ່າ. ສຳລັບຢູ່ປະເທດລາວ, ອັດຕາການເພີ່ມຂຶ້ນຂອງປະຊາກອນແມ່ນຢູ່ໃນລະດັບສູງແຕ່ລາຍໄດ້ສະເລ່ຍໃສ່ຫົວຄົນຕໍ່າ ຊຶ່ງຈຸດພິເສດນີ້ແມ່ນປາກົດການລວມຂອງບັນດາປະເທດກຳລັງພັດທະນາ. ບັນດານີ້ໄດ້ສະແດງໃຫ້ເຮົາເຫັນວ່າຖ້າລະດັບການເກີດຫາກຍັງສູງ ຄືປັດຈຸບັນນີ້ຈະເຮັດໃຫ້ປະລິມານການນຳໃຊ້ຊັບພະຍາກອນທຳມະຊາດນັບມື້ນັບສູງຂຶ້ນເລື້ອຍໆ ແລະ ຈະເປັນໄພອັນຕະລາຍມານາບ ຂູ່ປະຊາກອນຄົນໃນອະນາຄົດ. ຢູ່ປະເທດລາວ, ປະຊາກອນທີ່ເຄື່ອນໄຫວວຽກງານເສດຖະກິດກະສິກຳເອົາປະມານ 75% ຂອງຈຳນວນປະຊາກອນທົ່ວປະເທດ ແລະ ສ່ວນທີ່ຍັງເຫຼືອນັ້ນ ກໍຍັງມີຈຳນວນບໍ່ໜ້ອຍຊຶ່ງບໍ່ສາມາດຕັດແຍກອອກຈາກວຽກງານກະສິກຳ 100%. ແຕ່ເຖິງຢ່າງໃດກໍຕາມລະດັບລາຍໄດ້ສະເລ່ບໃສ່ຫົວຄົນນັບມື້ນັບເພີ່ມຂຶ້ນເຊັ່ນເພີ່ມຈາກ 150 USD ໃນປີ 1985 ມາເປັນ 320 USD ໃນປີ 1998, 350 USD ໃນປີ 2000, 596 USD ໃນປີ 2005, 1355 USD ໃນປີ 2012 ແລະ ຈະສູງຂຶ້ນເລື້ອຍໆ ຍ້ອນສະພາບການພັດທະນາ ນັບມື້ຂະຫຍາຍຕົວບໍ່ວ່າທາງດ້າບປະລິມານ ກໍຄືດ້ານຄຸນນະພາບ.

ຂ. ປະຊາກອນກັບການສຶກສາ ແລະ ສາທາລະນະສຸກ :

ການເພີ່ມປະຊາກອນຢ່າງໄວວາໄດ້ມີຜົນກະທົບເຖິງການຂະຫຍາຍຕົວຂອງວຽກງານສຶກສາແລະສາທາລະນະສຸກທາງດ້ານປະລິມານແລະຄຸນນະພາບເຊັ່ນ :

-ນັບແຕ່ມື້ປະເທດຊາດໄດ້ຮັບການປົດປ່ອຍມານີ້, ໂດຍທົ່ວໄປແລ້ວວຽກງານການສຶກສາໄດ້ນັບມື້ນັບມື້ນັບຂະຫຍາຍຕົວເປັນກ້າວໆມາ. ແຕ່ໃນປັດຈຸບັນຈ□ານວນໂຮງຮຽນ ແລະ ຫ້ອງຍັງບໍ່ທັນພຽງພໍທີ່ຈະຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ.ອັດຕາການປະລະການຮຽນຂອງເດັກນ້ອຍຍັງສູງ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ ແລະ ກັນດານ. ອີງຕາມການສໍາຫຼວດປະຊາກອນປີ 2005, ຈໍານວນປະຊາກອນປະມານ 25% ແມ່ນບໍ່ເຄີຍເຂົ້າໂຮງຮຽນ, 16% ແມ່ນກໍາລັງເຂົ້າຮຽນ ແລະ 25% ແມ່ນໄດ້ອອກໂຮງຮຽນໄປແລ້ວ(ນັບທັງຜູ້ຮຽນຈົບປະຖົມ ຫຼື ມັດທະຍົມ ແລະ ຜູ້ບໍ່ຈົບ). ຖ້າທຽບກັນລະຫວ່າງເພດແມ່ນແຕກຕ່າງກັນຫຼາຍ ເຊັ່ນເພດຊາຍປະມານ 25% ບໍ່ເຄີຍເຂົ້າໂຮງຮຽນ ແລະ ເພດຍິງມີ 32% ທີ່ບໍ່ເຄີຍເຂົ້າໂຮງຮຽນ. ເວົ້າລວມ ອັດຕາການຮູ້ໜັງສືຂອງປະຊາກອນຍັງຕໍ່າ ຄື ປະມານ 65% ເທົ່ານັ້ນ ໝາຍຄວາມວ່າປະຊາກອນທີ່ມີອາຍຸ 15 ປີ ຂຶ້ນໄປ 100 ຄົນທີ່ສາມາດ ມີຢູ່ 65 ຄົນທີ່ສາມາດອ່ານ ແລະ ຂຽນພາສາລາວໄດ້.

-ໃນຫຼາຍສິບປີມານີ້ວຽກງານສາທາລະນະສຸກໄດ້ມີການປ່ຽນແປງ ແລະ ຂະຫຍາຍຕົວໄວສົມຄວນ. ທັງນີ້ກໍເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການເຖິງລະດັບການເພີ່ມຂຶ້ນຂອງປະຊາກອນ, ຕົວຢ່າງ ເຊັ່ນໃນປີ 1985 ໂຮງໝໍສູນກາງມີ 4 ແຫ່ງ ແລະ ມາຮອດປີ 1995 ໄດ້ເພີ່ມຂຶ້ນເປັນ 8 ແຫ່ງ, ໂຮງໝໍແຂວງມີ 18 ແຫ່ງ, ໂງໝໍເມືອງເພີ່ມຈາກ 107 ມາເປັນ 126 ແຫ່ງໃນປີ 1995 ແລະ ສຸກສາລາມີ 567 ແຫ່ງ. ຈໍານວນທ່ານໝໍ ແລະ ພະນັກງານແພດກໍໄດ້ເພີ່ມຂຶ້ນຈາກ6000 ຄົນໃນປີ 1985 ມາເປັນ 10 046 ຄົນໃນປີ 1995. ແຕ່ຍ້ອນປະຊາກອນເພີ່ມຂຶ້ໄວຄືດັ່ງໄດ້ກ່າວມາແລ້ວນັ້ນຈຶ່ງເຮັດໃຫ້ການຕອບສະໜອງຂອງວຽກງານນີ້ບໍ່ທັນມໍ່ວເຖິງໂດຍສະເພາະແມ່ນເຂດຫ່າງໄກສອກຫຼີກ ຫຼື ເຂດກັນດານ.

ຄ. ປະຊາກອນກັບຊັບພະຍະກອນທໍາມະຊາດ ແລະ ສິ່ງແວດລ້ອມ :

ສປປ ລາວເປັນປະເທດກໍາລັງພັດທະນາແຕ່ຍັງມີທໍາມະຊາດທີ່ອຸດົມສົມບູນພໍສົມຄວນ ເປັນຕົ້ນແມ່ນຊັບພະຍາກອນປ່າໄມ້, ນໍ້າ, ດິນ, ບໍ່ແຮ່... ຊຶ່ງເປັນພື້ນຖານເພື່ອຮັບໃຊ້ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດ. ເຖິງແມ່ນວ່າໃນໄລຍະຜ່ານມາຊັບພະຍາກອນທໍາມະຊາດບາງຊະນິດ ເປັນຕົ້ນແມ່ນປ່າໄມ້ ແລະດິນປູກຝັງໄດ້ຖືກນໍາໃຊ້ໄປຢ່າງຫຼວງຫຼາຍແລ້ວກໍຕາມ ແຕ່ຊັບພະຍາກອນອື່ນໆ ເຊັ່ນນໍ້າ ແລະ ບໍ່ແຮ່ ແມ່ນຫາກໍມີການຂຸດຄົ້ນ ແລະ ຍັງຈະມີບົດບາດສໍາຄັນໃນການພັດທະນາເສດຖະກິດ-ສັງຄົມໃນອານາຄົດ. ໃນຂະນະນີ້ວຽກງານກະສິກໍາ-ປ່າໄມ້ ແລະ ໄຟຟ້ານໍ້າຕົກໄປເປັນແຫຼ່ງລາຍຮັບດ້ານເງິນຕາຕ່າງປະເທດຂອງຊາດ. ເວົ້າລວມການພັດທະນາເສດຖະກິດ ແລະ ການດໍາລົງຊີວິດຂອງຊາດລາວທັງໝົດແມ່ນລ້ວນແຕ່ຕິດພັນກັບຊັບພະຍາກອນທໍາມະຊາດ.

ກ່ຽວກັບບັນຫາຕ່າງໆທາງສິ່ງແວດລ້ອມ ເຊັ່ນວ່າອາກາດເປັນພິດ, ນໍ້າເນົ່າເສຍ, ດິນເສື່ອມໂຊມ... ເຫຼົ່ານີ້ຜ່ານມາຍັງບໍ່ທັນມີແຜ່ຫຼາຍປານໃດ, ແຕ່ກໍເຫັນວ່າມັນຄ່ອຍໆມີທ່າອ່ຽງເກີດຫຼາຍຂຶ້ນເລື້ອຍໆ. ບັນຫາສິ່ງແວດລ້ອມທີ່ເກີດຂຶ້ນແລ້ວ ເຊັ່ນ ຢູ່ຕາມຕົວເມືອງຕ່າງໆນັ້ນໄດ້ແກ່ບັນຫາການຖິ້ມຂີ້ເຫຍື້ອຊະຊາຍ, ຕະຄອງຮ່ອງນໍ້າອັດຕັນ ແລະ ບັນຫາອື່ນໆ ຊຶ່ງຕິດພັນກັບການເພີ່ມຂຶ້ນຫຼາຍຂອງປະຊາກອນ, ກັບການຜະລິດ ແລະທຸລະກິດທີ່ຂະຫຍາຍຕົວໄວ,ກັບການອຸປະໂພກ-ບໍລິໂພກເປັນຈໍານວນຫຼາຍ, ກັບການວາງຜັງເມືອງທີ່ບໍ່ທັນສອດຄ່ອງ, ກັບການຈັດສັນພື້ນທີ່ຊຶ່ງບໍ່ທັນລະອຽດແລະອື່ນໆອີກ. ໃນປັດຈຸບັນ, ບັນຫາສິ່ງແວດລ້ອມທີ່ສໍາຄັນທີ່ສຸດຂອງ ສປປ ລາວ ແມ່ນບັນຫາການຫຼຸດນ້ອຍຖອຍລົງຂອງເນື້ອທີ່ປ່າໄມ້ ແລະ ດິນກະສິກໍາ ຊຶ່ງເກີດຈາກ

ຫຼາຍສາເຫດ, ໃນນັ້ນ ບັນຫາຕົ້ນຕໍທີ່ພວກເຮົາພວມປະເຊີນໃນຂະນະນີ້ ແມ່ນການຖາງປ່າເຮັດໄຮ່ຂອງປະຊາຊົນບັນດາເຜົ່າຊຶ່ງເປັນຍ້ອນການເພີ່ມຂຶ້ນຂອງປະຊາກອນ ແລະ ຍ້ອນຄວາມທຸກຍາກຂາດເຂີນຂອງເຂົາເຈົ້ານັ້ນເອງ.

## II.ສຸຂະພາບຂອງການຈະເລີນພັນ ແລະ ເພດ

### 1. ສຸຂະພາບຂອງການຈະເລີນພັນ

- ຄວາມໝາຍ

ຄວາມໝາຍຂອງສຸຂະພາບການຈະເລີນພັນແມ່ນຄົນຫຼືຄູ່ຜົວເມຍມີການຮ່ວມເພດທີ່ປອດໄພ, ມີຄວາມອາດສາມາດມີລູກໄດ້, ສາມາດກຳນົດຈຳນວນລູກລະຍະຫ່າງຂອງການເກີດລູກໄດ້.

- ຄວາມສຳຄັນ

ຄວາມສຳຄັນຂອງສຸຂະພາບການະເລີນພັນແມ່ນການທີ່ຄົນເຮົາມີສຸຂະພາບແຂງແຮງທາງດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມທີ່ດີ ຊຶ່ງປາສະຈາກພະຍາດ, ຄວາມອ່ອນເພຍ ແລະ ເຫດການຕ່າງໆທີ່ພົວພັນເຖິງຂະບວນວິວັດ, ການດຳເນີນງານ ແລະ ລະບົບການຈະເລີນພັນ.

- ເນື້ອໃນ:

ເນື້ອໃນຂອງສຸຂະພາບການຈະເລີບພັນປະກອບດ້ວຍກິດຈະກຳ ແລະ ບັນຫາທີ່ຄວນເອົາໃຈໃສ່ມີດັ່ງນີ້:

- ການໃຫ້ຄຳປຶກສາຫາລື, ການບໍລິການເພື່ອວາງແຜນຄອບຄົວ, ການສຶກສາ, ຂໍ້ມູນຂ່າວສານ ແລະ ການສຶກສາ.
- ການບໍລິການໃຫ້ການສຶກສາກ່ຽວກັບການດູແລຮັກສາຫຼັງເກີດລູກ ໂດຍສະເພາະແມ່ນການລ້ຽງລູກດ້ວຍນົມແມ່, ການຮັກສາສຸຂະພາບຂອງແມ່ ແລະ ເດັກທີ່ເກີດໃໝ່.
- ການປິ່ນປົວຜູ້ທີ່ບໍ່ສາມາດມີລູກໄດ້ດ້ວຍວິທີທີ່ເໝາະສົມ.
- ການໃຫ້ຄຳແນະນຳ ແລະ ປິ່ປົວດ້ວຍວິທີໃດໜຶ່ງສຳລັບຜູ້ທີ່ມີລູກຍາກ.
- ການປ້ອງກັນການຫຼຸລູກ ແລະ ການປິ່ນປົວຫຼັງຈາກຫຼຸລູກ.
- ການປ້ອງກັນ ແລະ ປິ່ນປົວພະຍາດຕິດຕໍ່ທາງເພດສຳພັນ ແລະ ໂລກເອດສ໌.
- ການສະກັດກັ້ນໃນການທຳຄວາມຮຸນແຮງຕໍ່ແມ່ຍິງ.
- ການປ້ອງກັນມະເຮັງບໍລິເວນລະບົບສືບພັນ.
- ການສົ່ງເສີມໃຫ້ຜູ້ຊາຍເຂົ້າຮ່ວມໃນວຽກສຸຂະພາບຈະເລີນພັນ.

ສິ່ງທີ່ກ່າວມານັ້ນສາມາດເຮັດໃຫ້ສຸຂະພາບການຈະເລີນພັນມີຜົນປະໂຫຍດສຳລັບໂຄງການສຸຂະພາບຈະເລີນພັນ ແລະ ການວາງແຜນຄອບຄົວທີ່ກ່ຽວກັບການຈະເລີນພັນ ຫຼື ການປະຕິບັດພຶດຕິກຳຕ່າງໆກ່ຽວກັບການຈະເລີນພັນ ຊຶ່ງມີຄວາມແຕກຕ່າງກັນໃນການຈະເລີນພັນຂອງແມ່ຍິງແຕ່ອາຍຸ 15 ຫາ 49 ປີ.

### 2. ສະພາບລວມຂອງສຸຂະພາບການຈະເລີນພັນຢູ່ໃນລາວ

- **ການຈະເລີນພັນ :**

ໃນປັດຈຸບັນ, ອັດຕາການຈະເລີນພັນລວມ (Total Fertility Rate (TFR)) ຂອງແມ່ຍິງລາວທີ່ມີອາຍຸແຕ່ 15-49 ແມ່ນທີ່ທ່າອ່ຽງຫຼຸດລົງ ຄື ຫຼຸດຈາກ 6,8 (1985) ລົງມາເປັນ 4,9 (2000), ລົງມາເປັນ 4,5 (2005), ລົງມາເປັນ 3,5 (2012) ໃນນີ້ ເວົ້າສະເພາະຢູ່ເຂດຕົວເມືອງແມ່ນ 2,8 ແລະ ຢູ່ຊົນນະບົດແມ່ນ 4,5.

- **ການວາງແຜນຄອບຄົວ :**

ຈາກການສຳຫຼວດການຈະເລີນພັນໄດ້ຊີ້ບອກວ່າແມ່ຍິ່ງລາວປະມານ 78% ແລະແມ່ຍິງທີ່ໄດ້ແຕ່ງງານແລ້ວປະມານ 79% ແມ່ນຮູ້ວິທີຄຸມກຳເນີດຢ່າງໜ້ອຍ 1 ວິທີ. ອັນນີ້ໄດ້ສະແດງໃຫ້ເຫັນເຖິງຄວາມສຳຄັນຂອງການວາງແຜນຄອບຄົວ ແລະ ຄວາມຈຳເປັນຂອງແມ່ຍິງທີ່ແຕ່ງງານແລ້ວທີ່ຈະຕ້ອງໄດ້ກຳນົດ ຫຼື ວາງແຜນເອົາລູກເພື່ອຍົກ ສູງສຸຂະພາບການຈະເລີນພັນຂອງເຈົ້າເອງ, ໝາຍຄວາມວ່າແມ່ຍິງ ທີ່ແຕ່ງງານແລ້ວປະມານ 90% ແມ່ນມີຄວາມຕ້ອງການບໍລິຫານການວາງແຜນຄອບຄົວ.

- **ສຸຂະພາບຂອງແມ່ ແລະ ເດັກ :**

ເວົ້າລວມລະດັບການດູແລຮັກສາສຸຂະພາບຂອງແມ່ໃນລະຍະຖືພາແມ່ນຍັງຕໍ່າ ເຊັ່ນ ມີຈຳນວນໜ້ອຍກວ່າ 1/4 (23%) ຂອງການເກີດ ທີ່ຜູ້ເປັນແມ່ໄດ້ຮັບການດູແລ ໃນລະບະຖືພາຈາກພະນັກງານສາທາລະນະສຸກ ຄື 13% ຈາກທ່ານໝໍ ແລະ 10% ຈາກພະນັກງານພະຍາບານ/ນາງພະດຸງຄັນ/ອາສາສະໝັກ ແລະ ມີປະມານ 24% ທີ່ໄດ້ຮັບການດູແລຮັກສາ ສຸຂະພາບຕາມຂັ້ນຕອນໃນລະຍະຖືພາ. ສ່ວນການເກີດມີດັ່ງນີ້: 86% ແມ່ນເກີດຢູ່ເຮືອນຕົນເອງ, 11% ແມ່ນ ເກີດຢູ່ໂຮງໝໍສູນກາງ-ໂຮງໝໍແຂວງ ຫຼື ເມືອງ ແລະ ອີກ 1% ແມ່ນເກີດຢູ່ສຸກສາລາ ຫຼື ຄະລີນິກ.

- **ການລ້ຽງລູກດ້ວຍນໍ້ານົມແມ່:** ເດັກນ້ອຍທີ່ມີອາຍຸຕໍ່າກວ່າ 7 ເດືອນ ປະມານ 96-99% ແມ່ນໄດ້ກິນນົມແມ່ຄຽງຄູ່ກັບການກິນອາຫານເພີ່ມ.
- **ຄວາມຮູ້ກ່ຽວກັບພະຍາດຊຶມເຊື້ອ, ພະຍາດຕິດຕໍ່ທາງເພດສຳພັນ ແລະ ໂລກເອດສ໌** : ປະມານ 62% ຂອງແມ່ຍິງລາວມັງໝົດ ແລະ ປະມານ 62% ຂອງຜູ້ຊາຍລາວທັງໝົດແມ່ນຮູ້ຈັກກັບພະຍາດຊຶມເຊື້ອ, ພະຍາດຕິດຕໍ່ທາງເພດສຳພັນ (RTIs/STDs) ແລະປະມານ 70% ຂອງແມ່ຍິງລາວທັງໝົດ ແລະ ປະມານ 78 % ຂອງຜູ້ຊາຍລາວທັງໝົດແມ່ນຮູ້ຈັກກັບໂລກເອດສ໌ (HIV/AIDS).

**3.ເພດ**

- **ຄວາມໝາຍ :**

ຄວາມໝາຍຂອງຄຳວ່າ “ເພດ” ແມ່ນສະຖານະພາບທີ່ຕິດຕົວມະນຸດເຮົາ ຊຶ່ງທຳມະຊາດໄດ້ສ້າງຂຶ້ນມາຕັ້ງແຕ່ກຳເນີດ ຄື ເພດຍິງ ແລະ ເພດຊາຍທີ່ຈຳແນກໃຫ້ເຫັນຄວາມແຕກຕ່າງກັນທາງດ້ານຮ່າງກາຍກໍຄືທາງດ້ານຈິດໃຈ

- **ຄວາມສຳຄັນຂອງເພດ:**

ຄວາມສຳຄັນຂອງເພດຍິງ ແລະ ເພດຊາຍມີຄື: ເພດຍິງມີຮ່າງກາຍ ແຕກຕ່າງກັບເພດຊາຍ, ສາມາດຖືພາ, ເກີດລູກ ແລະ ມີນ້ຳນົມລ້ຽງລູກ. ສ່ວນເພດຊາຍາສາມາດສົ່ງອາສຸຈິ (ນ້ຳເຊື້ອ) ໃຫ້ເພດຍິງຖືພາ (ຕັ້ງທ້ອງ)ໄດ້.

- **ບົດບາດຍິງ-ຊາຍ :**

ບົດບາດຍິງ-ຊາຍໝາຍເຖິງການພົວພັນລະຫວ່າງຍິງ ແລະ ຊາຍຕາມການເຄື່ອນໄຫວໃນຊີວິດປະຈຳວັນທາງດ້ານວັດທະນາທຳ ແລະ ສັງຄົມ. ຮູບແບບພົວພັນຢູ່ໃນແຕ່ລະສັງຄົມຈະມີຄວາມແຕກຕ່າງກັນຍ້ອນສັງຄົມ ແລະ ວັດທະນາທຳເປັນຜູ້ກຳເນີດ ແລະ ສ້າງຂຶ້ນ ດ້ວຍການອົບຮົມສັ່ງສອນໂດຍກົງໃນຄອບຄົວ, ໂຮງຮຽນ, ສາດສະໜາ ແລະ ໄດ້ຮັບຜົນສະທ້ອນຈາກສະພາບແວດລ້ອມທີ່ກ່ຽວກັບຍິງ ແລະ ຊາຍ. ດັ່ງນັ້ນບົດບາດຍິງ-ຊາຍຈຶ່ງໄດ້ມີຄວາມແຕກຕ່າງກັນໄປຕາມແຕ່ລະບ່ອນແຕ່ລະທ້ອງຖິ່ນຂອງຊຸມຊົນ ແລະ ແຕ່ລະຍະເວລາ.

- ຄວາມແຕກຕຕ່າງກັນລະຫວ່າງເພດ ແລະ ບົດບາດຍິງ-ຊາຍ : ເພດ ແລະ ບົດບາດຍິງ-ຊາຍມີຄວາມແຕກຕ່າງກັນ ຄື:

| **<u>ເພດ</u>(Sex)** | **<u>ບົດບາດຍິງ-ຊາຍ </u>(Gender role)** |
|---|---|
| ☞ແມ່ນທຳມະຊາດເປັນຜູ້ສ້າງຂຶ້ນ | ☞ແມ່ນສັງຄົມ-ວັດທະນາທຳເປັນຜູ້ສ້າງຂຶ້ນ |
| ☞ ເປັນມາແຕ່ເກີດ | ☞ຖືກສ້າງຂຶ້ດ້ວຍການອົບຮົມສັ່ງສອນໂດຍກົງແລະຈາກສະພາບແວດລ້ອມ |
| ☞ ຄືກັນໝົດໃນທົ່ວໂລກ | ☞ ແຕກຕ່າງກັນຕາມແຕ່ລະບ່ອນ |
| ☞ ປ່ຽນແປງບໍ່ໄດ້ | ☞ ປ່ຽນແປງໄດ້ |

## 4. ສະພາບຂອງແມ່ຍິງລາວ

ແມ່ຍິງລາວແມ່ນສ່ວນໜຶ່ງຂອງຈຳນວນແມ່ຍິງ ທີ່ກວມຫຼາຍກວ່າເຄິ່ງໜຶ່ງຂອງປະຊາກອນໂລກ. ພັກ ແລະ ລັດຖະບານແຫ່ງ ສປປ ລາວ ຍາມໃດກໍມີນະໂຍບາຍເພື່ອ ສົ່ງເສີມຄວາມກ້າວໜ້າ ຂອງແມ່ຍິງລາວບັນດາເຜົ່າໂດຍມີການປະຕິບັດສິດສະເໝີພາບລະຫວ່າງຍິງ-ຊາຍທຸກໆດ້ານໃນສັງຄົມ ເຊັ່ນ ການເມືອງ, ເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ຄອບຄົວ ຕາມທີ່ໄດ້ລະບຸໄວ້ໃນລັດຖະທຳມະນູນ ແລະ ກົດໝາຍແຫ່ງ ສປປ ລາວ.

ໃນລະຍະຜ່ານມາ, ໄດ້ມີການຈັດຕັ້ງປະຕິບັດນະໂຍບາຍຕາມແນວທາງຂອງພັກ-ລັດຊຶ່ງສະແດງອອກໃນການປະຕິບັດລັດຖະທຳມະນູນ ແລະ ກົດໝາຍທີ່ມີຄວາມກ້າວໜ້າຂຶ້ນເລື້ອຍໆຈົນເຖິງປັດຈຸບັນ. ເຖິງແມ່ນວ່າມີການປະຕິບັດດ້ແນວນັ້ນກໍດີໂດຍທົ່ວໄປ ແມ່ຍິງບັນດາເຜົ່າຍັງປະເຊີນກັບ ສິ່ງທ້າທາຍຫຼາຍປະການ ເຊັ່ນ ຄວາມທຸກຍາກລຳບາກ, ລະດັບການສຶກສາຕ່ຳ, ເງື່ອນໄຂທີ່ໄດ້ຮັບການບໍລິການດ້ານສຸຂະພາບຍັງຈຳກັດ ແລະ ຍັງດ້ອຍໂອກາດໃນຫຼາຍໆດ້ານຖ້າທຽບໃສ່ເພດຊາຍ. ຈຳນວນແມ່ຍິງທີ່ຖືກໜັງສືມີອັດຕາການເກີດສູງ, ອັດຕາ

ການຈະເລີນພັນຂອງແມ່ຍິງລາວໂດຍສະເລ່ຍຜູ້ໜຶ່ງເກີດລູກຫຼາຍເຖິງ 5-6 ຄົນ. ຄວາມເຂົ້າໃຈຂອງສັງຄົມຕໍ່ກັບບົດບາດຍິງ-ຊາຍຍັງບໍ່ທັນເລີກເຊິ່ງເທົ່າທີ່ຄວນ. ເນື່ອງຈາກສະທິຕິຂໍ້ມູນ ແລະ ຂ່າວສານກ່ຽວກັບບັນຫາດັ່ງກ່າວມານັ້ນ ຍັງມີໜ້ອຍ. ອີກຢ່າງໜຶ່ງແມ່ນສະຖານະພາບຂອງເພດຍິງ ຊຶ່ງມີຖານະບົດບາດໃນການພົວພັນລະຫວ່າງຍິງ-ຊາຍໃນຂອບເຂດຂອງຄອບຄົວ, ຊຸມຊົນ ແລະ ສັງຄົມຍັງຕໍ່າກວ່າ ຫຼື ຫຼຸດເພດຊາຍຢູ່ຫຼາຍ. ອີງຕາມມູນຈາກແຫຼ່ງຕ່າງໆ ໂດຍສະເພາະຈາກສູນສະຖິຕິແຫ່ງຊາດໃນປີ 2005 ສາມາດປຽບທຽບລະຫວ່າງຍິງ ແລະ ຜູ້ຊາຍໃນດ້ານການບໍລິຫານການປົກຄອງ. ການບໍລິການ, ການສຶກສາ, ການສາທາລະນະສຸກ ແລະ ການອອກແຮງງານໃນຂົງເຂດອື່ນໆດັ່ງນີ້:

♦ **ດ້ານການບໍລິຫານການປົກຄອງ-ການຄຸ້ມຄອງ :**

- ໃນຂັ້ນບ້ານມີຈຳນວນບ້ານທັງໝົດ 11 047 ບ້ານ, ໃນນັ້ນເປັນນາຍບ້ານມີຍິງພຽງແຕ່ 194 ຄົນ ແລະ ຊາຍ 10853 ຄົນ.
- ໃນຂັ້ນເມືອງມີຈຳນວນເມືອງທັງໝົດ 145 ເມືອງ, ໃນນັ້ນເປັນເຈົ້າເມືອງມີຍິງ 3 ຄົນ ແລະ ຊາຍ 139 ຄົນ.
- ໃຂັ້ນແຂວງມີຈຳນວນແຂວງທັງໝົດ 16 ແຂວງ ແລະ 1 ນະຄອນຫຼວງ, ໃນນັ້ນເປັນເຈົ້າແຂວງມີຍິງ 0 ຄົນ ແລະ ຊາຍ 17 ຄົນ.

♦ **ດ້ານການສຶກສາ**

| | | | | |
|---|---|---|---|---|
| - ຊັ້ນປະຖົມ | ຍິງ | 40% | ຊາຍ | 60% |
| - ຊັ້ນມັດທະຍົມ | ຍິງ | 37% | ຊາຍ | 63% |
| - ວິຊາສະເພາະສັນສູງ-ກາງ | ຍິງ | 35% | ຊາຍ | 65% |
| - ເໜືອມະຫາວິທະຍາໄລ | ຍິງ | 10% | ຊາຍ | 90% |

♦ **ການກົກໜັງສື :**

- ແມ່ຍິງອາຍຸແຕ່ 10 ປີຂຶ້ນໄປ 52.1%
- ຜູ້ຊາຍອາຍຸແຕ່ 10 ປີຂຶ້ນໄປ 26.%

♦ **ດ້ານການອອກແຮງງານ :**

- ສະເລ່ຍຮຽງານລວມຈາກທຸກຂະແໜງການ : ຍິງ 52% ແລະ ຊາຍ 48% ຂອງແຮງງານລວມທັງໝົດ.
- ແຮງງານເຮັດວຽກກະສິກຳ : ຍິງ 54% ແລະ ຊາຍ 46% ຂອງແຮງງານລວມທັງໝົດ.
- ແຮງງານວຽກຄອບຄົວ : ຍິງ 58% ແລະ ຊາຍ 42%.

## III .ນະໂຍບາຍປະຊາກອນ ແລະ ການພັດທະນາ

### 1. ຄວາມໝາຍ ແລະ ຄວາມສຳຄັນຂອງນະໂຍບາຍດ້ານປະຊາກອນ

ນະໂຍບາຍປະຊາກອນ ແມ່ນການກຳນົດທິດທາງຕ່າງໆກ່ຽວກັບການປ່ຽນແປງຂອງປະຊາກອນທັງທາງດ້ານປະລິມານ ແລະ ຄຸນນະພາບເພື່ອໃຫ້ສອດຄ່ອງກັບລະດັບການຂະຫຍາຍ ຕົວທາງດ້ານເສດຖະກິດກໍຄືການພັດທະນາດ້ານຕ່າງໆຂອງແຕ່ລະປະເທດ. ນັ້ນໝາຍຄວາມວ່າປະຊາກອນແມ່ນປັດໃຈ ຕົ້ນຕໍໃນການພັດທະນາເສດຖະກິດ. ຖ້າປະເທດໃດຫາກມີການກຳນົດ ແນວທາງນະໂຍບາຍດ້ານປະຊາກອນຢ່າງຖືກຕ້ອງ ແລະ

ສອດຄ່ອງແລ້ວ ປະເທດນັ້ນກໍຈະມີຖ່ວງທ່າຂອງການພັດທະນາກ້າວໄປໄວກວ່າ. ສະນັ້ນ, ການກໍານົດນະໂຍບາຍດ້ານປະຊາກອນຈຶ່ງເປັນປະເດັນທີ່ສໍາຄັນຂອງປະເທດຕ່າງໆ, ໂດຍສະເພາະແມ່ນປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາຊຶ່ງຈະຕ້ອງໄດ້ໄຕ່ຕ່ອງໃຫ້ດີ. ຍ້ອນຫຼິງເຫັນຄວາມສໍາຄັນ ແລະ ຄວາມຈໍາເປັນດັ່ງກ່າວ, ອົງການສະຫພປະຊາຊາດຈຶ່ງໄດ້ຈັດຕັ້ງກອງປະຊຸມສາກົນກ່ຽວກັບບັນຫາປະຊາກອນຂຶ້ນໃນແຕ່ລະຍະ ໂດຍສະເພາະແມ່ນກອງປະຊຸມສາກົນປະຊາກອນກັບການພັດທະນາທີ່ໄດ້ຈັດຂຶ້ນໃນປີ 1994 ທີ່ນະຄອນຫຼວງໄຄໂຣປະເທດອີຢິບ.

## 2. ນະໂຍບາຍດ້ານປະຊາກອນ ແລະ ການພັດທະນາຂອງສາກົນ

ນະໂຍບາຍດ້ານປະຊາກອນ ແລະ ການພັດທະນາ ໄດ້ສະແດງອອກໃນກອງປະຊຸມຊາກົນກ່ຽວກັບປະຊາກອນ ແລະ ການພັດທະນາ (International Conference on Population and Development ຫຼື ICPD) ຊຶ່ງໄດ້ໄຂຂຶ້ນທີ່ນະຄອນຫຼວງໄຄໂຣປະເທດອີຢິບເມື່ອປີ 1994. ກອງປະຊຸມດັ່ງກ່າວໄດ້ຮັບຮອງເອົາແຜນການດໍາເນີນງານ ທີ່ຮຽກຮ້ອງໃຫ້ທຸກປະເທດໃນໂລກສ້າງນະໂຍບາຍດ້ານປະຊາກອນ ແລະການພັດທະນາໃນປະເທດຂອງຕົນ ເພື່ອໃຫ້ສອດຄ່ອງກັບແຜນດໍາເນີນງານລວມຂອງກອງປະຊຸມ. ທັງນີ້ກໍ່ພື່ອແນໃສ່ປັບປຸງຄຸນນະພາບຊີວິດການເປັນຢູ່ ຂອງປະຊາຊົນບັນດາຊົນຊາດຊົນເຜົ່າ, ຮັບປະກັນຄວາມຍຸຕິທໍາທາງສັງຄົມ ແລະ ຫຼຸດຜ່ອນຄວາມທຸກຈົນລົງເທື່ອລະກ້າວ.

ກອງປະຊຸມດັ່ງກ່າວໄດ້ດໍາເນີນພາຍໃຕ້ຫົວເລື່ອງ " ປະຊາກອນ,ການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການພັດທະນາທີ່ຍືນຍົງ " ກອງປະຊຸມໄດ້ຮັບຮອງເອົາແຜນປະຕິບັດການຕ່າງໆທີ່ຈໍາເປັນດ້ານປະຊາກອນ ແລະ ການພັດທະນາຊຶ່ງສະຫຼູບໄດ້ເນື້ອໃນຕົ້ນຕໍ່ດັ່ງນີ້ :

- ຄວາມສໍາຄັນຂອງປະຊາກອນກັບການຂະຫຍສຍເສດຖະກິດ ແລະ ການພັດທະນາແບບຍືນຍົງ.
- ຄວາມສະເໝີພາບທາງເພດ (Gender) ,ຄວາມຍຸຕິທ□າ ແລະ ການເພີ່ມອ□ານາດໃຫ້ແກ່ແມ່ຍິງ.
- ຄອບຄົວ, ບົດບາດ, ອົງປະກອບ ແລະ ໂຄງສ້າງຂອງຄອບຄົວ.
- ການເພີ່ມຂຶ້ນຂອງປະຊາກອນ ແລະ ໂຄງສ້າງຂອງປະຊາກອນ.
- ສິດທິດ້ານການຈະເລີນພັນ ແລະ ສຸຂະພາບການຈະເລີນພັນ.
- ສຸຂະພາບອານາໄມ ພາວະການເຈັບປ່ວຍ ແລະ ການຕາຍ.
- ການແຈກຢາຍຂອງປະຊາກອນ, ການກາຍເປັນຕົວເມືອງ ແລະ ການຍ້າຍຖິ່ນພາຍໃນປະເທດ.
- ການຍ້າຍຖິ່ນລະຫວ່າງປະເທດ.
- ປະຊາກອນ, ການພັດທະນາ ແລະ ການສຶກສາ.
- ເຕັກໂນໂລຊີ, ການຄົ້ນຄວ້າ ແລະ ການພັດທະນາ.
- ການນໍາແຜນດໍາເນີນງານຂອງ ICPD ໄປຜັນຂະຫຍາຍໃຫ້ເປັນນະໂຍບາຍຂອງແຕ່ລະປະເທດ.
- ການຮ່ວມມືລະຫວ່າງປະເທດ ໂດຍສະເພາະແມ່ນການເພີ່ມອັນຕາສ່ວນ ຂອງເງິນຊ່ວຍເຫຼືອແກ່ກິດຈະກໍາທາງປະຊາກອນ ແລະ ການພັດທະນາ.
- ການຮ່ວມມືກັບອົງການເອກະຊົນ ນັບລະດັບທ້ອງຖິ່ນ, ລະດັບປະເທດ ແລະ ລະຫວ່າງປະເທດທີ່ມີສ່ວນຮ່ວມ ເພື່ອຊ່ວຍໃຫ້ແຜນການຖືກປະຕິບັດໃຫ້ສໍາເລັດຜົນ.

- ການຕິດຕາມຂອງກອງປະຊຸມ ICPD ຄືຕິດຕາມຜົນທັງໃນລະດັບປະເທດ ແລະ ໃນລະດັບຂົງເຂດ.

**3. ນະໂຍບາຍດ້ານປະຊາກອນຂອງ ສປປ ລາວ**

ນະໂຍບາຍດ້ານປະຊາກອນ ແລະ ການພັດທະນາຂອງ ສປປ ລາວໄດ້ຮັບຮອງເອົາຢ່າງເປັນທາງການ ຈາກດຳລັດຂອງນາຍຍົກລັດທະມົນຕີສະບັບເລກທີ່ 43/ນຍ ລົງວັນທີ 2 ພະຈິກ 1999. ຈາກນັ້ນ, ຄະນະກຳມະການແຜນການ ແລະ ການຮ່ວມມື ກໍໄດ້ດຳເນີນການຈັດຕັ້ງເຜີຍແຜ່ເປັນກ້າວໆ ຊຶ່ງເນື້ອໃນຕົ້ນຕໍຂອງນະໂຍບາຍດັ່ງກ້າວມີດັ່ງນີ້ :

**ກ.ດ້ານສຸຂະພາບການຈະເລີນພັນ**

- ຂະຫຍສຍຕາໜ່າງການຮັກສາສຸຂະພາບຂັ້ນພື້ນຖານ, ສຸຂະພາບການຈະເລີນພັນ ແລະ ການວາງແຜນຄອບຄົວໃຫ້ທົ່ວເຖິງ ໂດຍສະເພາະແມ່ນໃນຂົງເຂດຊົນນະບົດ ເພື່ອຫຼຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກ, ຫຼຸດຜ່ອນອັນຕາການຈະເລີນພັນລົງຈາກ 5,5 ໃນປີ 1995 ມາເປັນ 3,5 ໃນ ປີ2012, ພ້ອມດຽວກັນນີກໍເພີ່ມອັນຕາການເຂົ້າຮັບການບໍລິການດ້ານຄຸມກຳເນີດຈາກ 30% ໃນປີ 1994 ມາເປັນ 50-55% ໃນປີ 2012.

- ສະໜອງຂໍ້ມູນຂ່າວສານກ່ຽວກັບວິທີການຄຸມກ□ເນີດ ແລະ ວຽກງານການຮັກສາສຸຂະພາບການຈະເລີນພັນໃຫ້ປະຊາຊົນທົ່ວປະເທດ ເພື່ອໃຫ້ເຂົາເຈົ້າເຫັນໄດ້ຄວາມສຳຄັນຂອງການເກີດລູກຫ່າງຢ່າງໜ້ອຍ 2-3 ປີ ຈຶ່ງມີລູກ 1 ຄົນ ພ້ອມທັງກ□ນົດຂະໜາດຂອງຄອບຄົວທີ່ເໝາະສົມກັບເງື່ອນໄຂດ້ານເສດຖະກິດ-ສັງຄົມ.

- ສະໜອງຄວາມຮູ້ໃຫ້ແກ່ໄວໜຸ່ມດ້ານສຸຂະພາບການຈະເລີນພັນ ແລະ ເພດສ□ພັນ.

- ເອົາໃຈໃສ່ປະຕິບັດບັນດາມາດຕະການ ເພື່ອຫຼຸດຜ່ອນການຖືພາແບບບໍ່ໄດ້ຕັ້ງໃຈ ແລະ ກ່ອນເຖິງອາຍຸກະ ສຽນ (<15 ປີ). ພ້ອມດຽວກັນນີ້ ກໍ່ສົ່ງເສີມການສຶກສາຂອງເດັກ ແລະ ຊາວໜຸ່ມ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດຕິດແປດທາງເພດສຳພັນ ((STDs) Sexually Transmitted Diseases) ແລະ ໂລກເອດສ໌ ((HIV) Human Immunodeficiency Virus / (AIDS)Acquired Immune Deficiency Syndrome).

**ຂ. ປັບປຸງຖານະບົດບາດຂອງແມ່ຍິງ ແລະ ເດັກນ້ອຍ.**

- ປັບປຸງຖານະບົດບາດຂອງແມ່ຍິງໄປຄຽງຄູ່ກັບເພດຊາຍໃນການພັດທະນາເສດຖະກິດ-ສັງຄົມ ໂດຍມີຈຸດໝາຍສູ້ຊົນ ຄື ເພີ່ມອັດຕາການຮູ້ໜັງສືຂອງແມ່ຍິງທີ່ມີອາຍຸແຕ່ 15 ປີ ຂຶ້ນໄປຈາກ 48% ໃນປີ 1995 ມາເປັນ 75% ໃນປີ 2012, ເພີ່ມອັດຕາການເຂົ້າຮຽນສຸດທິຂອງເດັກຍິງຂັ້ນປະຖົມຈາກ 68% ໃນປີ 1995 ມາເປັນ 90% ໃນປີ 2012, ເພີ່ມອັດຕາການເຂົ້າຮຽນລວມຂອງເດັກຍິງຊັ້ນມັດຖະຍົມຕົ້ນຈາກ 28% ໃນປີ 1995 ມາເປັນ 51% ໃນປີ 2012, ເພີ່ມການມີວຽກເຮັດງານທຳໃຫ້ແກ່ແມ່ຍິງຢູ່ໃນແຕ່ລະຂະແໜງການ.

**ຄ. ການປັບປຸງຖານະບົດບາດຂອງຊົນເຜົ່າ.**

ເພື່ອຫຼຸດຜ່ອນຄວາມແຕກຕ່າງທາງດ້ານເສດຖະກິດ-ສັງຄົມ ລະຫວ່າງບັນດາເຜົ່າຕ່າງໆ ລັດຖະບານໄດ້ມີມາດຕະການໃນການສົ່ງເສີມໃຫ້ແຕ່ລະຊົນເຜົ່າ ໄດ້ມີໂອກາດເຂົ້າຮັບການສຶກສາປິ່ນປົວ ແລະ ຮັບການບໍລິການ ດ້ານສັງຄົມຢ່າງສະໝໍ່າສະເໝີ ແລະ ທົ່ວເຖິງ.

**ງ. ດ້ານການພັດທະນາເສດຖະກິດ.**

ເລັ່ງລັດການພັດທະນາຢ່າງຮອບດ້ານ ເພື່ອຮອງຮັບກໍາລັງແຮງທີ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນລະດັບ 2,1% ຕໍ່ປີ ແລະ ຄາດວ່າຈະເພີ່ມຂຶ້ນ 3% ຕໍ່ປີໃນປີ 2015. ສ້າງເງື່ອນໄຂດ້ານການສຶກສາ-ສາທາລະນະສຸກ ແລະ ການມີວຽກເຮັດງານທໍາໃຫ້ຊາວຊົນນະບົດ ເພື່ອຈໍາກັດການຫຼັ່ງໄຫຼຂອງປະຊາກອນຈາກຊົນນະບົດເຂົ້າສູ່ຕົວເມືອງ.

**ຈ. ການສົ່ງເສີມການເກັບຂໍ້ມູນ.**

ຊຸກຍູ້ການເກັບຂໍ້ມູນ ແລະ ສຶກສາຄົ້ນຄວ້າກ່ຽວກັບປະຊາກອນ ໂດຍສະເພາະແມ່ນການຄົ້ນຄວ້າທີ່ຈໍາເປັນເພື່ອສ້າງນະໂຍບາຍ, ແຜນການ, ແຜນງານ ແລະ ປະຕິບັດວຽກງານດ້ານປະຊາກອນຢ່າງມີປະສິດທິຜົນ.

# ເອກະສານອ້າງອີງ


ໄກສອນ ພົມວິຫານ. ນິພົນເລືອກເຟັ້ນເຫຼັ້ມ I. ວຽງຈັນ: ສປປ ລ 1985.

ໄກສອນ ພົມວິຫານ. ບາງບົດຮຽນຕົ້ນຕໍ ແລະ ບາງບັນຫາກ່ຽວກັບທິດທາງໃໝ່ ຂອງການປະຕິວັດລາວ. ວຽງຈັນ: ແຫ່ງຊາດ, 1979

ກະຊວງການຕ່າງປະເທດ ສປປ ລ. ຄວາມເປັນຈິງແຫ່ງການພົວພັນລາວ - ໄທ. ວຽງຈັນ: ໂຮງພິມແຫ່ງລັດ. 1984.

ກະຊວງສຶກສາ ແລະ ກິລາ. ປສ. ລາວສະໄໝປັດຈຸບັນ. ສຳລັບໂຮງຮຽນກໍ່ສ້າງຄູມັດທະຍົມລະບົບ 11+3 ວຽງຈັນ: ບບພ, 1990.

ກະຊວງວັດທະນາທຳ. ມໍລະດົກລ້ານຊ້າງ. ໂຮງພິມແຫ່ງລັດ 1996.

ກົມສົນທິສັນຍາ ແລະ ກົດໝາຍກະຊວງການຕ່າງປະເທດ. ປະມວນສົນທິສັນຍາ ກຳນົດເສັ້ນຊາຍແດນ ອິນດູ ຈີນ - ສະຫຍາມ (ລາວ - ໄທ), 1886 – 1946. ວຽງຈັນ: 1996.

ຄຳແພງ ເກດຕະວົງ. ຕັ່ງເຈືອງ ແລະ ຄ້ອງບັ້ງຫີນ. ວິທະຍາສານມໍລະດົກລ້ານຊ້າງ ສະຖາບັນຄົ້ນຄວ້າວັດຖະນາທຳ, ກະຊວງຖະແຫຼງຂ່າວ ແລະ ວັດທະນາທຳ 1996.

ບຸນມີ ເທບສີເມືອງ. ຄວາມເປັນມາຂອງຊົນຊາດລາວ ເຫຼັ້ມທີ I. ໂຮງພິມສຶກສາ, ວຽງຈັນ 2006.

ສະເຫຼີມສັກ ພາບຸດດີ. ປະຫວັດສາດລາວບູຮານ. ເອກະສານປະກອບການຮຽນ - ການສອນ ສຳລັບພາກວິຊາປະຫວັດສາດ ແລະ ບູຮານວິທະຍາ, ຄະນະວິທະສາດສັງຄົມ ມະຫາວິທາຍາໄລແຫ່ງຊາດ 2005

ສະເຫຼີມສັກ ພາບຸດດີ. ປະຫວັດການເມືອງການປົກຄອງລາວສະໄໝລ້ານຊ້າງ. ເອກະສານປະກອບການ ຮຽນ - ການສອນ ສຳລັບພາກວິຊາປະຫວັດສາດ ແລະ ບູຮານວິທະຍາສາດສັງຄົມ ມະຫາໄລແຫ່ງຊາດ 2005.

ສຸເນດ ໂພທິສານ ແລະ ໜູໄຊ ພົມມະຈັນ. ປະຫວັດສາດລາວດຶກດຳບັນ - ປັດຈຸບັນ. ກະຊວງຖະແຫຼ່ງຂ່າວ ແລະ ວັດທະນາທຳ, ໂຮງພິມແຫ່ງລັດ, ວຽງຈັນ 2000.

ທອງສາ ໄຊຍະວົງຄຳດີ ພ້ອມຄະນະ. ປະຫວັດສາດລາວເຫຼັ້ມ III. 1983 ເຖິງປັດຈຸບັນ" ວຽງຈັນ: ຈຳໜາຍສຶກສາ, 1989.

ບຸນເຮັ່ງ ບົວສີແສງປະເສີດ. ປະຫວັດສາດ ສະຖາປັດຕະຍາກຳ ເຫຼັ້ມ II. 1995

ບຸນເຮັ່ງ ບົວສີແສງປະເສີດ. ປະຫວັດສາດ ສະຖາປັດຕະຍາກຳ ຫຼວງພະບາງ ເຫຼັ້ມ II. 1995

ພູມີ ວົງວິຈິດ. ຄວາມຊົງຈຳຂອງຊີວິດເຮົາໃນຂະບວນວິວັດ ປະຫວັດສາດຂອງປະເທດລາວ. ວຽງຈັນ: ຈຳໜ່າຍ ສຶກສາ, 1987.

ພົງສະຫວັດ ບຸບຜາ. ການຂະຫຍາຍຕົວຂອງລັດລາວ. ວຽງຈັນ: ນະຄອນຫຼວງ, 1996.

ມະຍຸລີ ແລະ ເພີຍພັນ ເຫງົ້າສີວັດ. ເຈົ້າອານຸ 1767 – 1829. ສຳນັກພິມຈຳໜ່າຍ ສ.ປ.ປ.ລາວ 1998.

ມະຫາສີລາວີຣະວົງ. ພົງສາວະດານລາວ. ວຽງຈັນ 1953, 1973 ແລະ 2001

ບຸນທະວີ ສໍສຳພັນໄຊ. ປະຫວັດສາດລາວຄົນລາວແຜ່ນດິນຂອງລາວ. ວຽງຈັນ: ມສດ, 1996.

ອູ່ຄຳ ພົມວົງສາ: ຄວາມເປັນມາຂອງໄທ - ລາວ. ບາງກອກແສງສົນ 1958

William Clifton Dodd. The Tai Race: Elder Brother of The Chinese. ISBN974-8496-62-7.

W .AR. Wood .A History of Thailand .Bangkok Chalermnit Bookshop 1959.

Paul Benedic .Thai Kadai and Indonesian: A New Alignment in South East Asia . America Anthropologist.Vol 44NewYork 1942.ອ້າງໃນປະຫວັດສາດ .ມະຫາວິທະຍາໄລສຸໂຂໄທທຳມາທິຣາດ.

ສົມຄິດ ສຣີສິງ. ປະຫວັດສາດ ອາຊີອາຄະເນ. ພິມພິເນດ 1992.